# ການຜະລິດກະສິກຳເປັນສິນຄ້າແບບມີສັນຍາໃນ ສ ປ ປລາວ:

## *ການປະເມີນປັດໃຈທີ່ພາໃຫ້ເກີດຜົນສຳເລັດ*



ຜະລິດໂດຍ: ໂຄງການສົ່ງເສີມກະສິກຳ (LEAP) ສ ປ ປ ລາວ

ສຳລັບພາກລັດ, ຜູ້ໃຫ້ທຶນ ແລະ ກຸ່ມວິຊາການຍ່ອຍສຳລັບຊາວກະສິກອນ ແລະ ທຸລະກິດກະສິກຳ

ໂດຍ: ເດວິດ ຟູລບຼຸກ

ຕຸລາ, 2011

# ການຜະລິດກະສິກຳເປັນສິນຄ້າແບບມີຂໍ້ຜູກພັນໃນສັນຍາໃນ ສປປ ລາວ: ການປະເມີນປັດໃຈທີ່ພາໃຫ້ເກີດຜົນສຳເລັດ

ຕຸລາ 2011

ຜະລິດໂດຍ: ໂຄງການສົ່ງເສີມກະສິກຳ (LEAP)
ສຳລັບພາກລັດ, ຜູ້ລົງທຶນ ແລະ ກຸ່ມວິຊາການຍ່ອຍສຳລັບຊາວກະສິກອນ ແລະ ທຸລະກິດກະສິກຳ

ໂດຍ: ເດວິດ ຟູລບູກ

## ຄຳຂອບໃຈ

ການສຶກສານີ້ບໍ່ອາດສາມາດເປັນໄປໄດ້ຖ້າປາສະຈາກການຊ່ວຍເຫຼືອໂດຍສະເພາະ ທ່ານ ໄມເກີລ ຈອນສ, ທ່ານ ລາຊານ, ທ່ານ ມານີວັນ, ທ່ານ ພອນ ບອນສີວົງ, ທ່ານ ສິນໄຊ ສີຊານົນ, ທ່ານ ແອນຖົວ ບາຣເລັທ, ທ່ານ ແອນຖົວ ວິລຊັນ, ພະນັກງານລັດ, ຊາວກະສິກອນ, ຜູ້ລົງທຶນ ອື່ນໆ ທີ່ສາມາດລະບຸໃນທີ່ນີ້ໄດ້, ພະນັກງານຂອງໂຄງການ LEAP ແລະ ອົງການຈັດຕັ້ງ ອື່ນໆ

## ສຳລັບພິມ

ຫົວຂໍ້: *ການຜະລິດກະສິກຳເປັນສິນຄ້າແບບມີຂໍ້ຜູກພັນໃນສັນຍາ ໃນ ສປປ ລາວ: ປະເມີນປັດໃຈທີ່ພາໃຫ້ເກີດມີຜົນສຳເລັດ*

ປີ: 2011

ຜູ້ຂຽນ: ເດວິດ ຟູລບຣູກ (df866899@gmail.com)

## ຂໍ້ຄວາມເພີ້ມເຕີມ

ທັດສະນະ, ແນວຄວາມຄິດ ແລະ ການແປຄວາມໝາຍໃນບົດລາຍງານນີ້ແມ່ນເປັນຂອງຜູ້ຂຽນໃນເວລາສຶກສາ ແລະ ການຂຽນ. ບໍ່ຄວນຕີຄວາມໝາຍວ່າເປັນຕົວແທນທີ່ເປັນທາງການ ຫຼື ບໍ່ເປັນທາງການ ຫຼື ເປັນທ່າທີຂອງອົງການພັດທະນາ ແລະ ການຮ່ວມມືປະເທດສະວິດສ ແລະ ເຈົ້າໜ້າທີ່, ຫຼື ຕົວແທນຂອງພາກລັດ ແລະ ອົງການຈັດຕັ້ງທີ່ບໍ່ຂື້ນກັບລັດຖະບານ

ກອງສົ່ງເສີມກະສິກຳ ແລະ ປ່າໄມ້ ແຫ່ງຊາດ (NAFES)

ໂຄງການສົ່ງເສີມກະສິກຳ (LEAP)

P.O. Box 9159

ນະຄອນຫຼວງວຽງຈັນ

ສ ປ ປ ລາວ

ໂທ: +856 21 740 253

ອີເມລ: leap4@laoex.org

www.helvetas-laos.org

ການສຶກສານີ້ໄດ້ຮັບການສະໜັບສະໜູນໂດຍອົງການ ພັດທະນາ ແລະ ການຮ່ວມມືປະເທດສະວິດ (SDC)

## ສາລະບານ


ອະທິບາຍຄຳສັບຫຍໍ້ ແລະ ນິຍາມ ........ 8

1. ສະຫຼຸບສັງລວມຫຍໍ້ ........ 9

2. ຜົນຮັບຫຼັກ ........ 11

3. ພາກສະເໜີ ........ 13

4. ການສຶກສາຄົ້ນຄ້ວາ ........ 15

4.1. ກອບຂອງການສຶກສາ ........ 15

4.2. ຄຳຖາມສຳລັບສຶກສາ ........ 15

4.3. ວິທີການ ........ 16

4.4. ກໍລະນີສຶກສາ ........ 17

4.5. ຂໍ້ຈຳກັດ ........ 17

5. ການສັງເກດກ່ຽວກັບ ສັນຍາ,ຂໍ້ຕົກລົງ ແລະ ການຜະລິດກະສິກຳ ........ 18

6. ອົງການຈັດຕັ້ງທີ່ກ່ຽວຂ້ອງ ແລະ ຄວາມສຳພັນ ........ 19

7. ສະພາບ ແລະ ທ່າອ່ຽງ ........ 20

7.1. ສະພາບເງື່ອນໄຂ ........ 20

7.2. ທ່າອ່ຽງ ........ 23

7.3. ສະຫຼຸບຕົວລາຄາ ........ 24

8. ກໍລະນີສຶກສາ ........ 26

8.7. ກໍລະນີ 7. ຜູ້ອຳນວຍຄວາມສະດວກ ດ້ານການຄ້າ ແລະ ການຜະລິດ ສູ່ຕ່າງປະເທດ ........ 51

8.8. ກໍລະນີ 8. ນະໂຍບາຍ ແລະ ການຈັດຕັ້ງປະຕິບັດ : ຂໍ້ຈຳກັດໃນການຈັດຕັ້ງປະຕິບັດແລະ ປະສິດທິຜົນຂອງການຄ້າ ....55
8.9. ກໍລະນີ 9. ຂໍ້ມູນຂ່າວສານ ແລະ ເຈລະຈາ, ຄວາມສ່ຽງ ແລະ ອຸປະສັກ ....59
8.10. ກໍລະນີ 10. ການແຂ່ງຂັນການເກັບຊື້ຜົນຜະລິດຈາກຊາວກະສິກອນ ຂອງຜູ້ລົງທຶນ ....64
8.11. ກໍລະນີ 11. ຜູ້ລົງທຶນ ແລະ ພໍ່ຄ້າ .... 69
8.12. ກໍລະນີ 12. ຄວາມສຳຄັນຂອງຄວາມເຊື່ອຖື ຫຼື ຊື່ສຽງ .... 73
9. ປັດໃຈທີ່ພາໃຫ້ເກີດຜົນສຳເລັດ.... 76
9.1. ປັດໃຈພາຍໃນ .... 76
9.2. ປັດໃຈພາຍນອກ .... 77
9.3. ມາດຕະການບັງຄັບ .... 79
10. ການວິໃຈ ຫຼື ແລກປ່ຽນຄວາມຄິດເຫັນ? ....81
10.1. ຊັບສິນ....81
10.2. ໂຄງສ້າງ ....82
10.3. ຄວາມບໍ່ກົມກຽວ.... 84
11. ສິ່ງທ້າທາຍ ແລະ ໂອກາດ ສຳລັບ ຫ້ອງການ ກະສິກຳ-ປ່າໄມ້ ເມືອງ ....86
11.1. ປະເມີນສະພາບການ ປະຈຸບັນຫ້ອງການກະສິກຳ-ປ່າໄມ້ເມືອງ....86
11.2. ຄຳແນະນຳສຳລັບການປັບປຸງໃນການເສີມຂະຫຍາຍການສະໜັບສະໜູນການຜະລິດແບບມີຂໍ້ຕົກລົງ .... 87
11.3. ບົດບາດ ແລະ ຄວາມຮັບຜິດຊອບຂອງຫ້ອງການກະສິກຳ-ປ່າໄມ້ເມືອງໃນອຳນວຍຄວາມສະດວກການຜະລິດແບບມີຂໍ້ຕົກລົງ....89

12. ຂໍ້ແນະນຳ ..................................................................................90
**13.** ສະຫຼຸບ .................................................................................................92
14. ຫົວຂໍ້ສຳລັບການສຶກສາເພີ່ມເຕີມໃນຕໍ່ໜ້າ ..........................................................94
**15.** ເອກະສານຊ້ອນທ້າຍ: ລາຄາຜູ້ຜະລິດໃນ ສປປ ລາວ ແລະ ລາຄາຜູ້ບໍລິໂພກ ທີ່ປັກກິ່ງ .......................................................................................................................95
ເອກະສານອ້າງອີງ ....................................................................................96

# ອະທິບາຍຄຳສັບທຍ໌ ແລະ ນິຍາມ

| | |
|---|---|
| ຈີນ | ພົນລະເມືອງ ສປ ຈີນ; ພາສາຈີນ |
| DOA | ກົມປູກຝັງ |
| DAFO | ຫ້ອງການ ກະສິກຳ ແລະ ປ່າໄມ້ ເມືອງ |
| ລາຄາຕ່ຳສຸດ | ລາຄາຕ່ຳສຸດທີ່ຊາວກະສິກອນ ແລະ ຜູ້ລົງທຶນເອກະພາຍ ແລະ ກຳນົດໃນສັນຍາຊຶ່ງອາດຈະບໍ່ມີການປັບ. |
| ລາຄາຄົງທີ່ | ລາຄາຊື້ຂາຍທີ່ຊາວກະສິກອນ ແລະ ຜູ້ລົງທຶນເອກະພາຍ ແລະ ກຳນົດໃນສັນຍາຊຶ່ງຈະບໍ່ມີການປ່ຽນແປງໄປຕາມລາຄາຕະຫຼາດ |
| ຮານ | ກຸ່ມຊົນເຜົ່າສ່ວນໃຫຍ່ໃນ ໃນ ສປ ຈີນ |
| ຜູ້ລົງທຶນ | ຜູ້ປະກອບການທີ່ວາງຊັບພະຍາກອນທາງດ້ານການເງິນ , ກາຍະພາບ, ຫຼື ຊັບພະຍາກອນມະນຸດສຳລັບການຜະລິດກະສິກຳເປັນສິນຄ້າ ແລະ ຫວັງຜົນຕອບແທນທາງດ້ານການເງິນ ແລະ ອື່ນໆ |
| ລາວ | ພາສາທາງການຂອງ ສປປ ລາວ; ພົນລະເມືອງລາວ ຫຼື ຄົນລາວ |
| ສປປ ລາວ | ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ |
| ໄທລື້ | ແມ່ນຊົນເຜົ່າຜູ້ໄທໜຶ່ງທີ່ອາໃສໃນພາກເໜືອ ສປປ ລາວ ແລະ ພາກໃຕ້ຢູນານ, ສປ ຈີນ ແລະ ບອນອື່ນໆ |
| MAF | ກະຊວງກະສິກຳ ແລະ ປ່າໄມ້ |
| ລາຄາຕະຫຼາດ | ລາຄາທີ່ມີການປ່ຽນແປງໄປຕາມຄວາມຕ້ອງການ ແລະ ການຕອບສະໜອງ |
| NAFES | ກອງສົ່ງເສີມກະສິກຳ ແລະ ປ່າໄມ້ແຫ່ງຊາດ |
| NAFRI | ສະຖາບັນຄົ້ນຄ້ວາກະສິກຳ ແລະ ປ່າໄມ້ແຫ່ງຊາດ |
| PAFES | ຂະແໜງສົ່ງເສີມກະສິກຳ ແລະ ປ່າໄມ້ ແຂວງ |
| PAFO | ພະແນກກະສິກຳ ແລະ ປ່າໄມ້ແຂວງ |
| ຊາວກະສິກອນທຸລະກິດຂະໜາດນ້ອຍ | ຊາວກະສິກອນທີ່ທ້າວທັນມີສ່ວນຮ່ວມໃນການບໍລິຫານ ແລະ ທຳການຜະລິດໃນທີ່ດິນທີ່ມີເນື້ອທີ່ຂະໜາດນ້ອຍ, ປົກກະຕິນ້ອຍກວ່າ 3 ເຮັກຕາ ຊຶ່ງອາດຈະໄດ້ຮັບສິດນຳໃຊ້ທີ່ດິນທີ່ເປັນທາງການ. |
| SWGAB | ກຸ່ມວິຊາການຍ່ອຍສຳລັບຊາວກະສິກອນ ແລະ ທຸລະກິດກະສິກຳ |

## 1. ສະຫຼຸບສັງລວມຫຍໍ້

ການຜະລິດໃຫ້ເປັນສິນຄ້າຂອງຊາວກະສິກອນຮ່ວມກັບຜູ້ລົງທຶນມີການຂະຫຍາຍຫຼາຍໃນທົດສະວັດທີ່ຜ່ານມາ, ໂດຍໄດ້ຮັບການສະໜັບສະໜູນຈາກພາກລັດຊຶ່ງຄາດວ່າການຈັດຕັ້ງປະຕິບັດວຽກງານດັ່ງກ່າວຈະຊ່ວຍປັບປຸງລາຍຮັບຂອງຊຸມຊົນ ແລະ ຫຼຸດຜ່ອນຄວາມທຸກຈົນດ້ວຍການເພີ່ມລາຍຮັບໃຫ້ກັບຄອບຄົວຊາວກະສິກອນ. ແຕ່ຜົນໄດ້ຮັບແມ່ນມີຄວາມສະລັບຊັບຊ້ອນບໍ່ເປັນໄປຕາມສິ່ງທີ່ຄາດຫວັງໄວ້, ບາງກໍລະນີກໍ່ບໍ່ປະສົບຜົນສຳເລັດ ແລະ ບໍ່ມີຄວາມເທົ່າທຽມກັນ. ເຖິງແນວໃດກໍ່ຕາມບາງກໍລະນີກໍ່ປະສົບຜົນສຳເລັດຊຶ່ງສ້າງປະສົບການ ແລະ ຄວາມຮູ້ທີ່ສາມາດປັບປຸງນະໂຍບາຍ ແລະ ຮູບແບບການຈັດຕັ້ງປະຕິບັດສຳລັບຊາວກະສິກອນ, ຜູ້ລົງທຶນ ແລະ ພະນັກງານກະສິກຳ.

ການສຶກສານີ້ໄດ້ກວມເອົາການສຳຫຼວດຫຼາຍກໍລະນີການລົງທຶນ ແລະ ຜະລິດຕະພັນກະສິກຳ ລວມທັງການລົງທຶນທັງພາຍໃນ ແລະ ຕ່າງປະເທດ. ອີງໃສ່ກອບຂອງການສຶກສາ, ພົບວ່າ 11 ກໍລະນີຖືກພິຈາລະນາວ່າໄດ້ປະສົບຜົນສຳເລັດ ແລະ ໜຶ່ງກໍລະນີທີ່ຫຼົ້ມເຫຼວ. ເຖິງແນວໃດກໍ່ຕາມບາງກໍລະນີສຶກສາໄດ້ສະແດງໃຫ້ເຫັນອົງປະກອບເບື້ອງຕົ້ນທີ່ຊີ້ບອກເຖິງຄວາມສຳເລັດ, ແຕ່ບາງກໍລະນີອາດມີເງື່ອນໄຂຂອງຄວາມສຳເລັດຈຳນວນໃດໜຶ່ງ ຫຼື ແຕ່ຢ່າງໜ້ອຍແມ່ນມີໜຶ່ງເງື່ອນໄຂ. ຖ້າເບິ່ງການຄ້າຂາຍແບບກວ້າງໆລະຫວ່າງຊາວກະສິກອນ ແລະ ຜູ້ລົງທຶນເຫັນວ່າຊາວກະສິກອນທີ່ໃກ້ກັບຕະຫຼາດຂອງ ສ ປ ຈີນ ໄດ້ຮັບໂອກາດທີ່ດີຫຼາຍກວ່າຊາວກະສິກອນໃນເຂດອື່ນ.

ແນ່ນອນໃນເຂດທີ່ຫ່າງໄກນອກຈາກຈະປະເຊີນບັນຫາກ່ຽວກັບທີ່ຕັ້ງພູມສັນຖານແລ້ວຍັງປະເຊີນກັບບັນຫາກ່ຽວກັບປະສິດທິຜົນຂອງການຕິດຕໍ່ສື່ສານ ແລະ ການຂົນສົ່ງ. ໂດຍລວມແລ້ວການສຶກສາຄັ້ງນີ້ກໍ່ຄືກັບການສຶກສາອື່ນໆເຫັນວ່າມີຫຼາຍປັດໃຈທີ່ສົ່ງຜົນໃຫ້ປະສົບຜົນສຳເລັດຊຶ່ງຜົນສຳເລັດດັ່ງກ່າວຈະເປັນຜົນດີກັບຊາວກະສິກອນ, ຜູ້ລົງທຶນ ແລະ ຜູ້ວາງແນວທາງນະໂຍບາຍໃນຂອບເຂດທົ່ວປະເທດສາມາດນຳມາໝູນໃຊ້ໄດ້. ຜົນຮັບທີ່ເຫັນວ່າເປັນຜົນສຳເລັດສຳລັບການຜະລິດກະສິກຳເປັນສິນຄ້າແບບມີຂໍ້ຜູກມັດໃນສັນຍາຂຶ້ນກັບຫຼາຍປັດໃຈເຊັ່ນ: ປັດໃຈພາຍໃນ ແລະ ປັດໃຈພາຍນອກ.

ປັດໃຈພາຍໃນແມ່ນມີຂໍ້ຕົກລົງການຜະລິດທີ່ເປັນລາຍລັກອັກສອນ, ການກຳນົດລາຄາຕາມລາຄາທ້ອງຕະຫຼາດ, ການໃຫ້ເງິນມັດຈຳລ່ວງໜ້າ ແລະ ລະບົບການຜະລິດທີ່ໄດ້ຮັບການຢັ້ງຢືນ. ປັດໃຈພາຍນອກລວມມີການໃຫ້ຄຸນຄ່າໃນການສ້າງສາຍສຳພັນ, ຜົນປະໂຫຍດທາງສັງຄົມ, ມີຜູ້ອຳນວຍຄວາມສະດວກ, ຂໍ້ມູນກ່ຽວກັບຕະຫຼາດ, ມີການຜະລິດ ແລະ ການບໍລິໂພກທີ່ສົ່ງເສີມຊຶ່ງກັນ ແລະ ກັນໃຫ້ສູງຂຶ້ນ. ແນວໃດກໍ່ຕາມບໍ່ໄດ້ໝາຍວ່າມັນຕ້ອງມີປັດໃຈທັງໝົດນີ້ຈຶ່ງຈະເຮັດໃຫ້ປະສົບຜົນສຳເລັດ. ຖ້າວ່າມີປັດໃຈເຫຼົ່ານີ້ຫຼາຍເທົ່າໃດມັນກໍ່ຈະສົ່ງຜົນເຮັດໃຫ້ການຜະລິດກະສິກຳເປັນສິນຄ້າແບບຂໍ້ຜູກພັນໃນສັນຍາຈະນຳໄປສູ່ ຄວາມສຳເລັດໄດ້ຫຼາຍຂຶ້ນ.

ການສຶກສານີ້ຍັງພົບວ່າມັນມີສິ່ງທ້າທາຍກ່ຽວກັບບົດບາດຂອງຫ້ອງການກະສິກຳ ແລະ ປ່າໄມ້ເມືອງ, ອົງການຈັດຕັ້ງອື່ນໆແຕ່ມັນກໍ່ມີກາລະໂອກາດດີໃນການປັບປຸງການສະໜັບສະໜູນຊາວກະສິກອນ ແລະ ການພັດທະນາກະສິກຳໃຫ້ມີປະສິດທິພາບ, ນຳໃຊ້ຊັບພະຍາກອນຂອງພາກລັດໃຫ້ມີຄູນຄ່າຫຼາຍຂຶ້ນກວ່າເກົ່າ, ມີຄວາມສຳຄັນ ແລະ ເປັນຜົນປະໂຫຍດຕໍ່ພະນັກງານ. ການກຳນົດ ແລະ ເປີດເຜີຍປັດໃຈທີ່ພາໃຫ້ເກີດມີຜົນສຳເລັດເປັນສິ່ງທີ່ຈຳເປັນແຕ່ບໍ່ພຽງພໍທີ່ຈະເຮັດໃກ້ເກີດຜົນໄດ້ຮັບທີ່ເປັນທາງບວກ ແລະ ເພີ່ມຂຶ້ນລາຍຮັບຂອງຜູ້ຜະລິດເທື່ອ. ເພື່ອສ້າງຜົນປະໂຫຍດໃຫ້ແກ່ຄອບຄົວ ແລະ ຊຸມຊົນຊາວກະສິກອນມັນຮຽກຮ້ອງໃຫ້ມີການຊ່ວຍເຫຼືອ ຫຼື ຕອບສະໜອງຢ່າງພຽງພໍຈາກລັດ ແລະ ບັນດາຄູ່ຮ່ວມງານການພັດທະນາ.

ປັດໃຈທີ່ພາໃຫ້ເກີດມີຜົນສຳເລັດຍັງຈຳເປັນຕ້ອງໄດ້ມີການວິໃຈໃຫ້ເລິກເຊິ່ງກ່ອນທີ່ຈະສະຫຼຸບ, ແປຄວາມໝາຍ ແລະ ນຳໃຊ້ໃຫ້ເປັນຫຼັກການ, ນະໂຍບາຍ ແລະ ແນວທາງການຈັດຕັ້ງປະຕິບັດສຳລັບວຽກງານກະສິກຳ ແລະ ປັບປຸງຊີວິດການເປັນຢູ່ແບບຍືນຍົງ. ເປັນສິ່ງທີ່ແຈ່ມແຈ້ງແລ້ວວ່າການຜັນຂະຫຍາຍອົງປະກອບຂອງຄວາມສຳເລັດ ແລະ ຂໍ້ແນະນຳໃນບົດລາຍງານນີ້ໃຫ້ເປັນນະໂຍບາຍ, ແຜນງານ ແລະ ແນວທາງການປະຕິບັດເປັນສິ່ງທ້າທາຍສຳລັບຫ້ອງການກະສິກຳ-ປ່າໄມ້ເມືອງໂດຍສະເພາະແມ່ນທາງດ້ານງົບປະມານ, ການສືບທອດອຸດົມການ ແລະ ຈິນຕະນາການ.

ເຖິງຢ່າງນັ້ນກໍ່ຕາມ, ການສຶກສານີ້ພົບວ່າມັນມີເຫດຜົນທີ່ສົ່ງເສີມຕໍ່ການຄ້າທຸລະກິດກະສິກຳຂະໜາດນ້ອຍໃນ ສປປ ລາວ ຢ່າງລະມັດລະວັງ ແລະ ຄ່ອຍເປັນຄ່ອຍໄປ. ແຮງກະຕຸ້ນທີ່ຈະນຳໃຊ້ທ່າແຮງທາງດ້ານກະສິກຳເພື່ອຫຼຸດຜ່ອນຄວາມທຸກຈົນ, ປັບປຸງຊີວິດການເປັນຢູ່ ແລະ ສ້າງຄວາມເຂັ້ມແຂງດ້ານເສດຖະກິດໃຫ້ຍືນຍົງ ແລະ ປະກົດຜົນເປັນຈິງໄດ້ນັ້ນ ແມ່ນຂຶ້ນກັບຊາວກະສິກອນ ແລະ ຜູ້ລົງທຶນ. ມັນເປັນສິ່ງທີ່ສຳຄັນຫຼາຍເພາະວ່າຫຼັງຈາກສະຕະວັດໜຶ່ງທີ່ຜ່ານມາທີ່ການພັດທະນາກະສິກຳໃນປະເທດທີ່ຂາດແຄນຊັບພະຍາກອນເປັນໄປໄດ້ຍາກນັ້ນກັບມາມີໂອກາດອີກຄັ້ງ (Grantham 2011) ຊຶ່ງມັນເປັນເງື່ອນໄຂອັນດີໃຫ້ກັບຊາວກະສິກອນຈະໄດ້ຮັບຜົນປະໂຫຍດ, ຄວາມຮັ່ງມີ ແລະ ການພັດທະນາກະສິກຳແບບຍືນຍົງ ໃນ ສປປ ລາວ ໃນອະນາຄົດ. ເຖິງແນວໃດກໍ່ຕາມແຕ່ສິ່ງນີ້ຈະປະກົດຜົນເປັນຈິງນັ້ນ ມັນອາດຕ້ອງໄດ້ມີການໝູນໃຊ້ບັນດາປັດໃຈທີ່ພາໃຫ້ເກີດຜົນສຳເລັດທີ່ກ່າວມານັ້ນເຂົ້າໃນນະໂຍບາຍ ແລະ ແຜນງານການສົ່ງເສີມກະສິກຳ, ການຄ້າ ແລະ ການລົງທຶນຕ່າງໆ.

## 2. ຜົນຮັບຫຼັກ

| | ຜົນຮັບຈາກກໍລະນີສຶກສາ | ພາກທີ |
|---|---|---|
| 1 | ຜູ້ອຳນວຍຄວາມສະດວກທີ່ໃຫ້ການສະໜັບສະໜູນທາງດ້ານການເງິນສຳລັບການຜະລິດສາມາດເຊື່ອມໂຍງຊາວກະສິກອນ ແລະ ຕະຫຼາດສະເພາະ ທີ່ໃຫ້ ລາຍຮັບທີ່ສູງ | 8.1 |
| 2 | ການກວດສອບ ຊາວກະສິກອນ ແລະ ຈັດຫາທີ່ດິນສຳລັບ ຊາວກະສິກອນທີ່ມີທີ່ດິນຈຳກັດອາດຈະເຮັດໃຫ້ຊາວກະສິກອນຈັດຕັ້ງປະຕິບັດໜ້າທີ່ໄດ້ດີ | 8.2 |
| 3 | ຜູ້ລົງທຶນທີ່ໜ້າເຊື່ອຖື ທີ່ໃຫ້ການຊ່ວຍເຫຼືອຢ່າງໃກ້ສິດ ສາມາດຊ່ວຍຊາວກະສິກອນຮັບປະກັນທາງດ້ານລາຍຮັບ | 8.3 |
| 4 | ຜູ້ລົງທຶນທ້ອງຖິ່ນອາດຈະເຮັດທຸລະກິດເປັນກຸ່ມ ແຕ່ວ່າ ມັນອາດຈະມີຄຸນຄ່າ ສຳລັບການສ້າງຄວາມໄວ້ວາງໃຈ ແລະ ການບໍລິການສິນເຊື່ອສຳລັບຊາວກະສິກອນ | 8.4 |
| 5 | ການຜະລິດເປັນສິນຄ້າ ສາມາດເຮັດໃຫ້ການຜະລິດເກີນ ລະດັບຄວາມອາດສາມາດໃນການຮອງຮັບຂອງ ຄວາມຍືນຍົງທາງດ້ານນິເວດວິທະຍາ ຊຶ່ງມີຄວາມສ່ຽງຕໍ່ການຫຼຸດລົງຂອງຜົນຜະລິດ ແລະ ລາຍຮັບໃນໄລຍະຍາວ | 8.5 |
| 6 | ຄຸນນະພາບການລົງທຶນໄດ້ຮັບການປັບປຸງ ເມື່ອຜູ້ລົງທຶນໄດ້ຮຽກຮ້ອງໃຫ້ຮັບປະກັນໃນການລົງທຶນ ໂດຍວາງເງິນມັດຈຳກັບ ຫ້ອງການກະສິກຳ-ປ່າໄມ້ເມືອງ | 8.6 |
| 7 | ຄວາມສຳພັນຂອງຍາດພີ່ນ້ອງອຳນວຍຄວາມສະດວກຕໍ່ ການຜະລິດເພື່ອສົ່ງຂາຍຕະຫຼາດຕ່າງປະເທດ | 8.7 |
| 8 | ການຜະລິດເປັນສິນຄ້າແບບມີຂໍ້ຜູກພັນໃນສັນຍາ ຊ່ວຍຫຼີກລ່ຽງ ການບໍລິຫານຄວບຄຸມ, ການຄຸ້ມຄອງ ແລະ ການຈັດຕັ້ງປະຕິບັດລະບຽບການທີ່ບໍ່ມີປະສິດທິພາບ | 8.8 |
| 9 | ຊາວກະສິກອນສາມາດ ນຳໃຊ້ຂໍ້ມູນ-ຂ່າວສານຕະຫຼາດກະສິກຳເພື່ອ ເຈລະຈາຕໍ່ລອງກັບຜູ້ລົງທຶນ ແລະ ເພື່ອບັນລຸເງື່ອນໄຂທີ່ດີກວ່າ ເຖິງແມ່ນວ່າ ຈະບໍ່ໄດ້ຮັບການຊ່ວຍເຫຼືອຢ່າງພຽງພໍຈາກຫ້ອງການກະສິກຳ-ປ່າໄມ້ເມືອງ | 8.9 |
| 10 | ເຄືອຂ່າຍຍາດຕິພີ່ນ້ອງ ສາມາດອຳນວຍຄວາມສະດວກ ການຜະລິດ ສຳລັບ ຜູ້ລົງທຶນຕ່າງປະເທດ ຊຶ່ງໃຫ້ຜົນປະໂຫຍດຫຼາຍກວ່າຜູ້ລົງທຶນທີ່ ຫ້ອງການກະສິກຳ-ປ່າໄມ້ເມືອງ ສົ່ງເສີມ | 8.10 |
| 11 | ຊາວກະສິກອນສາມາດປັບປຸງ ແລະ ຮັບປະກັນຊີວິດການເປັນຢູ່ ແລະ ຫຼຸດຜ່ອນຄວາມສ່ຽງ ໂດຍການ ແບ່ງຂາຍຜົນຜະລິດລະຫວ່າງ ຜູ້ລົງທຶນ ແລະ ພໍ່ຄ້າ | 8.11 |
| 12 | ຫ້ອງການ ກະສິກຳ-ປ່າໄມ້ ເມືອງ ຂາດອຳນາດໃນການປະຕິບັດ ມາດຕະການສຳລັບຜູ້ລົງທຶນ ທີ່ປະລະທຸລະກິດທີ່ຮ່ວມມືກັບຊາວກະສິກອນ | 8.12 |

## ແຜນທີ່ ສະຖານທີ່ສຶກສາ




### ເຂດທີ່ມີບັນຫາ

1 ກໍລະນີ 1 - ບ້ານ ກະຕອດ, ເມືອງ ປາກຊ່ອງ, ແຂວງ ຈຳປາສັກ
2 ກໍລະນີ 2 - ເມືອງ ປາກຊັນ, ແຂວງ ບໍລິຄຳໄຊ
3 ກໍລະນີ 3 - ບ້ານ ຍອຍໄຣ, ເມືອງ ປາກກະດິງ, ແຂວງ ບໍລິຄຳໄຊ
4 ກໍລະນີ 4 - ບ້ານ ໃດ, ເມືອງ ຫ້ວຍຊາຍ, ແຂວງ ບໍ່ແກ້ວ
5 ກໍລະນີ 5 - ບ້ານ ນ້ຳບຸກ, ເມືອງ ຕົ້ນເຜິ້ງ, ແຂວງ ບໍ່ແກ້ວ
6 ກໍລະນີ 6 - ຫ້ອງການກະສິກຳ ແລະ ປ່າໄມ້, ເມືອງນາໝໍ້, ແຂວງ ອຸດົມໄຊ
7 ກໍລະນີ 7 - ກຸ່ມບ້ານ ຂວາງ, ເມືອງ ນາໝໍ້, ແຂວງ ອຸດົມໄຊ
8 ກໍລະນີ 8 - ບ້ານ ຂວາງຄຳ, ເມືອງ ນາໝໍ້, ແຂວງ ອຸດົມໄຊ
9 ກໍລະນີ 9 - ບ້ານ ໂຮມດອຍ, ເມືອງ ບຸນໃຕ້, ແຂວງ ຜົ້ງສາລີ
10 ກໍລະນີ 10 - ບ້ານ ຢໍ້, ເມືອງ ບຸນເໜືອ, ແຂວງ ຜົ້ງສາລີ
11 ກໍລະນີ 11 - ບ້ານ ນ້ຳແດງກາງ, ແຂວງ ຫຼວງນ້ຳທາ
12 ກໍລະນີ 12 - ບ້ານ ພຽງໄຊ, ເມືອງ ບຸນເໜືອ, ແຂວງ ຜົ້ງສາລີ

## 3. ພາກສະເໜີ

ຊາວກະສິກອນ ທີ່ເຮັດທຸລະກິດຂະໜາດນ້ອຍ ໃນ ສ ປ ປ ລາວ ກຳລັງຢູ່ໃນທ່າມກາງ ສະພາບການຂອງການປ່ຽນແປງ ທີ່ແຕກຕ່າງກັບສິ່ງທີ່ເຂົາເຈົ້າໄດ້ປະເຊີນໃນ 5 ຫຼື 10 ປີ ຜ່ານມາ. ຖະໜົນຫົນທາງໄດ້ຮັບການພັດທະນາ, ໂທລະສັບມີຢູ່ເກືອບທຸກຫົນທຸກແຫ່ງ,ການລົງທຶນທີ່ເພີ່ມຂຶ້ນ, ແລະ ເປີດກວ້າງສຳລັບຊາວກະສິກອນ ແລະ ການນຳໃຊ້ທີ່ດິນສຳລັບການຜະລິດເປັນສິນຄ້າ. ເຖິງແນວໃດກໍ່ຕາມ, ສຳລັບຊາວກະສິກອນເພື່ອເກັບກ່ຽວຜົນປະໂຫຍດຈາກກາລະໂອກາດທາງດ້ານການຄ້າ ແລະ ເພີ່ມຜົນຕອບແທນຈາກການນຳໃຊ້ທີ່ດິນນັ້ນເຂົາເຈົ້າຈຳເປັນຕ້ອງໄດ້ເອົາຊະນະບັນດາຂໍ້ຈຳກັດທາງດ້ານການເງິນ, ເທັກໂນໂລຊີ ແລະ ການເຂົ້າເຖິງຕະຫຼາດ. ໜຶ່ງໃນຫຼາຍທາງເລືອກກ່ຽວກັບການຜະລິດເປັນສິນຄ້ານັ້ນເຫັນວ່າການຜະລິດກະສິກຳເປັນສິນຄ້າແບບມີຂໍ້ຜູກພັນໃນສັນຍາເປັນຕົວແບບທາງເລືອກທີ່ດີເພາະວ່າມັນສ້າງເງື່ອນໄຂສຳລັບຊາວກະສິກອນ ແລະ ຜູ້ລົງທຶນເພື່ອລະດົມຊັບສິນ ແລະ ກາລະໂອກາດເພື່ອຜົນປະໂຫຍດຊຶ່ງກັນ ແລະ ກັນ. ການຜະລິດກະສິກຳເປັນສິນຄ້າແບບມີຂໍ້ຜູກພັນໃນສັນຍາ ແມ່ນມາດຕະການບັງຄັບໜຶ່ງ ຊຶ່ງຊາວກະສິກອນຕົກລົງເຫັນດີທາງດ້ານລາຄາພາຍໃຕ້ເງື່ອນໄຂໃດໜຶ່ງຊຶ່ງເຂົາເຈົ້າຈະຜະລິດ ແລະ ຂາຍຜົນຜະລິດໃຫ້ ຜູ້ຊື້ ຜູ້ທີ່ເປັນທັງຕະຫຼາດ ຫຼື ສະໜອງຕະຫຼາດ, ໃຫ້ທຶນ ແລະ ເທັກໂນໂລຊີ.[1]

ການຜະລິດກະສິກຳເປັນສິນຄ້າແບບມີຂໍ້ຜູກພັນໃນສັນຍາ ໄດ້ຮັບການ ສົ່ງເສີມ ຈາກພາກ ລັດ ໄດ້ຫຼາຍທົດສະວັດແລ້ວ ຊຶ່ງເປັນ ກົນໄກໜຶ່ງສຳລັບການ ຫຼຸດຜ່ອນຄວາມທຸກຈົນສຳລັບຊາວກະສິກອນ ແລະ ຍັງຈະເປັນໝາກຫົວໃຈໃນແຜນການສົ່ງເສີມໃນອະນາຄົດ (MAF 2010, 15, 16, 18, 20, 21). ການຜະລິດກະສິກຳເປັນສິນຄ້າແບບມີຂໍ້ຜູກພັນໃນສັນຍາເປັນທີ່ຮູ້ຈັກຫຼາຍຂຶ້ນ. ແຕ່ການປຶກສາຫາລືຮ່ວມກັບຊາວກະສິກອນກ່ຽວກັບການຈັດຕັ້ງປະຕິບັດແມ່ນຍັງບໍ່ທັນກວ້າງຂວາງ. ການຖົກຖຽງກ່ຽວກັບການຜະລິດກະສິກຳເປັນສິນຄ້າແບບມີຂໍ້ຜູກພັນໃນສັນຍາໃນ ສປປ ລາວ ວ່າມັນໄດ້ສ້າງຜົນຮັບທາງບວກສຳລັບຊາວກະສິກອນ ແລະ ຜູ້ລົງທຶນ ແລະ ໃນແຕ່ລະລະດູການ ຫຼື ຕະຫຼອດປີ ຫຼື ບໍ່. ສະນັ້ນ, ການສຶກສານີ້ມີຈຸດປະສົງເພື່ອປະເມີນບັນດາປັດໃຈທີ່ພາໃຫ້ເກີດຜົນສຳເລັດ ແລະ ກາລະໂອກາດສຳລັບປັບປຸງການຜະລິດກະສິກຳເປັນສິນຄ້າແບບມີຂໍ້ຜູກພັນໃນສັນຍາໃນອະນາຄົດ.

ການສຶກສາກ່ຽວກັບປັດໃຈທີ່ກໍ່ໃຫ້ເກີດຜົນສຳເລັດມີຄວາມຈຳເປັນເພາະວ່າການສົນທະນາລະຫວ່າງຫ້ອງການລັດ ແລະ ອົງການຈັດຕັ້ງຄູ່ຮ່ວມງານສຳລັບການພັດທະນາໃນ ສປປ ລາວໄດ້ຍົກໃຫ້ເຫັນ ແລະ ລາຍງານບັນດາບັນຫາກ່ຽວກັບການຜະລິດກະສິກຳເປັນສິນຄ້າແບບມີຂໍ້ຜູກພັນໃນສັນຍາບໍ່ສາມາດຊ່ວຍການຫຼຸດຜ່ອນຄວາມທຸກຈົນຂອງຊາວກະສິກອນ. ລາຍງານ ແລະ ຂໍ້ມູນຕ່າງໆທີ່ກະຈາຍໄດ້ສ້າງຄວາມກັງວົນວ່າການຜະລິດກະສິກຳເປັນສິນຄ້າແບບມີຂໍ້ຜູກພັນໃນສັນຍາອາດສ້າງຜົນກະທົບຕໍ່ຊີວິດການເປັນຢູ່ຂອງຊາວກະສິກອນ ແລະ ຊຸມຊົນ. ແຕ່ການສຳຫຼວດໃນທົ່ວປະເທດໃນປີ 2007 ພົບວ່າບາງກໍລະນີທີ່ປະສົບຜົນສຳເລັດ ແລະ ບາງກໍລະນີກໍ່ບໍ່ສາມາດຊ່ວຍຊາວກະສິກອນຫຼຸດພົ້ນອອກຈາກຄວາມທຸກຈົນເນື່ອງຈາກຜູ້ລົງທຶນບໍ່ປະຕິບັດຕາມສັນຍາ, ສວຍໃຊ້ເຈົ້າໜ້າທີ່ທ້ອງຖິ່ນ, ຂາດລະບຽບທີ່ຮັດກຸມ ແລະ ການບັງຄັບໃຊ້ທີ່ບໍ່ມີປະສິດທິຜົນ, ພືດຜັກທີ່ປູກບໍ່ເໝາະກັບພື້ນທີ່ ແລະ ຂໍ້ມູນຂ່າວສານທີ່ບໍ່ສົມສ່ວນກັນ (Fullbrook 2007). Fujita *et al* (2006, 23-24) ຕາມການສັງເກດຄວາມກົດດັນທາງດ້ານການຄ້າ, ລວມທັງການຜະລິດກະສິກຳເປັນສິນຄ້າແບບມີຂໍ້ຜູກພັນໃນສັນຍາ, ບວກກັບການຍົກຍ້າຍ, ການເພີ່ມຂຶ້ນຄວາມໜາແໜ້ນຂອງປະຊາກອນ ຫຼື ການຄອບຄອງທີ່ດິນບໍ່ເທົ່າທຽມກັນເຮັດໃຫ້ຊາວກະສິກອນບໍ່ມີທີ່ດິນທຳການຜະລິດເປັນຂອງຕົນເອງໂດຍສະເພາະທີ່ເມືອງສິງ, ແຂວງຫຼວງນ້ຳທາ. ໄດອານາ (2008, 91-94). ບາງກໍລະນີທີ່ພົບໃນການຜະລິດກະສິກຳເປັນສິນຄ້າແບບມີຂໍ້ຜູກພັນໃນສັນຍາໃນແຂວງຫຼວງນ້ຳທາ, ເຖິງວ່າມັນໄດ້ສ້າງຜົນປະໂຫຍດທາງບວກ, ໃນຄະນະດຽວກັນກໍ່ພົບວ່າມີການກຳນົດເງື່ອນໄຂທີ່ບໍ່ຍຸດຕິທຳ, ລາຄາທີ່ຕ່ຳ ແລະ ໃນລັກສະນະທີ່ຊາວກະສິກອນບໍ່ສາມາດເຂົ້າໃຈໄດ້ຊຶ່ງບໍ່ໄດ້ຮັບການເອົາໃຈໃສ່ຈາກຜູ້ລົງທຶນ. ລິນ (2010, 27) ໄດ້ເນັ້ນໃຫ້ເຫັນວ່າຊາວກະສິກອນຈະຕົກຢູ່ໃນຄວາມສ່ຽງ ແລະ ປະເຊີນກັບບັນຫາທີ່ຕາມມາ ເມື່ອຜູ້ລົງທຶນຖອນຕົວກະທັນຫັນເພາະວ່າເຂົາເຈົ້າບໍ່ໄດ້ກັ່ນກອງຜູ້ທີ່ຈະມາລົງທຶນລະອຽດເທົ່າທີ່ຄວນ. ມີຫຼາຍກໍລະນີສຶກສາໂດຍ ທ່ານ ຊີ (2008), ຊຶ່ງກໍ່ໄດ້ຍົກໃຫ້ເຫັນບັນຫາ

[1] ນິຍາມ ທີ່ຄັດມາຈາກ ອີຕັນ ແລະ ຊີຟາດ (2001)

ຜົນກະທົບທີ່ຕາມມາ, ລວມທັງ ການສູນເສຍທີ່ດິນ ແລະ ການເຂົ້າເຖິງຊັບພະຍາກອນທີ່ເປັນຂອງສ່ວນລວມ, ການນຳໃຊ້ການຜະລິດກະສິກຳເປັນສິນຄ້າແບບມີຂໍ້ຜູກພັນໃນສັນຍາເພື່ອສ້າງເງື່ອນໄຂສຳລັບການປູກຢາງພາລາໃນແຂວງ ຫຼວງນ້ຳທາ.

ໃນເດືອນມັງກອນ 2011 ຄະນະວິຊາການກຸ່ມຍ່ອຍໄດ້ຕົກລົງເຫັນດີກ່ຽວກັບການສຶກສານີ້ເພື່ອຊ່ວຍພາກລັດ ແລະ ຄູ່ຮ່ວມພັດທະນາ ເພື່ອຈະນຳໃຊ້ປະສົບການ ແລະ ສະໜັບສະໜູນຄວາມພະຍາຍາມທີ່ຈະປັບປຸງການປະຕິບັດການຜະລິດກະສິກຳເປັນສິນຄ້າ ແບບມີຂໍ້ຜູກພັນໃນສັນຍາໃນຊຸມປີຕໍ່ໜ້າ. ຈຸດປະສົງຫຼັກແມ່ນເພື່ອຄົ້ນຫາປັດໃຈທີ່ພາໃຫ້ສາຍພົວພັນການຜະລິດລະຫວ່າງຊາວກະສິກອນ ແລະ ຜູ້ລົງທຶນປະສົບຜົນສຳເລັດໂດຍສຸມໃສ່ກໍລະນີທີ່ປະສົບຜົນສຳເລັດເປັນຈຸດໜັກ. ຈຸດປະສົງທີ່ສອງແມ່ນເພື່ອຊອກຫາກາລະໂອກາດສຳລັບຫ້ອງການກະສິກຳ-ປ່າໄມ້ເມືອງທີ່ຈະສົ່ງເສີມຄວາມຍຸດຕິທຳໃນການຈັດຕັ້ງການຜະລິດລະຫວ່າງຊາວກະສິກອນ ແລະ ຜູ້ລົງທຶນຢ່າງເທົ່າທຽມກັນ ແລະ ຫຼຸດຜ່ອນການເອົາລັດເອົາປຽບທາງດ້ານລາຄາ.

## 4. ການສຶກສາຄົ້ນຄວ້າ

### 4.1. ກອບຂອງການສຶກສາ

ການສຶກສາຄັ້ງນີ້ກວມເອົາການສຶກສາການຜະລິດກະສິກຳເປັນສິນຄ້າທີ່ມີຂໍ້ຕົກລົງຊຶ່ງຈັດຕັ້ງປະຕິບັດໂດຍຊາວກະສິກອນ ແລະ ຜູ້ລົງທຶນ[2] ແລະ ຝ່າຍຕ່າງໆທີ່ກ່ຽວຂ້ອງຊຶ່ງລວມມີຊາວກະສິກອນ, ຜູ້ລົງທຶນ, ຕົວແທນຜູ້ລົງທຶນ, ພະນັກງານຂອງພາກລັດ. ການສຶກສານີ້ເນັ້ນໃສ່ສະເພາະການຜະລິດພືດເປັນສິນຄ້າເພາະວ່າການຜະລິດແບບນີ້ໄດ້ຂະຫຍາຍຕົວຢ່າງກວ້າງຂວາງ ແລະ ກະຊວງກະສິກຳ ແລະ ປ່າໄມ້ກຳລັງນຳໃຊ້ຮູບແບບການຜະລິດດັ່ງກ່າວເປັນເຄື່ອງມືໜຶ່ງໃນການສົ່ງເສີມການເຮັດທຸລະກິດຮ່ວມກັນລະຫວ່າງຊາວກະສິກອນ ແລະ ຜູ້ລົງທຶນເພື່ອເພີ່ມການຜະລິດ.

### 4.2. ຄຳຖາມສຳລັບສຶກສາ

ການເກັບກຳຂໍ້ມູນ ແລະ ສຶກສາວິໃຈແມ່ນອີງໃສ່ 2 ຄຳຖາມຕົ້ນຕໍຄື :

1. ຍ້ອນຫຍັງ ການຜະລິດກະສິກຳເປັນສິນຄ້າແບບມີຂໍ້ຜູກພັນໃນສັນຍາລະຫວ່າງ ຊາວກະສິກອນ ແລະ ຜູ້ລົງທຶນ ຈຶ່ງປະສົບຜົນສຳເລັດ?
2. ຫ້ອງການກະສິກຳ-ປ່າໄມ້ເມືອງສາມາດເຮັດຫຍັງໄດ້ແດ່ ເພື່ອຊ່ວຍໃຫ້ການຜະລິດກະສິກຳເປັນສິນຄ້າແບບມີຂໍ້ຜູກພັນໃນສັນຍາມີຄວາມຍຸດຕິທຳ ແລະ ສ້າງເງື່ອນໄຂຊຸກຍູ້ ການປະຕິບັດໜ້າທີ່ ຂອງພາກສ່ວນທີ່ກ່ຽວຂ້ອງໃຫ້ທີ່ດີຂຶ້ນ?

ຄຳຖາມທຳອິດແມ່ນສຸມໃສ່ຜົນໄດ້ຮັບຈາກການຜະລິດກະສິກຳເປັນສິນຄ້າແບບມີຂໍ້ຜູກພັນໃນສັນຍາ, ແມ່ນຫຍັງທີ່ພາໃຫ້ມີຜົນສຳເລັດ? ການຊີ້ບອກເຖິງຄວາມສຳເລັດ ຍັງບໍ່ມີຕົວຊີ້ບອກທີ່ເປັນປະລິມານ ຫຼື ຕົວວັດແທກໄດ້. ໃນເບື້ອງຕົ້ນຄວາມປະສົບຜົນສຳເລັດໄດ້ຖືກສ້າງຂຶ້ນໂດຍ 2 ບັນທັດຖານຄື:

**1) ເວລາ**: ກຳນົດເອົາ 3 ລະດູການເພື່ອຈະພິສູດວ່າແຕ່ລະຝ່າຍເຫັນຄຸນຄ່າຢ່າງພຽງພໍກັບຜົນປະໂຫຍດທາງດ້ານເວລາ, ຄວາມພະຍາຍາມ ແລະ ຊັບພະຍາກອນ. ຄຸນລັກສະນະ ສົມມຸດຖານທີ່ວ່າ: ຖ້າການຜະລິດສາມາດສືບຕໍ່ເພາະເງື່ອນໄຂທີ່ກ່າວມານີ້ໝາຍວ່າມັນອາດສາມາດນຳໄປສູ່ຜົນສຳເລັດ.

ເຖິງແມ່ນວ່າເງື່ອນໄຂນີ້ອາດຈະບໍ່ແມ່ນຕົວຊີ້ບອກທີ່ເໝາະສົມທີ່ສຸດແຕ່ມັນກໍ່ໃຫ້ທາງເລືອກທີ່ເປັນໄປໄດ້ກັບເງື່ອນໄຂ ຫຼື ສະພາບແຕ່ລະຂົງເຂດ.

**2) ຕົວຊີ້ບອກທີ່ເປັນຄຸນນະພາບ**: ຜູ້ໃຫ້ສຳພາດເປັນຜູ້ຕັດສິນ ແລະ ພິຈາລະນາວ່າການຜະລິດກະສິກຳເປັນສິນຄ້າແບບມີຂໍ້ຜູກພັນໃນສັນຍານັ້ນຈະມີຜົນສຳເລັດ ແລະ ຊີ້ບອກຄຸນນະພາບທີ່ເຂົາຕ້ອງການໂດຍອີງໃສ່ປະສົບການຂອງເຂົາເຈົ້າ. ວິທີການນີ້ໄດ້ເປີດຊ່ອງວ່າງ ສຳລັບທັດສະນະຂອງຜູ້ໃຫ້ຂໍ້ມູນແທນທີ່ຈະກຳນົດຄຸນລັກສະນະພາຍນອກ ແລະ ປະເມີນຄ່າຮ່ວມກັນ. ເຖິງແນວໃດກໍ່ຕາມ, ເວລາເປັນສິ່ງທ້າທາຍສຳລັບຜູ້ໃຫ້ຂໍ້ມູນໃນການສະແດງຄວາມຄິດເຫັນຂອງເຂົາເຈົ້າຖ້າຫາກບໍ່ມີການຊ່ວຍເຫຼືອ. ນອກນັ້ນການປຽບທຽບລະຫວ່າງກໍລະນີຕ່າງໆກໍ່ເປັນໄປໄດ້ຍາກ. ບັນທັດຖານທີ່ກ່າວມາເປັນຕົວຢ່າງ ແລະ ຈຸດລິເລີ່ມ. ແນ່ນອນເພາະວ່າສະພາບແວດລ້ອມທີ່ແຕກຕ່າງກັນມັນຫຼີກລ່ຽງບໍ່ໄດ້ທີ່ບັນທັດຖານທີ່ກ່າວມາບໍ່ສາມາດນຳໃຊ້ໄດ້ໝົດທຸກກໍລະນີ.

ເຖິງຢ່າງນັ້ນກໍ່ຕາມ, ຄວາມພະຍາຍາມໃນການກຳນົດບັນທັດຖານວັດແທກຄວາມສຳເລັດໃນລັກສະນະນີ້ແມ່ນສຸມໃສ່ປັດໃຈທີ່ມີຄວາມໃກ້ຄຽງທີ່ສຸດທີ່ພາກສ່ວນທີ່ກ່ຽວຂ້ອງຕ່າງໆມີປະສົບການ. ເຖິງແມ່ນວ່າຄຳຖາມທີ່ກ່າວມາເປັນຕົວກຳນົດກອບສຳລັບການສຶກສາແຕ່ໃນການສຳພາດຕົວຈິງຍັງມີການສົນທະນາປະເດັນອື່ນໆທີ່ສຳຄັນຕື່ມອີກເຊັ່ນ: ການລົງທຶນເພື່ອໃຫ້ທຸລະກິດປະສົບຜົນສຳເລັດໃນປະຈຸບັນຈະມີຜົນກະທົບຕໍ່ຄວາມສຳເລັດໃນອະນາຄົດ ຫຼື ໄລຍະຍາວ ຫຼື ບໍ່? ບັນທັດຖານທີ່ກ່າວມາເປັນແນວຄວາມຄິດທີ່ເປັນຈຸດລິເລີ່ມ.

ມັນອາດຫຼີກລ່ຽງບໍ່ໄດ້ທີ່ທຸກກໍລະນີສຶກສາແມ່ນໄດ້ຕາມບັນທັດຖານທີ່ກ່າວມາເພາະວ່າສະພາບການປ່ຽນແປງສະເໝີ. ເຖິງຢ່າງນັ້ນກໍ່ຕາມ, ຄວາມພະຍາຍາມທີ່ຈະບອກເຖິງຄວາມສຳເລັດໃນຄັ້ງນີ້ສຸມໃສ່ປັດໃຈທີ່ໃກ້ຄຽງກັບປະສົບການຂອງພາກສ່ວນທີ່ກ່ຽວຂ້ອງຕ່າງໆໄດ້ພົບພໍ້ໃນຊ່ວງເວລາ 2-3 ລະດູການ. ເຖິງແມ່ນວ່າມີການກຳນົດຮູບແບບ ແລະ ຄຳຖາມສຳລັບການສຶກສາ ແຕ່ສິ່ງສຳຄັນຄືລະຫວ່າງການປຶກສາຫາລືກັບຜູ້ໃຫ້ຂໍ້ມູນໄດ້ຄົ້ນຄວ້າເຖິງຄວາມສຳເລັດໃນປະຈຸບັນ

[2] ຄວາມໝາຍ 'ຜູ້ລົງທຶນ' ໂດຍທົ່ວໄປແລ້ວໝາຍເຖິງບຸກຄົນ, ບໍລິສັດ ຊຶ່ງໄດ້ລົງທຶນດ້ານເວລາ, ຊັບພະຍາກອນມະນຸດ, ທຶນ (ເງິນ ຫຼື ວັດຖຸ), ແລະ ຫຼື ປະກອບສ່ວນສ້າງທຸລະກິດກະສິກຳ ແລະ ຫວັງຜົນຕອບແທນຂອງການລົງທຶນ.

ມີຜົນກະທົບຕໍ່ຄວາມເປັນໄປໄດ້ທີ່ຈະປະສົບຜົນສຳເລັດໃນອະນາຄົດ ຫຼື ໄລຍະຍາວ ຫຼື ບໍ່. ການສັງເກດການອື່ນອີກອາດສາມາດນຳໃຊ້ເພື່ອສຳຫຼວດການລົງທຶນເພື່ອຈະໄດ້ມາຊຶ່ງຄວາມສຳເລັດ ແລະ ຜົນກະທົບຕໍ່ຄວາມຍືນຍົງ ຫຼື ການຄົງຢູ່ຂອງນິເວດວິທະຍາ. ທັງນີ້ກໍ່ເພາະວ່າການຈັດຕັ້ງທີ່ປະສົບຜົນສຳເລັດອາດສ້າງຜົນກະທົບຕໍ່ການໃຫ້ການບໍລິການຂອງລະບົບນິເວດວິທະຍາ, ການນຳໃຊ້ຊັບພະຍາກອນເກີນຄວາມອາດສາມາດໃນການຟື້ນຄືນຂອງທຳມະຊາດ. ສະນັ້ນ, ຄວາມສຳເລັດໃນປະຈຸບັນອາດເປັນສາຍເຫດສຳລັບຄວາມຫຼົ້ມເຫຼວໃນອະນາຄົດໂດຍສະເພາະຜົນຜະລິດທີ່ບໍ່ພຽງພໍ ຈະເຮັດໃຫ້ຊາວກະສິກອນ ແລະ ຜູ້ລົງທຶນສືບຕໍ່ເຮັດສັນຍາຮ່ວມກັນ. ດັ່ງທີ່ກ່າວມາຄວາມພະຍາຍາມທີ່ຈະເຮັດໃຫ້ການສຶກສານີ້ສຳເລັດຜົນແມ່ນຈຳເປັນທີ່ຈະພິຈາລະນາຄຸນຄ່າ, ຄວາມໝາຍ ແລະ ການພົວພັນຊຶ່ງກັນ ແລະ ກັນຂອງຄຳຖາມຕ່າງໆ. ຄຳຖາມທຳອິດເຫັນວ່າຖືກກຳນົດມາຢ່າງມີປະສິດທິພາບໂດຍບໍ່ຊໍ້າກັນກັບຄຳຖາມທີ 2. ຄຳຖາມທຳອິດແມ່ນເປັນພື້ນຖານສຳລັບຄວາມເຂົ້າໃຈເຖິງປະຫວັດຄວາມເປັນມາ, ຊຶ່ງຖາມວ່າ ຍ້ອນຫຍັງທຸລະກິດລະຫວ່າງຊາວກະສິກອນ ແລະ ຜູ້ລົງທຶນຈຶ່ງສາມາດຳເນີນມາຮອດທຸກວັນນີ້? ຄຳຖາມນີ້ຊອກຫາປັດໃຈທີ່ພາໃຫ້ປະສົບຜົນສຳເລັດ, ເຖິງແມ່ນວ່າປັດໃຈທີ່ພາໃຫ້ເກີດຜົນສຳເລັດອາດຈະບໍ່ປະກົດເຫັນທັງໝົດໃນກໍລະນີນັ້ນກໍ່ຕາມ.

ຄຳຖາມທີ 2 ຊຶ່ງໄດ້ພັດທະນາ ໂດຍອີງໃສ່ ຄຳຖາມທີ 1; ເພາະວ່າ ຜົນທີ່ພົບຈາກຄຳຖາມທີ່ 1 ຈະໃຫ້ຂໍ້ມູນ ແລະ ລາຍລະອຽດກ່ຽວກັບເງື່ອນໄຂກາລະໂອກາດກັບພະນັກງານທ້ອງຖິ່ນທີ່ຈະອຳນວຍຄວາມສະດວກ ແລະ ປັບປຸງຂະບວນການດຳເນີນງານ. ຄຳຖາມນີ້ພະຍາຍາມຊອກຫາວິທີການສຳລັບອະນາຄົດ, ເພື່ອຄົ້ນຄ້ວາວ່າເຮົາຄວນປ່ຽນແປງຫຍັງເພື່ອທັນປ່ຽນສະພາບໃນປະຈຸບັນເພື່ອເປັນ ທາງເລືອກ ແລະ ອະນາຄົດທີ່ຕ້ອງການ. ຄຳຖາມທີ 2 ມີຈຸດປະສົງ ເພື່ອຊອກຫາກາລະໂອກາດສຳລັບການວາງມາດຕະການທາງດ້ານນະໂຍບາຍ, ການຄວບຄຸມ ແລະ ການແຊກແຊງອື່ນໆ. ເຖິງແມ່ນວ່າຈະມີຫຼາຍອົງການຈັດຕັ້ງຂອງລັດໃນທ້ອງຖິ່ນເຂົ້າມາມີສ່ວນຮ່ວມໃນການຜະລິດກະສິກຳເປັນສິນຄ້າແບບມີຂໍ້ຜູກພັນໃນສັນຍາ,

ຄຳຖາມທີ 2 ໄດ້ເນັ້ນໃສ່ຫ້ອງການກະສິກຳ-ປ່າໄມ້ເມືອງ ເພາະວ່າອົງກອນນີ້ມີບົດບາດໃນການສົ່ງເສີມຊາວກະສິກອນ ແລະ ການຜະລິດກະສິກຳເປັນສິນຄ້າແບບມີຂໍ້ຜູກພັນໃນສັນຍາ. ນອກນັ້ນ ການທີ່ເລືອກເອົາຫ້ອງການກະສິກຳ-ປ່າໄມ້ເມືອງແມ່ນຍ້ອນຫ້ອງການນີ້ເປັນຫົວໜ່ວຍຈັດຕັ້ງປະຕິບັດວຽກງານສົ່ງເສີມຊາວກະສິກອນ. ເຖິງແນວໃດກໍ່ຕາມ, ການວິໃຈ ແລະ ການສະເໜີແນະຈາກຫ້ອງການກະສິກຳ ແລະ ປ່າໄມ້ເມືອງໃນການສຶກສານີ້ແມ່ນມີຄວາມເທົ່າທຽມກັນກັບອົງການຈັດຕັ້ງອື່ນທີ່ກ່ຽວຂ້ອງໃນທ້ອງຖິ່ນທີ່ມີສ່ວນຮ່ວມກັບການສົ່ງເສີມການຜະລິດກະສິກຳເປັນສິນຄ້າແບບມີຂໍ້ຜູກພັນໃນສັນຍາ. ຄຳຖາມທີ 2 ນີ້ ຄົ້ນຫາວ່າຫ້ອງການກະສິກຳ-ປ່າໄມ້ເມືອງ, ຫຼື ອົງການຈັດຕັ້ງຂອງລັດຄວນຈະມີສ່ວນຮ່ວມການຜະລິດກະສິກຳເປັນສິນຄ້າແບບມີຂໍ້ຜູກພັນໃນສັນຍາລະຫວ່າງ ຊາວກະສິກອນ ແລະ ຜູ້ລົງທຶນໃນລະດັບໃດ? ຫ້ອງການກະສິກຳ-ປ່າໄມ້ເມືອງມີຄວາມສາມາດທີ່ຈະທັນປ່ຽນ, ປັບປຸງ ແລະ ສ້າງຜົນປະໂຫຍດໃຫ້ຊາວກະສິກອນ ຫຼື ຂະບວນການສົ່ງເສີມການຜະລິດເປັນສິນຄ້າໂດຍທົ່ວໄປແນວໃດ ?

## 4.3. ວິທີການ

ວິທີການລວມມີການຈຳກັດໃນການທົບທວນເອກະສານ ແລະ ປຶກສາຫາລືກັບພະນັກງານຫຼາຍພາກສ່ວນຂອງລັດ ແລະ ຄູ່ຮ່ວມງານການພັດທະນາທີ່ວຽງຈັນ. ວິທີການຫຼັກກໍ່ແມ່ນການສຳພາດຜູ້ທີ່ມີສ່ວນຮ່ວມໃນຂະບວນການພັດທະນາ ແລະ ຄຸ້ມຄອງການຜະລິດກະສິກຳເປັນສິນຄ້າແບບມີຂໍ້ຜູກພັນໃນສັນຍາ ຊຶ່ງລວມມີຊາວກະສິກອນ, ຕົວແທນຜູ້ລົງທຶນ, ຜູ້ລົງທຶນ, ພໍ່ຄ້າຄົນກາງ ແລະ ພະນັກງານຂອງພາກລັດ. ການສຳພາດແມ່ນໄດ້ເລີ່ມຕົ້ນດ້ວຍບັນດາຄຳຖາມທຳມະດາ ແລະ ນຳໃຊ້ ແບບຟອມສຳພາດແບບເຄິ່ງໂຄງສ້າງ. ການສຳພາດສ່ວນໃຫຍ່ແມ່ນອີງໃສ່ຄຳຖາມທີ່ໄດ້ກຽມມາ, ແນວໃດກໍ່ຕາມ, ບາງຄຳຖາມກໍ່ໄດ້ຍົກເວັ້ນ, ດັດປັບ ແລະ ຫຼື ເພີ່ມເຕີມອີງໃສ່ສະພາບຕົວຈິງຂອງແຕ່ລະກໍລະນີ ແລະ ຂໍ້ຈຳກັດທາງດ້ານເວລາ. ການສັງເກດການ ແລະ ແປຄວາມໝາຍສິ່ງທີ່ສາມາດສຳພັດໄດ້ກໍ່ໄດ້ຖືກນຳໃຊ້ເພື່ອເປັນຂໍ້ມູນ ແລະ ດັດປັບໂຄງສ້າງຂອງການສຳພາດ.

ກໍລະນີທີ່ສຳຄັນແມ່ນໄດ້ມີການກະກຽມ ແລະ ນັດໝາຍລ່ວງໜ້າໂດຍຄະນະວິຊາການສຳລັບຊາວກະສິກອນ ແລະ ທຸລະກິດກະສິກຳ (SWGAB). ແນວໃດກໍ່ຕາມບາງກໍລະນີອີງໃສ່ຂໍ້ມູນທີ່ສະໜອງໂດຍຂະແໜງສົ່ງເສີມກະສິກຳ-ປ່າໄມ້ (PAFES) ແລະ ຫ້ອງການກະສິກຳ-ປ່າໄມ້ເມືອງ (DAFO), ໂດຍສະເພາະ

ໃນພາກໃຕ້ ກາຍເປັນບັນຫາ ແລະ ໃຊ້ການບໍ່ໄດ້. ນອກນັ້ນໃນກໍລະນີ 5 ໃນບົດລາຍງານແມ່ນຜົນຂອງການສັງເກດກິດຈະກຳກະສິກຳຂອງຜູ້ສຶກສາຄົ້ນຄ້ວາ ແລະ ສຳພາດຊາວກະສິກອນ 2 ທ່ານ ທີ່ຖືກແນະນຳໂດຍແມ່ນພະນັກງານຫ້ອງການກະສິກຳ-ປ່າໄມ້ເມືອງ. ປົກກະຕິຜູ້ໃຫ້ສຳພາດມີອັດທະຍາໃສດີສະຫຼະເວລາສຳລັບການສຳພາດ, ປຶກສາຫາລື ແລະ ວິເຄາະປະສົບການ. ບາງຄັ້ງກໍ່ມີການສະເໜີໃຫ້ສຳພາດພະນັກງານຈຳນວນ 1 ຫຼື 2 ທ່ານໃນນະຄອນຫຼວງວຽງຈັນ. ເຖິງແນວໃດກໍ່ຕາມເມື່ອເບິ່ງແລ້ວຄືມີລັກສະນະບໍ່ເປີດເຜີຍຄຳຕອບທີ່ແທ້ຈິງ.

ຜົນຮັບເບື້ອງຕົ້ນ ໄດ້ນຳມາປຶກສາຫາລືໃນ ກອງປະຊຸມປຶກສາຫາລື ທີ່ແຂວງຫຼວງພະບາງຮ່ວມກັບພະນັກງານຂະແໜງສົ່ງເສີມກະສິກຳ-ປ່າໄມ້ ແລະ ຫ້ອງການກະສິກຳ-ປ່າໄມ້ເມືອງຈາກແຂວງພາກເໜືອຂອງ ສປປ ລາວ. ນອກນັ້ນ ຍັງໄດ້ສະເໜີ, ປຶກສາຫາລືກັບຄະນະວິຊາການກ່ຽວກັບທຸລະກິດກະສິກຳທີ່ນະຄອນຫຼວງວຽງຈັນນຳອີກ.

## 4.4. ກໍລະນີສຶກສາ

ເນື້ອໃນຂອງກໍລະນີສຶກສາໄດ້ແບ່ງອອກເປັນຫຼາຍພາກຄື: **1) ປະສົບການ**: ເນັ້ນໃສ່ການເລົ່າເຫດການ, ການໃຫ້ແນວຄວາມຄິດ ແລະ ທັດສະນະເກັບກ່ຽວການຜະລິດເປັນສິນຄ້າແບບມີຂໍ້ຜູກພັນໃນສັນຍາຂອງຜູ້ໃຫ້ສຳພາດໃຫ້ດີ ຫຼື ໃກ້ຄຽງທີ່ສຸດເທົ່າທີ່ເຂົາເຈົ້າຮັບຮູ້ໄດ້. ສະນັ້ນ, ຈຶ່ງໄດ້ລວບລວມຂໍ້ມູນຄວາມເປັນຈິງທີ່ຜູ້ໃຫ້ສຳພາດນຳສະເໜີ ແລະ ຈຸດປະສົງໃນການປະຕິບັດໃນລັກສະນະນີ້ກໍ່ ເພື່ອສະທ້ອນໃຫ້ເຫັນບັນຫາຄວາມເປັນຈິງທີ່ຕິດພັນກັບການຜະລິດເປັນສິນຄ້າແບບມີຂໍ້ຜູກພັນໃນສັນຍາຫຼາຍກວ່າສິ່ງທີ່ຄິດວ່າມັນຄວນຈະເປັນ ຫຼື ຄວນຈະເກີດຂຶ້ນ. **2) ການສັງເກດການ**: ໄດ້ພິຈາລະນາປະສົບການຂອງຜູ້ໃຫ້ສຳພາດ, ໂດຍການວິເຄາະຂໍ້ມູນຂ່າວສານທີ່ມີເພື່ອພັດທະນາຄວາມເຂົ້າໃຈຕໍ່ສະພາບການເພື່ອເປັນພື້ນຖານໃນການປະເມີນປັດໃຈທີ່ພາໃຫ້ເກີດມີຜົນສຳເລັດ ແລະ ສະຫຼຸບບັນຫາໃນເບື້ອງຕົ້ນ. **3) ຂໍ້ສະຫຼຸບ** ໄດ້ສັງລວມບັນດາສິ່ງທີ່ຄົ້ນພົບ ແລະ ທີ່ສັງເກດການໄດ້ກ່ຽວກັບກໍລະນີ ແລະ ປັດໃຈທີ່ພາໃຫ້ເກີດຜົນສຳເລັດ. ແລະ ໃນຕອນທ້າຍຂອງແຕ່ລະກໍລະນີປະກອບດ້ວຍຄຳຖາມແນະນຳທີ່ເຫັນວ່າມີຄວາມຈຳເປັນທີ່ຕ້ອງໄດ້ມີການສຶກສາ ແລະ ປຶກສາຫາລືໃນຕໍ່ໜ້າ.

ກໍລະນີສຶກສາທັງໝົດແມ່ນການເລົ່າປະສົບການ ແລະ ທັດສະນະຂອງຜູ້ມີສ່ວນຮ່ວມໃດໜຶ່ງຫຼາຍກວ່າການສັງລວມແນວຄວາມຄິດຂອງຜູ້ມີສ່ວນຮ່ວມທຸກຄົນ, ລວມທັງຊາວກະສິກອນ, ຜູ້ລິ້ງທຶນ, ພໍ່ຄ້າຄົນກາງ ແລະ ອື່ນໆ. ສະນັ້ນບໍ່ຄວນສະຫຼຸບວ່າໃນແຕ່ລະກໍລະນີທີ່ພົບເຫັນນັ້ນຈະຖືກຕ້ອງໝົດທຸກຢ່າງເພາະມັນອາດເປັນການລິເລີ່ມໃຫ້ເຫັນພາບລວມກ່ຽວກັບປະສົບການຂອງຜູ້ໃຫ້ສຳພາດຫຼາຍກວ່າການລາຍງານຄວາມເປັນຈິງທີ່ກວມເອົາໝົດທຸກຢ່າງ. ໂດຍທົ່ວໄປແລ້ວ, ປະສົບການ ແລະ ທັດສະນະຂອງພະນັກງານລັດຄວນຈະບໍ່ຖືກແປວ່າມັນເປັນແນວຄວາມຄິດສ່ວນບຸກຄົນແຕ່ຄວນສະທ້ອນໃຫ້ເຫັນບົດບາດຂອງອົງການ ແລະ ຄວາມອາດສາມາດຂອງທ້ອງຖິ່ນ.

## 4.5. ຂໍ້ຈຳກັດ

1. ການຂາດງົບປະມານ ຊຶ່ງໃນທີ່ສຸດຈຳກັດໄລຍະເວລາ, ກອບ ແລະ ສະຖານທີ່ສຳລັບການສຶກສາຄົ້ນຄ້ວາຢ່າງຫຼັກລ່ຽງບໍ່ໄດ້.
2. ເວລາສຳລັບການສຳພາດມີຈຳກັດ ແລະ ປົກກະຕິຈະໃຊ້ໜ້ອຍກວ່າໜຶ່ງຊົ່ວໂມງສຳລັບການສະພາດ ແລະ ປຶກສາຫາລືແຕ່ລະຄົນ.
3. ຂາດການບັນທຶກຂໍ້ມູນກ່ຽວກັບປະຫວັດຄວາມເປັນມາ ແລະ ອະທິບາຍວິວັດທະນາການ ປ່ຽນແປງກ່ຽວກັບການກະຈາຍ, ລະດັບ ແລະ ຜົນກະທົບຂອງການຜະລິດກະສິກຳເປັນສິນຄ້າແບບມີຂໍ້ຜູກພັນໃນສັນຍາ, ການພົວພັນກ່ຽວກັບການຜະລິດກະສິກຳ ແລະ ການພັດທະນາເສດຖະກິດ ທົ່ວໄປ ຂອງຊຸມຊົນ ແລະ ຄວາມສຳພັນໃນຊ່ວງຂ້າມຜ່ານຈາກສະພາບທີ່ທຸກຈົນສູ່ຄວາມຈະເລີນ.
4. ຂໍ້ມູນທີ່ສະໜອງໂດຍຜູ້ໃຫ້ສຳພາດໂດຍທົ່ວໄປບໍ່ສາມາດພິສູດໄດ້ເນື່ອງຈາກຂໍ້ຈຳກັດທາງດ້ານງົບປະມານ ແລະ ວິຊາການ ແລະ ສະນັ້ນອາດເປັນຂໍ້ມູນທີ່ຜິດເພີ້ນ. ເຖິງຢ່າງນັ້ນກໍ່ຕາມ , ເນື່ອງຈາກການຄັດເລືອກຜູ້ທີ່ຖືກສຳພາດແມ່ນປະຕິບັດແບບສຸ່ມຕົວຢ່າງໃນພາກສະໜາມ, ຄວາມເປັນໄປໄດ້ທີ່ຈະມີການສົມຮູ້ຮ່ວມຄິດ, ບິດເບືອນຂໍ້ມູນຂ່າວສານ, ຫຼື ມີການປະສານງານເພື່ອປົກປິດຂໍ້ມູນຖືວ່າບໍ່ມີຫຼາຍ.
5. ຄວາມຮູ້ ແລະ ຄວາມອາດສາມາດຂອງ ທີມງານສຶກສາ.

## 5. ການສັງເກດກ່ຽວກັບ ສັນຍາ, ຂໍ້ຕົກລົງ ແລະ ການຜະລິດກະສິກຳ

ການຜະລິດກະສິກຳເປັນສິນຄ້າແບບມີຂໍ້ຜູກພັນໃນສັນຍາແມ່ນຮູບແບບການຜະລິດທີ່ມີຜົນບັງຄັບທາງດ້ານກົດໝາຍຊຶ່ງຊາວກະສິກອນໄດ້ຕົກລົງເຫັນດີເປັນເອກະພາບໃນເລື່ອງຂອງລະບອບລາຄາ, ພືດຜັກທີ່ເຂົາເຈົ້າຈະຜະລິດເພື່ອຂາຍສິ່ງຕໍ່ຜູ້ຊື້ຊຶ່ງເປັນທັງຕະຫຼາດ ຫຼື ສະໜອງຕະຫຼາດ, ການຊ່ວຍເຫຼືອທາງດ້ານການເງິນ ແລະ ເທັກໂນໂລຊີ. ສັນຍາແມ່ນຂໍ້ຜູກມັດທີ່ສາມາດບັງຄັບໃຊ້ຕາມແນວທາງຂອງກົດໝາຍ ແລະ ເປັນກົນໄກສຳລັບການຮ້ອງທຸກ ແລະ ຂະບວນຍຸດຕິທຳເຊັ່ນ: ການຕັດສິນໂດຍຂະບວນການຂອງສານ.

ໃນ ສປປ ລາວ ລະບົບກົດໝາຍຍັງບໍ່ທັນສົມບູນ ແລະ ໝາຍວ່າຜູ້ທີ່ກ່ຽວຂ້ອງກັບການຜະລິດເປັນສິນຄ້າແບບມີຂໍ້ຜູກພັນໃນສັນຍາສ່ວນໃຫຍ່ບໍ່ໄດ້ເພິ່ງພາອາໃສທາງກົດໝາຍ. ນອກຈາກນັ້ນການເຂົ້າເຖິງຂະບວນການຍຸດຕິທຳ ຫຼື ການບໍລິການທາງດ້ານກົດໝາຍແມ່ນຍັງບໍ່ທັນສະດວກ ແລະ ໃຊ້ເວລາໂດຍສະເພາະສຳລັບຊາວກະສິກອນທີ່ມີຖານະທາງດ້ານການເງິນ ແລະ ທຶນຈຳກັດ, ເຖິງແມ່ນຈະມີເວລາແຕ່ກໍ່ເປັນການຍາກທີ່ຈະຈ່າຍຄ່າບໍລິການອື່ນໆທາງກົດໝາຍ ແລະ ນຳໃຊ້ຂະບວນການຍຸດຕິທຳ ຫຼື ສານ. ສະນັ້ນການຮ່ວມມືໃນການຜະລິດກະສິກຳລະຫວ່າງຊາວກະສິກອນ ແລະ ຜູ້ລົງທຶນໃນ ສປປ ລາວ ທີ່ອະທິບາຍວ່າ ຫຼື ໝາຍເຖິງການຜະລິດກະສິກຳເປັນສິນຄ້າແບບມີຂໍ້ຜູກພັນໃນສັນຍາອາດເປັນການເຂົ້າໃຈຜິດ ແລະ ເມື່ອມີບັນຫາເກີດຂຶ້ນແມ່ນຍາກກວ່າທີ່ຄາດໄວ້ທີ່ຈະແກ້ໄຂ. ຂໍ້ຕົກລົງແມ່ນການຈັດກຽມໜຶ່ງຊຶ່ງສອງ ຫຼື ຫຼາຍຝ່າຍຊຶ່ງແຕ່ລະຝ່າຍຮັບຮູ້ຮ່ວມກັນໜ້າທີ່ທີ່ຈະຕ້ອງປະຕິບັດ. ສຳລັບ ສປປ ລາວ, ຊາວກະສິກອນ ແລະ ຜູ້ລົງທຶນສ່ວນໃຫຍ່ນຳໃຊ້ຂໍ້ຕົກລົງເປັນບ່ອນອີງເພື່ອດຳເນີນການຜະລິດກະສິກຳເປັນສິນຄ້າຮ່ວມກັນ. ຂໍ້ຕົກລົງນັ້ນລວມທັງປາກເປົ່າ ແລະ ເປັນລາຍລັກອັກສອນ, ເປັນທາງການ ແລະ ບໍ່ເປັນທາງການ, ຈົດທະບຽນ ແລະ ບໍ່ຈົດທະບຽນ ແລະ ນຳໃຊ້ມາດຕະການບັງຄັບທາງດ້ານການບໍລິຫານ, ເສດຖະກິດ ແລະ ທາງດ້ານສັງຄົມ. ການນຳໃຊ້ມາດຕະການບັງຄັບເຫຼົ່ານີ້ ມີປະຕິບັດ ແລະ ຜົນແນວໃດນັ້ນແມ່ນປະເດັນທີ່ສຳຄັນ; ໃນພາກສຸດທ້າຍ ຫຼື ຂໍ້ແນະນຳຂອງບົດລາຍງານນີ້ໄດ້ອະທິບາຍກ່ຽວກັບບັນຫາທີ່ພົບ ແລະ ຈຳເປັນຕ້ອງໄດ້ມີການສຶກສາວິໃຈເພີ່ມເຕີມ.

ໂດຍທົ່ວໄປແລ້ວໃນສຶກສານີ້ຫຼີກລຽງຄຳວ່າການຜະລິດກະສິກຳເປັນສິນຄ້າແບບມີຂໍ້ຜູກພັນໃນສັນຍາ ແລະ ນຳໃຊ້ຄຳວ່າການຕົກລົງສຳລັບການຜະລິດ ຫຼື ການຜະລິດເປັນສິນຄ້າແບບມີຂໍ້ຕົກລົງຫຼາຍກວ່າ.

**ພາສາ**

ເຈຕະນາ ແລະ ຄາດຫວັງອາດມີຄວາມສ່ຽງທີ່ຈະເຮັດໃຫ້ເຂົ້າໃຈຜິດເນື່ອງຈາກພາສາ ຫຼື ນິຍາມທີ່ນຳໃຊ້ ແລະ ການແປ. ໂດຍປົກກະຕິຄຳວ່າສັນຍາໃນພາສາລາວແປວ່າສັນຍາ, ຄຳສັນຍາ ຫຼື ສັນຍາຕົກລົງ. ເຖິງແມ່ນວ່າຄຳສັບນີ້ຈະມີຄວາມໝາຍສະເພາະແຕ່ອາດແຕກຕ່າງໄປຕາມສະຖານທີ່, ຂະນະ ແລະ ປະເດັນດ້ານຕ່າງໆ; ສະນັ້ນມັນອາດບໍ່ຈະແຈ້ງ ແລະ ມີຄວາມເປັນໄປທີ່ຈະສ້າງຄວາມສັບສົນ ແລະ ຄວາມຄາດຄື່ນກັບສິ່ງທີ່ຕັ້ງໃຈ ແລະ ຄາດໄວ້, ໂດຍສະເພາະລະຫວ່າງຕ່າງປະເທດຜູ້ລົງທຶນ ແລະ ຊາວກະສິກອນລາວ. ເຖິງແມ່ນວ່າມີຫຼາຍພາກສ່ວນທີ່ໃຫ້ສຳພາດ ແລະ ປຶກສາການນຳໃຊ້ຄຳວ່າສັນຍາຊຶ່ງໝາຍເຖິງ “contract” ໃນພາສາອັງກິດກໍຕາມ, ແຕ່ບັນດາກໍລະນີ ທີ່ໄດ້ສຶກສາມາສ່ວນຫຼາຍຈະແມ່ນການນຳໃຊ້ຂໍ້ຕົກລົງ (agreement) ຫຼາຍກວ່າສັນຍາ.

## 6. ອົງການຈັດຕັ້ງທີ່ກ່ຽວຂ້ອງ ແລະ ຄວາມສຳພັນ

ສປປ ລາວ, ເມື່ອການຜະລິດກະສິກຳກ້າວໄປສູ່ການຜະລິດເປັນສິນຄ້າກໍ່ອາດເຮັດໃຫ້ມີຫຼາຍອົງການຈັດຕັ້ງທາງດ້ານເສດຖະກິດເຂົ້າມາກ່ຽວຂ້ອງ. ການມີສ່ວນຮ່ວມອາດແຕກຕ່າງກັນໄປຕາມແຕລະສະຖານທີ່; ລະດູການຕໍ່ລະດູການ. ຄວາມສຳພັນ, ບົດບາດ ແລະ ຄວາມຮັບພິດຊອບຂອງບັນດາພາກສ່ວນທີ່ກ່ຽວຂ້ອງນັ້ນສາມາດສະແດງໃນທາງຕັ້ງດັ່ງຮູບຂ້າງລຸ່ມນີ້. ເຖິງແນວໃດກໍ່ຕາມ, ຄວາມສຳພັນຕາມທາງນອນອາດມີເຊັ່ນກັນ; ຕົວຢ່າງ: ຄວາມສຳພັນດ້ວຍກັນຂອງສາມາຊິກຂອງກຸ່ມຊາວກະສິກອນ. ດັ່ງທີ່ເຂົ້າໃຈ, ຄວາມສຳພັນຕາມທາງນອນ, ບາງຄັ້ງອາດເປັນທາງການເຊັ່ນ: ການພົວພັນລະຫວ່າງອົງການຈັດຕັ້ງຂອງລັດ, ຊາວກະສິກອນ ແລະ ຜູ້ລົງທຶນດ້ວຍກັນ.



## 7. ສະພາບ ແລະ ທ່າອ່ຽງ

ການຜະລິດກະສິກຳແບບມີຂໍ້ຕົກລົງເພື່ອເປັນສິນຄ້າລະຫວ່າງຊາວກະສິກອນ ແລະ ຜູ້ລົງທຶນເກີດຂຶ້ນໄປຕາມກະແສ, ສະພາບ ແລະ ທ່າອ່ຽງຂອງການພັດທະນາ ເສດຖະກິດ-ສັງຄົມ, ສະພາບແວດລ້ອມ, ກະສິກຳ ແລະ ຄວາມຕ້ອງການ. ເຖິງແມ່ນວ່າມັນມີຫຼາຍປັດໃຈຊຶ່ງພາໃຫ້ເກີດມີຜົນສຳເລັດໃນການຜະລິດແບບມີຂໍ້ຕົກລົງລະຫວ່າງຊາວກະສິກອນ ແລະ ຜູ້ລົງທຶນກໍ່ຕາມແຕ່ບັນດາປັດໃຈເຫຼົ່ານັ້ນອາດພຽງແຕ່ສ້າງສະພາບເງື່ອນໄຂພື້ນຖານ ແລະ ສະພາບແວດລ້ອມທີ່ເອື້ອຍອຳນວຍຊຶ່ງຊ່ວຍໃຫ້ເກີດຜົນສຳເລັດໃນຕໍ່ໜ້າ.

ການທົບທວນສະພາບ ແລະ ທ່າອ່ຽງແມ່ນເປັນປະໂຫຍດຊ່ວຍໃຫ້ເຂົ້າໃຈເຖິງກາລະໂອກາດການຜະລິດກະສິກຳເປັນສິນຄ້າໃນ ສປປ ລາວ. ການທີ່ຮັບຮູ້ເຖິງສະພາບ ແລະ ທ່າອ່ຽງນັ້ນຈະເປັນພື້ນຖານສຳລັບການອອກແບບນະໂຍບາຍ, ແຜນງານ ແລະ ການຈັດຕັ້ງ. ການທົບທວນນັ້ນອາດພິຈາລະນາບັນດາອົງປະກອບ, ສະພາບເງື່ອນໄຂ ແລະ ທ່າອ່ຽງທີ່ສົ່ງຜົນກະທົບຕໍ່ສະພາບການພັດທະນາກະສິກຳກໍ່ຄືຊາວກະສິກອນຊຶ່ງສິ່ງເຫຼົ່ານີ້ຈະໃຫ້ຮູ້ເຖິງການປ່ຽນແປງໃນການຜະລິດກະສິກຳ ແລະ ຄວາມຕ້ອງການທີ່ນຳໄປສູ່ການຜະລິດເປັນສິນຄ້າ. ການທົບທວນຕ້ອງໄດ້ພິຈາລະນາສະພາບການປ່ຽນແປງຂອງຊາວກະສິກອນໃນໄລຍະຫຼາຍປີຜ່ານມາ ຫຼື ບໍ່ແມ່ນໄລຍະສັ້ນ. ຕົວຢ່າງ: ມີຜູ້ລົງທຶນຈາກມົງໂກລີເດີນທາງ 3,000 ກິໂລແມັດສູ່ພາກເໜືອ ສປປ ລາວເພື່ອລົງທຶນຜະລິດໝາກແຕງໂມເພື່ອນຳໄປຂາຍທີ່ພາກເໜືອທີ່ແຫ້ງແລ້ງຂອງ ສປ ຈີນ; ສິ່ງນີ້ບໍ່ໄດ້ສະແດງເຖິງສະພາບລວມ ຫຼື ທ່າອ່ຽງທີ່ກ່າວມາ ແລະ ເປັນກໍລະນີໜຶ່ງທີ່ສະຫຼຸບຍາກເພາະວ່າລະດັບຄວາມແນ່ນອນ ແລະ ການພົວພັນຈະມີການປ່ຽນແປງເປັນປະຈຳ.

### 7.1. ສະພາບເງື່ອນໄຂ

#### ເສດຖະກິດຂອງ ສປປ ລາວ

ເສດຖະກິດຂອງ ສປປ ລາວ ມີການເຕີບໂຕຢ່າງວ່ອງໄວເນື່ອງຈາກການລົງທຶນຂະໜາດໃຫຍ່ໃນການນຳໃຊ້ຊັບພະຍາກອນທຳມະຊາດ ແລະ ການຜະລິດພະລັງງານລວມທັງການລົງທຶນຂອງພາກສ່ວນເອກະຊົນທີ່ເພີ່ມຂຶ້ນໂດຍສະເພາະການລົງທຶນຂອງຕ່າງປະເທດ (Lin 2010, 1). ເມື່ອກ່ອນ, ໂດຍອີງໃສ່ຄວາມຕ້ອງການໃນການນຳໃຊ້ທີ່ດິນມີການແຍກລະຫວ່າງການຂຸດຄົ້ນບໍ່ແຮ່ແລະກະສິກຳເປັນສິນຄ້າ ເຊັ່ນ: ການປູກຢາງພາລາ, ປູກໄມ້ເພື່ອຜະລິດເຈ້ຍ ແລະ ອ້ອຍ. ໃນຕົວຈິງການຜະລິດກະສິກຳເປັນສິນຄ້າມັນຮຽກຮ້ອງໃຫ້ມີພື້ນທີ່ທີ່ກວ້າງຂວາງຊຶ່ງເປັນຜົນເຮັດໃຫ້ມີການຫັນປ່ຽນພື້ນທີ່ປ່າໄມ້ ແລະ ສວນຜັກບາງບ່ອນໄດ້ກາຍເປັນສວນປູກຢາງພາລາ, ກັນຖຸ່ນ ແລະ ໄມ້ວິກ. ລະດັບ ແລະ ຄວາມໄວຂອງການປ່ຽນແປງສະແດງໃຫ້ເຫັນຢ່າງຊັດເຈນໂດຍສະເພາະແມ່ນແຂວງຫຼວງນ້ຳທາຊຶ່ງໄດ້ກາຍເປັນແຂວງໜຶ່ງທີ່ມີການປູກພືດເປັນສິນຄ້າ ແລະ ຢາງພາລາຢ່າງກວ້າງຂວາງ.

ການເພີ່ມຂຶ້ນຂອງຄວາມຕ້ອງການ ແລະ ການເຂົ້າເຖິງທີ່ດິນຜ່ານການສຳປະທານ ແລະ ການພັດທະນາຕະຫຼາດທີ່ດິນໄດ້ເຮັດໃຫ້ມີການຫັນປ່ຽນທີ່ດິນໃຫ້ເປັນທຶນ, ປ່ຽນຮູບແບບ ແລະ ການນຳໃຊ້ທີ່ດິນ. ເມື່ອການລົງທຶນຍັງສືບຕໍ່; ຕົວຢ່າງ: ການອອກໃບອະນຸຍາດສຳລັບການສຳຫຼວດບໍ່ແຮ່ປະມານ 200 ກວ່າແຫ່ງ ແລະ ເຂື່ອນໄຟຟ້າຈຳນວນຫຼາຍກວ່າ 10 ແຫ່ງ ອາດສ້າງຄວາມກົດດັນເພີ່ມຂຶ້ນຕໍ່ທີ່ດິນທີ່ຊາວກະສິກອນນຳໃຊ້ສຳລັບການປູກຝັງ ແລະ ປົກປັກຮັກສາແຫຼ່ງນ້ຳສຳລັບການກະສິກຳ.

ການໃຫ້ກຳມະສິດ ແລະ ກົນໄກສຳລັບການເພີ່ມມູນຄ່າທີ່ດິນອາດຍັງບໍ່ສົມບູນເທື່ອ ແລະ ຍັງບໍ່ພຽງພໍທີ່ຈະຊ່ວຍຊາວກະສິກອນ, ໃຫ້ມີຄວາມໂປ່ງໃສ ແລະ ຮັບປະກັນການປະຕິບັດແບບສະເໝີພາບ ແລະ ສ້າງເງື່ອນໄຂອຳນວຍສຳລັບຊາວກະສິກອນເພື່ອກ້າວໄປສູ່ຊີວິດການເປັນຢູ່ທີ່ມີຄວາມຈະເລີນ ຢ່າງຮັບປະກັນໄດ້. ນີ້ອາດເປັນເພາະວ່າພວກເຮົາຍັງບໍ່ທັນຮັບຮູ້ເທົ່າທີ່ຄວນຄຸນຄ່າ ແລະ ໂອກາດຂອງຊາວກະສິກອນທີ່ນຳໃຊ້ທີ່ດິນເພື່ອສະໜອງຜະລິດຕະພັນທີ່ມີຄຸນຄ່າສູງ. ເຖິງແນວໃດກໍ່ຕາມມີຫຼາຍກໍລະນີສະແດງໃຫ້ເຫັນວ່າມັນຍັງມີທ່າແຮງ ສຳລັບຊາວກະສິກອນ ແລະ ຜູ້ລົງທຶນທີ່ຈະນຳໃຊ້ການຜະລິດກະສິກຳເປັນສິນຄ້າແບບມີຂໍ້ຕົກລົງເພື່ອພັດທະນາຄຸນນະພາບຂອງຜະລິດຕະພັນສຳລັບຕະຫຼາດທີ່ມີກຳລັງຊື້ສູງເຊັ່ນວ່າ: ໃນພາກເໜືອຂອງ ສ ປ ຈີນ .

#### ຄວາມໃກ້ກັບຕະຫຼາດ ແລະ ຄວາມໄດ້ປຽບ

ສປປ ລາວ ມີຊາຍແດນທີ່ຍາວ ແລະ ກຳລັງປັບປຸງລະບົບຂົນສົ່ງ

ເຊື່ອມຕໍ່ກັບ ສປ ຈີນ, ໄທ ແລະ ຫວຽດນາມ. ແຕ່ພົບວ່າກິດຈະກຳ, ກາລະໂອກາດ ແລະ ການແຂ່ງຂັນສຳລັບຜະລິດຕະພັນຂອງຊາວກະສິກອນລາວແມ່ນຢູ່ຕາມຊາຍແດນທີ່ຕິດກັບ ສປ ຈີນ ຫຼາຍກວ່າ.

ເຫດຜົນທີ່ການຜະລິດເປັນສິນຄ້າກັບຕະຫຼາດໃນປະເທດໄທບໍ່ໄດ້ຜົນດີເທົ່າທີ່ຄວນ, ຕາມທີ່ໄດ້ສຶກສາກໍລະນີທີ່ບໍ່ປະສົບຜົນສຳເລັດພົບວ່າມັນອາດຍ້ອນເຫດຜົນດຽວກັນດັ່ງທີ່ຊາວກະສິກອນລາວທີ່ສົ່ງອອກຜະລິດຕະພັນສູ່ປະເທດໄທເປັນຫຼັກບາງກໍລະນີທີ່ຕົກຢູ່ຢູ່ໃນຄວາມສ່ຽງກ່ຽວກັບການຄວບຄຸມລາຄາ, ການຜູກຂາດ ແລະ ການປະຕິບັດທີ່ບໍ່ມີຄວາມຊື່ສັດຂອງຜູ້ລົງທຶນ ຫຼື ພໍ່ຄ້າ 2-3 ຫົວໜ່ວຍ ຫຼື ກຸ່ມຜູ້ຊື້ຕ່າງໆຊຶ່ງອາດມີການພົວພັນໃກ້ສິດກັບເຈົ້າໜ້າທີ່. ນອກນັ້ນ, ອາດເນື່ອງມາຈາກປະເທດໄທເປັນຜູ້ສົ່ງອອກຜະລິດຕະພັນກະສິກຳລາຍໃຫຍ່ທີ່ມີເງື່ອນໄຂການຜະລິດຄ້າຍຄືກັນກັບ ສປປ ລາວ; ເຖິງວ່າຈຸດໄດ້ປຽບຂອງ ສປປ ລາວ ອາດຈະແມ່ນການລົງທຶນການຜະລິດທີ່ຕ່ຳແຕ່ສິ່ງກະຕຸກຊຸກຍູ້ອື່ນໆອາດຍັງບໍ່ພຽງພໍທີ່ຈະຊຸກຍູ້ຜູ້ຊື້ຈາກປະເທດໄທພິຈາລະນາການລົງທຶນ ຫຼື ການຄ້າຮ່ວມກັບຊາວກະສິກອນໃນ ສປປ ລາວ. ຊາວກະສິກອນໃນປະເທດໄທກຳລັງປະເຊີນຫຼາຍຂໍ້ຫຍຸ້ງຍາກລັກສະນະນີ້ເຊັ່ນກັນ. ສະນັ້ນ, ຕະຫຼາດໃນປະເທດໄທອາດບໍ່ໃຫ້ຜົນປະໂຫຍດຫຼາຍສຳລັບຊາວກະສິກອນລາວ.

ສປ ຈີນ ເປັນປະເທດທີ່ນຳເຂົ້າຜະລິດຕະພັນກະສິກຳທີ່ຫຼາຍທີ່ສຸດ. ໜ້ອຍກວ່າເຄິ່ງໜຶ່ງຂອງປະຊາກອນອາໃສຢູ່ໃນເຂດຮ້ອນ ແລະ ເຂດອົບອຸ່ນທາງພາກໃຕ້ຂອງປະເທດ. ພາກເໜືອໜາວ ແລະ ແຫ້ງແລ້ງ; ຄວາມແຫ້ງແລ້ງແມ່ນສິ່ງທ້າທາຍປະຈຳປີສຳລັບການກະສິກຳເຂດດັ່ງກ່າວຊຶ່ງການຜະລິດຍັງອາໃສພື້ນທີ່ທີ່ປົກຄຸມດ້ວຍຣິມະທີ່ບໍ່ຍືນຍົງ. ນອກນັ້ນ, ຄວາມແຫ້ງແລ້ງຍັງເປັນບັນຫາສຳລັບທຸກໆບ່ອນຊຶ່ງມີຄວາມຢ່າງຮຸນແຮງຫຼາຍຢູ່ເຂດຢູນານໃນປະຈຸບັນ; ໃນປີນີ້ແມ່ນເກີດຂຶ້ນໃນເຂດອ່າງແມ່ນ້ຳຢາງເຊຕອນລຸ່ມ. ຜະລິດຕະພັນໃນເຂດຮ້ອນ, ທີ່ອຸດົມສົມບູນໄປດ້ວຍຊັບພະຍາກອນນ້ຳຢ່າງ ສປປ ລາວ ແມ່ນເໝາະສົມຫຼາຍຕະຫຼາດໃນ ສປ ຈີນ,ໂດຍສະເພາະຕົວເມືອງໃຫຍ່ໃນແຜ່ນດິນໃຫຍ່ ຫຼື ໃນພາກເໜືອ. ດັ່ງກໍລະນີສຶກສາ (7, 9, 10, 11 ແລະ 12); ເພື່ອຮັບປະກັນຜົນຜະລິດຈາກ ສປປ ລາວ ສູ້ ສປ ຈີນ ເຮັດໃຫ້ມີຜູ້ຊື້ຈາກຕະຫຼາດໃນເຂດຕ່າງໆ ໃນ ສປ ຈີນ ເຂົ້າມາລົງທຶນການຜະລິດກະສິກຳແບບມີຂໍ້ຕົກລົງກັບຊາວກະສິກອນ ໂດຍສະເພາະ ແມ່ນສິນຄ້າປະເພດສາລີ,ອ້ອຍ (Lin 2010, 10, 12, 18) . 1 ຊຶ່ງ ສປປ ລາວ ເພີ່ມຂຶ້ນອາດບໍ່ແມ່ນເຂດທີ່ລົງທຶນຕ່ຳທີ່ສຸດສຳລັບການຜະລິດນີ້ເນື່ອງຈາກຂະໜາດ ແລະ ປັດໃຈອື່ນໆ, ນອກນັ້ນຍັງມີພໍ່ຄ້າທີ່ຊອກເກັບຊື້ປູກໝາກອຶ, ໝາກແຕງໂມ ແລະ ກ້ວຍຕ່າງໆຊຶ່ງ ສປປ ລາວ ອາດມີຈຸດໄດ້ປຽບຫຼາຍຢ່າງ. ຜູ້ລົງທຶນ ແລະ ພໍ່ຄ້າຈາກ ສປ ຈີນ ໄດ້ມີການລົງທຶນແລ້ວໃນບັນດາແຂວງຕ່າງໆເປັນຕົ້ນແມ່ນແຂວງບໍ່ແກ້ວ ແລະ ແຂວງອຸດົມໄຊ. ປັດຈຸບັນຖະໜົນຫົນທາງກຳລັງໄດ້ຮັບການປັບປຸງສະນັ້ນ, ສປ ຈີນ ຈະໃຫ້ຄວາມສົນໃຈຕໍ່ ສປປ ລາວ ຊຶ່ງຈະເຮັດໃຫ້ການແຂ່ງຂັນ ແລະ ຂະຫຍາຍທຸລະກິດເພີ່ມຂຶ້ນ.

ການສຶກສານີ້ບໍ່ໄດ້ລົງເລິກກໍລະນີຜູ້ລົງທຶນຈາກ ສສ ຫວຽດນາມທີ່ລົງທຶນການຜະລິດກະສິກຳຮ່ວມກັບຊາວກະສິກອນລາວໃນຮູບແບບການຜະລິດແບບມີຂໍ້ຕົກລົງ. ຫວຽດນາມເປັນຜູ້ສົ່ງອອກກະສິກຳລາຍໃຫຍ່ຕົວຢ່າງການສົ່ງອອກເຂົ້າຊຶ່ງຢູ່ໃນອັນດັບ 2 ທັດຈາກປະເທດໄທ. ອີກດ້ານໜຶ່ງ,ຫວຽດນາມມີຄວາມໜາແໜ້ນຂອງປະຊາກອນເກືອບເທົ່າກັນກັບບາງເຂດໃນ ສປ ຈີນ ແລະ ມີພູມສັນຖານສ່ວນໃຫຍ່ເປັນພື້ນທີ່ທີ່ມີພູສູງຄ້າຍຄືກັນກັບ ສປປ ລາວ. ສະນັ້ນ, ທ່າແຮງແມ່ນຂຶ້ນກັບປະເພດຂອງພືດ ແລະ ເງື່ອນໄຂທ້ອງຖິ່ນຂອງສອງຝາກ ລາວ ແລະ ຫວຽດນາມ. ຊາວກະສິກອນອາດເຫັນໄດ້ເຖິງຈຸດເສຍປຽບທາງດ້ານການຄ້າຍ້ອນສະພາບທີ່ຄ້າຍຄືກັນເຊັ່ນດຽວກັນກັບໄທ ແລະ ຄວາມໄດ້ປຽບແມ່ນບໍ່ຄືກັນຖ້າທຽບກັບຕະຫຼາດ ໃນ ສປ ຈີນ. ຄວາມໃກ້ກັບຕະຫຼາດຂະໜາດໃຫຍ່ທີ່ກຳລັງຂະຫຍາຍຕົວຂອງປະເທດເພື່ອນບ້ານມີທັງສິ່ງທ້າຍທາຍ ແລະ ກາລະໂອກາດ. ຕົວຢ່າງ: ກໍລະນີການລົງທຶນຮ່ວມກັບປະເທດໄທ. ສຳລັບການລົງທຶນຈາກ ສປ ຈີນ, ອາດເປັນເປັນຜົນດີຖ້າຊາວກະສິກອນສາມາດເຂົ້າເຖິງ ແລະ ສະໜອງຄວາມຕ້ອງການຂອງຕະຫຼາດສະເພາະທີ່ໃຫ້ຜົນປະໂຫຍດສູງ ແລະ ຫຼີກລ່ຽງການນຳໃຊ້ອຳນາດທາງດ້ານການເງິນຈາກຜູ້ລົງທຶນ. ເຊັ່ນດຽວກັນທກ່າວມາ, ການລົງທຶນຮ່ວມກັບຜູ້ລົງທຶນຫວຽດນາມອາດມີສິ່ງທ້າທາຍ ແລະ ກາລະໂອກາດ. ແນວໃດກໍ່ຕາມ, ດັ່ງທີ່ກຳລັງຈັດຕັ້ງປະຕິບັດຢູ່, ເພື່ອສ້າງຜົນປະໂຫຍດຈາກກາລະໂອກາດທາງດ້ານຕະຫຼາດຂອງປະເທດໃກ້ຄຽງມັນຮຽກຮ້ອງໃຫ້ມີການປັບປຸງເຄືອຂ່າຍ, ຄວາມອາດສາມາດ, ຂໍ້ມູນຂ່າວສານ ແລະ ການຂົນສົ່ງ.

## ການແຂ່ງຂັນໃນທຸລະກິດກະສິກຳ

ຫຼາຍປະເທດທີ່ມີພູມອາກາດ ແລະ ເງື່ອນໄຂ ກະສິກຳຄ້າຍຄືກັນກັບ ສປປ ລາວ ໄດ້ມີການຈັດຕັ້ງ ຫຼື ມີຜູ້ສົ່ງອອກທາງດ້ານກະສິກຳ ສູ່ ສປ ຈີນ ຫຼາຍຂຶ້ນ.

ປະເທດໄທເປັນຜູ້ສົ່ງອອກສະບຽງອາຫານ ແລະ ວັດຖຸດິບສູ່ ສປ ຈີນ ທີ່ສຳຄັນ. ເຖິງແມ່ນວ່າການຄ້າລະຫວ່າງຫວຽດນາມ ກັບ ສປ ຈີນ ບາງຜະລິດຕະພັນຍັງຈຳກັດເນື່ອງຈາກຫວຽດນາມຍັງປະເຊີນກັບສິ່ງທ້າທາຍທາງດ້ານກະສິກຳ, ແຕ່ຫວຽດນາມເປັນຜູ້ສົ່ງອອກກະສິກຳທີ່ມີການພັດທະນາຢ່າງໄວວາ. ເຊັ່ນດຽວກັນກຳປູເຈຍກຳລັງພັດທະນາການສົ່ງອອກກະສິກຳ, ໂດຍສະເພາະເຂົ້າ. ນອກນັ້ນຜູ້ສົ່ງອອກທາງດ້ານກະສິກຳໜຶ່ງທີ່ກຳລັງພົ້ນເດັ່ນຂຶ້ນມາກໍ່ແມ່ນພະມ້າ. ການພັດທະນາພະລັງງານ, ບວກກັບທະໜົນຫົນທາງ ແລະ ລົດໄຟທີ່ເຊື່ອມໂຍງກັບ ສປ ຈີນ ໃນ ພະມ້າ ໃນຊຸມປີຕໍ່ໜ້າອາດສ້າງຄວາມສົນໃຈ ແລະ ກາຍເປັນເປົ້າໝາຍການລົງທຶນສົ່ງອອກທາງດ້ານກະສິກຳສຳລັບ ສປ ຈີນ. ຕົວຢ່າງ: ປາຊຶ່ງສາມາດສົ່ງອອກ ສູ່ ສປ ຈີນ ໂດຍທາງລົດບັນທຸກ. ນອກນັ້ນ, ຫຼາຍທ່າແຮງທີ່ຈະເຮັດໃຫ້ພະມ້າກາຍເປັນໜຶ່ງໃນຜູ້ນຳການສົ່ງອອກເຂົ້າໃນລະດັບໂລກແມ່ນຍ້ອນເງື່ອນໄຂທ່າແຮງທາງດ້ານທີ່ຕັ້ງຂອງປະເທດ (Turnell 2007, 4).

ການແຂ່ງຂັນຂອງຊາວກະສິກອນ ໃນ ສປປ ລາວ ກັບການສົ່ງອອກກະສິກຳຂອງຫວຽດນາມ ຫຼື ພະມ້າແມ່ນມີຄວາມສ່ຽງໂດຍສະເພາະແມ່ນລາຄາ, ຄຸນນະພາບ ຫຼື ປະລິມານ. ອີກດ້ານໜຶ່ງ, ຄວາມຕ້ອງການ ໃນ ສປ ຈີນ ກຳລັງເພີ່ມສູງ ແລະ ຜູ້ສະໜອງຜົນຜະລິດກໍ່ມີຢ່າງຫຼວງຫຼາຍ, ແຕ່ຜູ້ສະໜອງຜົນຜະລິດທີ່ຢູ່ໃນເຂດຫ່າງໄກອາດຖືກປ່ຽນແທນໂດຍຜູ້ສະໜອງທີ່ຢູ່ໃກ້ກວ່າ. ແນວໃດກໍ່ຕາມ, ການພັດທະນາຄວາມສຳພັນກັບຜູ້ລົງທຶນ, ເນັ້ນໃສ່ຕະຫຼາດ ຫຼື ຜະລິດຕະພັນ ທີ່ໃຫ້ມູນຄ່າສູງ ແລະ ປັບປຸງຜົນຜະລິດອາດຫຼຸດຜ່ອນບັນດາຄວາມສ່ຽງໄດ້.

## ຜົນປະໂຫຍດທີ່ເປັນຍຸດທະສາດ ຈາກ ສ ປ ຈີນ

ສຳລັບ ສປປ ລາວ, ຜົນປະໂຫຍດທີ່ເປັນຍຸດທະສາດຈາກ ສປ ຈີນ ແມ່ນຊາວກະສິກອນຈະໄດ້ຮັບຜົນປະໂຫຍດຈາກລະບອບການຄ້າ ແລະ ການສົ່ງເສີມການລົງທຶນທີ່ເອື້ອຍອຳນວຍ. ສປ ຈີນ ໄດ້ຊຸກຍູ້ຜູ້ລົງທຶນ, ໂດຍສະເພາະບໍລິສັດຂະໜາດໃຫຍ່, ຊອກຫາກາລະໂອກາດການລົງທຶນທີ່ຕ່າງປະເທດໂດຍມີນະໂຍບາຍການຄ້າ ແລະ ການລົງທຶນ ເຫຼົ່ານັ້ນ. ຄວາມສົນໃຈ ສ ປ ຈີນ ໃນ ສປປ ລາວ ແມ່ນຍ້ອນຄວາມໝັ້ນຄົງ ແລະ ຄວາມອາດສາມາດໃນການສະໜອງຊັບພະຍາກອນ. ນະໂຍບາຍ[3] ແບບເປີດກວ້າງຂອງ ສປ ຈີນ ສະແຫວງຫາການພັດທະນາແບບສ້າງສາຍພົວພັນອັນດີກັບປະເທດຕາມແລວຊາຍແດນ ແລະ ສະໜັບສະໜູນ ການພັດທະນາ ແລະ ຄວາມໝັ້ນທ່ຽງທາງດ້ານເສດຖະກິດຂອງປະເທດເພື່ອນບ້ານເຫຼົ່ານັ້ນ (Zhao 2004). ສປ ຈີນ ໄດ້ພິຈາລະນາຊ່ວຍເຫຼືອການພັດທະນາແບບສອງຝ່າຍກັບ ສປປ ລາວ ແລະ ລັດວິສາຫະກິດເປັນຜູ້ລົງທຶນ. ນະໂຍບາຍທາງດ້ານການຄ້າທີ່ເປັນຍຸດທະສາດຂອງ ສປ ຈີນ ແມ່ນຕໍ່ສູ້ເພື່ອຮັບປະກັນສະໜອງສິນຄ້າລວມທັງຢາງພາລາຊຶ່ງເປັນສິນຄ້າຍຸດທະສາດສຳຄັນຕໍ່ຄວາມໝັ້ນທ່ຽງຂອງເສດຖະກິດ ແລະ ຄວາມປອດໄພແຫ່ງຊາດ. ບໍລິສັດຈາກ ສປ ຈີນ ໄດ້ລົງທຶນໃນທຸລະກິດຂະໜາດນ້ອຍ ແລະ ສວນປ່າປູກຢາງພາລາໃນ ສປປ ລາວ ໃນລະດັບທີ່ບໍ່ເຄີຍມີມາກ່ອນ ແລະ ມີຂະຫຍາຍຕົວໄວໃນຊ່ວງ 5-6 ປີ. ການລົງທຶນກ່ຽວກັບຢາງພາລາ ແລະ ກະສິກຳອື່ນໆໄດ້ຮັບການສະໜັບສະໜູນຈາກລັດຖະບານ ສປ ຈີນ ພາຍໃຕ້ແຜນງານການພັດທະນາທີ່ເປັນທາງເລືອກ ແລະ ຍຸດຕິການປູກຝິ່ນໃນ ສປປ ລາວ, ແຜນງານລັກສະນະນີ້ໄດ້ອະທິບາຍລະອຽດ ໂດຍທ່ານ ຊີ (2008) ແລະ ທ່ານ ລິນ (2010, 14). ແຜນງານນີ້ຍັງໃຫ້ສິດທິລວມທັງໂກຕາສຳລັບການສົ່ງອອກຜະລິດຕະພັນກະສິກຳຈາກ ສປປ ລາວ ຖ້າບໍ່ດັ່ງນັ້ນຊາວກະສິກອນອາດຈະປະເຊີນກັບພາສີ ຫຼື ຄ່າທຳນຽມທີ່ສູງ ແລະ ການຄວບຄຸມພືດພັນທີ່ນຳເຂົ້າ (Lin 2010, 15-16). ຕາມຫຼັກການແລ້ວ, ລະບອບພາສີກະສິກຳແມ່ນຢູ່ພາຍຂໍ້ຕົກລົງທາງດ້ານການຄ້າຂອງລັດຖະບານ ສ ປຈີນ - ກັບອາຊຽນນັບຕັ້ງແຕ່ປີ 2010. ແນວໃດກໍ່ຕາມ, ມັນຍັງພົບວ່າຍັງມີຫຼາຍຂໍ້ຕົກລົງກ່ຽວກັບການສົ່ງເສີມທາງດ້ານການຄ້າທີ່ປະຕິບັດລະຫວ່າງລັດຖະບານທ້ອງຖິ່ນ ໃນ ສປປ ລາວ ແລະ ເຂດສິບສອງພັນນາ.[4]

[3] ຫຼື ນະໂຍບາຍສຳລັບເພື່ອນບ້ານໃກ້ຄຽງທີ່ດີ

## 7.2. ທ່າອ່ຽງ

### ຂໍ້ມູນ ແລະ ການສື່ສານ

ໂທລະສັບມືຖືກາຍເປັນເຄື່ອງມືສື່ສານປະຈຳວັນສຳລັບຊາວກະສິກອນ. ໂທລະສັບມືຖືຫຼາຍເຄືອຂ່າຍທີ່ກຳລັງໂຄສະນາການບໍລິການຢ່າງກວ້າງຂວາງລວມທັງການສົ່ງຂໍ້ມູນຜ່ານໂທລະສັບໃນເຂດຊົນນະບົດ. ໂທລະສັບມືຖືກາຍເປັນເຄື່ອງມືທີ່ໃຊ້ສຳລັບການເຂົ້າເຖິງ, ກະຈາຍ ແລະ ປຶກສາຫາລືກ່ຽວກັບ ຂໍ້ມູນຂ່າວສານຕະຫຼາດ, ລວມທັງລາຄາ, ຄຸນນະພາບຜູ້ລົງທຶນ, ບັນຫາກ່ຽວກັບການຜະລິດ ແລະ ຊະນິດພັນພືດ. ຫຼາຍກໍລະນີໄດ້ສະແດງໃຫ້ເຫັນວ່າຊາວກະສິກອນລາວສາມາດໂທລະສັບເພື່ອກວດສອບເບິ່ງລາຄາຂອງສິນຄ້າຢູ່ທີ່ ສປ ຈີນ ແລະ ປະເທດ ໄທ, ປະສານງານກັບພໍ່ຄ້າຄົນກາງ ຫຼື ຮັບຂໍ້ມູນ-ຂ່າວສານທາງດ້ານເຕັກນິກ .

ການນຳໃຊ້ໂທລະສັບມືຖືຈະເພີ່ມຂຶ້ນເນື່ອງຈາກເປັນເຄື່ອງມືຕິດຕໍ່ສື່ສານທາງດ້ານຕະຫຼາດ ແລະ ພົວພັນສັງຄົມທີ່ສຳຄັນ ແລະ ບໍລິສັດໂທລະສັບມືຖື ຍັງຈະສືບຕໍ່ຂະຫຍາຍການຕະຫຼາດເພື່ອເພີ່ມປະລິມານການນຳໃຊ້ ແລະ ສ້າງລາຍຮັບເພື່ອຕອບແທນການລົງທຶນຂອງເຂົາເຈົ້າ. ນອກນັ້ນ,ການຂະຫຍາຍຕາໜ່າງໄຟຟ້າໄດ້ເປັນເງື່ອນໄຂສະໜັບສະໜູນການຂະຫຍາຍເຄືອຂ່າຍຂອງໂທລະສັບມືຖື. ການພັດທະນາຢ່າງຕໍ່ເນື່ອງອາດເຮັດໃຫ້ຊາວກະສິກອນສາມາດຮຽນຮູ້ ແລະ ເຂົ້າເຖິງເຄືອຂ່າຍຂໍ້ມູນ-ຂ່າວສານຫຼາຍຂຶ້ນ, ລວມທັງການນຳໃຊ້ອິນເຕີເນັດ. ໃນຂະນະດຽວກັນ, ຄວາມຕ້ອງການຂອງຊາວກະສິກອນກ່ຽວກັບຂໍ້ມູນ-ຂ່າວສານທາງດ້ານຕະຫຼາດ ແລະ ຄວາມຮູ້ແມ່ນກາລະໂອກາດສຳລັບຜູ້ສະໜອງການບໍລິການທາງດ້ານເຄືອຂ່າຍໂທລະສັບມືຖືເພື່ອເພີ່ມຂຶ້ນລາຍຮັບຜ່ານການໂຄສະນາ ແລະ ການບໍລິການຂໍ້ມູນ-ຂ່າວສານ.

ເນື່ອງຈາກການຂະຫຍາຍຕົວຂອງພາກເອກະຊົນໃນດ້ານຕ່າງໆ, ຄາດວ່າອີກໃນ 3-5 ປີ ຊາວກະສິກອນໃນ ສປປ ລາວ ອາດສາມາດເຂົ້າເຖິງຂໍ້ມູນຕະຫຼາດໂດຍສະເພາະລາຄາ, ກາລະໂອກາດ ແລະ ການຕິດຕໍ່ພົວພັນກັບບັນດາຜູ້ລົງທຶນຂະໜາດໃຫຍ່.

4 ທ່ານ ຮຸນແດງ ແພງພະຈັນ, ຫ້ອງການກະສິກຳ-ປ່າໄມ້ເມືອງນາໝໍ້, ແຂວງອຸດົມໄຊ ອະທິບາຍວ່າ: ແຕ່ລະຝ່າຍອາດມີລັກສະນະ ຫຼື ທິດທາງໃນການຄ້າ ແລະ ການລົງທຶນ ໃນເມືອງສິງ, ແຂວງຫຼວງນ້ຳທາ (Fullbrook, Contract farming in the Lao PDR: cases and questions 2007) ໃນຄະນະທີ່ການລົງທຶນໃນ ແຂວງອຸດົມໄຊ ໂດຍຜູ້ລົງທຶນຈາກ ສປ ຈີນ ແມ່ນໄດ້ຮັບການສະໜັບສະໜູນ ແລະ ຊີ້ນຳຈາກ ບໍຫານ, ສ ປ ຈີນ

ເຖິງແນວໃດກໍ່ຕາມຄວາມສາມາດຂອງເຂົາເຈົ້າໃນການວິເຄາະ ແລະ ເຂົ້າໃຈກ່ຽວກັບລາຄາອາດຍັງບໍ່ທັນພັດທະນາໄດ້ໄວຂະໜາດນັ້ນ. ໃນຄະນະດຽວກັນຫຼາຍເງື່ອນໄຂອາດຍັງສືບຕໍ່ກີດຂວາງທາງເລືອກສຳລັບຊາວກະສິກອນ; ການເຂົ້າຂໍ້ມູນ-ຂ່າວສານທີ່ເພີ່ມຂຶ້ນອາດນຳໄປສູ່ທາງເລືອກທີ່ດີກວ່າສຳລັບຊາວກະສິກອນ.

### ການປ່ຽນແປງກ່ຽວກັບສະບຽງອາຫານ, ວັດຖຸດິບສຳລັບການຜະລິດ ແລະ ຄວາມປອດໄພ

ຄວາມຕ້ອງການຜະລິດຕະພັນໃນທົ່ວໂລກກຳລັງເພີ່ມຂຶ້ນເນື່ອງຈາກການເຕີບໂຕຂອງປະຊາກອນ, ຄວາມມັ່ງຄັ່ງທີ່ເພີ່ມຂຶ້ນ, ການຂະຫຍາຍຕົວເມືອງ, ຄວາມສ່ຽງກ່ຽວກັບນ້ຳມັນ ແລະ ການປ່ຽນແປງດິນຟ້າອາກາດ. ການບໍລິໂພກຈະເພີ່ມຂຶ້ນ ແລະ ການຜະລິດສະບຽງອາຫານຈະຂະຫຍາຍຕົວຢ່າງກວ້າງຂວາງ ຕົວຢ່າງ: ການບໍລິໂພກຊີ້ນໝູ ແລະ ງົວທີ່ລ້ຽງດ້ວຍການເລັ້ງອາຫານ. ການເພີ່ມຂຶ້ນຂອງລາຄານ້ຳມັນ, ຄວາມກັງວົນກ່ຽວກັບຄວາມຕ້ອງການທີ່ເກີນຄວາມອາດສາມາດ ແລະ ຄວາມໝັ້ນຄົງໃນການສະໜອງ ແລະ ຜົນກະທົບສິ່ງແວດລ້ອມເປັນທ່າແຮງສຳລັບການເພີ່ມຂຶ້ນຄວາມຕ້ອງການນຳໃຊ້ວັດຖຸດິບຈາກກະສິກຳເພື່ອທົດແທນເຊັ່ນວ່າ: ການຜະລິດເສັ້ນໄຍທຳມະຊາດ ຫຼື ຖົງຢາງປລາສຕິກຈາກມັນຕົ້ນ. ການຂະຫຍາຍຂອງຕົວເມືອງເຮັດໃຫ້ປະຊາກອນທີ່ຂຶ້ນກັບການສະໜອງສະບຽງອາຫານ ແລະ ວັດຖຸດິບຈາກຊາວກະສິກອນ ແລະ ຕະຫຼາດເພີ່ມຂຶ້ນ. ການຂະຫຍາຍຕົວຂອງຕົວເມືອງສາມາດເຮັດໃຫ້ມີການສູນເສຍທີ່ດິນ ຫຼື ນ້ຳສຳລັບການກະສິກຳ. ໃນຂະນະດຽວກັນ,ທີ່ດິນສຳລັບການກະສິກຳກຳລັງຢູ່ໃນຄວາມກົດດັນຈາກມົນລະພິດການແຂ່ງຂັນການນຳໃຊ້ນ້ຳ, ໄພແຫ້ງແລ້ງ ແລະ ທະເລຊາຍ.

ຕາມທີ່ຄາດຄະເນຂອງອົງການເພື່ອການຮ່ວມມື ແລະ ພັດທະນາເສດຖະກິດ (OECD) ແລະ ອົງການອາຫານ ແລະ ການກະເສດ (FAO) ໃນບົດລາຍງານ ກ່ຽວກັບສະພາບຂອງການພັດທະນາກະສິກຳໃນປະຈຸບັນ[5] ວ່າການລົງທຶນໃນການຜະລິດກະສິກຳຈະເພີ່ມຂຶ້ນ. ບັນດາປັດໃຈທີ່ກ່າວມາລວມທັງການເຂົ້າເຖິງ ຕະຫຼາດໃນຂົງເຂດ ແລະ ສາກົນຫຼາຍຂຶ້ນຂອງພືດເສດຖະກິດນັ້ນໝາຍວ່າມັນມີຄວາມຕ້ອງການພືດເສດຖະກິດຢ່າງຫຼວງຫຼາຍ ແລະ ຈະໄປສູ່ການເພີ່ມລາຍຮັບ ແລະ ມູນຄ່າທີ່ດິນສູງຂຶ້ນສຳລັບຊາວກະສິກອນ ໃນ ສປປ ລາວໃນຊຸມປີຕໍ່ໜ້າ. ໃນຂະນະດຽວກັນ, ເພື່ອຕອບສະໜອງຄວາມຕ້ອງການຜະລິດຕະພັນນັ້ນອາດເຮັດໃຫ້ມີການລົງທຶນພະຍາຍາມຄວບຄຸມທີ່ດິນໂດຍຮູບແບບການສຳ

ປະທານ ແລະ ການລົງທຶນດ້ານຕ່າງໆເຊັ່ນ: ການປູກຢາງພາລາ, ເຈ້ຍ ແລະ ອ້ອຍ ແລະ ສິ່ງນີ້ອາດສົ່ງຜົນເຮັດໃຫ້ຊາວກະສິກອນຕ້ອງຍ້າຍອອກຈາກພື້ນທີ່ ຫຼື ມີຜົນກະທົບຕໍ່ການເຂົ້າເຖິງຊັບພະຍາກອນຂອງເຂົາເຈົ້າເຊັ່ນວ່າ: ນໍ້າ. ປັດໃຈໜຶ່ງທີ່ມີຜົນກະທົບຕໍ່ການເຂົ້າເຖິງທີ່ດິນແມ່ນການທີ່ພາກລັດເກັບພາສີຈາກລາຍຮັບຂອງຊາວກະສິກອນເພື່ອເປັນການທົດແທນລາຍໄດ້ຈາກອາກອນລາຍຮັບຈາກການສຳປະທານ ແລະ ການປູກໄມ້.

## ສິ່ງທ້າທາຍກ່ຽວກັບກະສິກຳສຳລັບ ສ ປ ຈີນ

ການກະສິກຳໃນ ສປ ຈີນ ແມ່ນຢູ່ພາຍໃຕ້ຄວາມກົດດັນ ແລະ ໃຫ້ຄວາມສົນໃຈການລົງທຶນກະສິກຳໃນບັນດາປະເທດເພື່ອນບ້ານເພີ່ມຂຶ້ນ. ການຂະຫຍາຍຕົວເມືອງຕົວເມືອງ ແລະ ອຸດສາຫະກຳໃນທົ່ງປະເທດ; ການກາຍເປັນທະເລຊາຍໂດຍສະເພາະໃນພາກຕາເວັນຕົກສ່ຽງເໜືອ; ການຫຼຸດລົງທີ່ດິນທີ່ມີນໍ້າກ້ອນປົກຫຸ້ມໃນພາກເໜືອ; ຄວາມແຫ້ງແລ້ງໂດຍສະເພາະໃນປະຈຸບັນໃນເຂດຢູນານ; ມົນລະພິດທາງດິນ ແລະ ນໍ້າໄດ້ສ້າງໆຜົນກະທົບຕໍ່ການກະສິກຳ ແລະ ຜົນຜະລິດຫຼຸດລົງໂດຍສະເພາະສາລີ. ການທີ່ຈະແກ້ໄຂບັນຫາເຫຼົ່ານີ້ເປັນໄປໄດ້ຍາກ, ສະນັ້ນການຜະລິດໃນປະເທດເພື່ອນບ້ານເປັນທາງອອກໜຶ່ງເພື່ອຊ່ວຍທົດແທນການຜະລິດທີ່ສູນເສຍໄປໃນປະເທດລວມທັງການຫຼຸດຜ່ອນການຂຶ້ນກັບຜົນຜະລິດກະສິກຳຈາກເຂດທີ່ຫ່າງໄກ ແລະ ຄວາມສ່ຽງໃນຕະຫຼາດໂລກ. ສິ່ງເຫຼົ່ານີ້ເຮັດໃຫ້ການລົງທຶນໃນທີ່ດິນ ແລະ ການຜະລິດກະສິກຳແບບມີຂໍ້ຕົກລົງຮ່ວມກັບຊາວກະສິກອນໃນ ສປປ ລາວໄດ້ຮັບຄວາມສົນໃຈເພີ່ມຂຶ້ນ, ເຊັ່ນດຽວກັນກັບກຳປູເຈຍ ແລະ ພະມ້າ .

## ການປ່ຽນແປງຄວາມຕ້ອງການ ໃນ ສ ປ ຈີນ

ປະຊາກອນ ສປ ຈີນ ກຳລັງເຕີບໂຕ ແລະ ມັ່ງຄັ່ງຂຶ້ນຢ່າງຕໍ່ເນື່ອງ. ປະຊາກອນສ່ວນໃຫຍ່ຂອງໃນ ສປ ຈີນແມ່ນອາໃສຢູ່ຕົວເມືອງ. ໂດຍທົ່ວໄປເມື່ອປະຊາກອນຮັ່ງມີຂຶ້ນຈະເຮັດໃຫ້ມີຄວາມຕ້ອງການສຳລັບການບໍລິໂພກຊີ້ນໂດຍສະເພາະໝູ ແລະ ງົວພັນເພີ່ມຂຶ້ນ; ຊຶ່ງສິ່ງນີ້ຮຽກຮ້ອງໃຫ້ມີການຜະລິດທົ່ວອາຫານສັດ ແລະ ການຜະລິດເຂົ້າສຳລັບຜະລິດທົ່ວອາຫານເພີ່ມຂຶ້ນ. ສະນັ້ນຄວາມຕ້ອງການທາງດ້ານປະລິມານ ແລະ ຄຸນນະພາບຂອງສະບຽງອາຫານ ໃນ ສປ ຈີນ ຈະເພີ່ມຂຶ້ນນັ້ນມັນຮຽກຮ້ອງເຖິງພື້ນທີ່ທຳການຜະລິດຂະໜາດໃຫຍ່. ນອກນັ້ນ, ຄວາມຕ້ອງການທີ່ເພີ່ມຂຶ້ນ ແລະ ພື້ນທີ່ກະສິກຳທີ່ຈຳກັດ ໃນ ສປ ຈີນ ອາດສົ່ງຜົນເຮັດໃຫ້ລາຄາສູງຂຶ້ນ ແລະ ຫັນປ່ຽນການຜະລິດ, ຜະລິດຕະພັນທີ່ມີມູນຄ່າຕໍ່າ ເຊັ່ນ: ໝາກອຶ ແລະ ໝາກແຕງໂມ ສູ່ ສປປ ລາວ. ຕາມທີ່ສັງເກດທີ່ດິນທີ່ມີການປູກພືດຜັກເຂດຮ້ອນໃນຢູນານ ແລະ ໄຮນານແມ່ນມີຈຳກັດ; ກົງກັນຂ້າມ, ພື້ນທີ່ສ່ວນໃຫຍ່ຖືກນຳໃຊ້ສຳລັບປູກຢາງພາລາ. ນອກນັ້ນຍັງພົບວ່າຜູ້ລົງທຶນຈຳນວນໜຶ່ງໄດ້ລົງທຶນການປູກໝາກກ້ວຍໃນແຂວງອຸດົມໄຊ, ຜົ້ງສາລີ ແລະ ກຳລັງຊອກກາລະໂອກາດໃນການປູກໝາກກ້ວຍໃນແຂວງບໍ່ແກ້ວ. ການເພີ່ມຂຶ້ນຄວາມຮັ່ງມີ ແລະ ກຳລັງການຊື້ສຳລັບສະບຽງອາຫານ ເຊັ່ນ: ໝາກແຕງໂມ ແລະ ໝາກອຶ, 6 ຈະອຳນວຍປະໂຫຍດຕໍ່ຊາວກະສິກອນໃນ ສປປ ລາວ ຖ້າພວກເຂົາສາມາດເຊື່ອມໂຍງກັບຜູ້ລົງທຶນທີ່ມີຄຸນນະພາບ. ແນວໃດກໍ່ຕາມ, ຊາວກະສິກອນກຳລັງປະເຊີນກັບສິ່ງທ້າທາຍຈຳນວນໜຶ່ງໂດຍສະເພາະແມ່ນການຂະຫຍາຍສວນຢາງພາລາຂອງບັນດາບໍລິສັດຕ່າງໆ.

## 7.3. ສະຫຼຸບ

ຕົລາຄາຊາວກະສິກອນ ໃນ ສປປ ລາວ ກຳລັງປະເຊີນກັບສະພາບການປ່ຽນແປງທີ່ແຕກຕ່າງກັບສິ່ງທີ່ເຂົາເຈົ້າປະເຊີນໃນ 10 ແລະ 5 ປີ ຜ່ານມາ. ສະພາບການປ່ຽນແປງ ແລະ ທ່າອ່ຽງ ເຫຼົ່ານັ້ນ ກຳລັງ ສ້າງເງື່ອນໄຂຄວາມຕ້ອງການທີ່ເປັນຜົນບວກຕໍ່ ເຂົາເຈົ້າ. ເຖິງແນວໃດກໍ່ຕາມ, ມັນຍັງມີສິ່ງກົດດັນຈຳນວນໜຶ່ງໂດຍສະເພາະແມ່ນການຂະຫຍາຍຄວາມຕ້ອງການທີ່ດິນສຳລັບອຸດສາຫະກຳ. ເພື່ອສ້າງຄວາມມັ່ງຄັ່ງຂອງຊາວກະສິກອນຈຳເປັນຕ້ອງໄດ້ເລີ່ມຈາກການສ້າງລາຍລາຍຮັບໃຫ້ພຽງພໍໂດຍພູນໃຊ້ກາລະໂອກາດການປ່ຽນແປງທາງດານເສດຖະກິດ ແລະ ສິ່ງແວດລ້ອມ. ເພື່ອຢາກໄດ້ແນວນັ້ນ, ເຂົາເຈົ້າຈຳຕ້ອງໄດ້ຜະລິດພືດຜັກທີ່ໃຫ້ມູນຄ່າ ແລະ ຜົນຕອບແທນສູງສຳລັບຕະຫຼາດທີ່ມີຄຸນນະພາບ ຫຼື ກຳລັງຈ່າຍສູງ. ໃນການເຊື່ອມໂຍ່ງກັບຕະຫຼາດເຫຼົ່ານັ້ນອາດຈະປະເຊີນກັບສິ່ງທ້າທາຍໂດຍສະເພາະແມ່ນຄວາມຫ່າງໄກ, ພາສາ, ຄວາມຮູ້, ເທັກໂນໂລຊີ ແລະ ກອບການຄ້າ ແລະ ມັນຍິ່ງທ້າທາຍຖ້າມີພຽງຊາວກະສິກອນພັດທະນາການເຊື່ອມໂຍ່ງນັ້ນດ້ວຍຕົນເອງ.

5 OECD-FAO ທັດສະນະທາງດ້ານການກະເສດ http://www.agri-outlook.org

ຖ້າຫາກຊາວກະສິກອນຍັງສືບຕໍ່ຂາຍຜົນຜະລິດສູ່ຕະຫຼາດໃນປະເທດໃກ້ຄຽງເຊັ່ນ:ສປ ຈີນ ແລະ ໄທເທົ່ານັ້ນ ແລະຖ້າຫາກຍັງປະເຊີນສະພາບທີ່ມີຜູ້ຊື້ 2-3 ຫືວໜ່ວຍທີ່ຄວບຄຸມຕະຫຼາດເຂົາເຈົ້າອາດບໍ່ສາມາດໄດ້ຮັບຜົນຕອບແທນທີ່ສູງ. ການນຳໃຊ້ການຜະລິດກະສິກຳແບບມີຂໍ້ຕົກລົງເປັນທາງເລືອກພື້ນຖານສຳລັບການພັດທະນາຄວາມສຳພັນກັບຜູ້ລົງທຶນໃນຕະຫຼາດທີ່ມີຄຸນນະພາບຊຶ່ງອາດມີຄວາມສົນໃຈ, ຄວາມສາມາດທາງດ້ານການເງິນໃນການພັດທະນາຄວາມສຳພັນ ແລະ ການລົງທຶນໃນໄລຍະຍາວກັບຊາວກະສິກອນ.

[6] See appendix for examples of differentials between prices at the farm gate in Laos and retail in Beijing

## 8. ກໍລະນີສຶກສາ

ການປະເມີນປັດໃຈທີ່ພາໃຫ້ການຜະລິດເປັນສິນຄ້າແບບມີຂໍ້ຕົກລົງປະສົບຜົນສຳເລັດນີ້ໄດ້ສຶກສາ ແລະ ບັນທຶກການຜະລິດກະສິກຳແບບມີຂໍ້ຕົກລົງໃນກໍລະນີຕ່າງໆ ຢູ່ໃນພາກໃຕ້ ແລະ ຕາເວັນຕົກສ່ຽງເໜືອ ຂອງ ສປປ ລາວແຕ່ການສຶກສາຄົ້ນຄ້ວາບໍ່ໄດ້ກວມເອົາການຜະລິດໃນແຂວງທີ່ມີຊາຍແດນຕິດກັບຫວຽດນາມ. ກໍລະນີສຶກສາສ່ວນໃຫຍ່ແມ່ນໄດ້ຈາກພາກເໜືອເພາະວ່າ, ໂດຍອີງໃສ່ການລົງຢ້ຽມຢາມພາກສະໜາມ 2 ຄັ້ງ, ຂໍ້ມູນທີ່ໄດ້ຢູ່ພາກເໜືອແມ່ນມີຄວາມອຸດົມສົມບູນຫຼາຍກວ່າພາກໃຕ້. ຜົນຂອງການສຶກສາໄດ້ຊີ້ໃຫ້ເຫັນວ່າ ສະພາບແວດລ້ອມທຸລະກິດທີ່ເອື້ອອຳນວຍ ແລະ ມີກາລະໂອກາດຫຼາຍສຳລັບຊາວກະສິກອນ ແລະ ຜູ້ລົງທຶນສ່ວນຫຼາຍແມ່ນຢູ່ໃນເຂດຊາຍແດນ ສປປ ລາວ ແລະ ສປ ຈີນ ຫຼື ບໍ່ໄກຈາກຊາຍແດນເຖິງ 1 ຊົ່ວໂມງ. ເຂດນີ້ເປັນພື້ນທີ່ໆຜູ້ລົງທຶນຈາກຫຼາຍແຂວງຂອງ ສປ ຈີນ ເຂົ້າມາດຳເນີນທຸລະກິດຢູ່ລາວໂດຍຜ່ານພໍ່ຄ້າຄົນກາງຢ່າງຫຼວງຫຼາຍຖ້າທຽບກັບເຂດລຽບຕາມຊາຍແດນທີ່ຕິດກັບປະເທດໄທຊຶ່ງການລົງທຶນ ແລະ ການຄ້າຖືກຄວບຄຸມຢ່າງໜັກໂດຍພໍ່ຄ້າຜູກຂາດ 2-3 ຫົວໜ່ວຍ.

## 8.1. ກໍລະນີ 1. ປິດຊ່ອງຫວ່າງ: ຜູ້ອຳນວຍຄວາມສະດວກ, ຜູ້ລົງທຶນ ແລະ ຊາວກະສິກອນ

ບ້ານ ກະຕອດ, ເມືອງ ປາກຊ່ອງ, ແຂວງ ຈຳປາສັກ




ທ່ານ ສຸລິເຍດ, ເປັນຮອງຫົວໜ້າກຸ່ມຜະລິດກາເຟ

ຜູ້ລົງທຶນໃສ່ການຜະລິດສາມາດເຊື່ອມຕໍ່ຊາວກະສິກອນເຂົ້າຫາຕະຫຼາດຊ່ອງຫວ່າງ(ສະເພາະຜະລິດຕະພັນໃດໜຶ່ງ) ທີ່ໄດ້ລາຍຮັບສູງຂື້ນ

### ປະສົບການ

ການເພີ່ມຂື້ນຈຳນວນຜູ້ບໍລິໂພກກາເຟໃນທົ່ວໂລກ ແລະ ຄວາມຕ້ອງການກາເຟທີ່ມີຄຸນນະພາບເຊັ່ນ: ກາເຟອາລາບິກາເປັນປັດໃຈໜຶ່ງເຮັດໃຫ້ຊາວກະສິກອນລາວເຫັນວ່າມັນເປັນກາລະໂອກາດ ແລະ ຫັນມາສຸມໃສ່ການຜະລິດກາເຟປະເພດຕ່າງໆໂດຍສະເພາະແມ່ນເຂດພູພຽງບໍລະເວນໃນພາກໃຕ້ຂອງລາວຊຶ່ງເປັນດິນພູເຂົາໄຟເກົ່າທີ່ອຸດົມສົມບູນ. ຊາວກະສິກອນອາດບໍ່ໄດ້ຮັບຜົນປະໂຫຍດຫຼາຍເທົ່າກັບການເພີ່ມຂື້ນຂອງລາຄາກາເຟໃນຕະຫຼາດໂລກເພາະວ່າປົກກະຕິແລ້ວຊາວກະສິກອນກູ້ຢືມເງິນຈາກພໍ່ຄ້າຜູ້ທີ່ສະໜອງແນວພັນ ຫຼື ແກ່ນກາເຟໃຫ້ເປັນສິ່ງມັດຈຳ. ພໍ່ຄ້າອາດກຳນົດລາຄາໃນຫຼາຍລະດັບເພາະຄວາມໄດ້ປຽບທາງດ້ານຂໍ້ມູນຂ່າວສານ, ທຶນ ແລະ ຄວາມອາດສາມາດ. ເຖິງແນວໃດກໍ່ຕາມ, ເພາະບໍ່ມີທາງເລືອກອື່ນ, ສິນເຊື່ອທີ່ສະໜອງໃຫ້ໂດຍພໍ່ຄ້ານັບວ່າເປັນການບໍລິການທາງດ້ານສັງຄົມອີກຢ່າງໜຶ່ງຊຶ່ງອຳນວຍຕໍ່ການຜະລິດ.

ຄວາມບໍ່ສົມສ່ວນກັນລະຫວ່າງຊາວກະສິກອນ ແລະ ຕະຫຼາດສ່ວນໜຶ່ງແມ່ນເນື່ອງຈາກການຂາດແຄນທາງດ້ານທຶນຮອນ ແລະ ອົງການຈັດຕັ້ງທີ່ຊ່ວຍສະຫະກອນການຜະລິດໃຫ້ມີປະສິດທິພາບ. ເຖິງແນວໃດກໍ່ຕາມ, ການສຶກສານີ້ໄດ້ພົບ 2 ກໍລະນີທີ່ເຫັນວ່າ ອົງການຈັດຕັ້ງທີ່ກ່ຽວຂ້ອງສາມາດຊ່ວຍຈັດຕັ້ງກຸ່ມຜູ້ຜະລິດ, ໃຫ້ການຊ່ວຍເຫຼືອທາງດ້ານເຕັກນິກ ແລະ ທີ່ສຳຄັນກວ່ານັ້ນກໍ່ຄືການເຊື່ອມໂຍງກັບຕະຫຼາດທີ່ສາມາດຊື້ຜົນຜະລິດຈາກຊາວກະສິກອນໃນລາຄາທີ່ສູງໂດຍອີງຕາມຄຸນນະພາບຄື: ສະມາຄົມຜູ້ປະລິດກາເຟ ຫຼື AGPC ແລະ ສະຫາກອນກາເຟເທວະດາ. ທັງສອງອົງກອນນີ້ເປັນສື່ກາງຄືກັນ ຫຼື ບໍ່ໄດ້ລົງທຶນຊຶ່ງປະຕິບັດໜ້າທີ່ຕາມພາລະບົດບາດ ແລະ ວິທີການທີ່ແຕກຕ່າງກັບພໍ່ຄ້າຄົນກາງທີ່ມີຈຸດປະສົງສ້າງມູນຄ່າຈາກຕ່ອງໂສ້ການຜະລິດຜ່ານການເກັບຄ່າບໍລິການ ແລະ ສະເໜີລາຄາໃຫ້ທັງຜູ້ຊື້ ແລະ ຜູ້ຂາຍ; ກົງກັນຂ້າມສະມາຄົມຜູ້ປະລິດກາເຟ ແລະ ສະຫາກອນປູກກາເຟໄດ້ຫຼຸດຄ່າສິ້ນເປືອງການບໍລິການສຳລັບຊາວກະສິກອນ.

ຕາມການໃຫ້ສຳພາດຂອງ ທ່ານ ຈັນສະໝອນ ລົມມານີ ຜູ້ບໍລິຫານສະມາຄົມຜູ້ປະລິດກາເຟທີ່ຫ້ອງການຂອງສະມາຄົມຜູ້ຜະລິດກາເຟໃນເມືອງປາກເຊ, ແຂວງຈຳປາສັກ ໃຫ້ຮູ້ວ່າ: ສະມາຄົມຜູ້ຜະລິດກາເຟແມ່ນອົງການຈັດຕັ້ງທ້ອງຖິ່ນສ້າງຕັ້ງຂື້ນໃນ 2005 ຊຶ່ງໄດ້ຮັບການສະໜັບສະໜູນໂດຍອົງການພັດທະນາຂອງປະເທດຝຣັ່ງ (afd). ການເຮັດວຽກຂອງສະມາຄົມຜູ້ຜະລິດກາເຟກັບຊາວກະສິກອນ ແລະ ຜູ້ຊື້ດັ່ງນີ້: ດ້ານການສະໜອງຜົນຜະລິດ.



ການຕາກເມັດກາເຟຂອງສະມາຄົມກາເຟ

ສະມາຄົມໄດ້ຊ່ວຍຊາວກະສິກອນສ້າງຕັ້ງກຸ່ມຜະລິດຂື້ນຈຳນວນ 53 ກຸ່ມ, ຄັດເລືອກແນວພັນທີ່ດີ, ປັບປຸງຂະບວນການປຸງແຕ່ງ, ອອກໃບຢັ້ງຢືນການຄ້າແບບຍຸດຕິທຳ ແລະ ການປູກພືດປອດສານພິດ. ຊາວກະສິກອນທີ່ເປັນສະມາຊິກຂອງກຸ່ມຕ້ອງໄດ້ຈ່າຍຄ່າສະມາຊິກ. ສະມາຄົມຜູ້ຜະລິດກາເຟຫັກຄ່າບໍລິຫານ, ບວກກັບອາກອນ ແລະ ຄ່າຂົນສົ່ງຈາກລາຄາກາເຟທີ່ຈະຈ່າຍໃຫ້ຊາວກະສິກອນ. ດ້ານຄວາມຕ້ອງການ; ສະມາຄົມໄດ້ນຳໃຊ້ຄວາມອາດສາມາດທາງດ້ານການຕະຫຼາດເພື່ອພັດທະນາຄວາມສຳພັນກັບຜູ້ຊື້ໃນຕ່າງປະເທດ, ໂດຍສະເພາະຢູ່ໂລບຊຶ່ງໃຫ້ລາຄາສູງກວ່າສຳລັບການຜະລິດທີ່ຜ່ານລະບົບການຄ້າແບບຍຸດຕິທຳ ແລະ ກາເຟອິນຊີ .

ແຕ່ລະປີສະມາຄົມຜູ້ຜະລິດກາເຟໄດ້ເຮັດຂໍ້ຕົກລົງກັບແຕ່ລະກຸ່ມໂດຍໄດ້ມີການກຳນົດປະລິມານ, ຄຸນນະພາບ, ລາຄາ ແລະ ເວລາໃນການເກັບຊື້; ແລະ ແຕ່ລະກຸ່ມໄດ້ເຮັດຂໍ້ຕົກລົງກັບແຕ່ລະຄົວເຮືອນ ຫຼື ສະມາຊິກຂອງກຸ່ມເພື່ອປູກກາເຟສະໜອງໃຫ້ທັງສະມາຄົມຜູ້ຜະລິດກາເຟ ແລະ ພໍ່ຄ້າທົ່ວໄປ. ແນວໃດກໍ່ຕາມເຖິງແມ່ນວ່າສະມາຄົມຜູ້ຜະລິດກາເຟຈະໃຫ້ລາຄາທີ່ດີກວ່າແຕ່ເນື່ອງຈາກລະບົບການຈ່າຍຂອງສະມາຄົມທີ່ແບ່ງອອກເປັນສອງງວດນັ້ນເຮັດໃຫ້ຊາວກະສິກອນສ່ວນໜຶ່ງບໍ່ສາມາດລໍຖ້າການຈ່າຍແບບລະບົບດັ່ງກ່າວ. ສະນັ້ນ, ໂດຍປົກກະຕິແລ້ວຊາວກະສິກອນໄດ້ແບ່ງຜົນຜະລິດຂາຍໃຫ້ພໍ່ຄ້າເປັນສ່ວນໃຫຍ່ເພາະເຂົາເຈົ້າຈ່າຍເປັນເງິນສົດໃນງວດດຽວເຖິງແມ່ນວ່າລາຄາຈະຕ່ຳກວ່າ. ຂໍ້ຕົກລົງລະຫວ່າງສະມາຄົມຜູ້ຜະລິດກາເຟ, ກຸ່ມ ແລະ ຊາວກະສິກອນແມ່ນມີມາດຕະການບັງຄັບທາງດ້ານເສດຖະກິດ. ຖ້າຊາວກະສິກອນ ຫຼື ກຸ່ມບໍ່ສາມາດສະໜອງຜົນຜະລິດຕາມເງື່ອນໄຂທີ່ກຳນົດໃນຂໍ້ຕົກລົງສະມາຄົມຈະບໍ່ຮັບຊື້ຜົນຜະລິດຂອງເຂົາເຈົ້າໃນລະດູການໜຶ່ງ.

ຫ່າງຈາກເມືອງປາກເຊບໍ່ເຖິງຊົ່ວໂມງຕາມເສັ້ນທາງຫຼວງສູ່ເຂດພູພຽງບໍລະເວນກໍ່ແມ່ນບ້ານກະຕວດຊຶ່ງດ້ານຫຼັງຂອງບ້ານເຕັມໄປດ້ວຍຕົ້ນກາເຟທີ່ກຳລັງເຕີບໂຕໃຕ້ຮົ່ມໄມ້ໃຫຍ່. ທ່ານ ສຸລິເຍດ ວົງວຽນນິດ, ຮອງຫົວໜ້າ ແລະ ຮັບຜິດຊອບການບັນຊີຂອງກຸ່ມ ຊຶ່ງປະກອບດ້ວຍ 87 ຄອບຄົວ ແລະ ສ່ວນໃຫຍ່ປູກກາເຟອາລາບິກາ, ກາຕີມໍ ແລະ ສ່ວນໜຶ່ງແມ່ນທາຍປິກາໄດ້ໃຫ້ຂໍ້ມູນວ່າ: ໃນ 2003 ອົງການອົອກສຟາມຂອງອີສະຕາລີໄດ້ແນະນຳ ບໍລິສັດ ເອທີຈີ (ATG) ໃນປະເທດ ຍີ່ປຸ່ນໃຫ້ຮູ້ກັບຊາວກະສິກອນໃນເຂດດັ່ງກ່າວ. ເອທີຈີ ເປັນຜູ້ສ້າງສາງເກັບມ້ຽນ ແລະ ສະໜອງກົນຈັກສຳລັບການ

ປຸງແຕ່ງໃນຂະນະດຽວກັນອົງການ ອ໊ອກສຟາມ ຂອງ ອິສະຕາລີໄດ້ຊ່ວຍເຫຼືອຊາວກະສິກອນໂດຍສະເພາະ ການປັບປຸງທັກສະ ແລະ ຈັດຕັ້ງກຸ່ມຜູ້ຜະລິດຊຶ່ງໃສ່ ຊື່ວ່າ ກຸ່ມກາເຟເທວະດາ. ໃນປີນັ້ນກຸ່ມສາມາດຂາຍ ກາເຟໃຫ້ ເອທີຈີ ໄດ້ 13 ໂຕນ. ປະຈຸບັນຍອດຂາຍ ມີພຽງ 3 ໂຕນ ຫຼື ຜົນຜະລິດ ພຽງແຕ່ 5% ໄດ້ຂາຍໃຫ້ ເອທີຈີ ແລະ ສ່ວນທີ່ເຫຼືອແມ່ນຂາຍໃຫ້ພໍ່ຄ້າໃນທ້ອງຖິ່ນ. ທ່ານ ສຸລິເຍດ ຄາດວ່າ ອ໊ອກສຟາມຂອງອິສະຕາລີ ແລະ ຫ້ອງການກະສິກຳ - ປ່າໄມ້ເມືອງຈະສົ່ງເສີມ ກາເຟອາລາບິກາຊາວາຊຶ່ງພັດທະນາໂດຍສູນຄົ້ນ ຄວ້າກາເຟຂອງພາກລັດ ແລະ ເຫັນວ່າເປັນແນວພັນ ທີ່ທົນທານ ຫຼື ປັບຕົວໄດ້ດີ, ມີລົດຊາດທີ່ດີ ແລະ ໃຫ້ ຜົນຜະລິດສູງກວ່າ.

ກຸ່ມໄດ້ເຊັນຂໍ້ຕົກລົງ ໂດຍມີການລະບຸປະລິມານ,ລາຄາ ແລະ ເວລາທີ່ຈະສະໜອງກັບບໍລິສັດ. ແລະ ຖ້າບໍ່ສາ ມາດສະໜອງຕາມທີ່ໄດ້ຕົກລົງຊາວກະສິກອນຕ້ອງໄດ້ ແຈ້ງເຫດຜົນໃຫ້ທາງບໍລິສັດຊາບ. ມາຮອດປະຈຸບັນ ການຈັດຕັ້ງປະຕິບັດແມ່ນເປັນໄປໃນທາງບວກ, ຊາວ ກະສິກອນ ໄດ້ຮັບການຈ່າຍ ຕາມເວລາທີ່ກຳນົດ. ທ່ານ ສຸລິເຍດ ເວົ້າວ່າ: “ມີສັນຍາຈະດີກວ່າເພາະວ່າມັນມີ ການກຳນົດລາຄາຄ້ຳປະກັນໄວ້ ແລະ ບໍລິສັດຈະຈ່າຍ ຫຼາຍຂຶ້ນຕາມການເພີ່ມຂຶ້ນຂອງລາຄາຕະຫຼາດ; ແຕ່ ຈະອີງໃສ່ລາຄາທີ່ກຳນົດໃນສັນຍານັ້ນຖ້າລາຄາຕະ ຫຼາດຫຼຸດລົງ,”. ທ່ານ ສຸລິເຍດ ຄິດວ່າ ເອທີຈີ ແລະ ກຸ່ມຊາວກະສິກອນມີການພັດທະນາຄວາມສຳພັນທີ່ດີ ເພາະວ່າ ເອທີຈີ ໄດ້ລົງທຶນທາງດ້ານເວລາເພື່ອມາ ພົບປະ, ປຶກສາຫາລື ແລະ ກິນຢູ່ກັບຊາວກະສິກອນ ແລະ ຍັງໃຫ້ລາຄາທີ່ດີ.

### *ການສັງເກດການ*

ໃນເບື້ອງຕົ້ນຊາວກະສິກອນ ແລະ ຜູ້ຊື້ຕ່າງປະເທດ ບໍ່ໄດ້ຮູ້ທ່າແຮງ, ກາລະໂອກາດຊຶ່ງກັນ ແລະ ກັນ. ຜູ້ຊື້ຊອກຫາຜະລິດຕະພັນທີ່ໄດ້ຕາມມາດຖານເງື່ອນ ໄຂ ແລະ ຈິງໃຈທີ່ຈະຈ່າຍໃນລາຄາທີ່ສູງ. ຊາວກະ ສິກອນມີຄວາມຈິງໃຈ, ມີຄວາມສາມາດທີ່ຈະຜະລິດ ຕາມເງື່ອນໄຂ ແລະ ລາຄາໃນຕະຫຼາດໂລກ. ທ່າແຮງ, ກາລະໂອກາດໄດ້ປະກົດຜົນເປັນຈິງໂດຍການຊ່ວຍເຫຼືອ ຂອງສະມາຄົມຜູ້ຜະລິດກາເຟ ແລະ ອົງການອ໊ອກສຟາມ, ຊຶ່ງເປັນສື່ກາງເຊື່ອມໂຍງກາລະໂອກາດນັ້ນໂດຍມີຄ່າ ສິ້ນເປືອງຕ່ຳ . ການຊ່ວຍເຫຼືອຂອງສະມາຄົມຜູ້ຜະລິດ ກາເຟ ແລະ ສະຫະກອນຜະລິດກາເຟເທວະດາແມ່ນ ໄດ້ຮັບເງິນຈາກຄ່າສະມາຊິກເພື່ອຈ່າຍສຳລັບຄ່າບໍລິ ຫານຕ່າງໆ. ສະມາຄົມຜູ້ຜະລິດກາເຟ ຮັບຜິດຊອບຄ່າ ໃຊ້ຈ່າຍຂອງຕົນເອງໂດຍສ່ວນໜຶ່ງແມ່ນຫັກເອົາຄ່າບໍລິ ຫານທີ່ ຊາວກະສິກອນຈ່າຍໃຫ້.

ຄ່າໃຊ້ຈ່າຍສຳລັບການປະສານງານ ຫຼື ການບໍລິການ ແລະ ການຊ່ວຍເຫຼືອຂອງກຸ່ມຜູ້ຜະລິດກາເຟແມ່ນຜູ້ຊື້ກາ ເຟຈາກປະເທດຍີ່ປຸ່ນເອທີຈີເປັນຜູ້ຮັບພິດຊອບ.ເຖິງ ແມ່ນວ່າສະມາຄົມຜູ້ຜະລິດກາເຟ ແລະ ສະຫະກອນ ຜະລິດກາເຟບໍ່ໄດ້ສະແຫວງຫາຜົນກຳໄລທາງດ້ານການ ເງິນ, ແຕ່ຜົນຕອບແທນສຳລັບອົງການຈັດຕັ້ງດັ່ງກ່າວ ແມ່ນບົດບາດທາງດ້ານສັງຄົມໂດຍສະເພາະແມ່ນການ ຫຼຸດຜ່ອນຄວາມທຸກຈົນ ແລະ ປັບປຸງຊີວິດການເປັນຢູ່.

ຖ້າບໍ່ໄດ້ຮັບຮູ້ເຖິງຜົນປະໂຫຍດນີ້ ຊາວກະສິກອນອາດ ບໍ່ໄດ້ສະຫຼະເວລາ ແລະ ຮ່ວມມືກັບອົງກອນດັ່ງກ່າວ. ໃນຂະນະດຽວກັນຊາວກະສິກອນສ່ວນໜຶ່ງອາດຄິດວ່າ ການຈ່າຍຄ່າສະມາຊິກ ແລະ ການບໍລິການໃຫ້ສະມາ ຄົມຜູ້ຜະລິດກາເຟ ແລະ ສະຫະກອນຜະລິດກາເຟເປັນ ວິທີການທີ່ສົມເຫດສົມຜົນເພາະນີ້ບໍ່ແມ່ນເພື່ອຜົນປະ ໂຫຍດທາງດ້ານການເງິນແຕ່ເພື່ອຮັບປະກັນຄວາມຍືນ ຍົງ. ສະນັ້ນ, ການຊ່ວຍເຫຼືອຂອງພາກສ່ວນປະສານງານ ກາງ ໂດຍສະເພາະວິສາຫະກິດເພື່ອສັງຄົມຍັງມີຄວາມ ຈຳເປັນຈົນກວ່າກຸ່ມຜູ້ຜະລິດຈະສາມາດຮັບຜິດຊອບ ໜ້າທີ່ນີ້ໄດ້.

ສະມາຄົມຜູ້ຜະລິດ ແລະ ສະຫະກອນຜະລິດກາເຟຊ່ວຍ ການຈັດຕັ້ງປະຕິບັດການຜະລິດແບບມີຂໍ້ຕົກລົງຢ່າງ ສຳເລັດຜົນດ້ວຍ ສອງ ວິທີທາງ ຄື: 1) ພວກເຂົາເອົາ ຊະນະອຸປະສັກ ເຊັ່ນວ່າ: ຂໍ້ມູນຂ່າວສານທີ່ບໍ່ພຽງພໍ; ຄວາມຫ່າງໄກ ແລະ ພາສາທີ່ຈະນຳຊາວກະສິກອນ ແລະ ຜູ້ຊື້ມາເຮັດວຽກຮ່ວມກັນ ແລະ ຊ່ວຍສ້າງ ຄວາມສຳພັນໂດຍການໃຫ້ບໍລິການທາງດ້ານເຕັກນິກ; 2) ບໍ່ຄືກັບພໍ່ຄ້າຄົນກາງ; ການເຮັດວຽກແມ່ນບໍ່ເພື່ອຜົນ ກຳໄລ ແລະ ເສີມສ້າງການແລກປ່ຽນລະຫວ່າງຜູ້ຊື້ ແລະ ຜູ້ຂາຍ, ຊຶ່ງຊ່ວຍຜູ້ຊື້ ແລະ ຜູ້ຂາຍສາມາດ ຊື້-ຂາຍ ໃນລາຄາທີ່ເໝາະສົມໂດຍບໍ່ມີການກຳນົດລາຄາ ໂດຍພໍ່ຄ້າຄົນກາງ. ການສະໜອງການບໍລິການໂດຍ ສະມາຄົມຜູ້ຜະລິດ ແລະ ສະຫະກອນຜະລິດກາເຟ ເຮັດໃຫ້ການຈັດຕັ້ງປະຕິບັດການຜະລິດແບບມີຂໍ້ຕົກ ລົງປະສົບຜົນສຳເລັດໄດ້ດ້ວຍການເຊື່ອມໂຍງຜູ້ ຜະລິດ ແລະ ຜູ້ຊື້ທີ່ໃຫ້ຄວາມສົນໃຈສູງຕໍ່ຄຸນຄ່າທີ່ທັງສອງຝ່າຍ ສະໜອງໃຫ້ກັນຊຶ່ງມັນສະແດງອອກໃນການໃຫ້ລາຄາ ທີ່ ສູງສຳລັບຜະລິດຕະພັນທີ່ມີຄຸນນະພາບ.

ຜົນກະທົບຈາກການຊ່ວຍເຫຼືອຂອງຜູ້ອຳນວຍຄວາມ

ສະດວກຂ້ອນຂ້າງຈະແຈ້ງ. ແຕ່ທີ່ຍັງບໍ່ຈະແຈ້ງແມ່ນຜົນກະທົບທີ່ຊາວກະສິກອນໄດ້ແບ່ງຂາຍຜົນຜະລິດໃຫ້ ຜູ້ລົງທຶນ-ຊຶ່ງມີຂໍ້ຕົກລົງຮ່ວມກັນ ແລະ ພໍ່ຄ້າທົ່ວໄປ. ຄຸນນະພາບເປັນປັດໃຈຫຼັກຊຶ່ງມີຜົນກະທົບຕໍ່ປະລິມານຜົນຜະລິດທີ່ຊາວກະສິກອນສາມາດຜະລິດສະໜອງໃຫ້ຜູ້ຊື້ພາຍໃຕ້ຂໍ້ຕົກລົງ.

ໂດຍອີງໃສ່ຄວາມອາດສາມາດຂອງການຜະລິດ, ຊາວກະສິກອນຕ້ອງໄດ້ລະວັງການໃຫ້ຄຳສັນຍາວ່າຈະສະໜອງຜົນຜະລິດເກີນຄວາມສາມາດຂອງຕົນທີ່ຜະລິດໄດ້ເພາະວ່າອາດມີຄວາມສ່ຽງ ແລະ ຖ້າບໍ່ປະຕິບັດໄດ້ຈະຖືກໂຈະການສົ່ງຂາຍໃຫ້ກຸ່ມໃນ 1 ລະດູການ. ຊາວກະສິກອນອາດມີຂໍ້ຜູກມັດຄວາມສຳພັນກັບພໍ່ຄ້າຜູ້ທີ່ສະໜອງສິນເຊື່ອໃຫ້ແຕ່ຊາວກະສິກອນຈຳເປັນທີ່ຕ້ອງໄດ້ຮັກສາຄວາມສຳພັນກັບພໍ່ຄ້າອື່ນທີ່ຮັບຮູ້ ແລະ ເຊື່ອຖືຊາວກະສິກອນເຖິງແມ່ນວ່າເຂົາເຈົ້າອາດມີສິນເຊື່ອຈຳກັດ. ໂດຍລວມແລ້ວການໃຫ້ທຶນກູ້ຢືມຕໍ່ຊາວກະສິກອນແມ່ນຍັງຈຳກັດຊຶ່ງສາມາດວັດແທກໄດ້ຈາກຄວາມຕ້ອງການທີ່ເພີ່ມຂຶ້ນເກີນຄວາມອາດສາມາດໃນການສະໜອງສິນເຊື່ອ. ພໍ່ຄ້າສາມາດຄວບຄຸມການປ່ອຍສິນເຊື່ອໂດຍການເພີ່ມອັດຕາດອກເບ້ຍຂຶ້ນ. ເຖິງແນວໃດກໍ່ຕາມ,ໃນຫຼາຍກໍລະນີ,ຄວາມສຳພັນທີ່ດີຍັງເປັນຈຸດໄດ້ປຽບຊ່ວຍສາມາດເຂົ້າເຖິງສິນເຊື່ອໄດ້. ຖ້າ ຊາວກະສິກອນສາມາດ ເຂົ້າເຖິງສິນເຊື່ອທີ່ໜ້າສົນໃຈ ແລະ ໜ້າເຊື່ອຖື ຈາກແຫຼ່ງ ອື່ນ ນອກຈາກ ພໍ່ຄ້ານັ້ນ ພວກເຂົາອາດສາມາດ ປັບການສະໜອງຜະລິດຕະພັນສຳລັບພໍ່ຄ້າ ແລະ ຜູ້ລົງທຶນໂດຍຖືເອົາຜູ້ລົງທຶນເປັນບູລິມະສິດ. ທາງໜຶ່ງທີ່ຊາວກະສິກອນສາມາດຫຼຸດຜ່ອນການກູ້ຢືມສິນເຊື່ອໄດ້ຄື: ອາໃສ ພໍ່ຄ້າ ຫຼື ລົງທຶນຈ່າຍເງິນສ່ວນໃດສ່ວນໜຶ່ງລ່ວງໜ້າ ຫຼື ໃນຕົ້ນລະດູການແຕ່ໃນກໍລະນີມັນອາດເຮັດໃຫ້ຜູ້ລົງທຶນພົບກັບຄວາມສ່ຽງເພາະວ່າຊາວກະສິກອນສ່ວນໜຶ່ງອາດສາມາດການສະໜອງປະລິມານຜົນຜະລິດຫຼາຍຂຶ້ນ ແລະ ມີການປັບປຸງຄຸນນະພາບ ຫຼື ໄດ້ມາດຕະຖານດີຂຶ້ນນັ້ນ; ໃນທາງກົງກັນຂ້າມ, ຊາວກະສິກອນບໍ່ໄດ້ປະຕິບັດຕາມສັນຍາທີ່ຕົກລົງກັນໄວ້.

ໃນກໍລະນີນີ້ມັນອາດເປັນຍ້ອນຊາວກະສິກອນໄດ້ຮັບຜົນປະໂຫຍດຈາກການແຂ່ງຂັນລະຫວ່າງພໍ່ຄ້າ ແລະ ຜູ້ລົງທຶນທີ່ມີຂໍ້ຕົກລົງການຜະລິດກັບຊາວກະສິກອນ. ເຖິງຢ່າງນັ້ນກໍ່ຕາມ, ໃນສະພາບທີ່ຜູ້ຊື້ຜູ້ມີພຽງພໍ່ຄ້າມັນອາດອາດເປັນສິ່ງກະຕຸ້ນທາງດ້ານເສດຖະກິດເຮັດໃຫ້ຊາວກະສິກອນຍາກເຮັດການຜະລິດເປັນສິນຄ້າແບບມີຂໍ້ຕົກລົງກັບຜູ້ລົງທຶນ. ແນວໃດກໍ່ຕາມ, ການຕັດສິນໃຈຂອງຊາວກະສິກອນ ແລະ ຮ່ວມເຮັດການຜະລິດກັບໃຜຈະດີກວ່າກັນອາດມີຄວາມຈຳເປັນທີ່ຕ້ອງໄດ້ສຶກສາເພີ່ມເຕີມ.

## ສະຫຼຸບ

- ມັນມີໂອກາດສຳລັບ ການຜະລິດ - ການຄ້າ ທີ່ຍຸດຕິທຳ ຊຶ່ງໃຫ້ລາຄາສູງ ແລະ ສາມາດຊ່ວຍຜູ້ທີ່ຜະລິດທີ່ສາມາດຜະລິດໃນຈຳນວນໜ້ອຍແຕ່ມີຄຸນນະພາບ
- ຜູ້ຊື້ ທີ່ວາງລາຄາຄໍ້າປະກັນຜະລິດຕະພັນທີ່ໄດ້ຄຸນນະພາບຈະເປັນເງື່ອນໄຂທີ່ດີ ສຳລັບການພັດທະນາຄວາມສຳພັນໃນການຜະລິດ
- ພາກສ່ວນທີ່ສາມສາມາດອຳນວຍຄວາມສະດວກການຕໍ່ລອງລະຫວ່າງຝ່າຍຕ່າງໆໂດຍສະເພາະໃນກໍລະນີທີ່ຝ່າຍຕ່າງໆບໍ່ສາມາດເອກະພາບກັນໄດ້ຍ້ອນຂາດຂໍ້ມູນກ່ຽວກັບການຕະຫຼາດ ແລະ ການຜະລິດອື່ນໆ
- ການເຂົ້າເຖິງກາລະໂອກາດທາງດ້ານການຕະຫຼາດອາດຈະຮຽກຮ້ອງໃຫ້ມີການຊ່ວຍເຫຼືອທາງດ້ານເຕັກນິກໂດຍສະເພາະລະບົບການຜະລິດ ແລະ ການຄ້າທີ່ມີລະບົບການຍັ້ງຢືນ
- ການຈັດຕັ້ງປະຕິບັດຂໍ້ຕົກລົງທີ່ສຳເລັດຜົນ ອາດຈະເນື່ອງຈາກສິ່ງກະຕຸກຊຸກຍູ້ທາງເສດຖະກິດທາງກົງ ແລະ ທາງອ້ອມໂດຍສະເພາະແມ່ນການຮັກສາການແຂ່ງຂັນລະຫວ່າງພໍ່ຄ້າ ແລະ ຜູ້ລົງທຶນ
- ການເຂົ້າເຖິງກາລະໂອກາດເສດຖະກິດອາດຈະຮຽກຮ້ອງໃຫ້ມີການຈັດຕັ້ງປະຕິບັດທີ່ເອົາຈິງເອົາຈັງ – ກຳນົດຈຸດຍືນທີ່ເໝາະສົມສາມາດປັບປຸງຄຸນນະພາບຂອງຕະຫຼາດ ແລະ ກາລະໂອກາດໄດ້
- ກອບ, ລະດັບ ແລະ ຜົນກະທົບຂອງການຜະລິດແບບຂໍ້ຕົກລົງສ່ວນໜຶ່ງແມ່ນເນື່ອງຈາກລະບົບສິນເຊື່ອທີ່ມີ.

## ປັດໃຈທີ່ພາໃຫ້ປະສົບຜົນສຳເລັດ

1. ຜູ້ອຳນວຍຄວາມສະດວກ ຊ່ວຍຊອກຫາຕະຫຼາດທີ່ເໝາະສົມສຳລັບຊາວກະສິກອນ; ຜູ້ຊື້ ທີ່ໃຫ້ມູນຄ່າຜະລິດຕະພັນສູງ ສ້າງສິ່ງຈູງໃຈ ສຳລັບສອງຝ່າຍທີ່ຈະເຮັດສຳເລັດການຜະລິດແບບມີຂໍ້ຕົກລົງຮ່ວມກັນ
2. ຝ່າຍຕ່າງໆສະຫຼະເວລາເພື່ອພັດທະນາຄວາມສຳພັນ ແລະ ເສີມສ້າງຄວາມເຂົ້າໃຈຊຶ່ງກັນ ແລະ ກັນ
3. ຜູ້ຊື້ທີ່ໃຫ້ຄຸນຄ່າຄວາມສຳຄັນຂອງຜະລິດຕະພັນທີ່ມີຄຸນນະພາບ ແລະ ສົນໃຈທີ່ຈະລົງທຶນໃນການພັດທະນາຜະລິດຕະພັນທີ່ມີຄຸນນະພາບ
4. ລະບົບການຜະລິດທີ່ມີການຍັ້ງຢືນສາມາດຮັບປະກັນຄຸນນະພາບ ແລະ ດຶງດູດລາຄາທີ່ສູງໄດ້

**ຄຳຖາມ**

ກ. ຖ້າຜູ້ອຳນວຍຄວາມສະດວກຖອດຕົວອອກ; ການຖ່າຍທອດຄວາມສາມາດ ແລະ ການຊ່ວຍເຫຼືອໃຫ້ຜູ້ຜະລິດ ແລະ ຜູ້ຊື້ສາມາດປະຕິບັດໄດ້ໂດຍຜ່ານການຝຶກອົບຮົມບໍ?

ຂ. ເຮົາສາມາດຈັດຕັ້ງຜູ້ອຳນວຍຄວາມສະດວກທີ່ມີປະສິດທິພາບເພື່ອຊ່ວຍເມືອງ ແລະ ຜະລິດຕະພັນອື່ນໄດ້ແນວໃດໂດຍອີງໃສ່ກາລະໂອກາດທີ່ມີໃນເຂດນັ້ນໆ?

ຄ. ຜູ້ອຳນວຍຄວາມສະດວກທີ່ສະແຫວງຫາຜົນກຳໄລທາງດ້ານການເງິນຄວນຈະມີບົດບາດຫຍັງ?

ງ. ໂດຍອີງໃສ່ຄວາມສາມາດຕົວຈິງ; ຫ້ອງການກະສິກຳ-ປ່າໄມ້ເມືອງ ຫຼື ອົງການຈັດຕັ້ງອື່ນໆຂອງພາກລັດສາມາດເຮັດຫຍັງໄດ້ແດ່ສຳລັບຜູ້ອຳນວຍຄວາມສະດວກຕ່າງປະເທດ?




ປ້າຍໂຄສະນາຂອງສະມາຄົມກາເຟເທວະດາ

## 8.2. ກໍລະນີ 2. ການໃຫ້ລາຄາທີ່ດີນ: ແຮງຈູງໃຈ, ຄວາມເຊື່ອຖື ແລະ ສິ່ງກະຕຸກຊຸກຍູ້

**ເມືອງ ປາກຊັນ, ແຂວງບໍລິຄຳໄຊ**



ສວນສາລີພາຍໃຕ້ຂໍ້ຕົກລົງການຜະລິດໄລຍະຍາວ

ການຄັດເລືອກຊາວກະສິກອນ ແລະ ສະໜອງທີດິນໃຫ້ກັບຊາວກະສິກອນທີ່ມີເນື້ອທີດິນຈຳກັດອາດເຮັດໃຫ້ການດຳເນີນງານຂອງຊາວກະສິກອນມີປະສິດທິພາບດີຂື້ນກວ່າເກົ່າ

### ປະສົບການ

ໃນແຂວງບໍລິຄຳໄຊ, ລັດວິສາຫະກິດການຄ້າສະບຽງອາຫານ ຫຼື SCFSE ໄດ້ເຮັດການຜະລິດມັນຕົ້ນ ແລະ ສາລີນັບຕັ້ງແຕ່ລຽບຕາມແຄມແມ່ນ້ຳຈິນເຖິງເຂດພູສູງໂດຍມີຂໍ້ຕົກລົງກັບຊາວກະສິກອນ. ທີ່ຫ້ອງການລັດວິສາຫະກິດທີ່ຕັ້ງຢູ່ໃກ້ກັບທາງເລກທີ 13ໃຕ້, ທ່ານ ວຽງສົງຄຳພາ ຮອງອຳນວຍການລັດວິສາຫະກິດ ແລະ ທ່ານ ແກ້ວວິເສດ ສຸລິນມາສິນ, ຫົວໜ້າໜ່ວຍງານສົ່ງເສີມຂອງລັດວິສາຫະກິດ ແຂວງບໍລິຄຳໄຊ ໄດ້ອະທິບາຍກ່ຽວກັບການຜະລິດແບບມີຂໍ້ຕົກລົງຂອງລັດວິສາຫະກິດກັບຊາວກະສິກອນນັບຕັ້ງແຕ່ປີ 2008 ເປັນຕົ້ນມາ.

ທ່ານ ວຽງເວົ້າ ວ່າ: " ກ່ອນ ປີ 2008 ບໍລິສັດໄດ້ຊື້ຜົນຜະລິດຈາກຊາວກະສິກອນແຕ່ເນື່ອງຈາກປະລິມານຜົນຜະລິດບໍ່ພຽງພໍສຳລັບການສົ່ງອອກ; ສະນັ້ນ,ເພື່ອເພີ່ມປະລິມານຜົນຜະລິດບໍລິສັດຈຶ່ງໄດ້ສົ່ງເສີມການຜະລິດ

ໂດຍໄດ້ເຮັດສັນຍາສະໜອງປັດໃຈການຜະລິດ ແລະ ສະໜັບສະໜູນການຜະລິດ, "ນະໂຍບາຍຂອງລັດທີ່ສົ່ງເສີມການຜະລິດເປັນສິນຄ້າເພື່ອຫຼຸດຜ່ອນຄວາມທຸກຈົນຂອງຊາວກະສິກອນແມ່ນອີກປັດໃຈໜຶ່ງທີ່ເຮັດໃຫ້ລັດວິສາຫະກິດກ້າວສູ່ການຜະລິດແບບມີຂໍ້ຕົກລົງ. ທ່ານ ແກ້ວວິເສດເສີມອີກວ່າ: "ເຫດຜົນໜຶ່ງອີກສຳລັບການເຮັດສັນຍາແມ່ນເພື່ອແກ້ໄຂ 3 ບັນຫາທີ່ລັດຖະບານໄດ້ຍົກຂຶ້ນມາຄື: ການເຂົ້າເຖິງແຫຼ່ງທຶນ, ປັດໃຈການຜະລິດ ແລະ ຕະຫຼາດໃນ,".

ມັນຕົ້ນ ແລະ ສາລີທີ່ລັດວິສາຫະກິດເກັບຊື້ແມ່ນຂາຍຕໍ່ໃຫ້ບໍລິສັດລາວອິນດູຈີນ, ຊີພີ ລາວ ແລະ ຮົ່ງງາສຳລັບສົ່ງອອກໄປຍັງປະເທດໄທ, ຫວຽດນາມ ແລະ ບາງທີອາດລວມທັງ ສປ ຈີນ. ໂດຍອີງໃສ່ໄລຍະເວລາຂອງສັນຍາທີ່ວິສາຫະກິດໄດ້ເຮັດກັບຜູ້ຊື້; ວິສາຫະກິດໄດ້ເຮັດຂໍ້ຕົກລົງກ່ຽວກັບການສະໜອງແຮງງານ ແລະ ທີ່ດິນຂອງຊາວກະສິກອນເປັນໄລຍະເວລາ 5 ປີ. ອີງຕາມຂໍ້ຕົກລົງຖ້າຫາກຊາວກະສິກອນຕ້ອງການຖອດຕົວກ່ອນບໍລິສັດມີສິດທີ່ຈະນຳເອົາແຮງງານຂອງຕົນເຂົ້າມາເພື່ອນຳໃຊ້ທີ່ດິນຂອງຊາວກະສິກອນທີ່ລາອອກໄປຈົນກວ່າໝົດກຳນົດຂອງສັນຍາ.ນອກຈາກປັດໃຈການຜະລິດ,ທາງບໍລິສັດຍັງຈະຊອກທີ່ດິນສຳລັບຊາວກະສິກອນຜູ້ທີ່ບໍ່ມີທີ່ດິນພຽງພໍທີ່ຈະທຳການຜະລິດຕາມຄວາມເນາະສົມ. ບໍລິສັດໄດ້ກູ້ຢືມເງິນຈາກ ທະນາຄານເພື່ອສະໜັບສະໜູນທາງດ້ານການເງິນສຳລັບການຜະລິດແບບມີຂໍ້ຕົກລົງກັບຊາວກະສິກອນ.

ທ່ານ ວຽງ ແລະ ທ່ານ ແກ້ວວິເສດຄິດວ່າ: ການຜະລິດແບບມີຂໍ້ຕົກລົງທີ່ລັດວິສາຫະກິດການຄ້າສະບຽງອາຫານນຳໃຊ້ແມ່ນໄດ້ຮັບຜົນສຳເລັດດ້ວຍຫຼາຍເຫດຜົນເຊັ່ນ: ການລົງທຶນດ້ານເວລາເພື່ອພັດທະນາຄວາມສຳພັນ ແລະ ເຂົ້າໃຈກັບຊາວກະສິກອນ ຕົວຢ່າງ: ຢ່າງໜ້ອຍໄດ້ມີການປະຊຸມຮ່ວມກັບຊາວກະສິກອນ 3 ຄັ້ງກ່ອນຈະມີການເຊັນຂໍ້ຕົກລົງຮ່ວມກັບລະຫວ່າງຊາວກະສິກອນກັບກຸ່ມ ແລະ ກຸ່ມກັບລັດວິສາຫະກິດ. ແນວໃດກໍ່ຕາມ, ບໍ່ແມ່ນຊາວກະສິກອນທັງໝົດໃຫ້ຄວາມສົນໃຈການຜະລິດແບບມີຂໍ້ຕົກລົງ. ທ່ານ ວຽງເວົ້າວ່າ: "ພວກເຮົາອີງໃສ່ຂໍ້ແນະນຳ, ຂໍ້ຄິດເຫັນຂອງການຈັດຕັ້ງບ້ານເພື່ອຄັດເລືອກວ່າພວກເຮົາຄວນເຮັດວຽກຮ່ວມກັບຄອບຄົວໃດ,". ທ່ານ ແກ້ວວິເສດເສີມອີກວ່າ: "ພວກເຮົາຍັງພິຈາລະນາສະມາຊິກຂອງຄອບຄົວນຳອີກ, ຖ້າເຂົາເຈົ້າມີແຮງງານພຽງພໍ, ແລະ ຖ້າເຂົາເຈົ້າຫາກມີອາການຕິດເຫຼົ້າ ແລະ ຢາເສບຕິດພວກເຮົາຈະບໍ່ເຮັດວຽກນຳ". ເຖິງຢ່າງນັ້ນກໍ່ຕາມມັນກໍ່ຍັງຫຍຸ້ງຍາກບາງຢ່າງສະນັ້ນ, ທ່ານ ວຽງ ຈຶ່ງໄດ້ແນະນຳວ່າ: "ຕ້ອງໄດ້ເວົ້າຈະແຈ້ງເຖິງຜົນປະໂຫຍດທີ່ສອງຝ່າຍຈະໄດ້ຮັບ, ເພາະວ່າຖ້າມີບັນຫາເກີດຂຶ້ນຈະເຮັດໃຫ້ສັບສົນຫຼາຍ ແລະ ການແກ້ໄຂແມ່ນຕ້ອງໄດ້ຄ່ອຍເປັນຄ່ອຍໄປ ແລະ ເຮັດຕາມແຕ່ລະຂັ້ນຕອນ,".

**ການສັງເກດການ**

ມີຫຼາຍປັດໃຈທີ່ພາໃຫ້ເກີດຜົນສຳເລັດ: 1) ການຖືກຄັດເລືອກຊາວກະສິກອນຜູ້ທີ່ມີຄວາມສົນໃຈ ແລະ ໜ້າເຊື່ອຖືເຂົ້າຮ່ວມໃນການຜະລິດແບບມີຂໍ້ຕົກລົງໂດຍຜ່ານການເຫັນດີຂອງອົງການຈັດຕັ້ງບ້ານລວມທັງການປະເມີນໜ້າວຽກ, ຄວາມອາດສາມາດ ແລະ ການເສບຕິດສິ່ງມຶນເມົາ ຂອງເພື່ອນສະມາຊິກດ້ວຍກັນ. 2) ລັດວິສາຫະກິດການຄ້າສະບຽງອາຫານພະຍາຍາມຊອກຫາທີ່ດິນສຳລັບຊາວກະສິກອນມີທີ່ດິນບໍ່ພຽງພໍ ໂດຍສະເພາະຊຸມຊົນທີ່ທຸກຍາກເພື່ອເປັນການຊຸກຍູ້ເຂົາເຈົ້າສາມາດມີສ່ວນຮ່ວມຕາມກົນໄກການສົ່ງເສີມການມີສ່ວນຮ່ວມ. 3) ລັດວິສາຫະກິດການຄ້າສະບຽງອາຫານຈັດກອງປະຊຸມຮ່ວມກັບຊາວກະສິກອນຢ່າງໜ້ອຍ 3 ຄັ້ງເພື່ອອະທິບາຍ ແລະ ປຶກສາຫາລືບັນດາເງື່ອນໄຂຕ່າງໆໃນຂໍ້ຕົກລົງ. ນອກນັ້ນລັດວິສາຫະກິດການຄ້າສະບຽງອາຫານຍັງເຫັນວ່າໄລຍະເວລາການມີສ່ວນຮ່ວມຂອງຊາວກະສິກອນແມ່ນອີກປັດໃຈໜຶ່ງທີ່ຊ່ວຍໃຫ້ປະສົບຜົນສຳເລັດ. ເຖິງແນວໃດກໍ່ຕາມ, ທ່ານ ວຽງເວົ້າວ່າລັດວິສາຫະກິດຍັງພົບກັບບັນຫາອື່ນ ເຊັ່ນ: ຄວາມເຂົ້າໃຈຜິດລະຫວ່າງລັດວິສາຫະກິດ ແລະ ຊາວກະສິກອນ; ມາດຕະການລົງໂທດ ທາງດ້ານບໍລິຫານ ຫຼື ເສດຖະກິດທີ່ອອກແບບມາເພື່ອບັງຄັບໃຊ້ໃນຂໍ້ຕົກລົງບໍ່ມີປະສິດທິພາບ ເພາະວ່າຊາວກະສິກອນຍັງທ້າທາຍຕໍ່ຂໍ້ຕົກລົງຖ້າເຂົາເຈົ້າບໍ່ມັກເງື່ອນໄຂທີ່ສະເໜີທີ່ອາດມີຜົນຈາກສະພາບການທີ່ມີການປ່ຽນແປງຕະຫຼອດເວລາ.

ລັດວິສາຫະກິດການຄ້າສະບຽງອາຫານໄດ້ເຮັດຂໍ້ຕົກລົງກັບຊາວກະສິກອນ ດ້ວຍ 2 ເຫດຜົນ ຄື: 1) ເພື່ອຜະລິດ ແລະ ເພີ່ມຂຶ້ນການສະໜອງໃຫ້ລູກຄ້າ. 2), ສະໜັບສະໜູນ ແລະ ຈັດຕັ້ງປະຕິບັດນະໂຍບາຍຂອງລັດ. ລັດວິສາຫະກິດການຄ້າສະບຽງອາຫານນຳໃຊ້ຂໍ້ຕົກລົງເພື່ອຂະຫຍາຍການຄວບຄຸມການຜະລິດ ແລະ ເທັກໂນໂລຊີທີ່ຊາວກະສິກອນນຳໃຊ້ເພື່ອເພີ່ມການສະໜອງຜະລິດຕະພັນສິນຄ້າໃຫ້ຫຼາຍຂຶ້ນຕາມທ່າອ່ຽງຄວາມຕ້ອງການໃນຂົງເຂດ ແລະ ໃນໂລກ. ຖ້າຊາວກະສິກອນຖອນຕົວອອກຈາກການຜະລິດ, ລັດວິສາຫະກິດການຄ້າສະບຽງອາຫານສາມາດນຳໃຊ້ທີ່ດິນຂອງເຂົາເຈົ້າເພາະວ່າທີ່ດິນເປັນໝາກຫົວໃຈຂອງການຜະລິດ ແລະ ມີຄວາມຈຳເປັນຫຼາຍກວ່າແຮງງານ ແລະ ຄວາມສາມາດ

ຂອງຊາວກະສິກອນ. ແນວໃດກໍ່ຕາມ, ມັນຍັງເປັນຄຳຖາມຢູ່ວ່າສິ່ງນີ້ໝາຍວ່າມັນມີຄວາມຕ້ອງການສຳລັບການສຳປະທານທີ່ດິນເພື່ອປູກໄມ້ຫຼາຍກວ່າການຜະລິດແບບມີຂໍ້ຕົກລົງກັບຊາວກະສິກອນທີ່ມັນມີທີ່ດິນ ຫຼື ບໍ?; ເຖິງວ່າຮູບແບບຂອງການຜະລິດດັ່ງກ່າວຍັງສົນທະນາ ແລະ ບໍ່ສາມາດສະຫຼຸບໄດ້ແຕ່ທັງສອງກໍລະນີແມ່ນເກີດຂຶ້ນແລ້ວ ຢູ່ໃນ ສປປ ລາວ ຕົວຢ່າງ: ໃນ ປີ 2007 ບໍລິສັດມິດລາວຊຶ່ງໄດ້ຮັບການຊ່ວຍເຫຼືອທາງດ້ານການເງິນ ຫຼື ຮ່ວມງານກັບບໍລິສັດອ້ອຍປະເທດ? ແລະ ຕັ້ງຊື່ເປັນບໍລິສັດມິດຜົນຊຶ່ງເຂົ້າມາລາວໂດຍຫວັງວ່າຈະພັດທະນາສວນປ່າປູກ; ໃນຄະນະດຽວກັນບໍລິສັດໄຊໂຍດັບໂບເອທີ່ໄດ້ຮັບການສະໜັບສະໜູນຈາກບໍລິສັດຜະລິດເຈ້ຍປະເທດໄທ, ຊຶ່ງເປັນບໍລິສັດນຳໜ້າທາງດ້ານການເຮັດກະສິກຳ-ປ່າໄມ້ໄດ້ເຮັດວຽກຮ່ວມກັບປະຊາຊົນຫຼາຍກວ່າຄວາມຕ້ອງການທີ່ດິນໂດຍກົງ (Fullbrook 2007, 33, 38).

ການສຳປະທານໃນທົດສະວັດທີ່ຜ່ານມາມີການຂະຫຍາຍຕົວຢ່າງໄວວາແຕ່ກໍ່ຍັງເປັນຂໍ້ສົງໃສສຳລັບການອະທິບາຍ. ເຫດຜົນທີ່ລັດວິສາຫະກິດການຄ້າສະບຽງອາຫານເຮັດການຜະລິດແບບມີຂໍ້ຕົກລົງກັບຊາວກະສິກອນອາດຈະບໍ່ແມ່ນເພື່ອການຄວບຄຸມທີ່ດິນໂດຍກົງກໍ່ເປັນໄປໄດ້. ປັດໃຈຫຼັກໜຶ່ງທີ່ນຳໄປສູ່ການຜະລິດແບບມີຂໍ້ຕົກລົງແມ່ນການຈັດຕັ້ງປະຕິບັດນະໂຍບາຍຂອງພາກລັດ. ຖ້າເປັນເຊັ່ນນັ້ນອາດມີເຫດຜົນທີ່ວ່າຈຸດປະສົງຫຼັກຂອງລັດວິສາຫະກິດການຄ້າສະບຽງອາຫານທີ່ເຮັດການຜະລິດແບບມີຂໍ້ຕົກລົງກັບຊາວກະສິກອນເພາະວ່າມັນເປັນທາງເລືອກໜຶ່ງເໝາະສົມສຳລັບການຜະລິດເປັນສິນຄ້າ.

ມັນຍັງບໍ່ຈະແຈ້ງວ່າລັດວິສາຫະກິດການຄ້າສະບຽງອາຫານໄດ້ຮັບການສະໜັບສະໜູນທາງດ້ານການເງິນ ຫຼື ໄດ້ຮັບສິດທິພິເສດອື່ນໆ ເຊັ່ນ: ສິນເຊື່ອທີ່ເໝາະສົມຈາກທະນາຄານຂອງລັດ ຫຼື ບໍ ແລະ ບໍ່ຮູ້ວ່າລັດວິສາຫະກິດນີ້ຕ້ອງໄດ້ສ້າງຜົນກຳໄລ ແລະ ຮັບຜິດຊອບດ້ວຍຕົນເອງບໍຖ້າຫາກທຸລະກິດໄດ້ຮັບຄວາມເສຍຫາຍ. ຖ້າລັດວິສາຫະກິດການຄ້າສະບຽງອາຫານບໍ່ໄດ້ບໍລິຫານແບບການຄ້າຢ່າງເຕັມຮູບແບບ, ຊຶ່ງມັນບໍ່ແມ່ນເລື່ອງແປກສຳລັບລະບົບລັດວິສາຫະກິດໂດຍສະເພາະໃນຍຸກເສດຖະກິດຂ້າມຜ່ານ; ການຕັດສິນໃຈໃນການເຮັດການຜະລິດແບບມີຂໍ້ຕົກລົງກັບຊາວກະສິກອນອາດຈະບໍ່ແມ່ນການເຮັດການຄ້າຢ່າງແທ້ຈິງ ແລະ ໃນລັກສະນະນີ້ມັນອາດຈະເຮັດທຸລະກິດກັບຊາວກະສິກອນບໍ່ມີຄວາມຍືນຍົງ ຫຼື ການດຳເນີນການສ່ວນໜຶ່ງຍັງໄດ້ຮັບການສະໜັບສະໜູນທາງດ້ານການເງິນຈາກລັດໂດຍນຳໃຊ້ກົນໄກທາງດ້ານການຄ້າສ່ວນໜຶ່ງ ຂອງລັດວິສາຫະກິດ . ຖ້າການສັນນິຖານ ແລະ ອະທິບາຍທີ່ຜ່ານມາຖືກຕ້ອງໃນກໍລະນີນີ້ການຜະລິດເປັນສິນຄ້າແບບມີສັນຍາກັບຊາວກະສິກອນອາດຈະບໍ່ຍືນຍົງ ຫຼື ຜົນຂະຫຍາຍໄດ້. ສະນັ້ນ, ອີງປະກອບຫຼືປັດໃຈທີ່ພາໃຫ້ເກີດຜົນສຳເລັດໄດ້ນັ້ນບໍ່ສາມາດສະຫຼຸບໄດ້ທັງໝົດ.

ມັນບໍ່ແມ່ນເລື່ອງແປກທີ່ລັດວິສາຫະກິດມີບົດບາດ ແລະ ຄວາມສົນໃຈດັ່ງກໍລະນີທີ່ໄດ້ກ່າວມາ. ໃນການເຮັດສັນຍາ; ໂດຍທົ່ວໄປແລ້ວ, ຊາວກະສິກອນຕ້ອງການການເຮັດສັນຍາ ແລະ ມີການຕົກລົງກັນໃໝ່ໃນແຕ່ລະລະດູການເຖິງແມ່ນວ່າການລົງທຶນຈະກວມເອົາຫຼາຍປີ. ສ່ວນລັດວິສາຫະກິດການຄ້າສະບຽງອາຫານແມ່ນຕ້ອງການເຮັດສັນຍາໃນຊ່ວງເວລາ 5 ປີ ເພາະເຫັນວ່າມັນອາດແທດກັບຄວາມເປັນຈິງເພາະເປັນການລົງທຶນຂະໜາດໃຫຍ່ ແລະ ໃຊ້ກຳລັງຊັບຫຼາຍ. ແນວໃດກໍ່ຕາມ, ຄວາມຕ້ອງການຂອງຊາວກະສິກອນກ່ຽວກັບໄລຍະຂອງສັນຍາອາດຈຳເປັນທີ່ຕ້ອງໄດ້ມີການສຶກສາເພີ່ມເຕີມ. ຍ້ອນຄວາມສ່ຽງ, ປະສົບການ ແລະ ຮັບຮູ້ບັນຫາກ່ຽວກັບການຜະລິດແບບມີຂໍ້ຕົກລົງທີ່ຜ່ານມາໂດຍທົ່ວໄປຊາວກະສິກອນຈະລະມັດລະວັງກ່ຽວກັບການຕໍ່ສັນຍາ, ຊຶ່ງມັນຂຶ້ນກັບເງື່ອນໄຂ, ແຕ່ເຂົາເຈົ້າອາດຮູ້ສຶກໝັ້ນໃຈເມື່ອຜູ້ລົງທຶນແມ່ນລັດວິສາຫະກິດຊຶ່ງບໍ່ສາມາດຍົກເລີກ ແລະ ໜີຂ້າມຊາຍແດນ. ຊາວກະສິກອນ ແລະ ຜູ້ລົງທຶນຜູ້ທີ່ສ້າງຄວາມສຳພັນຢ່າງຕໍ່ເນື່ອງ ແລະ ເຮັດສັນຍາເປັນແຕ່ລະລະດູການນັ້ນສະແດງວ່າເຂົາເຈົ້າຕ້ອງການຄວາມຍືນຢຸ່ນ ແລະ ສາມາດຫຼີກລ່ຽງຄວາມສັບສົນອື່ນໆທີ່ອາດເກີດຂຶ້ນເນື່ອງຈາກການປ່ຽນແປງຊຶ່ງອາດສາມາດທຳລາຍຄວາມສຳພັນ. ຄວາມຍືດຢຸ່ນນັ້ນອາດຍ້ອນວ່າທຸລະກິດຍັງຢູ່ໃນຂັ້ນເລີ່ມຕົ້ນ ແລະ ຍັງມີການປ່ຽນແປງຫຼາຍຢ່າງໃນທຸລະກິດການຄ້າກະສິກຳຂະໜາດນ້ອຍ. ແຕ່ເມື່ອທຸລະກິດຫາກໄປໄດ້ດີ ແລະ ໝັ້ນທ່ຽງ; ການຈັດຕັ້ງປະຕິບັດ ແລະ ໂຄງສ້າງ ທຸລະກິດການຄ້າກະສິກຳຂະໜາດນ້ອຍອາດສ້າງຄວາມເຊື່ອໝັ້ນສຳລັບການສ້າງສັນຍາໃນໄລຍະຍາວ.

### ສະຫຼຸບ

- ການສະຫຼະເວລາເພື່ອສ້າງຄວາມສຳພັນ ແລະ ເຂົ້າໃຈຊາວກະສິກອນມີຄວາມສຳຄັນຫຼາຍສຳລັບ ຜູ້ລົງທຶນ
- ເພື່ອຢາກບັນລຸບໍລິມາດຜົນຜະລິດທີ່ຄາດໄວ້, ການຄັດເລືອກຊາວກະສິກອນສິ່ງສຳຄັນຕ້ອງໄດ້ເບິ່ງຜູ້ທີ່ມີຄວາມໜ້າເຊື່ອຖືສູງ
- ການສະໜອງທີ່ດິນອາດເປັນການໃຫ້ສິ່ງກະຕຸກຊຸກຍູ້ສຳລັບການມີສ່ວນຮ່ວມຂອງຊາວກະສິກອນ ແລະ ຈັດຕັ້ງປະຕິບັດຂໍ້ຕົກລົງຢ່າງສຳເລັດຜົນ
- ລັດວິສາຫະກິດອາດນຳໃຊ້ການຜະລິດແບບມີຂໍ້ຕົກລົງເພື່ອຕອບສະໜອງຈຸດປະສົງທາງດ້ານການຄ້າ ແລະ ການຈັດຕັ້ງປະຕິບັດນະໂຍບາຍຂອງລັດ
- ສຳລັບຜູ້ລົງທຶນ, ການເຂົ້າເຖິງ ແລະ ຄວບຄຸມທີ່ດິນອາດຈະມີຄວາມສຳຄັນຫຼາຍກວ່າແຮງງານ ແລະ ເຕັກນິກຄວາມຮູ້ຂອງຊາວກະສິກອນ

### ປັດໃຈທີ່ພາໃຫ້ເກີດຜົນສຳເລັດ

1. ການລົງທຶນທາງດ້ານເວລາເພື່ອພັດທະນາຄວາມສຳພັນ ແລະ ເຂົ້າໃຈກັບຊາວກະສິກອນ
2. ສ້າງຂໍ້ຕົກລົງກັບຊາວກະສິກອນພາຍຫຼັງທີ່ໄດ້ກວດກາຄວາມໜ້າເຊື່ອຖືຂອງຜູ້ຜະລິດ
3. ສະໜອງສິ່ງກະຕຸກຊຸກຍູ້ເຊັ່ນ: ການເຂົ້າເຖິງທີ່ດິນຊຶ່ງເປັນການເພີ່ມຂຶ້ນລາຍຮັບ ສຳລັບຊາວກະສິກອນ.

### ຄຳຖາມ

ກ. ມັນຈະມີຜົນ ທາງດ້ານສັງຄົມ, ເສດຖະກິດ ແລະ ການເມືອງຫຍັງແດ່ຖ້າມີການກວດສອບຄັດເລືອກຊາວກະສິກອນ?

ຂ. ມີວິທີການຫຍັງແດ່ທີ່ຈະຮັບປະກັນວ່າການກວດສອບຄັດເລືອກນັ້ນມີຄວາມຍຸດຕິທຳ, ໂປ່ງໃສ ແລະ ປ້ອງກັນຈາກການສວຍໃຊ້ໂອກາດໃນທາງທີ່ຜິດ ?

ຄ. ຈຳເປັນຫຍັງເຈົ້າໜ້າທີ່ທ້ອງຖິ່ນທີ່ກ່ຽວຂອງຕ້ອງການຮຽກຮ້ອງໃຫ້ຜູ້ລົງທຶນພິຈາລະນາການເຊົ່າ ຫຼື ໂອນທີ່ດິນໃຫ້ຊາວກະສິກອນຜູ້ທີ່ບໍ່ມີ ທີ່ດິນພຽງພໍ?

ງ. ມີມາດຕະການປ້ອງກັນຫຍັງແດ່ ທີ່ຈະຮັບປະກັນ ບໍ່ໃຫ້ຊາວກະສິກອນ ເສຍສິດທິ ແລະ ໂອກາດໃນການເຂົ້າເຖິງທີ່ດິນ ໃນຊ່ວງຂອງການຈັດຕັ້ງປະຕິບັດສັນຍາ ແລະ ບໍ່ໃຫ້ເກີດຜົນກະທົບຕໍ່ຊາວກະສິກອນ ໃນກໍລະນີ ທີ່ການຜະລິດບໍ່ໄດ້ຮັບຜົນ ເນື່ອງຈາກ ສະພາບແວດລ້ອມທີ່ເໜືອການຄວບຄຸມ?

ຈ. ຍ້ອນຫຍັງການຕໍ່ສັນຍາການຜະລິດໃນໄລຍະຍາວຈຶ່ງເປັນເລື່ອງທີ່ບໍ່ປົກກະຕິ?

ສ. ມັນມີຈຸດດີ ແລະ ຈຸດອ່ອນ ຫຍັງແດ່ທີ່ຊາວກະສິກອນ ແລະ ຜູ້ລົງທຶນ ສ້າງເຊັ່ນສັນຍາ ຕາມແຕລະລະດູການ ແລະ ໄລຍະຍາວ?

## 8.3. ກໍລະນີ 3. ການກຳນົດເງື່ອນໄຂ: ລາຄາຄົງທີ່, ລາຄາທີ່ຂຶ້ນກັບຜູ້ຊື້

### ບ້ານ ຍອຍໄຮ, ເມືອງ ປາກທາທະດົງ, ແຂວງບໍລິຄຳໄຊ



ທ່ານ ຄຳພາ ແລະ ໂຮງອົບຢາຂອງລາວ

> ການໃຫ້ການສະໜັບສະໜູນທີ່ໃກ້ສິດຂອງຜູ້ລົງທຶນສາມາດຊ່ວຍຊາວກະສິກອນໃຫ້ມີລາຍຮັບທີ່ດີກວ່າ

**ປະສົບການ**

ບໍລິສັດຢາສູບລາວໄດ້ລົງທຶນ ແລະ ສະໜັບສະໜູນທາງດ້ານການເງິນສຳລັບຢາສູບທີ່ຄຸນນະພາບດີຜ່ານການຜະລິດແບບມີຂໍ້ຕົກລົງກັບຊາວກະສິກອນ ບ້ານຍອຍໄຮ, ເມືອງປາກກະດິງ, ແຂວງບໍລິຄຳໄຊ. ຕົ້ນຢາສູບຊຶ່ງມີໃບສີຂຽວຈາງໆໄດ້ປູກລຽບຕາມສອງຟາກຂອງທາງເລກທີ 13 ໃຕ ແລະ ຢູ່ບໍລິເວນໃກ້ກັບສວນຢາສູບນັ້ນມີບ້ານ ທ່ານ ຄຳພາ ລໍອັນໄຊ ຊຶ່ງເປັນຫົວໜ້າກຸ່ມຜະລິດຢາສູບ. ທ່ານ ຄຳພາ ໄດ້ສົນທະນາກັບທີມງານ ແລະ ເລົ່າປະສົບການກ່ຽວກັບການຜະລິດແບບມີຂໍ້ຕົກລົງກັບບໍລິສັດຢາສູບລາວນັບແຕ່ ປີ 2003 ເປັນຕົ້ນມາ.

ໃນການເຮັດສັນຍາ; ບໍລິສັດຢາສູບລາວໄດ້ສ້າງສັນຍາທີ່ເປັນລາຍລັກອັກສອນ ແລະ ໄດ້ລົງລາຍເຊັນຮ່ວມກັນກັບກຸ່ມຜູ້ຜະລິດ; ກຸ່ມຜູ້ຜະລິດເຊັນສັນຍາກັບແຕ່ຄອບຄົວຊາວກະສິກອນໂດຍມີການກຳນົດໂກຕາການຜະລິດ. ລາຄາແມ່ນກຳນົດແບບລາຄາຄົງທີ່ໂດຍອີງໃສ່ຄຸນນະພາບຂອງໃບຢາສູບ. ບໍລິສັດຢາສູບລາວໄດ້ໃຫ້ສັນຍາວ່າຈະຊື້ຢາສູບທັງໝົດທີ່ຜະລິດໂດຍຊາວກະສິກອນ ແລະ ຖ້າຊາວກະສິກອນບໍ່ສາມາດຜະລິດໄດ້ຕາມໂກຕາທີ່ຕົກລົງກັນເຂົາເຈົ້າຈະຖືກປັບໃໝ 3,000 ກີບ ຕໍ່ກິໂລກຼາມຢາສູບແຫ້ງ. ທ່ານ ຄຳພາ ໄດ້ອະທິບາຍກ່ຽວກັບຜົນປະໂຫຍດຂອງການຜະລິດແບບມີຂໍ້ຕົກລົງວ່າ: "ຍ້ອນພວກເຮົາຕ້ອງການຕະຫຼາດທີ່ຮັບປະກັນສະນັ້ນ, ຈຶ່ງໄດ້ເຮັດການຜະລິດແບບມີຂໍ້ຕົກລົງ. ການຜະລິດແບບມີຂໍ້ຕົກລົງນີ້ມີຄວາມສະດວກຫຼາຍປະການ; ພວກເຮົາໄດ້ຮັບການສະໜອງປັດໃຈການຜະລິດພາຍໃຕ້ສັນຍາ, ຂ້າພະເຈົ້າບໍ່ຈຳເປັນຕ້ອງໄດ້ລົງທຶນເອງ, ສາມາດຂໍປັດໃຈການຜະລິດລ່ວງໜ້າ ແລະ ຈ່າຍຄືນພາຍຫຼັງເກັບກ່ຽວ. ພວກເຮົາຍັງໄດ້ຮັບການຊ່ວຍເຫຼືອຈາກພະນັກງານວິຊາການທີ່ລົງມາຕິດຕາມກວດກາການຜະລິດ. ຍ້ອນແນວນັ້ນພວກເຮົາຄິດວ່າຍັງຈະສືບຕໍ່ຜະລິດແບບມີສັນຍາໃນອະນາຄົດ."

ທ່ານ ຄຳພາ ໃຫ້ຄວາມເຫັນວ່າລາຍຮັບຊາວກະສິກອນປັບປຸງດີຂຶ້ນນັບຕັ້ງແຕ່ມີການຜະລິດແບບມີຂໍ້ຕົກລົງ; ເຂົາເຈົ້າໄດ້ແປງເຮືອນທີ່ມີມາດຖານດີກວ່າເກົ່າ, ຊື້ຍານພາຫານະ, ຈ່າຍຄືນເງິນທີ່ກູ້ຍືມ ແລະ ຄ່າໃຊ້ຈ່າຍສຳລັບການສຶກສາ. ຕົວແທນຂອງບໍລິສັດມັກຈະມາພົບຊາວກະສິກອນເພື່ອປຶກສາຫາລືກ່ຽວກັບພືດຜັກ ແລະ ຟັງຄຳຄິດເຫັນຂອງຊາວກະສິກອນ. ເຖິງຢ່າງນັ້ນກໍ່ຕາມຊາວກະສິກອນຮູ້ສຶກສາວ່າບໍລິສັດຍັງບໍ່ໄດ້ຟັງຄຳຄິດເຫັນຂອງເຂົາເຈົ້າເທົ່າທີ່ຄວນ. ທ່ານ ຄຳພາ ເວົ້າວ່າ: "ຕອນປຶກສາຫາລືກ່ຽວກັບວຽກງານກັບພະນັກງານຂອງບໍລິສັດເຫັນວ່າເຂົາເຈົ້າມີຄວາມເປັນມິດທີ່ດີ,ງ່າຍທີ່ຈະພົບເຂົາເຈົ້າ ແລະ ເຂົາເຈົ້າຂໍຄຳແນະນຳຈາກຊາວກະສິກອນເພື່ອນຳໄປແກ້ໄຂ.

ບໍລິສັດບອກວ່າຈະພິຈາລະນາຕາມຄຳສະເໜີຂອງຊາວກະສິກອນເພື່ອໄປປັບສັນຍານັ້ນມາຮອດປະຈຸບັນຍັງບໍ່ເຫັນມີຄວາມຄືບໜ້າຫຍັງເລີຍ. ຂ້າພະເຈົ້າຢາກໃຫ້ຊາວກະສິກອນມີສ່ວນຮ່ວມຫຼາຍຂຶ້ນໃນການຮ່າງສັນຍາ" ຊາວກະສິກອນບໍ່ພໍໃຈໃນ 2 ປະເດັນຄື: 1) ການຈັດຄຸນນະພາບ ຫຼື ເກຼດຂອງໃບຢາສູບພາຍຫຼັງເກັບກ່ຽວ ແລະ ຕາກແຫ້ງ. ການໂຕ້ຖຽງກັນກ່ຽວກັບເກຼດແມ່ນເປັນເລື່ອງປົກກະຕິ. ບໍລິສັດເປັນຜູ້ກຳນົດກ່ຽວກັບຄຸນນະພາບ, ຖ້າຄຸນນະພາບຕ່ຳຊາວກະສິກອນກໍ່ຈະໄດ້ລາຄາທີ່ຕ່ຳ. 2) ຊາວກະສິກອນຄິດວ່າມັນຄົງຈະດີກວ່າ ທີ່ຈະກຳນົດລາຄາຕາມລາຄາທ້ອງຕະຫຼາດແທນທີ່ຈະເອົາຕາມລາຄາທີ່ບໍລິສັດກຳນົດ. ທ່ານ ຄຳພາ ຄິດວ່າ ຊາວກະສິກອນຈະຢູ່ໃນທ່າໄດ້ປຽບຫຼາຍຂຶ້ນຖ້າເຂົາເຈົ້າຮັບຮູ້ຂໍ້ມູນກ່ຽວກັບກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.

### *ການສັງເກດການ*

ຊາວກະສິກອນໃຫ້ຄວາມສຳຄັນຕໍ່ກັບຕະຫຼາດທີ່ມີຄວາມຮັບປະກັນບໍ່ວ່າເຂົາເຈົ້າຈະຜະລິດ ແລະ ສະໜອງປັດໃຈການຜະລິດຫຍັງກໍ່ຕາມ. ຊາວກະສິກອນຈະໄດ້ຮັບການປັບປຸງລາຍຮັບດີຂຶ້ນຈາກການເຮັດການຜະລິດແບບມີຂໍ້ຕົກລົງຖ້າລາຄາທີ່ກຳນົດໃນສັນຍາສອດຄ່ອງກັບທ່າອ່ຽງລາຄາຕະຫຼາດທີ່ເພີ່ມຂຶ້ນ. ນອກນັ້ນ, ທັດສະນະຂອງຊາວກະສິກອນທີ່ສະແດງອອກຍັງສາມາດບອກເຖິງການຜະລິດທີ່ມີລັກສະນະຜູກຂາດ ຫຼື ມີອຸປະສັກຫຼາຍທີ່ຈະຂາຍຜະລິດຕະພັນຢາສູບສູ່ຕະຫຼາດໃນປະເທດໄທ.



ຊາວກະສິກອນທ່ານນີ້ກຳລັງເອົາໃຈໃສ່ເບິ່ງແຍງສວນຢາຂອງລາວ

ບໍລິສັດຢາສູບລາວໃຫ້ຄວາມເອົາໃຈໃສ່ຕໍ່ການຜະລິດ ແລະ ມີພະນັກງານຕິດຕາມກວດກາ ແລະ ພົບປະກັບຊາວກະສິກອນຢ່າງເປັນປົກກະຕິ. ເຖິງແມ່ນວ່າມັນເບິ່ງຄືວ່າເຂົາເຈົ້າບໍ່ໄດ້ເອົາໃຈໃສ່ບັນຫາຄຳແນະນຳ ຫຼື ຄຳຮ້ອງຂໍທີ່ກ່າວມາ. ແຕ່ປະກົດວ່າພະນັກງານທີ່ມີມະນຸດສຳພັນດີຂອງບໍລິສັດໄດ້ຊ່ວຍພັດທະນາຄວາມສຳພັນ ແລະ ສ້າງຄວາມເຂົ້າໃຈຕໍ່ສິ່ງທີ່ຊາວກະສິກອນກັງວົນລວມທັງສະພາບຂອງການຜະລິດ.

ສັນຍາກ່ຽວກັບການຜະລິດຢາສູບໄດ້ຈັດຕັ້ງປະຕິບັດມາເປັນເວລາເກືອບ 10 ປີ ແລ້ວ. ມັນອາດຈະກາຍເປັນການຈັດຕັ້ງປະຕິບັດທີ່ບໍ່ມີການປ່ຽນແປງຫຍັງຫຼາຍສຳລັບ ສິ່ງທີ່ຊາວກະສິກອນຈະໄດ້ຮັບຈາກການ ຜະລິດ. ຖ້າເປັນແນວນັ້ນຄວາມສຳພັນຂອງຊາວກະສິກອນກັບບໍລິສັດອາດມີລັກສະນະເອື້ອຍອີງ ແລະ ບໍ່ເປັນແບບສະມັກໃຈ. ຊາວກະສິກອນຄິດວ່າເຂົາເຈົ້າອາດໄດ້ດີກວ່ານີ້ຖ້ານຳໃຊ້ລາຄາຕະຫຼາດ. ອີງໃສ່ຊັບສິນລວມທັງຄວາມຮູ້ໃນການຜະລິດ, ຊາວກະສິກອນອາດມີຄວາມສາມາດພຽງພໍທີ່ຈະລົງທຶນການຜະລິດດ້ວຍຕົນເອງຖ້າຫາກເຂົາຮູ້ລາຍລະອຽດກ່ຽວກັບຜົນຕອບແທນທີ່ຈະໄດ້ຮັບ ແລະ ມີຄວາມໝັ້ນໃຈທີ່ຈະເອົາຊະນະ ອຸປະສັກເພື່ອເຂົ້າເຖິງຕະຫຼາດທີ່ເຊື່ອຖືໄດ້.

### ສະຫຼຸບ

- ບໍລິສັດສາມາດນຳໃຊ້ພະນັກງານທີ່ມີມະນຸດສຳພັນທີ່ດີ ແລະ ໜ້ານັບຖືເພື່ອສ້າງຄວາມສຳພັນກັບຊາວກະສິກອນ ຜ່ານກອງປະຊຸມຕ່າງໆ;
- ເຫັນໄດ້ສັດເຈນວ່າຊາວກະສິກອນມີຄວາມສົນໃຈທີ່ຈະສືບຕໍ່ການ ຮັກສາການຜະລິດແບບມີຂໍ້ຕົກລົງ ແລະ ເຂົາເຈົ້າອາດໄດ້ຮັບຜົນປະໂຫຍດທີ່ເປັນຮູບປະທຳ ແລະ ຮັບປະກັນຍິ່ງຂຶ້ນ; ຊາວກະສິກອນກ້າສ່ຽງ ທີ່ຈະການຂາຍຜົນຜະລິດສູ່ຕະຫຼາດທົ່ວໄປ ເພາະຄິດວ່າຈະໄດ້ຮັບຜົນຕອບແທນທີ່ສູງກວ່າ. ແຕ່ເຂົາເຈົ້າອາດຍັງຈະອາໃສ ຜູ້ລົງທຶນ ເພື່ອສະໜອງ ປັດໃຈການຜະລິດ ແລະ ຊື້ຜົນຜະລິດ ໃນຈຳນວນໃດໜຶ່ງ.

### ປັດໃຈທີ່ພາໃຫ້ເກີດຜົນສຳເລັດ

1. ພະນັກງານຂອງ ຜູ້ລົງທຶນໄດ້ເຮັດວຽກໃກ້ສິດກັບຊາວກະສິກອນຢ່າງເປັນປົກກະຕິ ແລະ ໃນລັກສະນະທີ່ເປັນມິດ ແລະ ໃຫ້ຄວາມນັບຖື;
2. ຜູ້ລົງທຶນເປັນຄູ່ຮ່ວມງານທີ່ໜ້າເຊື່ອຖືໃນການສະໜອງປັດໃຈການຜະລິດ ແລະ ຊື້ຜົນຜະລິດທັງໝົດທີ່ຊາວກະສິກອນໃນສັນຍາຜະລິດ.

### ຄຳຖາມ

ກ. ຖ້າ ຊາວກະສິກອນກັບບໍລິສັດຢາສູບລາວຂຶ້ນກັບຊຶ່ງກັນ ແລະ ກັນ ຄວາມສຳພັນນັ້ນຈະສິ້ນສຸດໄດ້ແນວໃດ ?

ຂ. ຍ້ອນຫຍັງ ບໍລິສັດຈຶ່ງສາມາດສືບຕໍ່ກຳນົດລາຄາ ແລະ ມີສິດກຳນົດຄຸນນະພາບ ຫຼື ເກຼດ ແຕ່ຜູ້ດຽວ?

ຄ. ອຸປະສັກທີ່ຊາວກະສິກອນກຳລັງປະເຊີນໃນການຊອກຫາຜູ້ຊື້ອື່ນໆທີ່ໃຫ້ລາຄາ ແລະ ເງື່ອນໄຂທີ່ດີກວ່າມີຫຍັງແດ່?

## 8.4. ກໍລະນີ 4. ກຸ່ມທຸລະກິດ ແລະ ການຕໍ່ລອງເພື່ອ ຜົນປະໂຫຍດທາງດ້ານສັງຄົມ

**ບ້ານ ໃຕ້, ເມືອງຫ້ວຍຊາຍ, ແຂວງບໍ່ແກ້ວ**



ທ່ານ ລານ ຜູ້ຜະລິດສາລີຢູ່ແຂວງບໍ່ແກ້ວ. ມີຜູ້ຜະລິດອີກຫຼາຍຄົນຄືກັບລາວທີ່ຢາກລົງທຶນດ້ວຍຕົນເອງ ແລະ ຂາຍໃຫ້ຕະຫຼາດທົ່ວໄປ.

### *ປະສົບການ*

ບ້ານໃຕ້ຕັ້ງຢູ່ລຽບຕາມຝັ່ງແມ່ນ້ຳຂອງໃນແຂວງບໍ່ແກ້ວ, ປະມານໜຶ່ງຊົ່ວໂມງໄປທາງພາກໃຕ້ຂອງເມືອງຫ້ວຍຊາຍ. ບ້ານຢູ່ລະຫວ່າງແມ່ນ້ຳ, ເນີນພູ ແລະ ທົ່ງຮາບ. ຜູ້ລົງທຶນທ້ອງຖິ່ນ 3 ທ່ານ ຊຶ່ງ ລວມມີ ທ່ານ ສົມດີ ສົມວົງເດດ, ທ່ານ ອຸ່ນເຮືອນ ພອນປະເສີດ ແລະ ທ່ານ ບຸນເລີນ ໄຊວົງ ຊຶ່ງມີສາຍສຳພັນທີ່ດີ ແລະ ເປັນກັນເອງ ໄດ້ອະທິບາຍກ່ຽວກັບປະສົບການ ແລະ ທັດສະນະກ່ຽວກັບການຜະລິດແບບມີຂໍ້ຕົກລົງກັບ ຊາວກະສິກອນ.

ຜູ້ລົງທຶນທັງ 3 ໄດ້ຖືກຄັດເລືອກ ຫຼື ແນະນຳເພື່ອເຮັດບົດບາດການລົງທຶນດ້ານການຜະລິດໂດຍພາກລັດ ແລະ ໄດ້ເລີ່ມດຳເນີນການຜະລິດແບບມີຂໍ້ຕົກລົງນັບຕັ້ງແຕ່ປີ 1994 ເປັນຕົ້ນມາ. ເຂົາເຈົ້າໄດ້ເຮັດສັນຍາທີ່ເປັນລາຍລັກອັກສອນ ກັບຊາວກະສິກອນເພື່ອ ຜະລິດສາລີ, ເຂົ້າ, ຖົ່ວດິນ. ປີນີ້ໄດ້ເປັນຕົວແທນໃຫ້ຜູ້ລົງທຶນຈາກເຂດອື່ນ ຜູ້ລົງທຶນໃນພື້ນທີ່ອາດຈະເຮັດໜ້າທີ່ເປັນຕົວແທນໃຫ້ບໍລິສັດ(ຜູ້ລົງທຶນ)ແຕ່ອາດຈະມີລາຄາຂອງການບໍລິການທີ່ໜ້າເຊື່ອຖື ແລະ ບໍລິການດ້ານສິນເຊື່ອໃຫ້ກັບຊາວກະສິກອນ.

ໃນການລົງທຶນປູກມັນຕົ້ນໂດຍມີຂໍ້ຕົກລົງສະເພາະທັງເປັນສັນຍາປາກເປົ່າ ແລະ ລາຍລັກອັກສອນ. ແຕ່ລະຄົນໄດ້ເຮັດສັນຍາກັບຊາວກະສິກອນຈຳນວນລະຫວ່າງ 200-500 ຄອບຄົວໂດຍຜ່ານຕົວແທນຂອງເຂົາເຈົ້າ. ຂໍ້ຕົກລົງກວມເອົາການສະໜອງປັດໃຈການຜະລິດ ແລະ ເກັບຊື້ຜົນຜະລິດຕາມລາຄາທ້ອງຕະຫຼາດ.[7]

ຜູ້ລົງທຶນເຊື່ອວ່າການເຮັດການຜະລິດແບບມີສັນຍານີ້ສາມາດດຳເນີນມາຮອດປະຈຸບັນນີ້ເພາະວ່າພວກເຮົາປະຕິບັດຢ່າງໂປ່ງໃສ ແລະ ມີການຕິດຕໍ່ພົວພັນກັບຊາວກະສິກອນເປັນປົກກະຕິ. ເຂົາເຈົ້າຍັງໃຫ້ເງິນກູ້ທີ່ບໍ່ມີດອກເບ້ຍຕໍ່ຊາວກະສິກອນໂດຍມີການຄັດເລືອກ ແລະ ສຸມໃສ່ຊາວກະສິກອນຜູ້ທີ່ປະເຊີນກັບຄ່າໃຊ້ຈ່າຍທີ່ບໍ່ຄາດຄິດເຊັ່ນວ່າ: ຄ່າປິ່ນປົວ, ງານດອງ. ໃນຕົ້ນປີຊາວກະສິກອນຈຳນວນໜຶ່ງໄດ້ລັກຂາຍຜົນຜະລິດນອກສັນຍາໃຫ້ພໍ່ຄ້າ. ແຕ່ໄດ້ແກ້ໄຂດ້ວຍການປຶກສາຫາລືກັບຊາວກະສິກອນຫຼາຍກວ່າທີ່ປະຕິບັດທາງກົດໝາຍ ຫຼື ວິທີທາງການອື່ນໆ. ຍ້ອນມີຄວາມເຊື່ອໝັ້ນເຂົາເຈົ້າຄາດວ່າຈະຂະຫຍາຍກິດຈະການແຕ່ການທີ່ຈະຂະຫຍາຍກິດຈະການນັ້ນອາດຈະຮຽກຮ້ອງການຊ່ວຍເຫຼືອທາງດ້ານເຕັກນິກ ແລະ ທາງດ້ານການເງິນຈາກ ເຈົ້າໜ້າທີ່ຂອງເມືອງ ແລະ ແຂວງ. ພາກຕາເວັນຕົກ ແລະ ພາກໃຕ້ຂອງບ້ານໃຕ້ເຂດເນີນພູໄດ້ຖືກຫັນເປັນພື້ນທີ່ທຳການຜະລິດ.ທີ່ດິນສ່ວນໃຫຍ່ຂອງຊາວກະສິກອນແມ່ນນຳໃຊ້ເຂົ້າໃນການຜະລິດແບບມີຂໍ້ຕົກລົງກັບຜູ້ລົງທຶນ. ຄອບຄົວທ່ານ ລານໄຊວົງ (21 ປີ) ໄດ້ເຮັດການຜະລິດແບບມີຂໍ້ຕົກລົງມາໄດ້ 10 ປີ ແລ້ວຊຶ່ງຂາຍຜົນຜະລິດໃຫ້ແກ່ທ່ານ ສົມດີ, ຜູ້ລົງທຶນໃນທ້ອງຖິ່ນ ແລະ ທັງເປັນຕົວແທນຈຳໜ່າຍ. ທ່ານ ລານໄຊວົງ ໃຫ້ຄຳເຫັນວ່າ: ການຜະລິດແບບມີຂໍ້ຕົກລົງໜ້າສົນໃຈເພາະວ່າພວກເຮົາຂາດທຶນ ແລະ ບໍ່ມີລົດໄຖຂະໜາດໃຫຍ່ສຳລັບການ ກະກຽມພື້ນທີ່.ແຕ່ບາງຄັ້ງພວກເຮົາກໍ່ຂາຍສາລີໃຫ້ພໍ່ຄ້າຢູ່ຝັ່ງໄທ. ຈາກການຜະລິດດັ່ງກ່າວເຫັນວ່າຄອບຄົວຂອງເຮົາມີຊີວິດການເປັນຢູ່ດີຂື້ນ. ໃນ 2006 ຄອບຄົວໄດ້ຊື້ລົດຈັກ 1 ຄັນ, ລົດບັນທຸກ 1 ຄັນ ໃນ ປີ 2008 ແລະ ລົດໄຖ 1 ຄັນໃນປີ 2010 ຊຶ່ງນຳໃຊ້ເງິນທີ່ຫາໄດ້ຈາກການຜະລິດກະສິກຳ.

ເຖິງຢ່າງນັ້ນກໍ່ຕາມ, ທ່ານ ລານ ແລະ ຊາວກະສິກອນອື່ນໆຢາກລົງທຶນດ້ວຍຕົນເອງເພາະບໍ່ຢາກເປັນໜີ້ປັດໃຈການຜະລິດຊຶ່ງຕ້ອງຈ່າຍຄືນໃຫ້ຜູ້ລົງທຶນໃນລາຄາທີ່ສູງກວ່າລາຄາປົກກະຕິເຖິງ 20% . " ຖ້າບໍ່ມີທຶນແນ່ນອນພວກເຮົາຈະເອົາແນວພັນນຳເຂົາເຈົ້າ. ຖ້າພວກເຮົາມີທຶນພວກເຮົາສາມາດລົງທຶນດ້ວຍຕົນເອງ ແລະ ອາດຂາຍສິ່ງໃຫ້ ທ່ານ ຈຳປາ [ພໍ່ຄ້າຢູ່ບ້ານອື່ນ] ທີ່ໃຫ້ລາຄາສູງກວ່າ. ໃນປີໜ້າຂ້າພະເຈົ້າຄິດວ່າຈະລົງທຶນດ້ວຍຕົນເອງໂດຍ 2 ເຫດຜົນຄື: 1) ບໍ່ຢາກເປັນໜີ້. 2) ປັດໃຈການຜະລິດອາດມີລາຄາຕ່ຳລົງຖ້າຫາກຈ່າຍເປັນເງິນສົດ. ຊາວກະສິກອນສ່ວນໃຫຍ່ຕ້ອງການລົງທຶນດ້ວຍຕົນເອງ. ອີກ 2-3 ປີ ຂ້າງໜ້າ ອາດຈະມີຊາວກະສິກອນປະມານເຄິ່ງໜຶ່ງທີ່ສາມາດລົງທຶນດ້ວຍຕົນເອງ."

ປັດໃຈທາງດ້ານການຄ້າມີຜົນກະທົບຫຼາຍຕໍ່ການຜະລິດ. ຕາມທີ່ກຳນົດໃນສັນຍາ, ບົດບາດໜຶ່ງຂອງພາກລັດແມ່ນການສະໜັບສະໜູນຊາວກະສິກອນແຕ່ ທ່ານ ລານ ເວົ້າວ່າ: ເຖິງແມ່ນວ່າເມືອງໄດ້ຜະລິດສາລີພັນໃໝ່ໃນປີກາຍ ແລະ ວ່າຈະແຈກຢາຍໃຫ້ຊາວກະສິກອນທົດລອງແຕ່ຊາວກະສິກອນບໍ່ຄ່ອຍເຫັນພະນັກງານຂອງຫ້ອງການກະສິກຳ-ປ່າໄມ້ເມືອງ ລົງມາພື້ນທີ່. ນອກນັ້ນ, ທ່ານ ລານ ຍັງໃຫ້ຂໍ້ມູນວ່າ ທ່ານ ຈຳປາ ເກັບຊື້ສາລີມາໄດ້ຫຼາຍປີແລ້ວ ແລະ ໃຫ້ລາຄາສູງຊຶ່ງລາວ ແລະ ໝູ່ເພື່ອນກໍ່ໃຫ້ຄວາມສົນໃຈ. ນອກນັ້ນ ທ່ານ ລານ ຍັງເຊື່ອວ່າລາຄາຂອງສາລີຈະສູງຂື້ນເພາະວ່າລາຄາປັດໃຈການຜະລິດທີ່ອາດຈະເພີ່ມຂື້ນ.[8]

**ການສັງເກດການ**

ການຜະລິດແບບມີຂໍ້ຕົກລົງໄດ້ຖືກນຳໃຊ້ໃນບ້ານດ່ານໃຕ້ມາໄດ້ 17 ປີແລ້ວ ແລະ ຍັງໄດ້ຮັບຄວາມສົນໃຈຢູ່ເພາະວ່າຊາວກະສິກອນຂາຍຜົນຜະລິດຕາມລາຄາທ້ອງຕະຫຼາດ; ເຂົ້າເຖິງສິນເຊື່ອທີ່ບໍ່ມີດອກເບ້ຍ; ເມື່ອມູນຄ່າການລົງທຶນອື່ນໆເພີ່ມຂື້ນ, ການເພີ່ມຂື້ນຂອງລາຄາປັດໃຈການຜະລິດແມ່ນບໍ່ເກີນ 20% ສົມທຽບກັບລາຄາຕະຫຼາດຊຶ່ງເຂົາເຈົ້າສາມາດລົງທຶນໄດ້ຖ້າເຂົາເຈົ້າສະຫຼະເວລາ ແລະ ຄ່າໃຊ້ຈ່າຍສຳລັບການຂົນສົ່ງ. ໃນຂະນະດຽວກັນ, ຜູ້ລົງທຶນສາມາດໄດ້ຮັບຜະລິດຕະພັນໃນລາຄາທີ່ສາມາດແຂ່ງຂັນໄດ້ ແລະ ໃນປະລິມານທີ່ພຽງພໍທີ່ຈະສ້າງລາຍຮັບທຽບກັບຄວາມສ່ຽງທີ່ເຂົາເຈົ້າໄດ້ສະໜອງປັດໃຈການຜະລິດລວມທັງສິນເຊື່ອໃຫ້ຊາວກະສິກອນລ່ວງໜ້າ.

7 ດັ່ງທີ່ກ່າວມາຜູ້ລົງທຶນກຳນົດລາຄາຕະຫຼາດຈາກຫຼາຍເກນມາດຖານ; ເຖິງແມ່ນຊາວກະສິກອນໃນແຂວງບໍ່ແກ້ວ ສາມາດໂທລະສັບຫາໝູ່ເພື່ອນ ແລະ ຍາດຕິພີ່ນ້ອງໃນແຂວງຊຽງລາຍໃນຝັ່ງນ້ຳຂອງເບື້ອງນັ້ນເພື່ອກວດສອບລາຄາກໍ່ຕາມ, ພໍ່ຄ້າຄົນໄທໃນເບື້ອງນັ້ນຍັງສົມຮູ້ຮ່ວມຄິດ ແລະ ໃຫ້ຂໍ້ມູນທີ່ເປັນລາຄາດຽວກັນ.



ທ່ານ ບຸນເລີນ, ຊຶ່ງເປັນພໍ່ຄ້າທ້ອງຖິ່ນທີ່ລົງທຶນປູກສາລີແບບມີສັນຍາຜູກພັນ

ມາດຕະການບັງຄັບໃນຂໍ້ຕົກລົງແບ່ງອອກເປັນ 2 ທາງ ຄື:

1. ກົນໄກທາງດ້ານສັງຄົມ – ຜູ້ລົງທຶນນຳໃຊ້ການພົວພັນແບບຄອບຄົວ, ເຄືອຂ່າຍຍາດຕິພີ່ນ້ອງບວກກັບຄວາມເຊື່ອຖືເພື່ອສ້າງຄວາມສຳພັນການຄ້າກັບຊາວກະສິກອນ
2. ຄວາມສົນໃຈທາງເສດຖະກິດ–ລາຄາຕະຫຼາດ ແລະ ສິນເຊື່ອທີ່ບໍ່ມີດອກເບ້ຍຊຶ່ງເປັນການສະແດງໃຫ້ເຫັນເຖິງຄວາມຮັບຜິດຊອບທາງດ້ານສັງຄົມໜຶ່ງ ແລະ ການສ້າງຄວາມໜ້າເຊື່ອຖືຜູ້ລົງທຶນທີ່ກ່າວມານັ້ນອາດເຮັດໜ້າທີ່ເປັນກຸ່ມ, ຈັດຕັ້ງຜູກຂາດພື້ນທີ່ການຜະລິດ ແລະ ລາຄາໂດຍອີງໃສ່ມາດຕະການທາງດ້ານການຕະຫຼາດເພື່ອກີດກັ້ນຜູ້ລົງທຶນອື່ນໆທີ່ຈະເຂົ້າມາລົງທຶນ. ເຖິງແມ່ນວ່າຜູ້ລົງທຶນຈະຮ່ວມມື ແລະ ມີອຳນາດໃນການຜູກຂາດແຕ່ຖ້າມີການເປີດກວ້າງໃຫ້ຜູ້ລົງທຶນອື່ນໆເຂົ້າມາແຂ່ງຂັນລົງທຶນໃນພື້ນທີ່ດຽວກັນນັ້ນອາດຈະເຮັດໃຫ້ຊາວກະສິກອນໄດ້ຜົນປະໂຫຍດຫຼາຍຂຶ້ນ.

ການປະຕິບັດໜ້າທີ່ຂອງຜູ້ລົງທຶນໃນການສະໜອງປັດໃຈການຜະລິດທີ່ໜ້າເຊື່ອຖື, ຊື້ຜົນຜະລິດຕາມເງື່ອນໄຂທີ່ໄດ້ຕົກລົງ, ແລະ ສະໜອງສິນເຊື່ອທີ່ບໍ່ມີດອກເບ້ຍແມ່ນມີຄວາມສຳຄັນແຕ່ຕົ້ນທຶນ, ຄວາມສ່ຽງຈາກສິ່ງເຫຼົ່ານັ້ນຕ້ອງຢູ່ໃນລະດັບທີ່ຜູ້ລົງທຶນສາມາດຄວບຄຸມ, ຄາດຄະເນຜົນທີ່ຈະໄດ້ຮັບຈາກການຜະລິດແບບມີຂໍ້ຕົກລົງ ແລະ ຍອມຮັບໄດ້. ສິນເຊື່ອທີ່ບໍ່ມີດອກເບ້ຍແມ່ນຜົນປະໂຫຍດທີ່ສຳຄັນທາງດ້ານສັງຄົມສຳລັບຊຸມຊົນ. ໃນຂະນະດຽວກັນຖ້າມີຜູ້ລົງທຶນຈຳນວນຫຼາຍອາດຈະເຮັດໃຫ້ປັດໃຈການຜະລິດມີລາຄາຕ່ຳລົງ ແລະ ລາຄາຜົນຜະລິດຈະສູງກວ່າແຕ່ເຂົາເຈົ້າອາດມີການສະໜອງສິນເຊື່ອທີ່ບໍ່ມີດອກເບ້ຍໜ້ອຍລົງເພາະອາດຂາດຊັບພະຍາກອນ,ຄວາມອາດສາມາດໃນການສະໜອງປັດໃຈການຜະລິດຕາມເວລາ ແລະ ປະຕິບັດຕາມລາຄາ ແລະ ປະລິມານທີ່ໄດ້ຕົກລົງກັນ.

໑ ເຖິງແມ່ນວ່າ ລາວ ໄດ້ເວົ້າວ່າ ປັດໃຈການຜະລິດ ເປັນປັດໃຈຍູ້ດັນ ແລະ ມີຜົນເຮັດໃຫ້ລາຄາສາລີເພີ່ມຂຶ້ນນັ້ນແຕ່ຕົວຈິງປະກົດວ່າປັດໃຈທີ່ເຮັດໃຫ້ລາຄາສາລີເພີ່ມຂຶ້ນນັ້ນ ແມ່ນຍ້ອນ ຄວາມຕ້ອງການສາລີໃນໂລກ ແລະ ການແຂ່ງຂັນກ່ຽວກັບຜົນຜະລິດກະສິກຳເພີ່ມຂຶ້ນ

ທ່ານ ລານ ບໍ່ໄດ້ໝາຍວ່າເງື່ອນໄຂທີ່ຜູ້ລົງທຶນສະໜອງນັ້ນຕໍ່າຫຼາຍ ຫຼື ບໍ່ຍຸດຕິທຳ. ເຖິງຢ່າງນັ້ນກໍ່ຕາມ, ລາວ ແລະ ເພື່ອນບ້ານໃກ້ຄຽງຕັ້ງເປົ້າໝາຍວ່າຈະລົງທຶນດ້ວຍຕົນເອງ ແລະ ຂາຍຜົນຜະລິດສູ່ຕະຫຼາດທົ່ວໄປເພາະຄາດວ່າຈະໄດ້ຜົນຕອບແທນຫຼາຍກວ່າໃນຂະນະດຽວກັນນັ້ນເປັນການຫຼຸດຜ່ອນຄວາມສ່ຽງກ່ຽວກັບໜີ້ຈາກການຜະລິດແບບຂໍ້ຕົກລົງຊຶ່ງພົບເຫັນຫຼາຍກໍລະນີໃນ ສປປ ລາວ. ເຂົາເຈົ້າບໍ່ຕ້ອງການໜີ້; ດັ່ງທີ່ໄດ້ປະເຊີນມາຄື: ຜູ້ລົງທຶນສະໜອງປັດໃຈການຜະລິດ ແລະ ຄິດໄລ່ເປັນສິນເຊື່ອ. ຖ້າຊາວກະສິກອນບໍ່ໄດ້ຜົນຜະລິດດີໃນລະດູການນີ້ໜີ້ສິນສຳລັບປັດໃຈການຜະລິດຈະໂອນໄປລະດູການຜະລິດຕໍ່ໄປ[໑]. ໜີ້ແມ່ນຄວາມສ່ຽງ ແລະພັນທະໜຶ່ງຊຶ່ງຈຳກັດອິດສະຫຼະຊາວກະສິກອນທີ່ຈະຕັດສິນໃຈວ່າຈະຜະລິດຫຍັງ ແລະ ຂາຍຢູ່ໃສ. ທ່ານ ລານໄດ້ເນັ້ນໜັກວ່າພໍ່ຄ້າແມ່ນຕົວຊີ້ບອກໜຶ່ງເຖິງຄວາມເປັນໄປໄດ້ທີ່ຈະເຂົ້າເຖິງຕະຫຼາດທີ່ໃຫ້ລາຄາສູງກວ່າ. ຕາມທີ່ສັງເກດເຫັນວ່າ ທ່ານ ລານ ແລະ ໝູ່ເພື່ອນຂອງລາວມີຄວາມຕ້ອງການໃນການລົງທຶນເພີ່ມຂຶ້ນ, ເພາະວ່າໂດຍທົ່ວໄປລາຄາແມ່ນເພີ່ມຂຶ້ນ ແລະ ພໍ່ຄ້າສ່ວນຫຼາຍກໍ່ໃຫ້ລາຄາທີ່ດີ ຫຼື ບໍ່ນ້ອຍກວ່າລາຄາຂາຍສູ່ຕະຫຼາດໃນປະເທດຈີນ.




ການໂຄສະນາແນວພັນລູກປະສົມສາລີຢູ່ພາຍໃນບ້ານຂອງແຂວງບໍ່ແກ້ວ

[໑] ໃນການປະຕິບັດຕົວຈິງ, ຕາມການໃຫ້ຄຳເຫັນຂອງ ທ່ານ Stuart Ling ທີ່ປຶກສາທາງດ້ານທຸລະກິດກະສິກຳ ປະຈຳ ເມືອງຫ້ວຍຊາຍພົບວ່າບາງຄັ້ງຜູ້ລົງທຶນໄດ້ປ່ອຍໃຫ້ຊາວກະສິກອນຕິດໜີ້ໃນລະດູການຕໍ່ໆໄປ

### ສະຫຼຸບ

- ຜູ້ລົງທຶນທ້ອງຖິ່ນອາດຈະໃຫ້ຄວາມສົນໃຈທາງດ້ານສັງຄົມຫຼາຍ, ໂດຍສະເພາະເພື່ອສ້າງຄວາມໜ້າເຊື່ອຖື, ສະນັ້ນຈຶ່ງສະໜອງເງື່ອນໄຂທີ່ໜ້າສົນໃຈໃຫ້ຊາວກະສິກອນ;
- ຜູ້ລົງທຶນທ້ອງຖິ່ນດຳເນີນທຸລະກິດຢ່າງມີປະສິດທິພາບ ແລະ ໜ້າເຊື່ອຖືໂດຍນຳໃຊ້ເຄືອຂ່າຍຕົວແທນຜູ້ ທີ່ຮູ້ຈັກກຸ່ມຊາວກະສິກອນດີ;
- ເຖິງແມ່ນວ່າຈະມີການຜູກຂາດ(ໂດຍກຸ່ມຜູ້ລົງທຶນ) ແຕ່ຖ້າຜູ້ລົງທຶນປະພຶດຢ່າງໜ້າເຊື່ອຖື, ສະໜອງສິນເຊື່ອທີ່ບໍ່ມີດອກເບ້ຍ ແລະ ໃຫ້ຜົນຕອບແທນທີ່ສູງ10 ຊາວກະສິກອນ ອາດຍອມຮັບໄດ້ ;
- ການຜະລິດແບບມີຂໍ້ຕົກລົງອາດເປັນຂໍກຸນແຈສຳລັບກຸ່ມຜູ້ລົງທຶນທີ່ສະໜອງຜົນປະໂຫຍດທາງດ້ານສັງຄົມ ເພາະວ່າ ບໍ່ໄດ້ລົງທຶນຫຼາຍ;
- ກຸ່ມຜູ້ລົງທຶນທີ່ມີຢູ່ອາດຂັດຂວາງຜູ້ລົງທຶນໃໝ່ທີ່ຈະເຂົ້າມາລົງທຶນໃນພື້ນທີ່;
- ຊາວກະສິກອນອາດຈະຢາກສ່ຽງທຳການຜະລິດເພື່ອຂາຍສູ່ຕະຫຼາດທົ່ວໄປຫຼາຍກວ່າທີ່ຈະສ່ຽງກັບການສະສົມໜີ້ເມື່ອປັດໃຈການຜະລິດຖືກຄິດໄລ່ສິນເຊື່ອ ແລະ ກຳນົດໃນຂໍ້ຕົກລົງການຜະລິດ.

### ປັດໃຈທີ່ພາໃຫ້ເກີດຜົນສຳເລັດ

1. ນຳໃຊ້ລາຄາທ້ອງຕະຫຼາດ ແລະ ສິນເຊື່ອທີ່ບໍ່ມີດອກເບ້ຍ ສຳລັບຄອບຄົວ ທີ່ຫຍຸ້ງຍາກ;
2. ຜູ້ລົງທຶນທ້ອງຖິ່ນໃຫ້ຄວາມສົນໃຈທາງດ້ານສັງຄົມ ເຊັ່ນວ່າ: ການສ້າງຄວາມໜ້າເຊື່ອຖື ຊຶ່ງເຮັດໃຫ້ກ້າວໄປສູ່ການຜະລິດແບບມີຂໍ້ຕົກລົງກັບຊາວກະສິກອນທ້ອງຖິ່ນ;
3. ຜູ້ລົງທຶນມີເຄືອຂ່າຍຕົວແທນທີ່ຈະເຮັດວຽກຮ່ວມກັບ ແລະ ຄຸ້ມຄອງກຸ່ມຜູ້ຜະລິດ;

### ຄຳຖາມ

ກ. ມີກົນໄກ ຫຼື ປັດໃຈຫຍັງທີ່ຊ່ວຍຮັບປະກັນການຜະລິດແບບມີຂໍ້ຕົກລົງໃຫ້ຍືນຍົງ?

ຂ. ຈະເຮັດແນວໃດຜູ້ລົງທຶນຈຶ່ງຈະຮ່ວມມືແບ່ງຄວາມຮັບຜິດຊອບ, ກຳນົດລາຄາ ແລະ ແກ້ໄຂບັນຫາອື່ນໆຮ່ວມກັນ?

ຄ. ປັດໃຈຫຍັງຕັດສິນວ່າຊາວກະສິກອນຜູ້ມີຊັບສິນຈະນຳໃຊ້ຊັບສິນນັ້ນໄປເປັນທຶນສະໜັບສະໜູນການຜະລິດ ຫຼື ເຂົ້າຮ່ວມການຜະລິດແບບມີຂໍ້ຕົກລົງເພື່ອນຳໃຊ້ຊັບສິນທີ່ຜູ້ລົງທຶນຈັດຫາໃຫ້?

ງ. ກຸ່ມຜູ້ລົງທຶນທ້ອງຖິ່ນຄວນໄດ້ຮັບນະໂຍບາຍຫຍັງແດ່ຕອບແທນຈຶ່ງຍຸດຕິທຳສຳລັບການສ້າງຄວາມໝັ້ນຄົງ, ຄວາມໜ້າເຊື່ອຖື ແລະ ສິນເຊື່ອທີ່ບໍ່ມີດອກເບ້ຍ?

ຈ. ຊາວກະສິກອນຈະຮັບຮູ້ ແລະ ພິຈາລະນາກ່ຽວກັບຄວາມສ່ຽງທີ່ຈະເປັນໜີ້ຈາກປັດໃຈການຜະລິດ ແລະ ຄວາມບໍ່ແນ່ນອນຂອງລາຄາໃນທ້ອງຕະຫຼາດທົ່ວແນວໃດ?

ສ. ຊາວກະສິກອນຮັບຮູ້ ທ່າອ່ຽງຄວາມຕ້ອງການຫຍັງແດ່ ໂດຍສະເພາະ ໃນ ສປ ຈີນ ?

ຊ. ຫ້ອງການກະສິກຳ-ປ່າໄມ້ເມືອງ ຄວນຈະຊ່ວຍຊາວກະສິກອນຫຼາຍຂຶ້ນບໍ ຫຼື ປ່ອຍໃຫ້ຄວາມຄາດຫວັງຂອງຊາວກະສິກອນບໍ່ໄດ້ຮັບການຕອບສະໜອງ?

ຍ. ຖ້າຫ້ອງການກະສິກຳ-ປ່າໄມ້ເມືອງສາມາດຊ່ວຍໄດ້, ແມ່ນຫຍັງທີ່ຫ້ອງການກະສິກຳ-ປ່າໄມ້ເມືອງສາມາດຊ່ວຍເຫຼືອທີ່ແທ້ຈິງ ແລະ ຍ້ອນຫຍັງການຊ່ວຍເຫຼືອບໍ່ໄດ້ສະໜອງໃຫ້ຊາວກະສິກອນ?

## 8.5. ກໍລະນີ 5. ການຜະລິດ ແລະ ຄວາມຍືນຍົງ : ກຳໄລໄລຍະສັ້ນ, ຄ່າສິ້ນເປືອງໃນໄລຍະຍາວ

**ບ້ານ ນ້ຳບຸກ, ເມືອງຕົ້ນເຜີ້ງ, ແຂວງບໍ່ແກ້ວ**



ລັກສະນະສວນສາລີໃນແຂວງບໍ່ແກ້ວ, ດິນຈະມີສະພາບແນວນີ້ໄດ້ດົນປານໃດ ?

ການຜະລິດເປັນສິນຄ້າສາມາດເພີ່ມລາຍຮັບໃຫ້ຜູ້ຜະລິດຂະໜາດນ້ອຍແຕ່ຄຽງຄູ່ກັນນີ້ກໍ່ມີຄວາມສ່ຽງຕໍ່ຄວາມຍືນຍົງໄລຍະຍາວໃນການຕົກຕ່ຳຂອງຜົນຜະລິດ ແລະ ລາຍຮັບຂອງຊາວກະສິກອນ.

### ປະສົບການ

ລຽບຕາມຮ່ອມພູພຽງປະມານໜຶ່ງຊົ່ວໂມງຈາກ ບ້ານໃຕ້[11], ຕາມແຄມແມ່ນ້ຳຂອງ, ກໍ່ແມ່ນບ້ານນ້ຳບຸກຊຶ່ງເຮືອນສ່ວນໃຫຍ່ເຮັດດ້ວຍໄມ້, ຫຼາຍເຮືອນມີລົດຈັກ ແລະ ຈານດາວທຽມ. ມີລົດບັນທຸກພຽງແຕ່ 2-3 ຄັນ ແລະ ຮ້ານຂາຍເຄື່ອງຈຳນວນໜ້ອຍໜຶ່ງ; ບ້ານນີ້ອາດມີຊີວິດການເປັນຢູ່ບໍ່ສົມບູນເທົ່າກັບບ້ານໃຕ. ທ່ານ ຄຳປອງ ຂັນຕີປັນຍາ, ຫົວໜ້າກຸ່ມຜູ້ຜະລິດນັ້ນດ້ວງໄດ້ອະທິບາຍກ່ຽວກັບການທຳການຜະລິດຢູ່ໃນບ້ານດັ່ງກ່າວ. ບ້ານນ້ຳບຸກມີໃບອະນຸຍາດໃນການນຳເຂົ້າ ແລະ ສົ່ງອອກ, ຍ້ອນຄ່າຂົນສົ່ງ ແລະ ອາກອນຜ່ານດ່ານສູງຈຶ່ງເຮັດໃຫ້ການຄ້າຂາຍບໍ່ໄດ້ຮັບຜົນປະໂຫຍດເທົ່າທີ່ຄວນ; ຊາວກະສິກອນຈຶ່ງໄດ້ຫັນມາຜະລິດສາລີ ແລະ ຖົ່ວດິນໂດຍເຮັດສັນຍາການຜະລິດກັບ ທ່ານ ອຸ່ນເຮືອນ ແລະ ທ່ານ ສົມດີ, ຜູ້ລົງທຶນຢູ່ບ້ານໃຕ້ນັບແຕ່ 2001 ເຖິງ 2010.

---

[11] See 8.4

ລາຍຮັບຈາກສາລີແມ່ນຫຼຸດລົງ, ຊຶ່ງຂາຍໃຫ້ຜູ້ລົງທຶນໃນລາຄາ 3.20-3.30 ບາດ ຕໍ່ ກິໂລກຼາມ. ປີນີ້ຊາວກະສິກອນບໍ່ສາມາດຈ່າຍຄືນສິນເຊື່ອການຜະລິດທີ່ຜູ້ລົງທຶນສະໜອງໃຫ້ລ່ວງໜ້າໄດ້ທັງໝົດ ແລະ ສ່ວນທີ່ເຫຼືອແມ່ນຈະຈ່າຍຄືນໃນປີໜ້າ. ທ່ານ ຄຳປອງ ເວົ້າວ່າ: "ລາຄາສາລີແມ່ນຢູ່ໃນລະດັບດີ, ແຕ່ຍ້ອນບັນຫາຜົນຜະລິດ. ໄລ່ໜຶ່ງສາມາດຜະລິດໄດ້ພຽງແຕ່ປະມານ 250 ກິໂລກຼາມຊຶ່ງໃນເບື້ອງຕົ້ນຜົນຜະລິດແມ່ນ 800ກິໂລກຼາມ. ຂ້າພະເຈົ້າຄິດວ່າບັນຫາຕົ້ນຕໍແມ່ນການຫຼຸດລົງຂອງຜົນຜະລິດອັນເນື່ອງຈາກຄວາມອຸດົມສົມບູນຂອງດິນຫຼຸດລົງ," ຊາວກະສິກອນນຳໃຊ້ປຸ໋ຍເຄມີຈຳນວນຫຼາຍ ແລະ ປູກແບບໝູນວຽນລະຫວ່າງສາລີ ແລະ ຖົ່ວດິນເພື່ອຟື້ນຟູຜົນຜະລິດແຕ່ກໍ່ບໍ່ປະສົບຜົນສຳເລັດ. ໃນອະນາຄົດການຜະລິດສາລີແບບມີສັນຍາຍັງຈະເປັນຄຳຖາມຢູ່.

ເພື່ອຮັບມືກັບການປ່ຽນແປງຄວາມອຸດົມສົມບູນ ແລະ ຄວາມຕ້ອງການທີ່ດິນ; ຊາວກະສິກອນໄດ້ປູກເຂົ້າຊະນິດພັນພື້ນເມືອງໃນເຂດເນີນສູງ. ປີນີ້ລາວລື້ຈາກເມືອງສິງເອົາລົດບັນທຸກມາ 7 ຄັນເພື່ອຊື້ເຂົ້າໃນລາຄາ 10.50 ບາດ ຕໍ່ ກິໂລກຼາມ. ແຕ່ໄດ້ເຂົ້າພຽງພໍສຳລັບລົດບັນທຸກ 2 ຄັນເທົ່ານັ້ນ.

ທ່ານ ຄຳປອງ ແມ່ນໜຶ່ງໃນ 3 ຊາວກະສິກອນທີ່ທົດລອງປູກມັນດ້າງ. ຜູ້ລົງທຶນໃຫ້ຂໍ້ມູນວ່າຊາວກະສິກອນສາມາດຜະລິດມັນດ້າງໄດ້ 60 ໂຕນ ຕໍ່ ເຮັກຕາ, ຊຶ່ງທ່ານ ຄຳປອງ ຄາດວ່າມັນສາມາດສ້າງ ລາຍຮັບໄດ້ 15 ລ້ານ ກີບ. ໃນຄະນະດຽວກັນ, ໃນລະຫວ່າງການປຶກສາທີມງານໄດ້ທົບທວນເບິ່ງຂໍ້ມູນໃນແຫຼ່ງຕ່າງໆລວມທັງໃນອິນເຕີເນັດຫາລືພົບວ່າເພື່ອໄດ້ມາຜົນຜະລິດທີ່ສູງໃນລະດັບນັ້ນມັນອາດເປັນໄປໄດ້ຍາກຖ້າປາສະຈາກສະໜັບສະໜູນທາງດ້ານເຕັກນິກຢ່າງຈິງຈັງ ແລະ ວິທີການທີ່ກ້າວໜ້າ. ພາຍຫຼັງທີ່ໄດ້ພິຈາລະນາຂໍ້ມູນຄືນໃໝ່ ທ່ານ ຄຳປອງ ອະທິບາຍວ່າມີຊາວກະສິກອນຈຳນວນໜຶ່ງໄດ້ທົດລອງປູກມັນດ້າງຊຶ່ງຜົນຜະລິດແມ່ນຢ່າງນ້ອຍ 8.4 ໂຕນ ຕໍ່ ເຮັກຕາ ແລະ ຖ້າລາວນຳໃຊ້ພື້ນທີ່ຂອງລາວປູກ ແລະ ໄດ້ຜົນຜະລິດແບບນັ້ນລາວຄິດວ່າມັນຈະສ້າງລາຍຮັບດີກວ່າການປູກສາລີ.

ປະລິມານ ແລະ ຄຸນນະພາບຂອງຂໍ້ມູນ - ຂ່າວສານທີ່ທ່ານ ຄຳປອງ ໄດ້ຮັບອາດບໍ່ພຽງພໍທີ່ຈະປະເມີນທ່າແຮງ ແລະ ຄວາມເໝາະສົມຂອງພືດຊະນິດໃໝ່ທີ່ຈະປູກລວມທັງ ສິ່ງກ່າວອ້າງ ແລະ ຄຳໝັ້ນສັນຍາຂອງຜູ້ລົງທຶນ. ແຫຼ່ງຂໍ້ມູນສຳຄັນສຳລັບ ທ່ານ ຄຳປອງ ແມ່ນໄດ້ຈາກໝູ່ເພື່ອນ ແລະ ຍາດພີ່ນ້ອງລວມທັງຂໍ້ມູນທີ່ເປັນປະໂຫຍດສ່ວນໜ້ອຍຈາກຫ້ອງການກະສິກຳ-ປ່າໄມ້ເມືອງ. ທ່ານ ຄຳປອງ ເວົ້າວ່າ: "10 ຜ່ານມາເຈົ້າໜ້າທີ່ລົງມາຢ້ຽມຢາມບ້ານເປັນປະຈຳ ແລະ ກໍ່ງ່າຍສຳລັບການປະສານງານ ແລະ ແລ່ນໃບອະນຸຍາດຈາກຫ້ອງການກະສິກຳ-ປ່າໄມ້ ແລະ ການຄ້າ ເມືອງ ສຳລັບການສົ່ງອອກ. ປະຈຸບັນນີ້ພວກເຮົາເຮັດວຽກກັບຜູ້ລົງທຶນ, ຫ້ອງການກະສິກຳ-ປ່າໄມ້ເມືອງ ແລະ ການຄ້າໃຫ້ການເອົາໃຈໃສ່ຕໍ່ຜູ້ລົງທຶນ ແລະ ບໍ່ໄດ້ລົງມາຢ້ຽມຢາມບ້ານຫຼາຍປານໃດ. 2-3 ປີ ຜ່ານມາຫ້ອງການກະສິກຳ-ປ່າໄມ້ເມືອງ ແລະ ການຄ້າລົງມາບ້ານກັບຜູ້ລົງທຶນທີ່ມີຄວາມສົນໃຈຢາກປູກຢາສູບ, ແຕ່ມາຮອດປະຈຸບັນກໍ່ບໍ່ມີຄວາມຄືບໜ້າຫຍັງ,"

ເຖິງຢ່າງນັ້ນກໍ່ຕາມ, ທ່ານ ຄຳປອງ ຄິດວ່າການຜະລິດແບບມີຂໍ້ຕົກລົງສາມາດເປັນໄປໄດ້ຖ້າຊາວກະສິກອນ ແລະ ຜູ້ລົງທຶນຫາກເຮັດແທ້ທຳຈິງ ແລະ ສ້າງຄວາມເຊື່ອໝັ້ນໂດຍຜ່ານການຈັດຕັ້ງປະຕິບັດ ແລະ ພຶດຕິກຳຕົວຈິງ. "ມັນກ່ຽວພັນກັບຄວາມເຊື່ອໝັ້ນ ຫຼື ຄວາມຍຶດໝັ້ນໃນສັນຍາຂອງພວກເຮົາ. ຕົວຢ່າງ ຖ້າຢາກສ້າງຄວາມເຊື່ອໝັ້ນ, ແນ່ນອນພວກເຮົາຕ້ອງໄດ້ຮຽນຮູ້ຊຶ່ງກັນ ແລະ ກັນ, ຮັດແໜ້ນຄວາມສຳພັນ, ມີການສ້າງສັນເປັນບາງຄັ້ງຄາວ. ໃນນາມຫົວໜ້າກຸ່ມຜູ້ຜະລິດຂ້າພະເຈົ້າສາມາດຊຸກຍູ້ ຫຼື ກະຕຸ້ນຊາວກະສິກອນປະຕິບັດຕາມການຮຽກຮ້ອງຂອງຜູ້ລົງທຶນ."

ຊາວກະສອນມີຄວາມສົນໃຈກ່ຽວກັບການຜະລິດແບບມີຂໍ້ຕົກລົງ ແລະ ມີຄວາມເປັນໄປໄດ້ທີ່ຈະສະໜອງຜົນຜະລິດໃນລະດັບໃດໜຶ່ງທີ່ແນ່ນອນ ແລະ ລາຄາທີ່ຮັບປະກັນ. ເຖິງແນວໃດກໍ່ຕາມ, ແຕ່ຄວາມຕ້ອງການຂອງເຂົາເຈົ້າກໍ່ຄືການ ຜະລິດສຳລັບຕະຫຼາດເປີດ ຫຼື ທົ່ວໄປ. ທ່ານ ຄຳປອງ ເວົ້າວ່າ: "ທ່າອ່ຽງກໍ່ຄື ຊາວກະສິກອນຢາກລົງທຶນເອງ ແລະ ຂາຍໃນຕະຫຼາດທົ່ວໄປ. ເຖິງແນວໃດກໍ່ຕາມການຜະລິດແບບມີຂໍ້ຕົກລົງແມ່ນດີ; ມັນສາມາດຮັບປະກັນລາຍຮັບໃນລະດັບໃດໜຶ່ງທີ່ແນ່ນອນ. ສັນຍາທີ່ເປັນລາຍລັກອັກສອນສາມາດນຳໃຊ້ເພື່ອຮຽກຮ້ອງເງິນມັດຈຳລ່ວງໜ້າເພື່ອຄຳປະກັນລາຍຮັບໃນກໍລະນີທີ່ການຜະລິດບໍ່ໄດ້ຮັບຜົນ ຫຼື ຜູ້ລົງທຶນໜີປະທຸລະກິດ,"

## *ການສັງເກດການ ໂດຍທົ່ວໄປ*

ທ່ານ ຄຳປອງ ບອກວ່າຊາວກະສິກອນຢາກລົງທຶນດ້ວຍຕົນເອງອາດຈະເປັນຄວາມຄາດຫວັງທີ່ບໍ່ສາມາດເປັນຈິງໄດ້ຖ້າບັນຫາກ່ຽວກັບລາຄາ, ອຸປະສັກຕ່າງໆຊຶ່ງເຮັດໃຫ້ຊາວກະສິກອນຕ້ອງຍຸດຕິຄວາມພະຍາຍາມທີ່ຈະສົ່ງອອກໄປຍັງປະເທດໄທ ແລະ ເຂົ້າຮ່ວມການ

ຜະລິດແບບມີຂໍ້ຕົກລົງບໍ່ໄດ້ຮັບການແກ້ໄຂ. ເຖິງແນວໃດກໍ່ຕາມ, ຖ້າຄວາມຕ້ອງການຂອງພໍ່ຄ້າເພີ່ມຫຼາຍໃນອະນາຄົດ, ລາຄາຈະສູງຂຶ້ນເພາະວ່າການແຂ່ງຂັນທີ່ເພີ່ມຂຶ້ນ ແລະ ຖ້າຊາວກະສິກອນຫາກມີທຶນສະສົມພຽງພໍທີ່ຈະລົງທຶນໃນພັດທະນາການຜະລິດເຂົາເຈົ້າອາດສາມາດເຮັດໃຫ້ຄວາມຄາດຫວັງກາຍເປັນຈິງໄດ້.

ການຜະລິດສາລີແບບມີຂໍ້ຕົກລົງແມ່ນໄດ້ຮັບຜົນສຳເລັດມາໄດ້ຫຼາຍກວ່າທົດສະວັດເພາະວ່າມັນເປັນທາງເລືອກທີ່ໜ້າສົນໃຈທຽບກັບທາງເລືອກອື່ນທີ່ມີ ແລະ ຊາວກະສິກອນມີທຶນຈຳກັດທີ່ຈະລົງທຶນດ້ວຍຕົນເອງລວມທັງຄ່າໃຊ້ຈ່າຍສຳລັບສົ່ງອອກສູ່ຕະຫຼາດໃນປະເທດໄທ. ນອກນັ້ນ, ຜົນປະໂຫຍດທາງດ້ານເສດຖະກິດມີອິດທິພົນພຽງພໍເຮັດໃຫ້ການຜະລິດແບບມີສັນຍາເປັນໄປຕາມຂໍ້ຕົກລົງ. ຕາມຄຳເຫັນຂອງ ທ່ານ ຄຳປອງ ແລະ ກໍລະນີອື່ນໆເຫັນວ່າປັດໃຈໜຶ່ງຊ່ວຍໃຫ້ໄດ້ຮັບຜົນສຳເລັດແມ່ນຍ້ອນການປະຕິບັດຂໍ້ຕົກລົງດ້ວຍຄວາມເຊື່ອໝັ້ນຊຶ່ງກັນ ແລະ ກັນ ແລະ ຕ່າງຝ່າຍຕ່າງມີຜົນ. ເງື່ອນໄຂທາງດ້ານສັງຄົມເຫຼົ່ານັ້ນສ້າງພື້ນຖານສຳລັບການຈັດຕັ້ງປະຕິບັດຂໍ້ຕົກລົງ ແລະ ນຳໃຊ້ກາລະໂອກາດນັ້ນປະກົດຜົນເປັນຈິງ.

ມັນດ້າງແມ່ນພືດພັນຊະນິດໃໝ່ ແລະ ຊີ້ໃຫ້ເຫັນເຖິງການເພີ່ມຂຶ້ນຂອງຄວາມຕ້ອງການທີ່ຫຼາກຫຼາຍສຳລັບບ້ານນ້ຳບຸກ. ຖ້າທະໜົນຫົນທາງໄດ້ຮັບການປັບປຸງດີຂຶ້ນ, ມີລະບົບສື່ສານ - ລະບົບມືຖື ແລະ ຜູ້ຊື້ໃນ ສປ ຈີນທີ່ກຳລັງຊອກຫາແຫຼ່ງຜະລິດໃໝ່ຮັບຮູ້ກ່ຽວກັບກາລະໂອກາດດັ່ງກ່າວ; ການຜະລິດແບບມີຂໍ້ຕົກລົງອາດສາມາດຊ່ວຍເປີດໂອກາດສຳລັບພືດໃໝ່ເພື່ອຕອບສະໜອງຄວາມຕ້ອງການຂອງຕະຫຼາດ ໃນ ສປ ຈີນ.

### *ການສັງເກດການ – ລະບົບນິເວດ ແລະ ຄວາມຍືນຍົງ*

ການຜະລິດສາລີແບບມີຂໍ້ຕົກລົງຍັງບໍ່ທັນສິ້ນສຸດເພາະວ່າຊາວກະສິກອນຍັງສາມາດສະສົມທຶນ ແລະ ມີຄວາມເຊື່ອໝັ້ນທີ່ຈະລົງທຶນດ້ວຍຕົນເອງ. ແຕ່ມັນຈະສິ້ນສຸດລົງເພາະວ່າຜົນຜະລິດທີ່ຫຼຸດລົງເນື່ອງຈາກການເຊື່ອມໂຊມຄວາມອຸດົມສົມບູນຂອງດິນ. ຄວາມສຳພັນລະຫວ່າງຜົນຜະລິດ, ດິນ ແລະ ວິທີການປູກມີຄວາມສະລັບຊັບຊ້ອນ; ເນື່ອງຈາກບໍ່ມີຂໍ້ມູນພຽງສຳລັບການຈະວິໃຈ, ສະນັ້ນ, ການສຶກສານີ້ໄດ້ຕັ້ງສົມມຸດຖານວ່າ, ໂດຍທົ່ວໄປຄວາມອຸດົມສົມບູນຂອງດິນຈະຫຼຸດລົງຍ້ອນ ການນຳໃຊ້ຊະນິດພັນສາລີ ແລະ ເຕັກນິກການປູກຝັງ ທີ່ບໍ່ເໝາະສົມ ກັບ ເງື່ອນໄຂສິ່ງແວດລ້ອມ; ແລະ ໃນທີ່ສຸດເຮັດໃຫ້ການຜະລິດນັ້ນຈຶ່ງບໍ່ຍືນຍົງ.

ບັນຫາກ່ຽວກັບການເຊື່ອມໂຊມຄວາມອຸດົມສົມບູນຂອງດິນອາດເພີ່ມຂຶ້ນເມື່ອມີຜູ້ລົງທຶນໃນການຜະລິດເພີ່ມຂຶ້ນເພາະວ່າເຂົາເຈົ້າມັກຈະສະໜອງຊັບພະຍາກອນສຳລັບການຜະລິດໃນພື້ນທີ່ໃຫຍ່ ແລະ ມີການນຳໃຊ້ດິນຢ່າງໜັກໜ່ວງ ແລະ ຫຼາຍກວ່າທີ່ຊາວກະສິກອນເຄີຍປະຕິບັດຜ່ານມາເຊັ່ນ: ປະຕິບັດໃນເງື່ອນໄຂທີ່ມີທຶນ, ເທັກໂນໂລຊີ ແລະ ຕະຫຼາດຈຳກັດ. ໃນຂະນະດຽວກັນ, ໃນ ສປປ ລາວ ການຜະລິດແບບມີຂໍ້ຕົກລົງອາດສາມາດຊ່ວຍໃຫ້ເຂົ້າເຖິງແຫຼ່ງທຶນ ແລະ ເອົາຊະນະບັນຫາກ່ຽວກັບຂໍ້ຫຍຸ້ງຍາກທາງດ້ານຊັບພະຍາກອນຊຶ່ງອາດປ້ອງຊາວກະສິກອນໃນການຜະລິດເກີນຄວາມອາດສາມາດໃນການຮອງຮັບ ຫຼື ລະດັບຄວາມຍືນຍົງຂອງລະບົບນິເວດ.

ເປັນທີ່ຊັດເຈນຢູ່ແລ້ວວ່າປັດໃຈຕົ້ນຕໍໜຶ່ງສຳລັບການຜະລິດແບບມີຂໍ້ຕົກລົງແມ່ນນິເວດວິທະຍາຊຶ່ງເຮັດໜ້າເປັນໝາກຫົວໃຈຂອງການຜະລິດ ເຊັ່ນ: ຊັບພະຍາກອນດິນຊຶ່ງເປັນຕົວຄ້ຳຊູຜົນຜະລິດ. ມັນອາດເປັນສົມມຸດຖານທີ່ສົມເຫດສົມຜົນເພາະວ່າບ່ອນທີ່ຜົນຜະລິດຍັງໄດ້ຮັບຜົນດີນັ້ນແມ່ນຍ້ອນການຜະລິດທີ່ບໍ່ເກີນລະດັບຄວາມສາມາດໃນການຮອງຮັບຂອງສິ່ງແວດລ້ອມ. ເຖິງແນວໃດກໍ່ຕາມ, ບ່ອນໃດທີ່ມີການຜະລິດເກີນລະດັບຄວາມຍືນຍົງນັ້ນການຜະລິດແບບມີສັນຍາອາດເປັນກົນໄກໜຶ່ງສຳລັບການລະດົມທຶນເພີ່ມເພື່ອແກ້ໄຂບັນຫາການເຊື່ອມໂຊມຂອງລະບົບນິເວດໂດຍສະເພາະແມ່ນດິນຊຶ່ງເປັນປັດໃຈພື້ນຖານສຳລັບການຮັບປະກັນທາງດ້ານສະບຽງອາຫານ, ຊີວິດການເປັນຢູ່ ແລະ ການປັບຕົວໃນລະດັບຊາດ. ສະນັ້ນອາດຕັ້ງສົມມຸດຖານສະເພາະໄດ້ວ່າການຜະລິດແບບມີຂໍ້ຕົກລົງຊ່ວຍໃຫ້ໄດ້ຮັບຜົນຜະລິດສູງໄດ້, ແຕ່ໃນສະພາບເງື່ອນໄຂໃດໜຶ່ງ, ມັນອາດເຮັດໃຫ້ມີການນຳໃຊ້ຊັບພະຍາກອນເກີນລະດັບຄວາມຍືນຍົງທີ່ຈະຮັກສາລະບົບນິເວດທີ່ຈະຮັກສາທີ່ດິນເພື່ອສະໜອງບໍລິການຕະຫຼອດໄປໄດ້.

ເຖິງຢ່າງນັ້ນກໍ່ຕາມ, ນອກຈາກຜົນປະໂຫຍດທາງດ້ານເສດຖະກິດແລ້ວ, ມັນຍັງມີຫຼາຍດ້ານທີ່ຕ້ອງໄດ້ພິຈາລະນາສຳລັບການຜະລິດເພາະວ່າ: 1) ຊາວກະສິກອນ ແລະ ບາງຄັ້ງຜູ້ລົງທຶນ, ອາດບໍ່ໄດ້ຮັບຂໍ້ມູນ-ຂ່າວສານທີ່ພຽງພໍໃນການຄັດເລືອກຊະນິດພັນ ແລະ ລະບົບການຜະລິດທີ່ເໝາະສົມກັບເງື່ອນໄຂ ແລະ ສະພາບຂອງທ້ອງຖິ່ນ. 2) ຊາວກະສິກອນຄາດຫວັງແຕ່ຜົນປະໂຫຍດໂດຍບໍ່ໄດ້ຄຳນຶງເຖິງຕົ້ນທຶນ ຫຼື ລະບົບນິເວດ; ຊຶ່ງເຮັດໃຫ້ຊາວກະສິກອນເລັ່ງສ້າງລາຍຮັບ, ສະສົມທຶນເພື່ອປັບປຸງຊີວິດການເປັນຢູ່ ແລະ ເຮັດການຜະລິດທີ່ອາດ

ຈະເກີນລະດັບຄວາມຍືນຍົງ. 3) ຜູ້ລົງທຶນຄາດວ່າຜົນກະທົບຂອງການຜະລິດທີ່ບໍ່ຍືນຍົງສາມາດແກ້ໄຂໄດ້ ຫຼື ແກ້ໄຂດ້ວຍການເຮັດການຜະລິດກັບຊາວກະສິກອນທີ່ມີທີ່ດິນໃນເຂດອື່ນເພື່ອທົດແທນຜົນຜະລິດຫຼຸດລົງໃນເຂດໜຶ່ງ. 4) ບາງຄັ້ງຍ້ອນບໍ່ໄດ້ຮັບຂໍ້ມູນ-ຂ່າວສານຢ່າງພຽງພໍ, ຊາວກະສິກອນ ແລະ ລວມທັງຜູ້ລົງທຶນອາດເຊື່ອວ່າການນຳໃຊ້ເທັກໂນໂລຊີທີ່ທັນສະໄໝອາດຈະຍືນຍົງ ແລະ ສາມາດລະຖິ້ມລະບົບການຜະລິດແບບດັ້ງເດີມທີ່ໃຫ້ຜົນຜະລິດຕ່ຳກວ່າທັ້ງໆໃນຕົວຈິງມັນອາດມີຄວາມຍືນຍົງກວ່າ.

ສຳລັບຊາວກະສິກອນເຖິງແມ່ນວ່າການຜະລິດຈະບໍ່ຍືນຍົງແຕ່ຖ້າການຜະລິດນັ້ນສາມາດສ້າງທຶນຮອນໃຫ້ຊາວກະສິກອນພຽງພໍທີ່ຈະລົງທຶນໃນການພັດທະນາຊີວິດການເປັນຢູ່, ມີລາຍຮັບສູງຂຶ້ນ; ສຳລັບຊາວກະສິກອນມັນອາດເປັນການແລກປ່ຽນໃນທາງບວກ. ແລະ ແນ່ນອນໃນທາງກົງກັນຂ້າມ, ຖ້າການຜະລິດທີ່ບໍ່ຍືນຍົງນັ້ນບໍ່ປະສົມຜົນສຳເລັດໃນການສ້າງທຶນຮອນທີ່ພຽງພໍສຳລັບຊາວກະສິກອນເພື່ອກ້າວໄປສູ່ຄວາມຈະເລີນ ແລະ ຮັບປະກັນຊີວິດການເປັນຢູ່, ການແລກປ່ຽນນັ້ນເປັນທາງລົບ. ແນວໃດກໍ່ຕາມ, ສຳລັບປະເທດຊາດການແລກປ່ຽນນັ້ນຖືວ່າເປັນທາງລົບເພາະວ່າເພື່ອຮັບປະກັນທາງດ້ານສະບຽງອາຫານມັນຮຽກຮ້ອງໃຫ້ມີການປົກປັກຮັກສາທີ່ດິນກະສິກຳທີ່ຈຳກັດທີ່ມີຊຶ່ງປະເທດກຳລັງປະເຊີນກັບສິ່ງທ້າທາຍຈາກພາຍນອກຄື: ການຫັນທີ່ດິນໃຫ້ເປັນທຶນລວມທັງເປັນການສ້າງຄວາມເສຍຫາຍຕໍ່ຊັບພະຍາກອນ ແລະ ຕ່ອງໂສ້ອາຫານ (Fullbrook 2010, 52, 58, 107).

ໃນສະພາບຜົນຜະລິດທີ່ຫຼົ້ມລະລາຍໃນໄລຍະສັ້ນທີ່ຊາວກະສິກອນ ແລະ ຜູ້ລົງທຶນອາດມີຮັບ, ແຕ່ໃນໄລຍະຍາວຄ່າໃຊ້ຈ່າຍສຳລັບການຟື້ນຟູລະບົບນິເວດກໍ່ຄືການສູນເສຍຄວາມອຸດົມສົມບູນດິນຕົກຢູ່ໃນ ຄວາມຮັບຜິດຊອບຂອງຊາວກະສິກອນ ແລະ ປະເທດຊາດ. ຫຼືເວົ້າອີກຢ່າງໜຶ່ງຄືຄ່າໃຊ້ຈ່າຍທາງດ້ານສັງຄົມແມ່ນຊຸມຊົນ ແລະ ຊາວກະສິກອນເປັນຜູ້ຮັບຜິດຊອບໃນຄະນະດຽວກັນຜົນປະໂຫຍດແມ່ນຕົກຢູ່ກັບຜູ້ລົງທຶນພຽງຈຳນວນໜຶ່ງ. ນອກນັ້ນ, ການຫຼຸດລົງຄວາມອາດສາມາດໃນການຜະລິດຍັງມີຜົນກະທົບຕໍ່ຜູ້ລົງທຶນໂດຍສະເພາະແມ່ນໃນກໍລະນີທີ່ເຂົາເຈົ້າບໍ່ສາມາດຊອກຫາແຫຼ່ງທຳການຜະລິດອື່ນທົດແທນບ່ອນທີ່ຜົນຜະລິດຫຼຸດລົງຍ້ອນດິນເຊື່ອມໂຊມ. ໃນດ້ານຄວາມຍຸດຕິທຳ ແລະ ຜົນກະທົບ, ເຫັນວ່າຊາວກະສິກອນຈະເປັນຜູ້ຮັບພາລະຫຼາຍກວ່າເພາະວ່າເຂົາເຈົ້າຍາກຈົນກວ່າຜູ້ລົງທຶນ. ນອກນັ້ນ, ການລົງທຶນ ໃນສັກລະນະດັ່ງກ່າວອາດເຮັດໃຫ້ມີບັນຫາກ່ຽວກັບທີ່ດິນ ແລະ ແຮງງານ; ແລະ ການລົງທຶນໃນປະຈຸບັນ ຍັງບໍ່ໄດ້ສະໜອງທຶນ ຫຼື ສິ່ງກະຕຸກຊຸກຍູ້ເພື່ອຫຼຸດຜ່ອນ ແລະ ຫຼີກລ່ຽງບັນຫາເຫຼົ່ານີ້.

ຕາມເຕັກນິກແລ້ວການຟື້ນຟູຄວາມອຸດົມສົມບູນຂອງດິນອາດມີຄວາມເປັນໄປໄດ້ແຕ່ມັນອາດຮຽກຮ້ອງໃຫ້ມີການຊ່ວຍເຫຼືອທາງດ້ານການເງິນ. ຊາວກະສິກອນຝ່າຍດຽວອາດບໍ່ສາມາດເຂົ້າເຖິງທຶນເພື່ອມາແກ້ໄຂບັນຫາດັ່ງກ່າວ. ແນ່ນອນການຟື້ນຟູຄວາມອຸດົມສົມບູນຂອງດິນຮຽກຮ້ອງໃຫ້ມີການລົງທຶນຈາກພາກລັດ ແລະ ການປະກອບສ່ວນຈາກຜູ້ລົງທຶນຕົວຢ່າງ: ໃນຮູບແບບການເກັບຄ່າບໍລິຫານ ຫຼື ການແລກປ່ຽນກັບກໍລະນີທີ່ຜູ້ລົງທຶນຕ້ອງການຜູກຂາດກັບຊາວກະສິກອນໃນຊ່ວງໃດໜຶ່ງເພື່ອເຮັດການຜະລິດແບບມີຂໍ້ຕົກລົງ.

ໃນອະນາຄົດການຫຼຸດຜ່ອນບັນຫາເຫຼົ່ານັ້ນອາດຈະເຮັດໄດ້ດ້ວຍຫຼາຍວິທີ ຄື: 1) ການນຳໃຊ້ຄວາມຮູ້ ແລະ ວິທີການທີ່ເໝາະສົມເຂົ້າໃນການຜະລິດແບບມີສັນຍາ. 2) ສະຖາບັນ ແລະ ອົງການຈັດຕັ້ງ ຕ້ອງມີການຮ່ວມມືຫຼາຍຝ່າຍ ໃນການ ປົກປັກຮັກສາ ແລະ ຟື້ນຟູດິນ. 3) ສຶກສາ ແລະ ໃຫ້ຂໍ້ມູນຊາວກະສິກອນເພື່ອພິຈາລະນາພືດ ແລະ ລະບົບການຜະລິດທີ່ຊ່ວຍບຳລຸງຮັກສາດິນເຂົ້າໃນບົດສະເໜີໂດຍຜູ້ລົງທຶນ.

ສຳລັບພືດບາງຊະນິດຖ້າຮັກສາການຜະລິດໃຫ້ຢູ່ໃນລະດັບຄວາມຍືນຍົງຂອງດິນ ແລະ ວາງມາດຕະການເພື່ອສົ່ງເສີມການປົກປັກຮັກສາດິນ, ມັນອາດບໍ່ໄດ້ຮັບຜົນຜະລິດເທົ່າກັບການຜະລິດທີ່ເກີນລະດັບຂອງຄວາມຍືນຍົງ. ມີຄວາມຍືນຍົງແຕ່ຖ້າຜົນຜະລິດຕ່ຳກໍ່ອາດເປັນໄປໄດ້ຍາກທີ່ຜູ້ລົງທຶນຈະສະໜອງສິ່ງກະຕຸກຊຸກຍູ້ທາງດ້ານເສດຖະກິດໃນການຜະລິດແບບມີຂໍ້ຕົກລົງ. ນອກນັ້ນມັນຂຶ້ນກັບປັດໃຈອື່ນໆເຊັ່ນ: ສະພາບແວດລ້ອມລະບົບນິເວດໃນທ້ອງຖິ່ນ, ປັດໃຈທາງດ້ານການຂົນສົ່ງ ແລະ ຄຸ້ມຄອງຕະຫຼາດ. ການພັດທະນາລະບົບການຜະລິດແບບຍືນຍົງ ທີ່ ໃຫ້ຜົນຜະລິດຫຼາຍ ເທົ່າທີ່ເປັນໄປໄດ້ແຕ່ຢູ່ໃນລະດັບຄວາມຍືນຍົງເປັນສິ່ງທ້າທາຍຫຼາຍ. ແນວໃດກໍ່ຕາມ, ມັນມີຫຼາຍວິທີການໄດ້ຮັບການພັດທະນາ ແລະ ນຳໃຊ້ໃນປະເທດທີ່ກຳລັງພັດທະນາໃນທົ່ວໂລກ (Pretty, et al. 2006) ຊຶ່ງໂດຍທົ່ວໄປແລ້ວສາມາດເພີ່ມຜົນຜະລິດ (Altieri 2002, 10, 17, 20, 21) ການສະເໜີໃຫ້ມີການຄົ້ນຄວ້າວິທີການຜະລິດກະສິກຳແບບຍືນຍົງຕາມແຕ່ສະພາບເງື່ອນໄຂອາດສາມາດດຶງດູດຄວາມສົນໃຈ ແລະ ສ້າງກາລະໂອກາດ ລະດົມທຶນສຳລັບການພັດທະນາທຸລະກິດກະສິກຳ ໃນ ສປປ ລາວ .

## ສະຫຼຸບ

- ຜູ້ລົງທຶນທ້ອງຖິ່ນ ແລະ ຊາວກະສິກອນມີຄວາມສົນໃຈທີ່ຈະລົງທຶນທາງດ້ານເວລາ, ມີຄວາມພະຍາຍາມໃນການສ້າງຄວາມເຊື່ອໝັ້ນ ແລະ ພັດທະນາຄວາມສຳພັນນັ້ນເປັນການສະໜັບສະໜູນກົນໄກການຜະລິດແບບມີຂໍ້ຕົກລົງ;
- ການທີ່ຊາວກະສິກອນຕ້ອງການລົງທຶນໃສ່ການຜະລິດສະແດງໃຫ້ຮູ້ວ່າມັນມີຄວາມຕ້ອງການຜົນຜະລິດ ແລະ ການແຂ່ງຂັນລະຫວ່າງພໍ່ຄ້າ ສູງ;
- ການຜະລິດແບບມີຂໍ້ຕົກລົງສາມາດເຮັດໃຫ້ຄວາມອຸດົມສົມບູນຫຼຸດລົງ;
- ອາດເພີ່ມຜົນຜະລິດ ແລະ ລາຍຮັບໄລຍະສັ້ນແຕ່ອາດມີຄ່າໃຊ້ຈ່າຍສຳລັບການຟື້ນຟູຄວາມອຸດົມສົມບູນຂອງດິນ, ຜົນຜະລິດ ແລະ ລາຍຮັບໃນໄລຍະຍາວ;
- ການຜະລິດແບບມີຂໍ້ຕົກລົງໃນປະຈຸບັນບໍ່ໄດ້ກວມເອົາຮູບແບບການຜະລິດທີ່ຍືນຍົງ;
- ອົງການຈັດຕັ້ງທີ່ຄຸ້ມຄອງ ຫຼື ຄວາມຮັບຜິດຊອບທີ່ກ່ຽວຂ້ອງການຜະລິດແບບຄວາມຍືນຍົງ ແລະ ການຜະລິດແບບມີຂໍ້ຕົກລົງຍັງບໍ່ຈະແຈ້ງ;
- ຫ້ອງການກະສິກຳ-ປ່າໄມ້ເມືອງ ສຸມຊຸບພະຍາກອນທີ່ມີຢ່າງຈຳກັດໃສ່ຜູ້ລົງທຶນເພາະເຫັນວ່າມັນເປັນເສັ້ນທາງທີ່ມີປະສິດທິພາບສູງສຸດທີ່ພາກລັດສາມາດບັນລຸເປົ້າໝາຍການຫຼຸດຜ່ອນຄວາມທຸກຈົນໂດຍການເພີ່ມຜົນຜະລິດ;
- ຊາວກະສິກອນຍັງບໍ່ມີຄວາມສາມາດພຽງພໍທີ່ຈະປະເມີນກາລະໂອກາດທາງດ້ານທຸລະກິດກະສິກຳຊຶ່ງຈຳເປັນຕ້ອງໄດ້ມີການຝຶກອົບຮົມ ແລະ ພັດທະນາທັກສະຄວາມຮູ້ທີ່ເໝາະສົມ;
- ເພື່ອການພັດທະນາແບບຍືນຍົງມັນຮຽກຮ້ອງໃຫ້ມີການລົງທຶນໃນການຄົ້ນຄ້ວາ ແລະ ການພັດທະນາທາງເລືອກ, ການປັບຕົວ ແລະ ທຸລະກິດກະສິກຳຂະໜາດນ້ອຍທີ່ໃຫ້ຜົນຜະລິດສູງ;

## *ປັດໃຈທີ່ໃຫ້ເກີດຜົນສຳເລັດ*

1. ຄວາມເຊື່ອໝັ້ນ ແລະ ຄວາມສຳພັນ;
2. ຂໍ້ມູນ-ຂ່າວສານ ກ່ຽວກັບລາຄາເພື່ອປຽບທຽບກັບລາຄາທີ່ສະເໜີໂດຍຜູ້ລົງທຶນ;

### ຄຳຖາມ

ກ. ມີມາດຕະການຫຍັງແດ່ ທີ່ຊ່ວຍຮັກສາ, ເສີມສ້າງຄວາມເຊື່ອໝັ້ນ ແລະ ເຮັດໃຫ້ຕ່າງຝ່າຍຕ່າງມີຜົນ?

ຂ. ມີທາງເລືອກຫຍັງແດ່ທີ່ຜູ້ລົງທຶນສາມາດພັດທະນາ ແລະ ສະໜອງທຶນໃຫ້ຊາວກະສິກອນ ແລະ ເຮັດໃຫ້ເຂົາເຈົ້າສາມາດລົງທຶນດ້ວຍຕົນເອງ?

ຄ. ຄວນຈະສະໜັບສະໜູນການຜະລິດຮູບແບບໃດຈຶ່ງຈະຍືນຍົງ?

ງ. ມີເຫດຜົນ ແລະ ປະເດັນຫຍັງແດ່ກ່ຽວກັບການຜະລິດແບບຍືນຍົງທີ່ຈະຕ້ອງໄດ້ແກ້ໄຂສຳລັບການຜະລິດແບບມີຂໍ້ຕົກລົງ ຫຼື ການຜະລິດຮູບແບບອື່ນໆ?

ຈ. ມີເຫດຜົນຫຍັງແດ່ທີ່ພາກລັດໂດຍສະເພາະແມ່ນກົມ ຫຼື ຫ້ອງການ ເຊັ່ນ: ຫ້ອງການກະສິກຳ-ປ່າໄມ້ເມືອງທີ່ຕ້ອງໄດ້ຮັບຜິດຊອບເພື່ອຮັບປະກັນການຜະລິດແບບຍືນຍົງ ?

ສ. ການຜະລິດແບບຍືນຍົງຈະໄດ້ຮັບຜົນປະໂຫຍດຫຍັງຕໍ່ການຈັດທະບຽນການຈັດຕັ້ງປະຕິບັດການຜະລິດແບບມີຂໍ້ຕົກລົງ?

ຊ. ມັນຕ້ອງການຫຍັງແດ່ ຫຼື ເວລາເທົ່າໃດ ເພື່ອຊຸກຍູ້ການການປົກປັກຮັກສາດິນ ໃນຮູບແບບ ແລະ ວິທີການຄ້າຍຄືກັບກຸ່ມຜູ້ນຳໃຊ້ນ້ຳ?

ຍ. ມີຄວາມຈຳເປັນຫຍັງທີ່ ຫ້ອງການກະສິກຳ-ປ່າໄມ້ເມືອງຕ້ອງໄວ້ເນື້ອເຊື່ອໃຈ ແລະ ປ່ອຍໃຫ້ຜູ້ລົງທຶນຮັບຜິດຊອບການຜະລິດ?

ດ. ການຜະລິດຈະມີປະສິດທິພາບ ແລະ ປະສິດທິຜົນເພີ່ມຂຶ້ນບໍ ຖ້າ ຫ້ອງການກະສິກຳ-ປ່າໄມ້ເມືອງລົງຢ້ຽມຢາມຊາວກະສິກອນໃນພາກສະໜາມ ຫຼື ຊາວກະສິກອນເຂົ້າມາເຮັດວຽກກັບ ຫ້ອງການກະສິກຳ-ປ່າໄມ້ເມືອງຫຼາຍຂຶ້ນ ?

## 8.6. ກໍລະນີ 6. ການລົງທຶນທີ່ມີເງິນມັດຈຳ

**ເມືອງນາໝໍ້, ແຂວງອຸດົມໄຊ**



ທ່ານ ຮຸນແດງ ແພງພະຈັນ, ຫົວໜ້າໜ່ວຍງານປູກຝັງຫ້ອງການກະສິກຳ ແລະ ປ່າໄມ້ ເມືອງນາໝໍ້

### ປະສົບການ

ທ່ານ ຮຸນແດງ ແພງພະຈັນ ຄິດວ່າການກະສິກຳຈະມີອະນາຄົດໄກ. ພາຍຫຼັງທີ່ ທ່ານ ຮຸນແດງ ໄດ້ຍ້າຍອອກຈາກຕຳຫຼວດໃນແຂວງຫຼວງນ້ຳທາເພື່ອໄປສຶກສາຕໍ່ທາງດ້ານການກະເສດໄດ້ກັບຄືນມາເຮັດວຽກກັບລັດຊຶ່ງສັງກັດຢູ່ຫ້ອງການກະສິກຳ - ປ່າໄມ້ເມືອງນາໝໍ້, ແຂວງອຸດົມໄຊ. ທ່ານ ຮຸນແດງ ເປັນຫົວໜ້າໜ່ວຍງານປູກຝັງ ແລະ ທັງເປັນຜູ້ປະສານງານໂຄງການLEAP, ຊຶ່ງໜ້າວຽກຫຼັກໜຶ່ງແມ່ນສຸມໃສ່ການຊ່ວຍເຫຼືອການຈັດຕັ້ງກຸ່ມຜູ້ຜະລິດ ແລະ ການເຂົ້າເຖິງແຫຼ່ງທຶນໂດຍສະເພາະແມ່ນທະນາຄານນະໂຍບາຍ. ໃນການສົນທະນາແລກປ່ຽນຄວາມຄິດເຫັນທີ່ຫ້ອງການກະສິກຳ - ປ່າໄມ້ເມືອງນາໝໍ້ກ່ອນອາຫານທ່ຽງ ທ່ານ ຮຸນແດງ ໄດ້ອະທິບາຍກ່ຽວກັບບົດບາດຂອງຫ້ອງການກະສິກຳ - ປ່າໄມ້ເມືອງທີ່ພົວພັນກັບການຜະລິດແບບມີຂໍ້ຕົກລົງ.

ຄຸນນະພາບຂອງການລົງທຶນໄດ້ຖືກປັບປຸງເມື່ອຜູ້ລົງທຶນຈຳເປັນຕ້ອງຈ່າຍເງິນມັດຈຳກັບຫ້ອງການກະສິກຳ ແລະ ປ່າໄມ້ເມືອງ ເພື່ອຮັບປະກັນປະສິດທິພາບຂອງການດຳເນີນງານ

ຫ້ອງການກະສິກຳ-ປ່າໄມ້ເມືອງໄດ້ໃຫ້ການຊ່ວຍເຫຼືອຫຼາຍຢ່າງຕໍ່ຜູ້ລົງທຶນ. ຫ້ອງການກະສິກຳ - ປ່າໄມ້ເມືອງເປັນຜູ້ກວດສອບຜູ້ລົງທຶນ, ຊະນິດພັນພືດທີ່ເໝາະສົມ ແລະ ເນື້ອທີ່ສຳລັບການຜະລິດຂອງຊາວກະສິກອນທີ່ຜູ້ລົງທຶນສະເໜີມາວ່າມີທ່າແຮງ ແລະ ຄວາມເປັນໄປໄດ້. ຄ່າໃຊ້ຈ່າຍສຳລັບການລົງເກັບກຳຂໍ້ມູນແມ່ນຜູ້ລົງທຶນເປັນຜູ້ຮັບຜິດຊອບ. ຫ້ອງການກະສິກຳ - ປ່າໄມ້ເມືອງຮັບຜິດຊອບການຮ່າງສັນຍາ. ແຕ່ໃນກອງປະຊຸມລະຫວ່າງຜູ້ລົງທຶນ, ຕົວແທນຂອງຊາວກະສິກອນຈະມີຕົວແທນຈາກຫ້ອງການກະສິກຳ - ປ່າໄມ້ເມືອງ, ການຄ້າ, ແຜນການ ແລະ ການລົງທຶນ/ການເງິນເຂົ້າຮ່ວມ. ທ່ານ ຮຸນແດງເວົ້າວ່າ: "ຂ້າພະເຈົ້າບໍ່ແນ່ໃຈວ່າເປັນຫຍັງບົດບາດໃນການອຳນວຍຄວາມສະດວກການຜະລິດເປັນສິນຄ້າແບບມີຂໍ້ຕົກລົງນີ້ແມ່ນຄວາມຮັບຜິດຊອບຂອງຫ້ອງການກະສິກຳ - ປ່າໄມ້ເມືອງແຕ່ສິ່ງທີ່ຂ້າພະເຈົ້າຮູ້ແມ່ນພວກເຮົາປົກປ້ອງສິດຜົນປະໂຫຍດຂອງຊາວກະສິກອນ. ສະນັ້ນ, ພວກເຮົາຈຳຕ້ອງໄດ້ຮັບປະກັນໃຫ້ມີສັນຍາທີ່ເປັນລາຍລັກອັກສອນ, ລວມທັງການວາງເງິນຄໍ້າປະກັນຈຳນວນໜຶ່ງລ່ວງໜ້າກັບຫ້ອງການກະສິກຳ - ປ່າໄມ້ເມືອງ,"

ພາຍຫຼັງທີ່ຊາວກະສິກອນໄດ້ລົງມືທຳການຜະລິດຜູ້ລົງທຶນຈຳຕ້ອງໄດ້ວາງເງິນມັດຈຳກັບຫ້ອງການກະສິກຳ - ປ່າໄມ້ເມືອງໃນຈຳນວນປະມານ 10% ຂອງມູນຄ່າທີ່ຄາດຈະເກັບຊື້ ຫຼື ທຽບເທົ່າມູນຂອງຄ່າແຮງງານຂອງຊາວກະສິກອນ. ທ່ານ ຮຸນແດງ ອະທິບາຍວ່າ: "ພວກເຮົາຕ້ອງການແນ່ໃຈວ່າຜູ້ລົງທຶນຕ້ອງການລົງທຶນໃນພື້ນທີ່ ທີ່ສະເໜີມາຢ່າງແທ້ຈິງ. ສະນັ້ນ, ພວກເຮົາຈິ່ງຮ້ອງຂໍໃຫ້ມີການມັດຈຳ. ພາຍຫຼັງສຳເລັດການຜະລິດໃນລະດູການແລ້ວພວກເຮົາຈະເອີ້ນຜູ້ລົງທຶນມາປະຊຸມເພື່ອກວດກາຄືນວ່າ: ຜູ້ລົງທຶນຍັງມີຄ່າໃຊ້ຈ່າຍຄ້າງກັບຕົວແທນ ຫຼື ຊາວກະສິກອນ ຫຼື ບໍ່. ຖ້າບໍ່ມີພວກເຮົາຈະສົ່ງເງິນມັດຈຳນັ້ນຄືນໃຫ້ຜູ້ລົງທຶນ,"

ນອກນັ້ນ, ມັນຍັງມີສິ່ງກະຕຸກຊຸກຍູ້ສຳລັບຊາວກະສິກອນເພື່ອຊຸກຍູ້ - ສົ່ງເສີມການຜະລິດໃຫ້ໄດ້ຮັບຜົນດີ. ພາຍຫຼັງເກັບກ່ຽວແລ້ວຊາວກະສິກອນຈະໄດ້ຮັບຄ່າເຊົ່າທີ່ດິນຈາກຜູ້ລົງທຶນໂດຍອີງໃສ່ເນື້ອທີ່ຕົວຈິງທີ່ນຳໃຊ້ເຂົ້າໃນການຜະລິດ. ຜ່ານມາຜູ້ລົງທຶນຈາກ ສປ ຈີນຈ່າຍ 75 ຢວນ, ຫຼື ປະມານ 93,500 ກີບ, ຕໍ່ ເຮັກຕາ . ທ່ານ ຮຸນແດງ ຄິດວ່າຄວາມເຂົ້າໃຈຈະແຈ້ງ ລະຫວ່າງຊາວກະສິກອນ ແລະ ຜູ້ລົງທຶນເປັນປັດໃຈທີ່ສຳຄັນທີ່ຈະກໍ່ໃຫ້ເກີດປະສິບຜົນສຳເລັດສຳລັບການຜະລິດແບບມີຂໍ້ຕົກລົງ. ທ່ານ ຮຸນແດງ ເວົ້າວ່າ: "ສິ່ງທີ່ສຳຄັນທີ່ສຸດແມ່ນ, ຖ້າທ່ານເປັນຜູ້ລົງທຶນໃໝ່ທ່ານຕ້ອງໄດ້ສະເໜີແຜນການລົງທຶນຕໍ່ການຈັດຕັ້ງຂອງບ້ານ ແລະ ຮູ້ວ່າຊາວກະສິກອນຕ້ອງການຫຍັງ. ສິ່ງນີ້ຈຳເປັນຕ້ອງໄດ້ເວົ້າຢ່າງຈະແຈ້ງຕັ້ງແຕ່ເບື້ອງຕົ້ນ. ເພື່ອປະເມີນວ່າການລົງທຶນມີຄວາມເປັນໄປໄດ້ ຫຼື ບໍ່ພວກເຮົາຕ້ອງໄດ້ເບິ່ງຮູບແບບຂອງການລົງທຶນທີ່ສະເໜີ, ລາຄາ, ປັດໃຈການຜະລິດ ແລະ ລັກສະນະອື່ນໆ ຂອງທຸລະກິດການລົງທຶນ,"

### *ການສັງເກດການ*

ການໃຫ້ຂໍ້ມູນຂອງຫ້ອງການກະສິກຳ-ປ່າໄມ້ເມືອງທີ່ຖືກຕ້ອງ, ຊັດເຈນຈະຊ່ວຍຫຼຸດຜ່ອນຄວາມບໍ່ແນ່ນອນ ແລະ ການເຂົ້າໃຈຜິດ. ຂໍ້ມູນກ່ຽວກັບຂະໜາດຂອງພື້ນທີ່ ແລະ ຄວາມເໝາະສົມຈະເປັນປະໂຫຍດຊ່ວຍໃຫ້ຜູ້ລົງທຶນສາມາດຄາດຄະເນຜົນຜະລິດທີ່ຈະເປັນໄປໄດ້, ຜົນຕອບແທນ ແລະ ຂໍ້ສະເໜີທີ່ສົມເຫດສົມຜົນຕໍ່ຊາວກະສິກອນ. ການສະໜອງຂໍ້ມູນທີ່ຊັດເຈນ ແລະ ຖືກຕ້ອງກ່ຽວກັບຄວາມເປັນໄປໄດ້ຂອງການຜະລິດກະສິກຳແມ່ນວຽກວິຊາການຂອງຫ້ອງການກະສິກຳ-ປ່າໄມ້ເມືອງແຕ່ບໍ່ໝາຍວ່າເຂົາເຈົ້າມີຄວາມສາມາດໃນການຈັດຕັ້ງປະຕິບັດຕົວຈິງທັງໝົດ. ການຮ່າງສັນຍາອາດຈະບໍ່ແມ່ນວຽກງານຕົ້ນຕໍທີ່ກ່ຽວຂ້ອງທາງດ້ານວິຊາການຂອງຫ້ອງການກະສິກຳ - ປ່າໄມ້ເມືອງ. ເຖິງແນວໃດກໍ່ຕາມ, ໂດຍລວມແລ້ວອົງການຈັດຕັ້ງໃດກໍ່ຕາມທີ່ຮ່າງສັນຍາຕ້ອງໄດ້ຮັບຜິດຊອບໃນການວາງໂຄງຮ່າງຂອງສັນຍາ ແລະ ລະບຸເງື່ອນໄຂຂອງການເຮັດທຸລະກິດຊຶ່ງຄວນຈະມີຄວາມເທົ່າທຽມກັນ, ຍຸດຕິທຳ, ຈະແຈ້ງ ແລະ ຜ່ານການປຶກສາຫາລືກັບຜູ້ຜະລິດ ແລະ ຜູ້ລົງທຶນ. ນອກນັ້ນ, ສິ່ງທີ່ສຳຄັນຄື: ບຸກຄົນ ຫຼື ການຈັດຕັ້ງທີ່ຮ່າງສັນຍານັ້ນມີຄວາມສາມາດໃນການຮ່າງສັນຍາແທ້ບໍ. ໂດຍທົ່ວໄປແລ້ວມັນມີຄວາມເປັນໄປໄດ້, ຖ້າຜູ້ລົງທຶນປະກອບສ່ວນໃນການໃຊ້ຈ່າຍຕ່າງໆ.

ການຮຽກຮ້ອງໃຫ້ຜູ້ລົງທຶນຕ້ອງໄດ້ວາງເງິນມັດຈຳອາດມີທັງຜົນກະທົບທາງລົບ ແລະ ບວກຄື: 1) ອາດເຮັດໃຫ້ຜູ້ລົງທຶນທໍ້ຖອຍໂດຍສະເພາະຜູ້ທີ່ບໍ່ຈິງໃຈ ຫຼື ທຶນໜ້ອຍທີ່ຈະສະໜັບສະໜູນການການຜະລິດ ແລະ ຂົນສົ່ງຜົນຜະລິດສູ່ຕະຫຼາດຕ່າງໆ. 2) ອາດເຮັດໃຫ້ຈຳນວນຂອງຜູ້ລົງທຶນຫຼຸດລົງແຕ່ອາດເປັນການປັບປຸງຄຸນນະພາບຂອງຜູ້ລົງທຶນ. 3) ອາດເຮັດໃຫ້ຈຳນວນຜູ້ລົງທຶນທີ່ຮ້ອງຮຽນກັບຫ້ອງການກະສິກຳ-ປ່າໄມ້ເມືອງຫຼຸດລົງ. 4) ຫຼຸດຄວາມສ່ຽງຂອງ ຜູ້ລົງທຶນທີ່ອາດຈະຫຼົມເຫຼວ ຊຶ່ງອາດຈະສ້າງຜົນກະທົບ ຫຼື ບັນຫາຕໍ່ຄວາມໜ້າເຊື່ອຖືຂອງການກະສິກຳ-ປ່າໄມ້ເມືອງ. 5) ຊາວກະສິກອນ ແລະ ພະນັກງານຂອງລັດອາດຈະເອົາໃຈໃສ່ໃນການຜະລິດຫຼາຍຂຶ້ນເພາະວ່າຜູ້ລົງທຶນໄດ້ສະແດງຄວາມຈິງຈັງ

ດ້ວຍການວາງເງິນມັດຈຳ. 6) ສ້າງຄວາມເຊື່ອໝັ້ນໃຫ້ຜູ້ລົງທຶນໂດຍສະເພາະຜູ້ທີ່ບໍ່ມີເຄືອຂ່າຍທາງດ້ານສັງຄົມໃນທ້ອງຖິ່ນ ຫຼື ຍັງບໍ່ໄດ້ຮັບຄວາມເຊື່ອໝັ້ນຈາກພາກສ່ວນອື່ນໆ.

ມູນຄ່າຂອງເງິນມັດຈຳແມ່ນທຽບເທົ່າກັບຄ່າແຮງງານທີ່ຈະສະໜອງສຳລັບການຜະລິດຂອງຊາວກະສິກອນ. ຊາວກະສິກອນ ແລະ ພະນັກງານລັດອາດຈະມີມູມມອງທີ່ແຕກຕ່າງກັນວ່າຄ່າແຮງງານທີ່ຄາດຄະເນແມ່ນຍຸດຕິທຳ ຫຼື ຄ່າໃຊ້ຈ່າຍນັ້ນເປັນສ່ວນໜຶ່ງຂອງການຊົດເຊີຍຫຼາຍກວ່າການຄ້ຳປະກັນຄ່າແຮງງານຂອງຊາວກະສິກອນທີ່ເຕັມສ່ວນ ຫຼື ບໍ. ຖ້າແມ່ນມັນອາດໝາຍວ່າມູນຄ່າສູງສຸດທີ່ຊາວກະສິກອນສະໜອງໃຫ້ການຜະລິດແບບມີຂໍ້ຕົກລົງອາດຈະບໍ່ແມ່ນແຮງງານແຕ່ເປັນທີ່ດິນ. ຖ້າມູນຄ່າຂອງທີ່ດິນກວມເອົາ 90% ຂອງລາຍຮັບ, ມັນອາດຈະດີກວ່າຖ້າຊາວກະສິກອນຈະຈ້າງແຮງງານເພື່ອປູກຝັງໃຫ້.

ການຈ່າຍຄ່າທຳນຽມ ຫຼື ບໍລິການທີ່ດິນສຳລັບການຜະລິດໃຫ້ຊາວກະສິກອນໂດຍຜູ້ລົງທຶນບໍ່ແມ່ນຄ່າເຊົ່າ ຫຼື ເວົ້າອີກຢ່າງໜຶ່ງວ່າຄ່າໃຫ້ບໍລິການທີ່ດິນເພາະວ່າຜູ້ລົງທຶນບໍ່ໄດ້ຄວບຄຸມທີ່ດິນໂດຍກົງໃນຊ່ວງທຳການຜະລິດ. ນອກນັ້ນ, ຄ່າທຳນຽມຍັງເປັນສິ່ງກະຕຸກຊຸກຍູ້ ຫຼື ເງິນລາງວັນອີກດ້ວຍເພາະວ່າການຈ່າຍແມ່ນປະຕິບັດພາຍຫຼັງການເກັບກ່ຽວ. ບ່ອນທີ່ການຜະລິດແບບມີຂໍ້ຕົກລົງນຳໃຊ້ລາຄາຕະຫຼາດຄ່າທຳນຽມທີ່ດິນຍິ່ງມີມູນຄ່າສູງຂຶ້ນໂດຍສະເພາະແມ່ນເມື່ອລາຄາຕະຫຼາດຫຼຸດລົງ. ໃນສະພາບການນີ້ຄ່າທຳນຽມທີ່ດິນສາມາດຊ່ວຍຊົດເຊີຍຄວາມສ່ຽງຈຳນວນໜຶ່ງ, ແລະ ຫຼາຍກວ່ານັ້ນຖ້າລາຄາໃນສັນຍາບໍ່ລວມເອົາລາຄາພື້ນຖານ. ການຈ່າຍຄ່າທຳນຽມທີ່ດິນສາມາດຊີ້ບອກເຖິງຄວາມໝັ້ນໝັ້ນ ແລະ ເຕັມໃຈຂອງຜູ້ລົງທຶນ. ໃນຂະນະດຽວກັນນັ້ນ, ຄ່າທຳນຽມທີ່ດິນເຊັ່ນດຽວກັບເງິນມັດຈຳ, ອາດເຮັດໃຫ້ຜູ້ລົງທຶນປະຕິບັດໜ້າທີ່ຢ່າງເຂັ້ມງວດ.

## ສະຫຼຸບ

- ຫ້ອງການກະສິກຳ-ປ່າໄມ້ເມືອງ ສາມາດໃຫ້ຂໍ້ມູນເພື່ອໃຫ້ເຂົ້າໃຈກະຈ່າງແຈ້ງກ່ຽວກັບກາລະໂອກາດ ແລະ ຄວາມເປັນໄປໄດ;
- ຫ້ອງການກະສິກຳ-ປ່າໄມ້ເມືອງ ອາດຈະສະໜັບສະໜູນ ການສ້າງ ຂໍ້ຕົກລົງສຳລັບການຜະລິດໂດຍອຳນວຍຄວາມສະດວກໃນຊ່ວງເຈລະຈາເມື່ອມີການຮຽກຮ້ອງໂດຍຊາວກະສິກອນ ຫຼື ຜູ້ລົງທຶນ;
- ເງິນມັດຈຳອາດຈະເຮັດໃຫ້ ຜູ້ລົງທຶນທີ່ບໍ່ເອົາຈິງເອົາຈັງ ຫຼື ບໍ່ເຂັ້ມແຂງທໍ້ຖອຍ, ຫຼື ອີກດ້ານໜຶ່ງມັນອາດສ້າງຄວາມເຊື່ອໝັ້ນ ລະຫວ່າງ ຊາວກະສິກອນ ແລະ ຜູ້ລົງທຶນ;
- ເງິນມັດຈຳອາດຈະຊຸກຍູ້ຜູ້ລົງທຶນທີ່ເອົາຈິງເອົາຈັງເພາະວ່າເຂົາເຈົ້າຈະໄດ້ປະເຊີນກັບຜູ້ລົງທຶນທີ່ບໍ່ເຂັ້ມແຂງ
- ທີ່ອາດເຮັດໃຫ້ການຜະລິດບໍ່ປະສົບຜົນສຳເລັດ ແລະ ທຳລາຍຄວາມເປັນມິດລະຫວ່າງຊາວກະສິກອນ ແລະ ພະນັກງານຂອງລັດນ້ອຍລົງ;
- ເງິນມັດຈຳ ເປັນເຄື່ອງ ມືທີ່ມີອຳນາດ ບັງຄັບທາງດ້ານເສດຖະກິດ;
- ມູນຄ່າເງິນມັດຈຳອາດຈະສະທ້ອນເຖິງມູນຄ່າແຮງງານຢ່າງເຕັມສ່ວນ;
- ຜູ້ລົງທຶນສາມາດນຳໃຊ້ຄ່າທຳນຽມທີ່ດິນເພື່ອກະຕຸກຊຸກຍູ້ຊາວກະສິກອນ.

## ປັດໃຈທີ່ພາໃຫ້ເກີດຜົນສຳເລັດ

1. ການສະໜອງຂໍ້ມູນຂ່າວສານການຜະລິດໃນທ້ອງຖິ່ນຂອງຫ້ອງການກະສິກຳ-ປ່າໄມ້ ເມືອງ ທີ່ຊັດເຈນ ແລະ ຖືກຕ້ອງ ຊຶ່ງ ຮັດໃຫ້ ຄວາມບໍ່ແນ່ນອນ ແລະ ຄວາມສ່ຽງໜ້ອຍລົງ;
2. ຫ້ອງການ ກະສິກຳ-ປ່າໄມ້ ເມືອງ ຊຸກຍູ້ ການສ້າງຄວາມເຂົ້າໃຈ ລະຫວ່າງ ຊາວກະສິກອນ ແລະ ຜູ້ລົງທຶນ;
3. ເງິນມັດຈຳສຳລັບການລົງທຶນ;
4. ຄ່າທຳນຽມທີ່ດິນ.

### ຄຳຖາມ

ກ. ມີຂໍ້ມູນກ່ຽວກັບຄວາມເປັນໄປໄດ້ສຳລັບການຜະລິດກະສິກຳ ຫຍັງແດ່ໃນທ້ອງຖິ່ນທີ່ຫ້ອງການກະສິກຳ-ປ່າໄມ້ເມືອງ ສາມາດສະໜອງໃຫ້ໄດ້ດີທີ່ສຸດພາຍໃຕ້ຄວາມອາດ ແລະ ຊັບພະຍາກອນທີ່ຈຳກັດ ຂອງເຂົາເຈົ້າ?

ຂ. ຈະຊ່ວຍ ຫ້ອງການ ກະສິກຳ-ປ່າໄມ້ ເມືອງ ຫຍັງແດ່ເພື່ອ ຫ້ອງການດັ່ງກ່າວ ສາມາດ ສະໜອງຂໍ້ມູນທີ່ມີຄູນນະພາບກວ່າເກົ່າ?

ຄ. ຫ້ອງການ ກະສິກຳ-ປ່າໄມ້ເມືອງ ຕ້ອງການ ຂໍ້ມູນ-ຂ່າວສານ ແລະ ຄວາມສາມາດດ້ານໃດແດ່ເພື່ອຊ່ວຍສ້າງຄວາມເຂົ້າໃຈລະຫວ່າງຊາວກະສິກອນ ແລະ ຜູ້ລົງທຶນ?

ງ. ລະບົບເງິນມັດຈຳສາມາດປັບປຸງໄດ້ແນວໃດ? ຕົວຢ່າງ: ລວມກັບເງິນລ່ວງໜ້າໄດ້ບໍ?

ຈ. ຈະມີການນຳໃຊ້ເງິນມັດຈຳແນວໃດ, ຢູ່ໃສ ແລະ ຍ້ອນຫຍັງ?

ສ. ຍ້ອນຫຍັງ ລະບົບເງິນມັດຈຳຈຶ່ງບໍ່ມີການໝູນໃຊ້ ແລະ ຜັນຂະຫຍາຍ ການຈັດຕັ້ງປະຕິບັດໃຫ້ກວ້າງຂວາງ?

ຊ. ອົງການຈັດຕັ້ງໃດເໝາະສົມທີ່ສຸດທີ່ຈະຮັກສາ ຫຼື ຄຸ້ມຄອງເງິນມັດຈຳ ແລະ ພາຍໃຕ້ເງື່ອນໄຂ ຫຍັງ?

ຍ. ຄ່າທຳນຽມທີ່ດິນ ມີຄວາມໝາຍແນວໃດ ແລະ ຄວນຈະຄຳນວນ ຄ່າທຳນຽມນັ້ນ ດ້ວຍວິທີໃດ?

## 8.7. ກໍລະນີ 7. ຜູ້ອຳນວຍຄວາມສະດວກດ້ານການຄ້າ ແລະ ການຜະລິດສູ່ຕ່າງປະເທດ

### ບ້ານ ກວາງຄຳ , ເມືອງນາໝໍ້, ແຂວງອຸດົມໄຊ




ຜູ້ລົງທຶນທ້ອນໂຮມໝາກໂມເພື່ອໄປຂາຍທີ່ປະເທດຈີນ

### *ປະສົບການ*

ເດີນທາງດ້ວຍລົດຕາມເສັ້ນທາງສາຍເໜືອຜ່ານເມືອງນາໝໍ້ ແຂວງ ອຸດົມໄຊ ໄປຫາເມືອງບຸນໃຕ້, ແຂວງ ຜົ້ງສາລີ; ສາຍລົມທີ່ພັດຜ່ານຮ່ອມພູສຳພັດກັບຕົ້ນໄມ້ໃບຫຍ້າທີ່ຂຽວເຫຼືອງເຕັມທົ່ງເຮັດໃຫ້ມີສຽງກ້ອງກັງວານ. ຊາວລື້ ຍິງ, ຊາຍ ແລະ ເດັກນ້ອຍຫຼາຍສິບຄົນກຳລັງຂົນໝາກແຕງໂມຈາກສວນຂອງພວກເຂົາ, ຈັດຂະໜາດ, ແລະ ເກັບໃສ່ແກັດ. ໃນຂະນະດຽວກັນແກັດທີ່ຂຽນດ້ວຍພາສາຈີນກຳລັງຖືກຂົນຂຶ້ນລົດບັນທຸກຂະໜາດໃຫຍ່ ຈາກ ສປ ຈີນ ທີ່ຈອດຢູ່ບໍລິເວນຂ້າງທາງໄດ້ງນັ້ນ. ເຊັ່ນດຽວກັນ ທ່ານ ໄມ ອຸ່ນແສງ, ໄທລື້ຈາກ ສ ປ ຈີນ, ກຳລັງເກັບໝາກແຕງໂມ ແລະ ກວດກາການເຮັດວຽກຂອງທີມງານທີ່ກຳລັງດຳເນີນໄປຢ່າງວ່ອງໄວ. ເມື່ອໝາກແຕງໂມໄດ້ບັນຈຸໃສ່ແກັດເປັນທີ່ຮຽບຮ້ອຍແລ້ວ, ຊາວກະສິກອນ ແລະ ຜູ້ລົງທຶນກໍ່ພັກຜ່ອນ ແລະ ຮັບປະທານອາຫານທ່ຽງຮ່ວມກັນ.

ການເອື້ອອຳນວຍແບບຍາດພີ່ນ້ອງເປັນຜົນດີຕໍ່ການຜະລິດຂ້າມຊາດ

ທ່ານ ໄມ ໄດ້ເຮັດວຽກເປັນຂໍ້ຕໍ່ໃຫ້ຜູ້ລົງທຶນຢູ່ໃນ ສປ ຈີນ, ຊຶ່ງເປັນຜູ້ປະກອບການໃນພາກເໜືອທີ່ຕິດກັບມົງໂກລີ. ໝາກແຕງໂມແມ່ນຈະສົ່ງຂາຍໂດຍກົງທີ່ນັ້ນ ແລະ ໄດ້ລາຄາ 1,000 ຢວນ ຕໍ່ ໂຕນ ຫຼື ແກັດໜຶ່ງທີ່ບັນຈຸໝາກແຕງໂມ 4 ໜ່ວຍ ແມ່ນຂາຍໃນລາຄາ 50 ຢວນ. ຊື້ກັບທີ່ທີ່ນາໝໍ້ແມ່ນ 13 ຢວນ.[12] ໃນຂະນະທີ່ລາວກຳລັງແນະນຳຊາວກະສິກອນໃນການຄັດເລືອກໝາກແຕງໂມຢູ່ນັ້ນ ທ່ານ ໄມ ໄດ້ຫັນມາໃຫ້ຂໍ້ມູນກ່ຽວກັບທຸລະກິດຂອງລາວກັບທີມງານເປັນໄລຍະໆ.

ທ່ານ ໄມ ເຮັດວຽກໃຫ້ຜູ້ລົງທຶນ ໃນ ສປ ຈີນ ຊຶ່ງເປັນຜູ້ສະໜອງແນວພັນ ແລະ ປັດໃຈການຜະລິດຕ່າງໆ ໂດຍບໍ່ໄດ້ມີ ສັນຍາເປັນລາຍລັກອັກສອນ. ແຕ່ວ່າ ທ່ານ ໄມໄດ້ສ້າງສັນຍາທີ່ເປັນລາຍລັກອັກສອນກັບຊາວກະສິກອນ. ລາວເປັນຄົນຄັດເລືອກທີ່ດິນ ແລະ ໃຫ້ຄຳແນະນຳທາງດ້ານເຕັກນິກໃຫ້ຊາວກະສິກອນ . ທ່ານ ໄມ ຈັດກຽມການຜະລິດໃຫ້ຜູ້ລົງທຶນຢູ່ ສ ປ ຈີນ ໃນແຂວງຜົ້ງສາລີມາໄດ້ 4 ປີ ແລ້ວ. ທ່ານ ໄມ ຄິດວ່າປັດໃຈທີ່ພາໃຫ້ເກີດມີຜົນສຳເລັດໃນການຜະລິດແບບມີຂໍ້ຕົກລົງແມ່ນ: "ຄວາມຊັດຊື່, ຈິງໃຈຕໍ່ກັນ ແລະ ກັນ ແລະ ຈັດຕັ້ງປະຕິບັດຢ່າງໂປ່ງໃສ."

ການລົງທຶນທີ່ເມືອງນາໝໍ້ນີ້ແມ່ນປີທຳອິດຂອງລາວ; ລາວໄດ້ເຮັດວຽກຮ່ວມກັບ 8 ຄອບຄົວຊຶ່ງເປັນຍາດຕິພີ່ນ້ອງ; ແຕ່ລະຄອບຄົວມີພື້ນທີ່ຜະລິດ 80 ໝູ່, ຫຼື 5.7 ເຮັກຕາ, ສຳລັບປູກໝາກແຕງໂມ. ທ່ານ ໄມ ເວົ້າວ່າ: "ພວກເຮົາເຮັດທຸລະກິດນີ້ເພາະວ່າພວກເຮົາເຮັດກັບຍາດພີ່ນ້ອງ, ຊຶ່ງເຂົາເຈົ້າສະເໜີມາວ່າຢາກໃຫ້ພວກເຮົາລົງທຶນ ແລະ ເຮັດວຽກກັບເຂົາເຈົ້າ, ".ປັດໃຈທີ່ພາໃຫ້ເກີດຜົນສຳເລັດແມ່ນຄວາມຈິງໃຈ ແລະ ໂປ່ງໃສ.

**ການສັງເກດການ**

ການທີ່ຊາວກະສິກອນສະເໜີ ທ່ານ ໄມ ເພື່ອອຳນວຍຄວາມສະດວກໃນການລົງທຶນການຜະລິດອາດບົ່ງບອກວ່າ ທ່ານ ໄມ ເປັນທີ່ຮູ້ຈັກ ຫຼື ໜ້າເຊື່ອຖືຊຶ່ງສ້າງຄວາມເຊື່ອໝັ້ນ ແລະ ນຳໄປສູ່ຜົນສຳເລັດ. ການທີ່ ທ່ານ ໄມ ໄດ້ລົງທຶນໃນເຂດອື່ນໃນແຂວງ ຜົ້ງສາລີ ໃນຊ່ວງ 4 ປີ ຜ່ານມາ ນັ້ນ ອາດຍ້ອນວ່າ ທ່ານ ໄມ ອາດເປັນທີ່ຮູ້ຈັກ ຫຼື ເຫດຜົນດຽວກັນທີ່ກ່າວມານີ້. ສະນັ້ນ, ເຖິງແມ່ນວ່າການລົງທຶນຂອງ ທ່ານ ໄມ ໃນການຜະລິດແບບມີຂໍ້ຕົກລົງກັບຊາວກະສິກອນໃນເມືອງນາໝໍ້ນີ້ຈະແມ່ນເປັນປີທຳອິດກໍ່ຕາມ, ແຕ່ມັນກໍ່ມີປະຫວັດທີ່ປະສົບຜົນສຳເລັດມາກ່ອນ.

ທ່ານ ໄມ ເນັ້ນວ່າຄວາມໂປ່ງໃສແມ່ນປັດໃຈຫຼັກທີ່ພາໃຫ້ເກີດຜົນສຳເລັດໃນການຜະລິດແບບມີຂໍ້ຕົກລົງ. ຂໍ້ຕົກລົງການຜະລິດທີ່ເປັນລາຍລັກອັກສອນເປັນພື້ນຖານສຳຄັນໜຶ່ງທີ່ຈະກໍ່ໃຫ້ເກີດມີຄວາມໂປ່ງໃສຫຼາຍຂຶ້ນ. ແລະ ມັນກໍ່ເປັນສິ່ງທຳອິດກ່ອນທີ່ຈະຈົດທະບຽນການຜະລິດແບບຂໍ້ຕົກລົງກັບຫ້ອງການກະສິກຳ-ປ່າໄມ້ເມືອງ. ຄວາມເຊື່ອໝັ້ນ ຫຼື ໄວ້ໃຈຊຶ່ງກັນ ແລະ ກັນກໍ່ສຳຄັນເຊັ່ນກັນ; ຊາວກະສິກອນສ່ວນໜຶ່ງເປັນຍາດພີ່ນ້ອງທີ່ໃກ້ຊິດກັບ ທ່ານ ໄມ ແຕ່ສ່ວນໜຶ່ງກໍ່ເປັນຍາດພີ່ນ້ອງຫ່າງໆ. ເຖິງຢ່າງນັ້ນກໍ່ຕາມເຂົາເຈົ້າບໍ່ແມ່ນຄົນແປກໜ້າ ແລະ ສາມາດຮັບຮູ້ຊຶ່ງກັນ ແລະ ກັນຜ່ານເຄືອຂ່າຍຍາດຕິພີ່ນ້ອງ ແລະ ໝູ່ເພື່ອນນີ້ອາດຈະເປັນການເພີ່ມລະດັບຂອງມາດຕະການທາງດ້ານສັງຄົມຊຶ່ງຈະເສີມມາດຕະການເສດຖະກິດສຳລັບການຜະລິດເປັນສິນຄ້າແບບມີຂໍ້ຜູກພັນໃນສັນຍາທີ່ໜ້າສົນໃຈ. ທ່ານ ໄມ ຍັງເຮັດວຽກກັບຜູ້ລົງທຶນໂດຍອີງໃສ່ຄວາມເຊື່ອໝັ້ນຊຶ່ງກັນ ແລະ ກັນເພາະວ່າສັນຍາຂອງເຂົາເຈົ້າກໍ່ເປັນພຽງການສັນຍາແບບປາກເປົ່າ.



ທ່ານ ໄມ ອຸ່ນແສງ, ຜູ້ລົງທຶນສັງເກດເບິ່ງຄວາມຄືບໜ້າທັງໝົດຂອງການຜະລິດ

ການຜະລິດແບບມີຂໍ້ຕົກລົງຂຶ້ນກັບ ທ່ານ ໄມ ຊຶ່ງເປັນຄົນກາງອຳນວຍຄວາມສະດວກການຜະລິດເປັນສິນຄ້າແບບມີຂໍ້ຜູກພັນໃນສັນຍາ ແລະ ຮັດແໜ້ນຄວາມສຳພັນລະຫວ່າງຜູ້ລົງທຶນໃນ ສປ ຈີນ ກັບຊຸມຊົນໄທລື້ໃນ ສປປ ລາວ. ຍ້ອນຮູ້ພາສາ, ສະພາບພື້ນທີ່ໃນທ້ອງຖິ່ນ ແລະ ມີເຄືອຂ່າຍເຮັດໃຫ້ ທ່ານ ໄມ ຮັບຮູ້ຂໍ້ມູນ ແລະ ຫາຊ່ອງທາງເພື່ອສ້າງໂອກາດທຸລະກິດຈາກທີ່ດິນ ແລະ ແຮງງານຂອງຊາວກະສິກອນກັບປັດໃຈການຜະລິດ, ເທັກໂນໂລຊີ ແລະ ຕະຫຼາດຂອງຜູ້ລົງທຶນ.

ທ່ານ ໄມ ເຮັດສຳເລັດພາລະບົດບາດຄືກັນກັບການຈັດຕັ້ງທີ່ອຳນວຍຄວາມສະດວກການຜະລິດເປັນສິນຄ້າລະຫວ່າງຊາວກະສິກອນທີ່ປູກກາເຟ ແລະ ຜູ້ຊື້ ຄືກັນກັບກໍລະນີ 1, ແຕ່ມັນແຕກຕ່າງຢູ່ບ່ອນວ່າ: ຜູ້ອຳນວຍຄວາມສະດວກ ໃນກໍລະນີ 1 ນັ້ນ ເປັນ ອົງການຈັດຕັ້ງ ຊຶ່ງໃຫ້ຄວາມສົນໃຈຕໍ່ຊຸມຊົນໃນຄະນະທີ່ ທ່ານ ໄມ ເປັນພໍ່ຄ້າ, ອຳນວຍຄວາມສະດວກເພື່ອຫວັງຜົນຜົນກຳໄລ. ມັນອາດຈະມີຜູ້ອຳນວຍຄວາມສະດວກທີ່ດຳເນີນການແບບການຄ້າ ຫຼື ແບບປົກກະຕິ, ໂດຍສະເພາະບ່ອນທີ່ມີຄວາມຕ້ອງການທາງດ້ານຕະຫຼາດເພີ່ມຂຶ້ນເຊັ່ນ: ກໍລະນີຂອງ ສປ ຈີນ. ຄວາມສ່ຽງສຳລັບຜູ້ອຳນວຍຄວາມສະດວກການຄ້າມີຄື: ເຂົາເຈົ້າອາດໃຫ້ຄວາມສົນໃຈຜົນປະໂຫຍດຂອງຕົນເອງຫຼາຍກວ່າຊາວກະສິກອນ. ເຂົາເຈົ້າອາດຈະຈຳກັດຂໍ້ມູນ-ຂ່າວສານ ຫຼື ພະຍາຍາມທີ່ຈະໃຊ້ອຳນາດເພື່ອຜູກຂາດ; ຄອບຄົວ ແລະ ຊື່ສຽງອາດມີຄວາມສຳຄັນຖົດລົງມາ. ການກະຈາຍຂໍ້ມູນ-ຂ່າວສານຜ່ານລະບົບມືຖືຫຼາຍຂຶ້ນອາດຈະຊ່ວຍຈຳກັດການຄວບຄຸມຂໍ້ມູນ - ຂ່າວສານຂອງພໍ່ຄ້າຄົນກາງ.

ນັ້ນແມ່ນໜຶ່ງໃນສະພາບທີ່ພົບເຫັນກ່ຽວກັບຜູ້ປະກອບການຈາກພາກເໜືອ ສປ ຈີນ ມາລົງທຶນໃນການຜະລິດໃນ ສປປ ລາວ ໂດຍສະເພາະການເຮັດທຸລະກິດຜ່ານຈີນໄທລື້ໃນເຂດຊາຍແດນລາວ - ຈີນ. ສິ່ງນີ້ສະແດງໃຫ້ເຫັນວ່າການເຊື່ອມໂຍງກັບຕະຫຼາດ ແລະ ຄວາມສົນໃຈຂອງຜູ້ລົງທຶນຕໍ່ກັບການຜະລິດຂອງຊາວກະສິກອນລາວເພາະວ່າຜູ້ລົງທຶນທີ່ມາຈາກບ່ອນອື່ນຊຶ່ງປະເຊີນກັບຜົນຜະລິດທີ່ບໍ່ພຽງພໍໃນທ້ອງຖິ່ນ ຫຼື ສະພາບອາກາດ ແລະ ລະດູການທີ່ຂ້ອນຂ້າງແຕກຕ່າງຈາກ ສປປ ລາວ; ໃນສະພາບການນີ້ມັນອາດເປັນກາລະໂອກາດສຳລັບທຸລະກິດຕ່າງຊາດທີ່ຈະລົງທຶນການຜະລິດເປັນສິນຄ້າແບບມີຂໍ້ຕົກລົງໃນ ສປປ ລາວ.

ກໍລະນີນີ້ສາມາດປຽບທຽບກັບກໍລະນີການປູກໝາກແຕງໂມໃນເມືອງສິງ, ແຂວງຫຼວງນ້ຳທາ (Fullbrook 2007, 30-32) ຊຶ່ງການຜະລິດລະຫວ່າງເຄືອຂ່າຍຍາດພີ່ນ້ອງຂອງໄທລື້ໃນ ສປ ຈີນ ແລະ ລາວແມ່ນດຳເນີນໄປໂດຍຂໍ້ຕົກລົງແບບປາກເປົ່າ. ຍາດພີ່ນ້ອງຢູ່ໃນ ສປ ຈີນ ສະໜອງການລົງທຶນ ແລະ ຕະຫຼາດສຳລັບພີ່ນ້ອງທີ່ຢູ່ໃນ ສປປ ລາວ ຕອບສະໜອງທີ່ດິນ ແລະ ແຮງງານ. ທາງດ້ານເຕັກນິກແມ່ນໄດ້ຮັບການສະໜັບສະໜູນຈາກທີ່ປຶກສາໃນແຂວງ ເຊຽງ, ໃກ້ກັບຊຽງໄຮ; ການຄ້າຂາຍແມ່ນດຳເນີນໄປຕາມນະໂຍບາຍການຄ້າຊາຍແດນ. ການພົວພັນແບບເຄືອຍາດພີ່ນ້ອງໃນກໍລະນີຂອງເມືອງນາໝໍ້ແມ່ນບໍ່ແໜ້ນເທົ່າກັບກໍລະນີໃນເມືອງສິງ, ແຕ່ປັດໃຈທີ່ພາໃຫ້ເກີດຜົນສຳເລັດແມ່ນຄ້າຍຄືກັນເຊັ່ນ: ການສ້າງຄວາມເຊື່ອໝັ້ນ, ເຊື່ອໂຍງຂໍ້ມູນ-ຂ່າວສານ, ແລະ ຊັບສິນຂອງຜູ້ລົງທຶນກັບຊັບສິນຂອງຊາວກະສິກອນ. ໃນເມືອງນາໝໍ້ການສັນຍາທີ່ເປັນລາຍລັກອັກສອນສຳລັບການຜະລິດໄດ້ສ້າງຄວາມສຳພັນ, ພັນທະ ແລະ ຄວາມຄາດຫວັງແບບທາງການ ແລະ ອາດຈະເປັນທາງການຫຼາຍຂຶ້ນ, ຊຶ່ງຝ່າຍຕ່າງໆກຳລັງສະແຫວງຫາຄວາມກະຈ່າງແຈ້ງເພື່ອເຂົ້າໃຈ ແລະ ຫຼຸດຄວາມສ່ຽງທີ່ຈະກໍ່ໃຫ້ເກີດບັນຫາຂຶ້ນ. ໃນກໍລະນີຢູ່ເມືອງສິງເຈົ້າໜ້າທີ່ທ້ອງຖິ່ນ, ເຊັ່ນ: ຫ້ອງການກະສິກຳ-ປ່າໄມ້ເມືອງມີສ່ວນຮ່ວມໜ້ອຍ, ແລະ ການຜະລິດແບບມີຂໍ້ຕົກລົງແມ່ນປະຕິບັດໂດຍຜູ້ລົງທຶນ ແລະ ຊາວກະສິກອນແຕ່ກໍ່ສາມາດລຸລ່ວງໄປດ້ວຍດີ.

## *ສະຫຼຸບ*

- ການຜະລິດແບບມີຂໍ້ຕົກລົງສາມາດສ້າງຄວາມໂປ່ງໃສການຜະລິດແບບມີຂໍ້ຕົກລົງ ສາມາດຈັດຕັ້ງຂຶ້ນໄດ້ໂດຍປາສະຈາກການເຂົ້າຮ່ວມຂອງເຈົ້າໜ້າທີ່ທ້ອງຖິ່ນເຊັ່ນວ່າ: ຫ້ອງການ ກະສິກຳ-ປ່າໄມ້ ເມືອງ
- ຄວາມສຳພັນຂອງເຄືອຂ່າຍຍາດພີ່ນ້ອງ ແລະ ເຜົ່າຊົນສາມາດ ສ້າງຄວາມເຊື່ອໝັ້ນໃນການຜະລິດ ແບບມີຂໍ້ຕົກລົງ
- ຜູ້ອຳນວຍຄວາມສະດວກການຄ້າອາດຈະເປັນຜູ້ລິເລີ່ມການຜະລິດແບບມີຂໍ້ຕົກລົງ ຫຼາຍຂຶ້ນໂດຍສະເພາະຜູ້ທີ່ສາມາດ ສື່ສານໄດ້ພາສາ, ເຊື່ອມໂຍ່ງ ຊາວກະສິກອນ ແລະ ຜູ້ລົງທຶນ
- ຊາວກະສິກອນລາວສາມາດຜະລິດຜະລິດຕະພັນສຳລັບຕະຫຼາດສົດໃນເຂດຫ່າງໄກໄດ້
- ການຜະລິດແບບມີຂໍ້ຕົກລົງ ອາດຈະກາຍເປັນການປະຕິບັດແບບເປັນປະຈຳຖ້າຄວາມຕ້ອງການສຳລັບໝາກໄມ້ ແລະ ຜັກຈາກຕະຫຼາດໃນພາກເໜືອ ສປ ຈີນ ຍັງສືບຕໍ່ ຫຼື ເພີ່ມຂຶ້ນ

- ການຜະລິດແບບມີຂໍ້ຕົກລົງອາດຈະກາຍເປັນການປະຕິບັດແບບເປັນປະຈຳຖ້າຄວາມຕ້ອງການສຳລັບໝາກໄມ້ ແລະ ຜັກ ຈາກຕະຫຼາດໃນ ພາກເໜືອ ສປ ຈີນ ຍັງສືບຕໍ່ ຫຼື ເພີ່ມຂຶ້ນ
- ກາລະໂອກາດສຳລັບຊາວກະສິກອນລາວ ແລະ ຜູ້ລົງທຶນຈີນອາດຈະເພີ່ມຂື້ນເພາະວ່າສະພາບອາກາດເຂດຮ້ອນ ແລະ ເງື່ອນໄຂ ຂອງ ສປປ ລາວ ອາດສາມາດຊ່ວຍເຂດເຄິ່ງແຫ້ງແລ້ງໃນພາກເໜືອ ສປ ຈີນ




ໝາກໂມທີ່ບັນຈຸໃນກັບສຳລັບຕະຫຼາດຈີນ

## *ປັດໃຈທີ່ພາໃຫ້ເກີດຜົນສຳເລັດ*

1. ເປັນນັກທຸລະກິດຕ່າງຊາດ, ພາສາ, ສາຍພົວພັນຄອບຄົວ ແລະ ເຜົ່າຊົນ

2. ການເພີ່ມຄວາມເຊື່ອໝັ້ນ ແລະ ຄວາມໂປ່ງໃສ່ ໂດຍການນຳໃຊ້ການຜະລິດແບບມີສັນຍາທີ່ເປັນລາຍລັກອັກສອນ

3. ມີຜູ້ອຳນວຍຄວາມສະດວກການຄ້າ

4. ທີ່ຕັ້ງທີ່ເປັນຍຸດທະສາດ ແລະ ຄວາມອຸດົມສົມບູນຂອງພື້ນທີ່ສຳລັບການຜະລິດ ແລະ ການບໍລິໂພກ

**ຄຳຖາມ**

ກ. ສັນຍາໄດ້ມີການຈົດທະບຽນສານບໍ ? ຖ້າມີ ບົດບາດຂອງຫ້ອງການກະສິກຳ-ປ່າໄມ້ ເມືອງມີຫຍັງແດ່?

ຂ. ການມີສ່ວນຮ່ວມຂອງ ຫ້ອງການ ກະສິກຳ-ປ່າໄມ້ເມືອງເພີ່ມມູນຄ່າຫຍັງໃນກໍລະນີທີ່ນາດຕະການທາງດ້ານສັງຄົມຊ່ວຍສ້າງຄວາມສຳພັນລະຫວ່າງ ຜູ້ລົງທຶນ, ຜູ້ອຳນວຍຄວາມສະດວກ ແລະ ຊາວກະສິກອນ?

ຄ. ຫ້ອງການ ກະສິກຳ-ປ່າໄມ້ ເມືອງ ຄວນຈະເຂົ້າຮ່ວມໃນການເຈລະຈາຕະຫຼາດ ແລະ ປະສານງານການຜະລິດແບບມີສັນຍາສຳລັບຜູ້ລົງທຶນ ແລະ ຊາວກະສິກອນ ແນວໃດ ?

ງ. ລັດຖະບານ ສປ ຈີນ ມີການຄຸ້ມຄອງໂກຕາ ຫຼື ສະໜັບສະໜູນຫຍັງໃນການສ້າງຄວາມສົນໃຈ ແລະ ພຶດຕິກຳຂອງຜູ້ປະກອບການຜູ້ລົງທຶນຈາກ ສປ ຈີນ ໃນ ສປປ ລາວ?

ຈ. ມີຜະລິດຕະພັນຫຍັງທີ່ສາມາດຊ່ວຍຊາວກະສິກອນໃນ ສປປ ລາວສາມາດຜະລິດສຳລັບຕະຫຼາດໃນຕົວເມືອງໃຫຍ່ ຂອງ ສປ ຈີນບໍ ?

ສ. ຊາວກະສິກອນສາມາດຊຸກຍູ້ ແລະ ຮັບປະກັນວ່າພໍ່ຄ້າຄົນກາງຊ່ວຍເຂົ້າເຖິງຜູ້ລົງທຶນທີ່ໃຫ້ຜົນປະໂຫຍດສູງສຸດບໍ?

## 8.8. ກໍລະນີ 8. ນະໂຍບາຍ ແລະ ການຈັດຕັ້ງປະຕິບັດ : ຂໍ້ຈຳກັດໃນການຈັດຕັ້ງປະຕິບັດ ແລະ ປະສິດທິຜົນຂອງການຄ້າ

### ຄຸ້ມບ້ານຂວາງ, ເມືອງ ນາໝໍ້, ແຂວງ ອຸດົມໄຊ



ຜູ້ລົງທຶນ ແລະ ຊາວກະສິກອນຮ່ວມກັນກວດກາຜັກກະລໍ່າຢູ່ໃນສວນ

### ປະສົບການ

ຄຸ້ມບ້ານຂວາງແມ່ນໜຶ່ງໃນ 7 ກຸ່ມທີ່ຕັ້ງຢູ່ລະຫວ່າງກາງແຕ່ເມືອງນາໝໍ້, ແຂວງອຸດົມໄຊ ແລະ ເມືອງບຸນໃຕ້, ແຂວງຜົ້ງສາລີ ແລະ ພື້ນທີ່ສ່ວນໃຫຍ່ເປັນທົ່ງພຽງ, ເນີນພູ. ເຮືອນສ່ວນໃຫຍ່ເຮັດດ້ວຍໄມ້. ທ່ານ ກາເຊົາ ສິນຍາວົງຫົວໜ້າກຸ່ມບ້ານຊຶ່ງຮັບຜິດຊອບບ້ານຂວາງໄດ້ໃຫ້ຂໍ້ມູນວ່າ: ບາງຄັ້ງຄຸ້ມບ້ານໄດ້ຊ່ວຍເຫຼືອກ່ຽວກັບການເຈລະຈາການຜະລິດແບບມີຂໍ້ຕົກລົງລະຫວ່າງຊາວກະສິກອນ ແລະ ຜູ້ລົງທຶນ; ແຕ່ກໍ່ເປັນພຽງສິ່ງດຽວທີ່ຄຸ້ມບ້ານສາມາດເຮັດໄດ້ອີງໃສ່ຊັບພະຍາກອນທີ່ຈຳກັດ.

ນັ່ງຢູ່ຕໍ່ໜ້າຫ້ອງການກຸ່ມບ້ານຊຶ່ງເປັນຕູບເກົ່າໆ, ທ່ານຫົວໜ້າກຸ່ມ ແລະ ຕຳຫຼວດ 2-3 ທ່ານ ໄດ້ອະທິບາຍ

ການຈັດການກ່ຽວກັບການຄ້າສາມາດຫຼີກລ້ຽງການຄວບຄຸມການບໍລິຫານທີ່ບໍ່ມີປະສິດທິພາບ, ແລະ ຂໍ້ກຳນົດ ຫຼື ລະບຽບການ

ບາງປະສົບການກ່ຽວກັບການຜະລິດໃນຮູບແບບທີ່ມີສັນຍາ. ທ່ານ ທິວພ້າກຸ່ມເວົ້າວ່າ: "ພວກເຮົາໄດ້ມີສ່ວນຮ່ວມສະໜັບສະໜູນການຈັດຕັ້ງກຸ່ມຜູ້ຜະລິດ ແລະ ບາງຄັ້ງໄດ້ຊ່ວຍກວດສອບສັນຍາ. ຜູ້ລົງທຶນເກືອບທັງໝົດທີ່ມາເຂດນີ້ແມ່ນໄທລື້ຊຶ່ງເປັນຍາດພີ່ນ້ອງ ແລະ ຮູ້ຈັກຊຶ່ງກັນ ແລະ ກັນ".

ເຖິງແນວໃດກໍ່ຕາມການເຂົ້າຮ່ວມຂອງກຸ້ມບ້ານໃນການຜະລິດແບບມີຂໍ້ຕົກລົງແມ່ນຍັງຈຳກັດ. ຊາວກະສິກອນ ແລະ ຜູ້ລົງທຶນມັກຈະດຳເນີນທຸລະກິດຂອງເຂົາເຈົ້າໂດຍປາສະຈາກການມີສ່ວນຮ່ວມຂອງກຸ້ມບ້ານ.

ທ່ານ ກາເຊົາເວົ້າວ່າ: "ພວກເຮົາຢາກກວດກາ ແລະ ຕິດຕາມກວດກາການຈັດຕັ້ງປະຕິບັດສັນຍາ, ແຕ່ວ່າປົກກະຕິແລ້ວພວກເຮົາບໍ່ໄດ້ຮັບການຮ່ວມມືທີ່ດີຈາກບ້ານເທົ່າທີ່ຄວນໂດຍສະເພາະແມ່ນສະມາຊິກບ້ານຜູ້ທີ່ຮັບຜິດຊອບວຽກງານເສດຖະກິດຊຶ່ງປົກກະຕິຈະເຂົ້າຮ່ວມເປັນຄົນກາງ. ເປັນການຍາກທີ່ຈະຕິດຕາມກວດກາກ່ຽວກັບລາຍຮັບ ຫຼື ອາກອນທີ່ບ້ານໄດ້ຮັບ. ຜູ້ລົງທຶນເວົ້າເລື້ອຍໆວ່າໄດ້ຈ່າຍໃຫ້ບ້ານແລ້ວ. ແຕ່ຊາວບ້ານຈະບອກວ່າເຂົາຍັງບໍ່ໄດ້ຮັບການຈ່າຍ ຫຼື ໄດ້ຮັບອາກອນເທື່ອ. ມັນມີຫຼາຍຜູ້ລົງທຶນ ແລະ ຄົນກາງແຕ່ລະຄົນກໍ່ມີຊ່ອງທາງ ຫຼື ເຄືອຂ່າຍໃຜລາວ. ບາງຄັ້ງ ນາຍບ້ານ ຫຼື ຄະນະບ້ານບໍ່ຮູ້ວ່າສະມາຊິກບ້ານກຳລັງເຮັດການຜະລິດຮ່ວມກັບຜູ້ລົງທຶນທີ່ເປັນຄົນຈີນ."

ການແຈ້ງໃຫ້ເຈົ້າໜ້າທີ່ຮັບຊາບກ່ຽວກັບທຸລະກິດຂອງເຂົາເຈົ້າອາດຈະເປັນການສິ້ນເປືອງເວລາ ແລະ ເສຍຫຼາຍຢ່າງສຳລັບຜູ້ລົງທຶນ. ບາງຄັ້ງບ່ອນທີ່ເປັນໄປໄດ້ເຂົາເຈົ້າຫຼີກລ່ຽງອົງການຈັດຕັ້ງພາກລັດເພາະບາງຄັ້ງກໍ່ຈະບໍ່ສິ້ນເປືອງຫຼາຍ ແລະ ງ່າຍກວ່າ. ທ່ານ ກາເຊົາເວົ້າວ່າ: "ຜູ້ລົງທຶນບາງຄົນບໍ່ຕ້ອງການເຮັດສັນຍາຢ່າງເປັນທາງການເພາະວ່າເປືອງເວລາ, ທຶນ ແລະ ຄ່າທຳນຽມຕ່າງໆ. ພາຍຫຼັງທີ່ໄດ້ປຶກສາຫາລືຮ່ວມກັນໃນກອງປະຊຸມສຳລັບວຽກເອກະສານ ແລະ ມີການຮັບຮອງເຂົາເຈົ້າມັກຈະເຮັດວຽກກັບບາງການຈັດຕັ້ງທີ່ກ່ຽວຂ້ອງເທົ່ານັ້ນ. ຖ້າເຂົາເຈົ້າຕ້ອງຈ່າຍເຂົາເຈົ້າເລືອກທີ່ຈະຈ່າຍຜ່ານປະຕູດຽວ. ຜູ້ລົງທຶນທີ່ບໍ່ມີສັນຍາມັກຈ່າຍຄັ້ງດຽວ (ໃຫ້ຫ້ອງການອາກອນທີ່ດ່ານຊາຍແດນ),"

ທ່ານ ກາເຊົາຄິດວ່າພືດຜັກທີ່ບໍ່ໄດ້ປູກພາຍໃຕ້ຂໍ້ຕົກລົງທີ່ຈົດທະບຽນກັບຫ້ອງການກະສິກຳ-ປ່າໄມ້ເມືອງກໍ່ມີວິທີການສົ່ງອອກໄດ້ ດ້ວຍການຊອກຫາ ຫຼື ຂາຍໃຫ້ຜູ້ຊື້ຕາມເຂດຊາຍແດນທີ່ຊື້ຜົນຜະລິດເພື່ອສົ່ງອອກ. ໂດຍລວມແລ້ວການຄ້າແມ່ນຍັງສັບສົນ. ທ່ານ ກາເຊົາເວົ້າວ່າ: "ອີງຕາມຫ້ອງການກະສິກຳ - ປ່າໄມ້ເມືອງ, ລະບຽບການກ່ຽວກັບອາກອນ, ການຈົດທະບຽນສັນຍາຄວນຈະອະນຸຍາດພຽງແຕ່ສັນຍາການຜະລິດແບບມີຂໍ້ຕົກລົງເພື່ອການສົ່ງອອກ. ເຖິງແນວໃດກໍ່ຕາມ, ໃນການຈັດຕັ້ງປະຕິບັດຕົວຈິງການບັງຄັບໃຊ້ກົດໝາຍ ແລະ ລະບຽບການແມ່ນເປັນໄປໄດ້ຍາກ". ທ່ານ ກາເຊົາ ເວົ້າອີກວ່າ: "ຂ້າພະເຈົ້າບໍ່ແນ່ໃຈກ່ຽວກັບການບັງຄັບໃຊ້ມາດຕະການທີ່ກຳນົດໃນສັນຍາເຂັ້ມງວດພຽງພໍບໍ ເພາະວ່າການສົ່ງອອກສ່ວນໃຫຍ່ແມ່ນບໍ່ມີສັນຍາ ແລະ ກໍ່ເບິ່ງຄືວ່າບໍ່ມີການປັບໃໝ."

ການຜະລິດແບບມີຂໍ້ຕົກລົງຈະຖືກຮັບຮູ້ ແລະ ມີຜົນຄືກັບສັນຍາຖ້າຂໍ້ຕົກລົງເຮັດເປັນລາຍລັກອັກສອນ, ກຳນົດລາຄາ ແລະ ຈົດທະບຽນກັບເຈົ້າໜ້າທີ່ເມືອງໃນເມືອງນາໝໍ້. ຄຸ້ມບ້ານ ແລະ ອົງການຈັດຕັ້ງອື່ນໆມີໜ້າທີ່ພຽງແຕ່ຊ່ວຍອຳນວຍຄວາມສະດວກ ຫຼື ໄກ່ເກ່ຍຂໍ້ຂັດແຍ່ງລະຫວ່າງຊາວກະສິກອນ ແລະ ຜູ້ລົງທຶນ. ຖ້າຂໍ້ຕົກລົງຈົດທະບຽນແບບສັນຍາ. ຜູ້ລົງທຶນໃຫ້ຄຳເຫັນວ່າ: "ເມື່ອມັນມີບັນຫາພວກເຮົາຮຽກເຊີນທຸກພາກສ່ວນມາປຶກສາຮ່ວມກັນເພື່ອປຶກສາຫາລື ແລະ ແກ້ໄຂບັນຫາແຕ່ການແກ້ໄຂບັນຫາ ກໍ່ຍັງພົບຄວາມຫຍຸ້ງຍາກ. ໃນທາງກົງກັນຂ້າມຜູ້ຜະລິດອະທິບາຍວ່າ: ມັນເປັນຈຸດອ່ອນໜຶ່ງ, ແທ້ທີ່ຈິງແລ້ວພວກເຮົາບໍ່ໄດ້ຮັບຮູ້ເລີຍວ່າມີການປຶກສາຫາລືຫຍັງ." ໃນປະຈຸບັນນີ້ການຜະລິດສ່ວນຫຼາຍແມ່ນປະຕິບັດໃນຮູບແບບທີ່ມີຂໍ້ຕົກລົງແຕ່ກໍ່ມີບັນຫາພຽງເລັກນ້ອຍ. ທ່ານ ກາເຊົາ ຄາດວ່າເຄິ່ງໜຶ່ງຂອງຊາວກະສິກອນໃນ 7 ບ້ານ ໄດ້ເຂົ້າຮ່ວມການຜະລິດຂໍ້ຕົກລົງ. ລາວເວົ້າວ່າ: ກໍລະນີທີ່ປະສົບຜົນສຳເລັດແມ່ນຜູ້ລົງທຶນ ແລະ ຊາວກະສິກອນຮູ້ຈັກຊຶ່ງກັນ ແລະ ກັນ, ຜູ້ລົງທຶນເຮັດວຽກຜ່ານຕົວແທນ ແລະ ຊື້ຜົນຜະລິດ ທັງໝົດ.

## ການສັງເກດການ

ຕ້ອງການຂອງຄຸ້ມບ້ານທີ່ຈະຕິດຕາມກວດກາການຜະລິດແບບມີຂໍ້ຕົກລົງທັງໝົດທີ່ຈົດທະບຽນກັບເຈົ້າໜ້າທີ່ຂອງເມືອງໂດຍສະເພາະຜະລິດຕະພັນສຳລັບສົ່ງອອກນັ້ນຍັງບໍ່ໄດ້ຮັບການຈັດຕັ້ງປະຕິບັດ. ຍັງມີຫຼາຍການຜະລິດແບບມີຂໍ້ຕົກລົງທີ່ຄຸ້ມບານຈະຕິດຕາມກວດກາ ແລະ ທົບທວນຢ່າງໃກ້ສິດ. ແນວໃດກໍ່ຕາມ, ປະກົດວ່າການຜະລິດແບບມີຂໍ້ຕົກລົງສ່ວນຫຼາຍມີຜົນຮັບທີ່ພຶງພໍໃຈສຳລັບຊາວກະສິກອນ ແລະ ຜູ້ລົງທຶນເຖິງແມ່ນວ່າບໍ່ມີການສະໜັບສະໜູນ ຫຼື ມີສ່ວນຮ່ວມຂອງຄຸ້ມບານ ຫຼື ຫ້ອງການກະສິກຳ-ປ່າໄມ້ເມືອງ; ພຽງແຕ່ 2-3 ກໍລະນີທີ່ມີການຮ້ອງທຸກຫາຄຸ້ມບ້ານເພື່ອໄກ່ເກ່ຍ ແລະ ກໍ່ເປັນກໍລະນີທີ່ຫຍຸ້ງຍາກທີ່ຈະແກ້ໄຂ.

ມີຫຼາຍເຫດຜົນທີ່ພະນັກງານລັດບໍ່ສາມາດປະຕິບັດໜ້າທີ່ສະໜັບສະໜູນການຜະລິດແບບມີສັນຍາຢ່າງເຕັມພາລະບົດບາດເຊັ່ນ: 1) ການຝຶກອົບຮົມທີ່ສະໜອງໃຫ້ອາດຍັງບໍ່ທັນສ້າງຄວາມຮູ້ ແລະ ທັກສະທີ່ເພາະສົມພຽງພໍ, ຕົວຢ່າງ: ການຮ່າງສັນຍາ ຫຼື ຂໍ້ຕົກລົງທີ່ດີ, ບໍ່ຄຸມເຄືອ ຫຼື ມີເງື່ອນໄຂທີ່ຂັດກັນ. 2) ງົບປະມານຂອງພາກລັດອາດຈະບໍ່ມີພຽງພໍທີ່ຈະສະໜັບສະໜູນການຕິດຕາມສັງເກດການສະພາບຕົວຈິງຂອງພື້ນທີ່, ການຜະລິດ ແລະ ການຮ່າງສັນຍາ. 3) ຜົນປະໂຫຍດສ່ວນຕົວອາດຈະຄອບງຳ ຫຼື ບັ່ນທອນຄວາມສາມາດໃນການຈັດຕັ້ງປະຕິບັດລະບຽບການຢ່າງເຂັ້ມງວດ ແລະ ການຕັດສິນທີ່ເປັນກາງ ຫຼື ບໍ່ລຳອຽງ.

ຄ່າໃຊ້ຈ່າຍສຳລັບການຈົດທະບຽນສັນຍາການຜະລິດ, ເວລາ, ຄ່າທຳນຽມ, ອາກອນ, ແລະ ລວມທັງຄ່າທຳນຽມທີ່ບໍ່ເປັນທາງການເກີນຄຸນຄ່າຂອງຜົນປະໂຫຍດທີ່ຈະໄດ້ຈາກການຈົດທະບຽນເຊັ່ນວ່າ: ການຮ້ອງທຸກຕາມທາງກົດໝາຍ, ຄ່າທຳນຽມໃບອະນຸຍາດສົ່ງອອກສິນຄ້າ ແລະ ການເຂົ້າເຖິງການໄກ່ເກ່ຍທີ່ເປັນທາງການ. ສຳລັບຜູ້ລົງທຶນ, ມັນອາດຈະໄວ ແລະ ຖືກກວ່າທີ່ຈະຈ່າຍຄ່າທຳນຽມຄັ້ງດຽວໃຫ້ຫ້ອງການພາສີອາກອນໃນເວລາສົ່ງອອກຜົນຜະລິດທີ່ຊື້ຈາກຊາວກະສິກອນພາຍໃຕ້ການຜະລິດແບບມີຂໍ້ຕົກລົງ.

ບັນຫາທີ່ກ່າວມາສະແດງໃຫ້ເຫັນວ່າກຸ່ມບ້ານ, ຫ້ອງການກະສິກຳ-ປ່າໄມ້ເມືອງ ແລະ ເຈົ້າໜ້າທີ່ເມືອງອື່ນໆຍັງຂາດຄວາມອາດສາມາດທີ່ຈະຕິດຕາມກວດກາກິດຈະກຳການຜະລິດທັງໝົດ ແລະ ປະຕິບັດມາດຕະການ ຫຼື ແກ້ໄຂຄຳຮ້ອງທຸກຂອງຜູ້ລົງທຶນ ແລະ ຊາວກະສິກອນຕາມລະບຽບການໂດຍສະເພາະບັນຫາກ່ຽວກັບການຈົດທະບຽນ. ຖ້າເຂົາເຈົ້າພະຍາຍາມທີ່ຈະປະຕິບັດສິ່ງທີ່ກ່າວມາທັງໝົດເຂົາເຈົ້າອາດບໍ່ສາມາດປະຕິບັດພາລະອື່ນໄດ້ ແລະ ອາດຈະເຮັດໃຫ້ການລົງທຶນ, ການຜະລິດຫຼຸດລົງ ແລະ ເປັນໄປໄດ້ຍາກທີ່ ລຶບລ້າງຄວາມທຸກຍາກ.

ບັນຫາກ່ຽວກັບການປະສານງານລະຫວ່າງອົງການຈັດຕັ້ງລັດອາດຈະບໍ່ເປັນເລື່ອງແປກ, ໂດຍສະເພາະຫ້ອງການພາສີອາກອນ ແລະ ຫ້ອງການກະສິກຳ-ປ່າໄມ້ເມືອງ. ເຂົາເຈົ້າກຳລັງແຂ່ງຂັນ ສ້າງເງື່ອນໄຂໃນການສະໜອງບໍລິການຂອງເຂົາເຈົ້າໂດຍສະເພາະຄ່າທຳນຽມເພື່ອອຳນວຍຄວາມສະດວກການສົ່ງອອກ. ຕາມທັດສະນະຂອງຜູ້ລົງທຶນ ການຈ່າຍຄ່າທຳນຽມຄັ້ງດຽວ, ອາດຈະເປັນທາງການ ຫຼື ບໍ່ເປັນທາງການ ໃຫ້ ຫ້ອງການພາສີອາກອນອາດຈະໃຫ້ທາງເລືອກທີ່ດີກວ່າເມື່ອປຽບທຽບປະສິດທິຜົນ ແລະ ຄ່າສິ້ນເປືອງ. ການທີ່ ຫ້ອງການພາສີອາກອນສະໜອງນີ້ເກັບຄ່າສິ້ນເປືອງຕ່ຳນັ້ນເປັນການສ້າງຄວາມສາມາດໃນການແຂ່ງຂັນຂອງຊາວກະສິກອນລາວເພາະວ່າໂດຍທົ່ວໄປມັນເປັນການຫຼຸດຄ່າສິ້ນເປືອງຊຶ່ງຕິດພັນກັບຄວາມເປັນໄປໄດ້ຂອງການລົງທຶນທີ່ຜູ້ລົງທຶນກຳລັງປະເຊີນຢູ່.

ເຖິງຢ່າງນັ້ນກໍ່ຕາມ, ການຜະລິດແບບມີຂໍ້ຕົກລົງຈຳນວນໜຶ່ງແມ່ນມີການຈົດທະບຽນ. ນີ້ອາດຈະເກີດຂຶ້ນເມື່ອຊາວກະສິກອນ ແລະ ຜູ້ລົງທຶນຂາດຄວາມເຊື່ອໝັ້ນຊຶ່ງກັນ ແລະ ກັນເພາະວ່າບໍ່ຮູ້ຈັກຊຶ່ງກັນ ແລະ ກັນ ຫຼື ບໍ່ສາມາດກວດສອບປະຫວັດຄວາມໜ້າເຊື່ອຖືຂອງກັນ ແລະ ກັນໄດ້. ການຈົດທະບຽນອາດຈະສ້າງຄວາມເຊື່ອໝັ້ນ, ປັບປຸງຄວາມໂປ່ງໃສ ແລະ ຊ່ວຍເຂົ້າເຖິງການຄຸ້ມຄອງ ດ້ວຍກົດໝາຍ.

***ສະຫຼຸບ***

- ຊາວກະສິກອນ ແລະ ຜູ້ລົງທຶນ ສາມາດຈັດຕັ້ງການຜະລິດຂໍ້ຕົກລົງ ຊຶ່ງບັນລຸຜົນທີ່ທັງສອງຝ່າຍຍອມຮັບໄດ້ໂດຍປາສະຈາກ ການມີສ່ວນຮ່ວມຂອງຄຸ້ມບ້ານ ຫຼື ຫ້ອງການກະສິກຳ-ປ່າໄມ້ເມືອງ
- ການຜະລິດແບບມີຂໍ້ຕົກລົງເກືອບທັງໝົດ ບໍ່ໄດ້ຮຽກຮ້ອງການຊ່ວຍເຫຼືອຈາກກຸ່ມບ້ານ ຫຼື ຫ້ອງການກະສິກຳ-ປ່າໄມ້ເມືອງ
- ຄຸ້ມບ້ານ ແລະ ຫ້ອງການກະສິກຳ-ປ່າໄມ້ເມືອງ ອາດຂາດງົບປະມານ, ຄວາມອາດສາມາດ ແລະ ສິ່ງຈູງໃຈ ທີ່ຈະຕິດຕາມກວດກາ ແລະ ສະໜັບສະໜູນ ການຜະລິດຂໍ້ຕົກລົງຢ່າງທົ່ວເຖິງ
- ຊາວກະສິກອນ ແລະ ຜູ້ລົງທຶນ ອາດຈະເຫັນວ່າ ການບໍລິການຂອງອົງການຈັດຕັ້ງລັດຍັງບໍ່ໄດ້ເພີ່ມມູນຄ່າຕໍ່ທຸລະກິດຊຶ່ງເຮັດໃຫ້ເຂົາເຈົ້າພະຍາຍາມຫຼີກລ່ຽງ
- ການປະສານງານທີ່ບໍ່ດີ ແລະ ການຊຸກຍູ້ການແຂ່ງຂັນລະຫວ່າງ ອົງການຈັດຕັ້ງພາກລັດດ້ວຍກັນອາດຈະເຮັດໃຫ້ຄ່າສິ້ນເປືອງຕ່ຳລົງ ແລະ ນຳໄປສູ່ການບໍລິການສົ່ງອອກທີ່ມີປະສິດທິພາບຫຼາຍຂຶ້ນ ສຳລັບຜູ້ລົງທຶນ
- ການລົງທຶນໃນການຜະລິດແບບມີຂໍ້ຕົກລົງຈະສາມາດດຶງດູດຄວາມສົນໃຈຫຼາຍຂຶ້ນເມື່ອການແຂ່ງຂັນລະຫວ່າງອົງການຈັດຕັ້ງພາກລັດເຮັດໃຫ້ໃຫ້ຄ່າສິ້ນເປືອງຕ່ຳລົງ ແລະ ສະດວກສຳລັບຜູ້ລົງທຶນຫຼາຍຂຶ້ນ
- ວິທີການເກັບອາກອນແບບງ່າຍດາຍອາດຈຳເປັນເພາະວ່າມັນອາດສາມາດຫຼີກລ່ຽງການຫຼົບຫຼີກອາກອນຂອງຊາວກະສິກອນ ແລະ ຜູ້ລົງທຶນ.
- ຄວາມຮັບຜິດຊອບທີ່ເຫຼື່ອມກັນຂອງອົງການຈັດຕັ້ງພາກລັດ, ບໍ່ມີປະສິດທິພາບ ອາດຈະເສຍກາລະໂອກາດສຳລັບຊາວກະສິກອນ ແລະ ຜູ້ລົງທຶນເພາະວ່າການເຄື່ອນໄຫວອາດບໍ່ຄ່ອງຕົວ ແລະ ຕອບສະໜອງເງື່ອນໄຂຕະຫຼາດໄດ້ຢ່າງມີປະສິດທິພາບ

## *ປັດໃຈທີ່ພາໃຫ້ເກີດຜົນສຳເລັດ*

1. ການພົວພັນທາງດ້ານສັງຄົມ ລະຫວ່າງ ຊາວກະສິກອນ ແລະ ຜູ້ລົງທຶນ
2. ການແຂ່ງຂັນລະຫວ່າງ ອົງການຈັດຕັ້ງລັດດ້ວຍກັນ

**ຄຳຖາມ**

ກ. ຄຸ້ມບ້ານ ແລະ ຫ້ອງການກະສິກຳ-ປ່າໄມ້ເມືອງສາມາດ ປະຕິບັດ ພາລະບົດບາດ ຫຼື ການຊ່ວຍເຫຼືອ ຫຍັງ ທີ່ໄດ້ ຮັບຜົນດີພາຍໃຕ້ງົບປະມານ ແລະ ຄວາມອາດສາມາດ ທີ່ຈຳກັດຂອງເຂົາເຈົ້າ ?

ຂ. ຊາວກະສິກອນ ແລະ ຜູ້ລົງທຶນຕ້ອງການຄຸ້ມບ້ານ ຫຼື ຫ້ອງການ ກະສິກຳ-ປ່າໄມ້ເມືອງ ປະຕິບັດພາລະບົດ ບາດ ຫຼື ການຊ່ວຍຫຼືອຫຍັງເພື່ອສະໜັບສະໜູນການ ຜະລິດແບບມີຂໍ້ຕົກລົງ?

ຄ. ຍ້ອນຫຍັງການຈົດທະບຽນສັນຍາຈຶ່ງບໍ່ສະດວກສຳລັບ ຊາວກະສິກອນ ແລະ ຜູ້ລົງທຶນ?

ງ. ຈະເຮັດແນວໃດໃຫ້ການຈົດທະບຽນສະດວກຂຶ້ນສຳ ລັບຊາວກະສິກອນ ແລະ ຜູ້ລົງທຶນ?

ຈ. ຈະມີສິ່ງຈູງໃຈຫຍັງທີ່ຈະຊຸກຍູ້ການຈົດທະບຽນສຳລັບ ການຜະລິດ ແບບມີຂໍ້ຕົກລົງ?

ສ. ມີທາງເລືອກຫຍັງແດ່ສຳລັບການຈົດທະບຽນການຜະ ລິດແບບມີຂໍ້ຕົກລົງ?

## 8.9. ເປັນກໍລະນີ 9. ຂໍ້ມູນຂ່າວສານ ແລະ ເຈລະຈາ, ຄວາມສ່ຽງ ແລະ ອຸປະສັກ

### ບ້ານ ຫ້ວຍດອຍ, ເມືອງບຸນໃຕ້, ແຂວງ ຜົ້ງສາລີ



ທ່ານ ສຸກ, ຜູ້ຜະລິດຖົ່ວເຫຼືອງທີ່ມີຂໍ້ຕົກລົງຮ່ວມກັນ

ເຖິງວ່າຈະມີຂໍ້ບົກພ່ອງຂອງຫ້ອງການກະສິກຳ ແລະ ປ່າໄມ້ເມືອງຊາວກະສິກອນຍັງນຳໃຊ້ຂໍ້ມູນ-ຂ່າວສານດ້ານຕະຫຼາດກະສິກຳເພື່ອຕໍ່ລອງລາຄາກັບຜູ້ລົງທຶນ

**ປະສົບການ**

ລະຫວ່າງສາຍນ້ຳນ້ອຍ ແລະ ທະໜົນຫົນທາງດິນແດງໄປທາງເໜືອຂອງເມືອງບຸນໃຕ້ມີພື້ນທີ່ຮາບພຽງຊຶ່ງມີຊາວກະສິກອນລວມຕົວກັນເປັນກຸ່ມ; ບາງຄົນໃສ່ໝວກກິລາເບສບອນ, ບາງຄົນໃສ່ກຸບ, ກຳລັງບົວລະບັດຕົ້ນໝາກຖົ່ວຂຽວທີ່ກຳລັງປົ່ງໃບຂຽວອ່ອນ. ທີ່ທົ່ງນາເກົ່າໆ ໃກ້ບໍລິເວນດັ່ງກ່າວ, ທ່ານ ສຸກ ແສງໄຊຍະວົງ, ຫົວໜ້າກຸ່ມໄດ້ອະທິບາຍກ່ຽວກັບການເຮັດວຽກຂອງຊາວກະສິກອນກັບຜູ້ລົງທຶນຈາກປະເທດຈີນໄທລື້.

ໃນ 2010, ໃນເບື້ອງຕົ້ນຜູ້ລົງທຶນໄດ້ເຮັດໃຫ້ຂໍ້ຕົກລົງກັບຫ້ອງການກະສິກຳ-ປ່າໄມ້ ເມືອງ ບຸນໃຕ້ ແລະ ຫຼັງຈາກນັ້ນກໍ່ໄດ້ນຳສັນຍາລົງມາບ້ານ ແລະ ພົບປະກັບຊາວກະສິກອນ. ທ່ານ ສຸກ ໄດ້ພົບກັບຜູ້ລົງທຶນໃນຊ່ວງທີ່ລາວເປັນນາຍບ້ານ ບ້ານສົນໄຊ 5 ປີ ຜ່ານມາ 2-3 ປີ ຕໍ່ມາ ທ່ານ ສຸກ ໄດ້ເຮັດວຽກກັບຜູ້ລົງທຶນເພື່ອ

ອຳນວຍຄວາມສະດວກການລົງທຶນຢາງພາລາໃນເມືອງບຸນໃຕ້. ໃນຊ່ວງກອງປະຊຸມພົບປະກັບຊາວກະສິກອນ, ສັນຍາການຜະລິດໄດ້ອ່ານຜ່ານຊາວກະສິກອນ. ນອກຈາກຢາງພາລາແລ້ວ, ຊາວກະສິກອນຈຳນວນໜຶ່ງຍັງໄດ້ຕົກລົງປູກໝາກເຜັດໃຫ້ຜູ້ລົງທຶນໂດຍມີ ທ່ານ ສຸກ ເປັນຫົວໜ້າກຸ່ມຜູ້ຜະລິດ ແລະ ທັງເປັນທີ່ປຶກສາທາງດ້ານເຕັກນິກ. ເຖິງແນວໃດກໍ່ຕາມ, ຊາວກະສິກອນຮູ້ສຶກວ່າ ໄດ້ຮັບຄ່າແຮງງານສູງສະນັ້ນປີນີ້ເຂົາເຈົ້າໄດ້ຕົກລົງກັບຜູ້ລົງທຶນອີກແຕ່ຈະປູກໝາກຖົ່ວຂຽວແທນ.

ຊາວກະສິກອນໄດ້ເຈລະຈາກັບຜູ້ລົງທຶນໂດຍກົງແຕ່ຂໍ້ມູນ-ຂ່າວສານແມ່ນບັນຫາຫຼັກ. ທ່ານ ສຸກ ເວົ້າວ່າ: "ພວກເຮົາອ່ານສັນຍາ ແລະ ຕ້ອງການໃຫ້ປ່ຽນແປງລາຄາຊຶ່ງກຳນົດໃນສັນຍາພຽງແຕ່ 1 ຢວນ ຕໍ່ ກິໂລກຼາມ. ພວກເຮົາຕ້ອງການ 1.5 ຢວນ ຕໍ່ ກິໂລກຼາມ. ໃນທີ່ສຸດພວກເຮົາສາມາດໄດ້ຕົກລົງຮ່ວມກັນໃນລາຄາ 1.2 ຢວນ ຕໍ່ ກິໂລກຼາມ." "ພວກເຮົາຄິດວ່າຫ້ອງການກະສິກຳ-ປ່າໄມ້ເມືອງຮູ້ກ່ຽວກັບລາຄາເພາະວ່າເຂົາເຈົ້າເປັນຜູ້ນຳສະເໜີຜູ້ລົງທຶນ; ແຕ່ໃນຕົວຈິງຫ້ອງການກະສິກຳ-ປ່າໄມ້ເມືອງບໍ່ຮູ້ລາຄາຕະຫຼາດໃນ ສປ ຈີນ ແລະ ບໍ່ໄດ້ຊ່ວຍເຫຼືອພວກເຮົາໃນການເຈລະຈາ.

ຜູ້ລົງທຶນເປັນຜູ້ສະໜອງໃຫ້ປັດໃຈການຜະລິດ ແລະ ນ້ຳມັນສຳລັບປ້ຳນ້ຳໂດຍບໍ່ໄດ້ເກັບຄ່າໃດໆ. ຜູ້ລົງທຶນຍັງຈ່າຍ 50,000 ກີບຕໍ່ໝູ່ສຳລັບລະດູການໜຶ່ງໃຫ້ຊາວກະສິກອນອີກດ້ວຍ.

ທ່ານ ສຸກ ເວົ້າວ່າ: "ການຈ່າຍຄ່າທຳນຽມທີ່ດິນເບິ່ງຄືວ່າໄດ້ຈັດຕັ້ງປະຕິບັດປົກກະຕິສຳລັບຜູ້ລົງທຶນຊາວຈີນ. ນີ້ແມ່ນການສະເໜີຂອງຊາວກະສິກອນ, ໂດຍອີງໃສ່ສິ່ງສິ່ງທີ່ເຂົາເຈົ້າໄດ້ຮຽນຮູ້ໃນ ສປ ຈີນ . ຄ່າທຳນຽມປະມານ 100,000 ກີບ ຕໍ່ ໝູ່,". ໃນຂະນະດຽວກັນ "ເມືອງ ແລະ ແຂວງ ຄິດວ່າເປັນຄ່າທີ່ສູງເກີນໄປ ແລະ ຢ້ານວ່າຖ້າຊາວກະສິກອນໄດ້ຮັບຄ່າທຳນຽມທີ່ສູງກວ່າພວກເຂົາອາດຈະໃຫ້ເຊົ່າທີ່ດິນທັງໝົດທີ່ມີໃຫ້ຜູ້ລົງທຶນຊາວຈີນ, ແມ່ນແຕ່ທີ່ດິນທີ່ລັດໄດ້ລົງທຶນພັດທະນາຊົນລະປະທານສຳລັບເຂົາເຈົ້າເພື່ອປູກເຂົ້າສະນັ້ນຈຶ່ງຕັດສິນວ່າຄ່າທຳນຽມຄວນຈະຢູ່ໃນລະດັບ 50,000 ກີບ ຕໍ່ ໝູ່ ."

ຊາວກະສິກອນ ບ້ານສິນໄຊ ເຮັດວຽກກັບຜູ້ລົງທຶນເນື່ອງຈາກວ່າພວກເຂົາບໍ່ມີທຶນພຽງພໍທີ່ຈະລົງທຶນການຜະລິດເປັນສິນຄ້າດ້ວຍຕົນເອງ. ທ່ານ ສຸກ ເວົ້າວ່າ: "ບັນຫາຄືພວກເຮົາບໍ່ມີຄວາມຮູ້ທາງດ້ານເຕັກນິກ, ໂດຍສະເພາະການນຳໃຊ້ປຸ໋ຍເຄມີ ແລະ ຢາປາບສັດຕູພືດ. ປະເດັນອື່ນແມ່ນຂໍ້ມູນ-ຂ່າວສານກ່ຽວກັບປັດໃຈການຜະລິດທັງໝົດແມ່ນເປັນພາສາຈີນຊຶ່ງພວກເຮົາບໍ່ສາມາດອ່ານໄດ້,"

ຄວາມຮູ້ທາງດ້ານເຕັກນິກສາມາດຮຽນຮູ້ໄດ້ຈາກປະສົບການແຕ່ການເຂົ້າເຖິງຕະຫຼາດເປັນອຸປະສັກ ແລະ ຍາກທີ່ຈະແກ້ໄຂ. ທ່ານ ສຸກ ເວົ້າວ່າ: "ມັນຫຍຸ້ງຍາກທີ່ຈະຊອກຫາຕະຫຼາດຖ້າພວກເຮົາລົງທຶນດ້ວຍຕົນເອງ ແລະ ຍາກທີ່ຈະຂາຍພາຍໃນປະເທດ. ເມື່ອພວກເຮົາພະຍາຍາມນຳຜົນຜະລິດອອກໄປຂາຍທີ່ ໃນ ສປ ຈີນ ພວກເຮົາກໍ່ພົບກັບຄວາມຫຍຸ້ງຍາກແບບໜຶ່ງອີກ, ຜູ້ຊື້ຊາວຈີນມັກເວົ້າວ່າຜະລິດຕະພັນຂອງພວກເຮົາບໍ່ໄດ້ຄຸນນະພາບ ຫຼື ມາດຖານ, ເຂົາເຈົ້າສາມາດກຳນົດລາຄາແບບໃດກໍ່ໄດ້ຕາມທີ່ເຂົາເຈົ້າຢາກເວົ້າຖ້າພວກເຮົາຂາຍຢູ່ຕະຫຼາດທົ່ວໄປ.[13] ຖ້າພວກເຮົາມີຂໍ້ຕົກລົງກໍ່ງ່າຍກວ່າທີ່ຈະເຈລະຈາຖ້າມີບັນຫາ,".

ທ່ານ ສຸກ ຄິດວ່າການເຮັດຂໍ້ຕົກລົງສຳລັບການຜະລິດຈະສືບຕໍ່ແຕ່ວ່າພືດຜັກທີ່ຈະປູກອາດຈະແຕກຕ່າງກັນໄປອີງຕາມຄວາມຕ້ອງການຕະຫຼາດ. ທ່ານ ສຸກ ເວົ້າວ່າ: "ພວກເຮົາມີຄວາມສົນໃຈໃນການຜະລິດແບບມີຂໍ້ຕົກລົງ ແລະ ຂາຍໃນຕະຫຼາດເປີດ ຫຼື ທົ່ວໄປ. ແຕ່ວ່າແນ່ນອນພວກເຮົາຈະຕ້ອງໄດ້ອີງໃສ່ສະພາບຄວາມເປັນຈິງການຕະຫຼາດໃນ ສປ ຈີນ ແລະ ສປປ ລາວ. ພວກເຮົາຈະປູກພືດຜັກບາງຊະນິດສຳລັບຕະຫຼາດທົ່ວໄປຖ້າພວກເຮົາຮູ້ວ່າມັນມີຄວາມຕ້ອງການສຳລັບພືດຜັກນັ້ນ" ແຕ່ "ພວກເຮົາບໍ່ຮູ້ຄວາມຕ້ອງການຂອງຕະຫຼາດໃນອະນາຄົດ; ສະນັ້ນພວກເຮົາຍັງບໍ່ຮູ້ວ່າພວກເຮົາຈະປູກຫຍັງ. ພວກເຮົາຈະປູກພືດຊະນິດໃດໆກໍ່ໄດ້ທີ່ຜູ້ລົງທຶນຈາກ ສປ ຈີນ ຕ້ອງການຊື້. ມັນຍາກຫຼາຍທີ່ຈະເຮັດໃຫ້ຂໍ້ຕົກລົງໃນໄລຍະຍາວເພາະວ່າອະນາຄົດແມ່ນບໍ່ແນ່ນອນ; ສະນັ້ນ, ການສ້າງສັນຍາຕາມແຕ່ລະດູການແມ່ນເໝາະສົມກວ່າ."

ການເຮັດວຽກກັບຜູ້ລົງທຶນແມ່ນມີຄວາມແນ່ນອນກວ່າເພາະວ່າປົກກະຕິແລ້ວຊາວກະສິກອນຮູ້ຈັກກັບຜູ້ລົງທຶນ. "ພວກເຮົາສາມາດສາມາດກວດສອບປະຫວັດຂອງຜູ້ລົງທຶນຈາກໝູ່ເພື່ອນທີ່ຢູ່ ໃນ ສປ ຈີນ ແລະ ສປປ ລາວ. ປົກກະຕິແລ້ວຜູ້ລົງທຶນສ່ວນຫຼາຍແມ່ນຜູ້ທີ່ຜ່ານໄປມາໃນຂົງເຂດນີ້. ທ່ານ ສຸກ ເວົ້າວ່າ:

[13] ບັນຫາທີ່ເກີດຂຶ້ນກັບຊາວກະສິກອນທີ່ຜະລິດກະລຳປີໃນແຂວງຈຳປາສັກ ແລະ ສາລະວັນແມ່ນເມື່ອຜົນຜະລິດຖືກຂົນສົ່ງໄປທີ່ຊາຍແດນຜູ້ລົງທຶນອາດຄວບຄຸມລາຄາ ໂດຍບໍ່ໄດ້ຄຳນຶງເຖິງຂໍ້ຕົກລົງການຜະລິດ (Fullbrook 2007, 44-47)

ເດືອນທີ່ຜ່ານມາຜູ້ລົງທຶນຄົນໜຶ່ງເຂົ້າມາບ້ານນີ້ຊຶ່ງເປັນຄັ້ງທຳອິດຂອງລາວ. ລາວເວົ້າວ່າລາວໄດ້ລົງທຶນຢູ່ເມືອງສິງ ແລະ ຕ້ອງການປູກກ້ວຍຢູ່ເຂດນີ້; ແລະ ຂ້າພະເຈົ້າແນະນຳວ່າລາວຄວນຈະໄປພົບກັບເມືອງເພື່ອສະເໜີການລົງທຶນກ່ອນ.ຖ້າເມືອງຕົກລົງເຫັນດີພວກເຮົາຈະພະຍາຍາມຊອກທີ່ດິນໃຫ້. ຫຼັງຈາກນັ້ນກໍ່ບໍ່ໄດ້ເຫັນລາວກັບມາອີກ; ຂ້າພະເຈົ້າໄດ້ຍິນວ່າລາວໄປເມືອງອື່ນເຊັ່ນກັນ.

ເຖິງແມ່ນວ່າຜ່ານມາຊາວກະສິກອນໄດ້ຈັດຕັ້ງປະຕິບັດການຜະລິດແບບມີຂໍ້ຕົກລົງກັບຜູ້ລົງທຶນໂດຍປາສະຈາກສະໜັບສະໜູນຈາກຫ້ອງການກະສິກຳ-ປ່າໄມ້ເມືອງ; ທ່ານ ສຸກ ຄິດວ່າຫ້ອງການກະສິກຳ-ປ່າໄມ້ເມືອງສາມາດຊ່ວຍເຫຼືອໄດ້ຫຼາຍດ້ານ. “1) ຊ່ວຍເຈລະຈາກັບຜູ້ລົງທຶນກ່ຽວກັບການຂຶ້ນລາຄາ. ແຕ່ຂ້າພະເຈົ້າຄິດວ່າເພື່ອສາມາດເຈລະຈາໄດ້ດີຫ້ອງການກະສິກຳ-ປ່າໄມ້ເມືອງຄວນຈະມີຂໍ້ມູນ-ຂ່າວສານກ່ຽວກັບຕະຫຼາດໃນ ສ ປ ຈີນ. 2) ສະໜັບສະໜູນທາງດ້ານເຕັກນິກ. ປະຈຸບັນພວກເຮົາອາໃສ ການສະໜັບສະໜູນ ທາງດ້ານເຕັກນິກຈາກຝ່າຍຈີນເກືອບທັງໝົດ. ພວກເຮົາປະຕິບັດຕາມການແນະນຳຂອງຝ່າຍຈີນທຸກຢ່າງແຕ່ວ່າພວກເຮົາຈະຮູ້ໄດ້ແນວໃດວ່າມັນເປັນວິທີທີ່ດີທີ່ສຸດສຳລັບການປັບປຸງການຜະລິດ?” ໂດຍທົ່ວໄປນະໂຍບາຍຂອງລັດແມ່ນເພື່ອຊຸກຍູ້ຊາວກະສິກອນປູກພືດເປັນສິນຄ້າເພື່ອຫຼຸດຜ່ອນຄວາມທຸກຈົນ; ແຕ່ໃນການຈັດຕັ້ງປະຕິບັດຕົວຈິງຍັງບໍ່ໄດ້ເຮັດວຽກຢ່າງໃກ້ສິດເທົ່າທີ່ຄວນກັບຊາວກະສິກອນເທື່ອ .”

**ການສັງເກດການ**

ຊາວກະສິກອນຄາດວ່າຈະໄດ້ຮັບການສະໜັບສະໜູນຈາກ ຫ້ອງການກະສິກຳ-ປ່າໄມ້ເມືອງ ໃນ 3 ປະເດັນຄື: 1) ຊ່ວຍເຈລະຈາ, ດ້ວຍການ ສະໜັບສະໜູນຈຸດຍືນ ຫຼື ຕາງໜ້າຊາວກະສິກອນໃນການເຈລະຈາ. 2) ສະໜອງຂໍ້ມູນ-ຂ່າວສານ ທາງດ້ານເຕັກນິກ ແລະ ຕະຫຼາດ. 3) ຄຸ້ມຄອງຜູ້ລົງທຶນ ແລະ ແຜນການສະເໜີການລົງທຶນ.

ເນື່ອງຈາກຊາວກະສິກອນເຫັນວ່າຈຸດອ່ອນຂອງຫ້ອງການກະສິກຳ-ປ່າໄມ້ເມືອງແມ່ນການເຈລະຈາ ແລະ ຂໍ້ມູນ-ຂ່າວສານ; ເຂົາເຈົ້າຈຶ່ງພະຍາຍາມ ບັນລຸຂໍ້ຕົກລົງກັບຜູ້ລົງທຶນດ້ວຍຕົນເອງ. ເຂົາເຈົ້າໄດ້ເຈລະຈາເພື່ອເພີ່ມລາຄາ ແລະ ກໍ່ສະເໜີຄ່າທຳນຽມສຳລັບທີ່ດິນ. ພວກເຮົາປະເມີນລາຄາ ແລະ ຄ່າທຳນຽມທີ່ດິນໂດຍອີງໃສ່ຂໍ້ມູນ-ຂ່າວສານທີ່ເຂົາເຈົ້າໄດ້ຮັບຮູ້ໃນຊວງໄປຢ້ຽມຢາມ ສປ ຈີນ ຫຼື ຜ່ານເຄືອຂ່າຍໝູ່ເພື່ອນ ແລະ ຍາດພີ່ນ້ອງ. ການທີ່ຊາວກະສິກອນຄາດຫວັງໃຫ້ ຫ້ອງການ ກະສິກຳ-ປ່າໄມ້ເມືອງຈະປະຕິບັດໜ້າທີ່ທີ່ເຂົາເຈົ້າໄດ້ປະຕິບັດຜ່ານມາສາມາດແປໄດ້ຫຼາຍທາງ:

1) ຊາວກະສິກອນເຫັນວ່າມັນເປັນການກະຈາຍອຳນາດ ຫຼື ຄວາມສຳພັນ; ແລະ ໜຶ່ງໃນບົດບາດຂອງຫ້ອງການກະສິກຳ-ປ່າໄມ້ເມືອງແມ່ນການສະໜອງຂໍ້ມູນ-ຂ່າວສານຕະຫຼາດ ແລະ ຄຳແນະນຳທາງດ້ານເຕັກນິກ, ໃນຮູບແບບເອື້ອຍອີງ ຫຼື ຜູ້ປົກຄອງ. ເຖິງແນວໃດກໍ່ຕາມຊາວກະສິກອນໄດ້ສະແດງໃຫ້ເຫັນແລ້ວວ່າເຂົາເຈົ້າສາມາດໄດ້ຮັບຂໍ້ມູນ-ຂ່າວສານຈຳນວນໜຶ່ງ ແລະ ສາມາດເຈລະຈາໄດ້ຜົນດີຂຶ້ນ. ຈຸດອ່ອນຂອງຊາວກະສິກອນແມ່ນບໍ່ມີທັກສະ ແລະ ຄວາມຮູ້ທີ່ພຽງພໍທີ່ຈະຊອກຫາ ແລະ ເຂົ້າເຖິງຂໍ້ມູນ-ຂ່າວສານ, ເຂົ້າໃຈຢ່າງເລິກເຊິ່ງ ແລະ ແປຄວາມໝາຍຂອງຂໍ້ມູນຕະຫຼາດ. ຂໍ້ມູນຂ່າວສານ ແລະ ຄວາມຮູ້ທີ່ພຽງພໍສາມາດຊ່ວຍສ້າງເຂົາເຈົ້າຢູ່ໃນຈຸດຢືນທີ່ເຂັ້ມແຂງໃນການເຈລະຈາກ່ຽວກັບການຜະລິດ. ຄວາມສາມາດຂອງຫ້ອງການກະສິກຳ-ປ່າໄມ້ເມືອງທີ່ຈະໄດ້ຮັບ ແລະ ແປຄວາມໝາຍຂໍ້ມູນຕະຫຼາດບໍ່ສາມາດພິສູດໄດ້ ແລະ ຖ້າມີອາດຈະແມ່ນລັກສະນະທີ່ຕິດພັນກັບວຽກວິຊາສະເພາະຂອງເຂົາເຈົ້າ. ດ້ານການສະໜອງຂໍ້ມູນ-ຂ່າວສານຕະຫຼາດບໍ່ແມ່ນໜ້າທີ່ສະເພາະຂອງຫ້ອງການກະສິກຳ-ປ່າໄມ້ເມືອງສະນັ້ນຄວາມອາດສາມາດໃນດ້ານດັ່ງກ່າວຈຳກັດ. ໃນກໍລະນີທີ່ຫ້ອງການກະສິກຳ-ປ່າໄມ້ເມືອງນຳໃຊ້ຊັບພະຍາກອນທີ່ຈຳກັດຂອງຕົນເອງເພື່ອຊ່ວຍເຫຼືອຊາວກະສິກອນໃນເລື່ອງທີ່ເຂົາເຈົ້າສາມາດເຮັດໄດ້ດ້ວຍຕົນເອງນັ້ນເຫັນວ່າການໃຫ້ຄຳປຶກສາ ຫຼື ຝຶກອົບຮົມຂອງຫ້ອງການກະສິກຳ-ປ່າໄມ້ນັ້ນບາງຄັ້ງບໍ່ໄດ້ຮັບຜົນ. ອີງໃສ່ຄວາມອາດສາມາດທີ່ຈຳກັດ, ບົດບາດທີ່ຫ້ອງການກະສິກຳ-ປ່າໄມ້ເມືອງອາດຈະປະຕິບັດໄດ້ດີແມ່ນການກຳນົດຊະນິດພືດຜັກທີ່ເໝາະສົມທີ່ສຸດສຳລັບເງື່ອນໄຂທ້ອງຖິ່ນ, ສະໜອງຂໍ້ມູນ-ຂ່າວສານທາງດ້ານເຕັກນິກ ແລະ ວິທີການທີ່ມີປະສິດທິຜົນທີ່ຈະຊ່ວຍໃຫ້ໄດ້ຜົນຜະລິດສູງສຸດ.

2) ຊາວກະສິກອນ ຮູ້ສຶກວ່າເສຍປຽບ ເພາະວ່າ ເຂົາເຈົ້າບໍ່ມີຄວາມຮູ້ທາງດ້ານເຕັກນິກທີ່ພຽງພໍສຳລັບພືດຜັກຊະນິດພັນໃໝ່; ເຫດຜົນໜຶ່ງທີ່ເຂົ້າຮ່ວມການຜະລິດແບບມີຂໍ້ຕົກລົງແມ່ນການສະໜອງຄວາມຮູ້ທາງດ້ານເຕັກນິກ. ແນວໃດກໍ່ຕາມ, ຄວາມຮູ້ທາງດ້ານເຕັກນິກແມ່ນບັນຫາໃນໄລຍະສັ້ນ; ການຂາດຄວາມຮູ້, ຄວາມສາມາດທາງດ້ານເຕັກນິກອາດຈະແກ້ໄຂໄດ້ຈາກການຮຽນຮູ້ຈາກປະສົບການໃນການຜະລິດ 2-3 ປີ.



ຜະລິດຖົ່ວເຫຼືອງພາຍໃຕ້ຂໍ້ຕົກລົງ

3) ຊາວກະສິກອນອາດຈະຮູ້ສຶກບໍ່ໝັ້ນໃຈພຽງພໍທີ່ຈະດຳເນີນການດ້ວຍຕົນເອງ ແລະ ຮັບຜິດຊອບຜົນການກະທຳ ແລະ ຢາກຍົກຄວາມຮັບຜິດຊອບ ແລະ ໜີ້ສິນໃຫ້ຫ້ອງການກະສິກຳ-ປ່າໄມ້ເມືອງຖ້າມີການຂັດແຍ່ງກັບຜູ້ລົງທຶນທີ່ເຂົາເຈົ້າສັນຍານຳເພາະຊາວກະສິກອນອາດຈະຮູ້ສຶກວ່າເຂົາເຈົ້າມີສິດທີ່ຈະຫວັງໃຫ້ຫ້ອງການກະສິກຳ-ປ່າໄມ້ເມືອງເຂົ້າມາແກ້ໄຂບັນຫາ ຫຼື ທົດແທນເຂົາເຈົ້າທາງໃດທາງໜຶ່ງ. ເຖິງແມ່ນວ່າຫ້ອງການກະສິກຳ-ປ່າໄມ້ເມືອງສາມາດຈັດຕັ້ງປະຕິບັດໄດ້ດີປານໃດກໍ່ຕາມມັນກໍ່ຍັງເປັນຄຳຖາມກ່ຽວກັບຂໍ້ຈຳກັດທີ່ມີຊຶ່ງໄດ້ສະແດງໃຫ້ຊາວກະສິກອນໄດ້ເຫັນ. ຊາວກະສິກອນໝູນໃຊ້ຫ້ອງການກະສິກຳ-ປ່າໄມ້ເມືອງເປັນຜູ້ຊ່ວຍແກ້ບັນຫາ, ຄວາມສ່ຽງທີ່ເຮັດທຸລະກິດກັບຜູ້ລົງທຶນຕ່າງປະເທດລວມທັງຂໍ້ຫຍຸ້ງຍາກກ່ຽວກັບການສຳລະກັບຜູ້ລົງທຶນຕ່າງປະເທດຈຳນວນໜຶ່ງໂດຍກົງຢ່າງເພາະສົມເຖິງແມ່ນວ່າບໍ່ສົມບູນແບບ ແລະ ຍັງຂາດປະສິດທິພາບໃນການຈັດຕັ້ງປະຕິບັດມາດຕະການທາງດ້ານກົດໝາຍ.

4) ຊາວກະສິກອນອາດຈະຄິດວ່າການມີຫ້ອງການກະສິກຳ-ປ່າໄມ້ເມືອງເຮັດວຽກນຳອາດເປັນການໃຫ້ອຳນາດເຂົາເຈົ້າໃນການເຈລະຈາຕົກລົງກັບຜູ້ລົງທຶນສົມດູນກັນຍິ່ງຂຶ້ນ. ການແນະນຳຜູ້ລົງທຶນໃຫ້ໄປຫາຫ້ອງການກະສິກຳ-ປ່າໄມ້ເມືອງກ່ອນລິເລີ່ມເຈລະຈາກ່ຽວກັບຂໍ້ຕົກລົງການຜະລິດ, ເບິ່ງຜືວເຜີນແລ້ວຊາວກະສິກອນອາດຈະປະຕິບັດຕາມລະບຽບການ ຫຼື ແມ່ນການປະຕິບັດໜ້າທີ່ຂອງຫ້ອງການກະສິກຳ-ປ່າໄມ້ເມືອງແບບປົກກະຕິ. ແຕ່ຕົວຈິງແລ້ວມັນອາດເປັນການຍົກຮັບຜິດຊອບໃຫ້ຫ້ອງການກະສິກຳ-ປ່າໄມ້ເມືອງ ເປັນຜູ້ປະຕິບັດກັບຜູ້ລົງທຶນ. ນອກນັ້ນ, ການແນະນຳຜູ້ລົງທຶນໄປຫາຫ້ອງການກະສິກຳ-ປ່າໄມ້ເມືອງອາດຈະເປັນກົນໄກໃນການກັ່ນຕອງຜູ້ລົງທຶນອີກຮູບການໜຶ່ງ. ຄ່າສິ້ນເປືອງເຊັ່ນ: ເວລາ ແລະ ງົບປະມານໃນການເຮັດວຽກກັບຫ້ອງການກະສິກຳ-ປ່າໄມ້ເມືອງ ແລະ ເຈົ້າໜ້າທີ່ອື່ນໆອາດຈະເປັນຕົວຕ້ານ ແລະ ກັ່ນຕອງຜູ້ລົງທຶນທີ່ບໍ່ເຂັ້ມແຂງ ຫຼື ບໍ່ມີຄວາມອາດສາມາດອອກໄປ.

ບັນຫາໃນປະຈຸບັນ ແລະ ໄລຍະຍາວແມ່ນ ການເຂົ້າເຖິງຕະຫຼາດ. ບັນຫານີ້ອາດເກີດຂຶ້ນຍ້ອນຫຼາຍສາເຫດເຊັ່ນວ່າ: 1) ຊາວກະສິກອນ ປະເຊີນກັບການຜູກຂາດ. 2) ຊາວກະສິກອນຍັງບໍ່ໄດ້ພົບກັບຜູ້ຊື້ທີ່ໃຫ້ຜົນປະໂຫຍດສູງ, ໄກກັບຕະຫຼາດ, ຄວາມຕ້ອງການຍັງຕ່ຳ ແລະ ກຳລັງຊື້ຍັງອ່ອນ.[14] 3) ຂາດອຳນາດໃນການຕໍ່ລອງໂດຍສະເພາະແມ່ນການຂາຍຜົນຜະລິດສູ່ຕະຫຼາດ ໃນ ສປ ຈີນ. 4) ບໍລິມາດຜົນຜະລິດອາດບໍ່ພຽງພໍທີ່ຈະດຶງດູດຜູ້ຊື້ທີ່ສົນໃຈດ້ານປະລິມານ ແລະ ຄວາມຮັບປະກັນໃນການສະໜອງຜົນຜະລິດຫຼາຍກວ່າລາຄາ. ແນວໃດກໍ່ຕາມ, ການຜະລິດແບບມີຂໍ້ຕົກລົງອາດຊ່ວຍເຫຼືອຊາວກະສິກອນເອົາຊະນະບັນດາອຸປະສັກເຫຼົ່ານັ້ນດ້ວຍການດຳເນີນການຜະລິດຮ່ວມກັບຜູ້ລົງທຶນໃນທາງທີ່ໂປ່ງໃສ. ນອກນັ້ນ, ຍັງເຫັນວ່າການຜະລິດແບບມີຂໍ້ຕົກລົງມີຄວາມສຳຄັນ ແລະ ເປັນບ່ອນອີງສຳລັບການແກ້ໄຂຂໍ້ຂັດແຍ່ງ.

[14] ເບິ່ງເອກະສານຄັດຕິດສຳລັບການກຳນົດລາຄາຊຶ່ງແຕກຕ່າງກັນລະຫວ່າງລາຄາທີ່ກຳນົດໃນພື້ນທີ່ໃນລາວ ແລະ ຜູ້ຂາຍສົ່ງຢູ່ປາກກິ່ງ.

ການແກ້ໄຂຂໍ້ຂັດແຍ່ງອາດຕ້ອງການການຊ່ວຍເຫຼືອຈາກຫ້ອງການກະສິກຳ-ປ່າໄມ້ເມືອງ. ເຖິງແນວໃດກໍ່ຕາມ, ມັນຍັງບໍ່ຈະແຈ້ງວ່າຫ້ອງການກະສິກຳ-ປ່າໄມ້ເມືອງສາມາດປະຕິບັດໜ້າທີ່ນີ້ ແລະ ເປັນສື່ກາງໄດ້ ຫຼື ບໍ່. ດັ່ງກໍລະນີທີ່ກ່າວມາ; ຫ້ອງການກະສິກຳ-ປ່າໄມ້ເມືອງສາມາດຫຼຸດຄ່າທຳນຽມທີ່ດິນທີ່ຊາວກະສິກອນສະເໜີໃນມູນຄ່າ 100,000 ກີບ ຕໍ່ ໝູ່ ລົງເປັນ 50,000 ກີບ ຕໍ່ ໝູ່. ໃນກໍລະນີນີ້ປະກົດວ່າຫ້ອງການກະສິກຳ-ປ່າໄມ້ເມືອງສາມາດນຳໃຊ້ອຳນາດໜ້າທີ່ເພື່ອປົກປັກຮັກສາທີ່ດິນສຳລັບການຜະລິດສະບຽງອາຫານໃນທ້ອງຖິ່ນ. ການຕັ້ງຄ່າທຳນຽມທີ່ຕ່ຳຂອງຫ້ອງການກະສິກຳ-ປ່າໄມ້ເມືອງເປັນການຫຼຸດລາຍຮັບ ແລະ ໂອກາດສຳລັບການຫຼຸດຜ່ອນຄວາມທຸກຈົນຂອງຊາວກະສິກອນ; ໃນຂະນະດຽວກັນມັນເປັນການສະໜອງຜົນປະໂຫຍດໃຫ້ຜູ້ລົງທຶນ. ການຕັ້ງຄ່າທຳນຽມທີ່ຕ່ຳສະແດງໃຫ້ເຫັນວ່າຫ້ອງການກະສິກຳ-ປ່າໄມ້ເມືອງມີອຳນາດ. ອຳນາດນັ້ນສາມາດນຳໃຊ້ເພື່ອຮັບປະກັນທາງດ້ານສະບຽງອາຫານແທນທີ່ຈະກົດລາຍຮັບຊາວກະສິກອນ ແລະ ມັນອາດຈຳເປັນທີ່ຕ້ອງໄດ້ຕັດຄ່າສິ້ນເປືອງຂອງຜູ້ລົງທຶນ, ເພື່ອອະນຸລັກທີ່ດິນສຳລັບການຜະລິດສະບຽງອາຫານໃນທ້ອງຖິ່ນ.

## ສະຫຼຸບ

- ຊາວກະສິກອນສາມາດໄດ້ຮັບ ຂໍ້ມູນ-ຂ່າວສານ ແລະ ເຈລະຈາ ກັບຜູ້ລົງທຶນຢ່າງມີຜົນສຳເລັດ
- ໂດຍອາໄສປະສົບການຊາວກະສິກອນອາດຈະເອົາຊະນະບັນຫາກ່ຽວກັບຄວາມຮູ້ທາງດ້ານເຕັກນິກ
- ການຜະລິດແບບມີຂໍ້ຕົກລົງມີຜົນປະໂຫຍດຫຼາຍສຳລັບຊາວກະສິກອນຊຶ່ງມັນເປັນກົນໄກທີ່ຈະເອົາຊະນະຄວາມສ່ຽງ ແລະ ອຸປະສັກໃນການເຂົ້າເຖິງຕະຫຼາດ
- ເນື່ອງຈາກ ຂໍ້ມູນ-ຂ່າວສານບໍ່ພຽງພໍ ແລະ ສິ່ງທ້າທາຍໃນການຈັດຕັ້ງປະຕິບັດມາດຕະການຕ່າງໆ, ຊາວກະສິກອນໝູນໃຊ້ຫ້ອງການກະສິກຳ-ປ່າໄມ້ ເມືອງເພື່ອຫຼຸດຜ່ອນຄວາມສ່ຽງຕໍ່ເຂົາເຈົ້າ
- ຊາວກະສິກອນມີການນຳໃຊ້ຍຸດທະສາດໃນການຫຼຸດຜ່ອນຄວາມສ່ຽງ ແລະ ຍ້າຍຄວາມຮັບຜິດຊອບກ່ຽວກັບການອະນຸຍາດ ການຜະລິດກະສິກຳແບບມີຂໍ້ຕົກລົງໃນຮູບແບບແນະນຳຜູ້ລົງທຶນໄປຍັງຫ້ອງການກະສິກຳ-ປ່າໄມ້ເມືອງ
- ຫ້ອງການກະສິກຳ-ປ່າໄມ້ເມືອງສາມາດສະໜັບສະໜູນຊາວກະສິກອນ ແລະ ການຜະລິດແບບມີຂໍ້ຕົກລົງໂດຍສະເພາະແມ່ນການປະເມີນທາງດ້ານເຕັກນິກ ແລະ ສິ່ງເສີມແນວພັນ, ວິທີການປູກຝັງທີ່ເໝາະສົມກັບເງື່ອນໄຂໃນທ້ອງຖິ່ນທີ່ອາດໃຫ້ຜົນຜະລິດສູງສຸດ
- ຫ້ອງການກະສິກຳ-ປ່າໄມ້ ເມືອງ ຂາດຄວາມຕັ້ງໃຈ ຫຼື ຄວາມສາມາດໃນການສະໜອງຂໍ້ມູນ-ຂ່າວສານດ້ານການຕະຫຼາດຢ່າງພຽງພໍ
- ຫ້ອງການ ກະສິກຳ-ປ່າໄມ້ ເມືອງ ບໍ່ໄດ້ໝຸ້ງໝັ້ນທີ່ຈະເຂົ້າຮ່ວມ ໃນການເຈລະຈາ ລະຫວ່າງ ຊາວກະສິກອນ ແລະ ຜູ້ລົງທຶນ - ແມ່ນແຕ່ເປັນກາງ ຫຼື ຫຼຸດທັດສະນະກ່ຽວກັບການປະສານງານ.
- ຫ້ອງການກະສິກຳ-ປ່າໄມ້ ເມືອງ ຂາດຄວາມສາມາດໃນການແກ້ໄຂບັນຫາສ່ວນໄດ້ສ່ວນເສຍລະຫວ່າງການຮັບປະກັນທາງດ້ານສະບຽງອາຫານ, ຫຼຸດຜ່ອນຄວາມທຸກຈົນ ແລະ ຜົນປະໂຫຍດຂອງຜູ້ລົງທຶນ

## ປັດໃຈທີ່ພາໃຫ້ເກີດຜົນສຳເລັດ

1. ຂໍ້ມູນ-ຂ່າວສານຕະຫຼາດ ສຳລັບການເຈລະຈາການຜະລິດແບບມີຂໍ້ຕົກລົງ
2. ການຜະລິດແບບມີຂໍ້ຕົກລົງເປັນກົນໄກທີ່ມີປະສິດທິພາບໃນການເອົາຊະນະອຸປະສັກກ່ຽວກັບການເຂົ້າເຖິງຕະຫຼາດ
3. ການຜະລິດແບບມີຂໍ້ຕົກລົງ ຊ່ວຍສ້າງ ຄວາມໂປ່ງໃສ
4. ຄ່າທຳນຽມການນຳໃຊ້ທີ່ດິນ ເປັນຜົນປະໂຫຍດ ແລະ ສະແດງເຖິງຄວາມຮັບຜິດຊອບຂອງຜູ້ລົງທຶນ

## ຄຳຖາມ

ກ. ຍ້ອນຫຍັງຫ້ອງການກະສິກຳ-ປ່າໄມ້ເມືອງຈຶ່ງກຳນົດຄ່າທຳນຽມການນຳໃຊ້ທີ່ດິນ ສຳລັບການຜະລິດສະບຽງອາຫານໃນທ້ອງຖິ່ນຕ່ຳ ແທນທີ່ຈະສະຫງວນທີ່ດິນສຳລັບການຜະລິດສະບຽງອາຫານສຳລັບທ້ອງຖິ່ນ?

ຂ. ຄ່າທຳນຽມການນຳໃຊ້ທີ່ດິນໃນອັດຕາຕ່ຳກວ່ານັ້ນໃຫ້ຜົນປະໂຫຍດຕໍ່ ຊາວກະສິກອນ ແລະ ການຫຼຸດຜ່ອນຄວາມທຸກຈົນ ໄດ້ແນວໃດ ?

ຄ. ຊາວກະສິກອນ ຕ້ອງການຄວາມຮູ້ຫຍັງເພື່ອເພີ່ມຄວາມເຂົ້າໃຈ ແລະ ການນຳໃຊ້ ຂໍ້ມູນ-ຂ່າວສານຕະຫຼາດ ?

ງ. ຫ້ອງການ ກະສິກຳ-ປ່າໄມ້ເມືອງ ຄວນຈະສຸມໃສ່ການຈັດຕັ້ງປະຕິບັດບົດບາດ ຫຍັງ?

ຈ. ຫ້ອງການ ກະສິກຳ-ປ່າໄມ້ ເມືອງສາມາດ ທົບທວນການນຳໃຊ້ຊັບພະຍາກອນຂອງເຂົາເຈົ້າ ແລະ ສຸມໃສ່ຈັດຕັ້ງປະຕິບັດ 2-3 ພາລະບົດບາດ ເພື່ອເຮັດຫຼ້ອນໜ້າທີ່ ແລະ ໃຫ້ໄດ້ດີຂຶ້ນ, ໂດຍສະເພາະແມ່ນການຄັດເລືອກ ຊະນິດພັນພືດ ແລະ ວິທີ ທີ່ແທດເໝາະກັບເງື່ອນໄຂທີ່ຈຳກັດຂອງທ້ອງຖິ່ນ?

## 8.10. ກໍລະນີ 10. ການແຂ່ງຂັນການເກັບຊື້ຜົນຜະລິດຈາກຊາວກະສິກອນຂອງຜູ້ລົງທຶນ

**ບ້ານ ຍໍ້, ເມືອງ ບຸນເໜືອ, ແຂວງ ຜົ້ງສາລີ**



ຜູ້ລົງທຶນທ້ອນໂຮມໝາກອຶເພື່ອສົ່ງອອກໄປປະເທດຈີນ

### ປະສົບການ

ເຄືອຂ່າຍແບບອ້າຍນ້ອງສາມາດອຳນວຍຄວາມສະດວກຕໍ່ການຜະລິດຂ້າມຊາດ ແລະ ຜູ້ລົງທຶນຕ່າງປະເທດເຮັດໃຫ້ຜົນຜະລິດດີມີປະສິດທິພາບດີກວ່ານັກລົງທຶນທີ່ເຫັນພ້ອມ ຫຼື ສະໜັບສະໜູນຂອງທາງການກະສິກອນ ແລະ ປ່າໄມ້ເມືອງ

ລຽບຕາມເສັ້ນທາງນ້ອຍໆທີ່ເຕັມໄປດ້ວຍຕົ້ນໄມ້ສອງຟາກທາງ, ຊາວກະສິກອນໄທລື້ກຳລັງລວມຕົວກັນ; ບາງຄົນນັ່ງ ແລະ ບາງຄົນຢືນ, ໂອ້ລົມ ແລະ ຍອກໄຍກັນອ້ອມລົດບັນທຸກຂະໜາດໃຫຍ່ຈາກ ສປ ຈີນ. ຝາທ້າຍຂອງລົດບັນທຸກທີ່ກຳລັງເປີດຢູ່ນັ້ນເຮັດໃຫ້ສາມາດແນມເຫັນຊິງຊັ່ງຂະໜາດໃຫຍ່ຢູ່ຂ້າງໃນ. ໃນຂະນະທີ່ຊາວກະສິກອນກຳລັງຂົນເປົາໝາກອຶຄຳຂຶ້ນຊິງຊັ່ງ; ຊາຍຄົນໜຶ່ງໃສ່ໝວກທີ່ເຮັດດ້ວຍເຟືອງທີ່ມີຂອບໃບຂະໜາດໃຫຍ່ກຳລັງອ່ານຕາຊິງຢູ່ນັ້ນແມ່ນ ທ່ານ ຄຳແດດ, ພໍ່ຄ້າຊາວລື້ທີ່ມາຈາກເຂດຊາຍແດນຈີນ .

ທ່ານ ຄຳແດດ ຕ້ອງການໝາກອຶ 600 ໂຕນຈາກຊາວກະສິກອນ, ລາວໄດ້ເຮັດຂໍ້ຕົກລົງການຜະລິດກັບຫຼາຍບ້ານໃນເຂດນັ້ນ. ປີນີ້ຜົນເກັບກ່ຽວຕົວຈິງໄດ້ປະມານ 120 ໂຕນ. ທ່ານ ຄຳແດດ ເວົ້າວ່າ: "ອີງໃສ່ສະພາບພື້ນທີ່ດິນທີ່ທຳການຜະລິດມັນຄວນຈະບໍ່ມີບັນຫາ, ແຕ່ເນື່ອງຈາກວ່າຄຸນນະພາບຂອງແກ່ນບໍ່ດີຈຶ່ງເຮັດໃຫ້ບໍ່ໄດ້ຜົນຜະລິດຕາມທີ່ພວກເຮົາຄາດໄວ້. ປີໜ້າພວກເຮົາຈະປ່ຽນມາປູກໝາກອຶຊະນິດພັນທີ່ດີກວ່ານີ້." ປີນີ້ ຜົນເກັບກ່ຽວໄດ້ປະມານ 4 ລົດບັນທຸກ, ຊຶ່ງຄັນໜຶ່ງສາມາດບັນທຸກໄດ້ປະມານ 33 ໂຕນ. ທ່ານ ຄຳແດດ ບໍ່ໄດ້ລົງທຶນພຽງແຕ່ໝາກອຶຄຳແຕ່ລາວຍັງລົງທຶນໝາກອຶຍາວນຳອີກຊຶ່ງລາວຫາກໍ່ໄດ້ຂົນສົ່ງໝາກອຶຍາວຊຶ່ງໃນຈຳນວນ 10 ລົດບັນທຸກສູ່ພາກເໜືອ ສປ ຈີນ ແລະຜົນຜະລິດທັງໝົດແມ່ນພາຍໃຕ້ການຜະລິດແບບມີຂໍ້ຕົກລົງ.



ຫ້ອນໂຮມໝາກອຶເພື່ອສົ່ງອອກຕະຫຼາດ

ຜູ້ທີ່ນັ່ງໃກ້ ທ່ານ ຄຳແດດ ທີ່ໃສ່ເສື້ອສີຟ້າຊຶ່ງກຳລັງຈົດບັນຊີຢູ່ນັ້ນແມ່ນ ທ່ານ ຈັນສີ. ລາວເປັນຕົວແທນໃຫ້ ທ່ານ ຄຳແດດ ໃນການໃຫ້ຄຳປຶກສາທາງດ້ານເຕັກນິກ ແລະ ຊ່ວຍຈັດຕັ້ງກຸ່ມຜູ້ຜະລິດໃນບ້ານຂອງລາວ-ບ້ານຊຽງປີ້. ທ່ານຈັນສີເວົ້າວ່າ: "ທ່ານ ຄຳແດດ ໄດ້ມາຖາມ ແລະ ຫາຂ້າພະເຈົ້າເພື່ອຊອກຫາທີ່ດິນຫຼາຍເທົ່າທີ່ຂ້າພະເຈົ້າສາມາດຊອກຫາໄດ້. ນອກນັ້ນລາວຍັງຫາຂ້າພະເຈົ້າເບິ່ງແຍງການຜະລິດ, ສະໜັບສະໜູນທາງດ້ານເຕັກນິກໃຫ້ຊາວກະສິກອນ. ທາງດ້ານເຕັກນິກຂ້າພະເຈົ້າໄດ້ປຶກສາ ແລະ ຂໍຄຳແນະນຳຈາກຊ່ຽວຊານທາງດ້ານເຕັກນິກຂອງ ທ່ານ ຄຳແດດ ທີ່ປະຈຳຢູ່ ສປ ຈີນ. ທ່ານຄຳແດດ ໄດ້ສົ່ງປັດໃຈການຜະລິດມາຮອດຊາຍແດນ ແລະ ຂ້າພະເຈົ້າໄປຮັບເອົາຢູ່ທີ່ນັ້ນ. ພວກເຮົາມີໃບອະນຸຍາດຈາກຫ້ອງການກະສິກຳ-ປ່າໄມ້ເມືອງເພື່ອຂ້າມຊາຍແດນໄປຮັບເອົາປັດໃຈການຜະລິດເຫຼົ່ານັ້ນ" .

ຄວາມຈິງແລ້ວການຜະລິດແບບມີຂໍ້ຕົກລົງເລີ່ມແຕ່ປີ 2009 ແລະ ນຳໃຊ້ລາຄາຄົງ. ຍ້ອນຄວາມສົນໃຈ ແລະ ຮູ້ຈັກກັບຊາວກະສິກອນເຂດນີ້ເປັນຢ່າງດີ ທ່ານ ຄຳແດດ ໄດ້ກັບມາອີກໃນປີທັດມາ. ທ່ານຈັນສີ ເວົ້າວ່າ: "ໃນປີ 2000 ສປປ ລາວ ໄດ້ເປີດກວ້າງໃຫ້ນັກລົງທຶນຈາກ ສປ ຈີນ ເຂົ້າມາລົງທຶນເຂດນີ້. ທ່ານ ຄຳແດດ ໄດ້ຄົ້ນຄິດວ່າມີຫຍັງແດ່ທີ່ລາວສາມາດລົງທຶນໄດ້. ທຳອິດແມ່ນໄດ້ເລີ່ມຈາກການຊື້ເຂົ້າ; ປະມານ

15 ເມືອງຫຼາແມ່ນເມືອງໜຶ່ງໃນແຂວງສິບສອງພັນນາ, ຝັ່ນນະຄອນປົກຄອງຕົນເອງໃນແຂວງຢູນນານ,ສ ປ ຈີນ 16 ເມືອງເຫຼົ່ານີ້ ສວນຫຼາຍຢູ່ເຂດພາກເໜືອຂອງແມ່ນ້ຳ ຢາງເຊ ໃນ ສ ປ ຈີນ

2-3 ປີ ຕໍ່ມາເກັບຊື້ໝາກອຶຍາວ; ປີກາຍນີ້ແມ່ນລົງທຶນໃສ່ໝາກອຶຄຳ," "ທ່ານ ຄຳແດດ ບໍ່ໄດ້ລົງທຶນດ້ວຍຕົນເອງ; ພໍ່ຄ້າຈາກແຂວງ ສີສວນ ສປ ຈີນ ລົງທຶນ ແລະ ການສະໜອງປັດໃຈການຜະລິດໃຫ້." ຄາດວ່າການລົງທຶນ ແລະ ການຜະລິດເພີ່ມຂຶ້ນໃນຊຸມປີຕໍ່ໜ້າ. ທ່ານ ຄຳແດດເວົ້າວ່າ: "ພວກເຮົາຕ້ອງການເຮັດສັນຍາການຜະລິດ ໃນໄລຍະຍາວ ໃນ ສປປ ລາວໂດຍສະເພາະໝາກອຶຊຶ່ງມີຄວາມຕ້ອງການຫຼາຍ ໃນ ສປ ຈີນ.". "ໃນ ສປ ຈີນ, ທີ່ດິນສຳລັບການຜະລິດບໍ່ພຽງພໍ; ຄົນຈີນຈຳນວນໜຶ່ງຕ້ອງການນຳໃຊ້ທີ່ດິນໃນເມືອງຫຼາ[15]ເພື່ອປູກໝາກກ້ວຍ."

ຜູ້ລົງທຶນສ່ວນຫຼາຍມາຈາກຕົວເມືອງໃຫຍ່ຜ່ານເຂດຕ່າງໆພາຍໃນປະເທດສູ່ພາກເໜືອ ສປ ຈີນ ຊຶ່ງອາກາດ ແລະ ລະດູການຂ້ອນຂ້າງແຕກຕ່າງຈາກເຂດຮ້ອນໃນ ສປປ ລາວ. ທ່ານ ຄຳແດດ ເວົ້າວ່າ: " ຄວາມຈິງແລ້ວຜູ້ລົງທຶນ ແລະ ພໍ່ຄ້າເກືອບທັງໝົດມາຈາກປັກກິ່ງ, ຊຽງໄຮ, ເຈັ້ນດູ, ແລະ ສ່ວນໜຶ່ງມາຈາກຊາງດົງ, ຕຽນຈິນ, ຈົງຈິງ.[16]ໃນເບື້ອງຕົ້ນ ຫຼື ປະມານ 5 ປີຜ່ານມາ, ເຂົາເຈົ້າເຂົ້າມາເມືອງຫຼາເພື່ອສັ່ງຊື້ຜົນຜະລິດ". ແລະ ໃນປະຈຸບັນເຫັນວ່າຜູ້ລົງທຶນກຳລັງເພີ່ມຂຶ້ນໃນແຕ່ລະປີ.

ນອກນັ້ນຍັງມີພໍ່ຄ້າອື່ນ ເຊັ່ນ: ຊິນຮວາງ ຮວນດາ ກໍ່ໄດ້ສົ່ງຜູ້ຕາງໜ້າເຂົາເຈົ້າມາ; ຊາວລື້ ທີ່ມາຈາກ ສປ ຈີນ ທີ່ກຳລັງນັ່ງລົມ, ເວົ້າຕະຫຼົກ ແລະ ສູບຢາກັບຊາວກະສິກອນແມ່ນຕົວແທນຂອງພໍ່ຄ້າເຫຼົ່ານັ້ນ. ໃນແຕ່ລະລະດູການ, ລາວເປັນຕົວແທນມາເກັບຊື້ຜົນຜະລິດໃນເຂດບໍຫານຊຶ່ງໃກ້ກັບຊາຍແດນຈີນໃຫ້ພໍ່ຄ້າທີ່ຢູ່ເມືອງໃຫຍ່ໆທາງພາກເໜືອ ສປ ຈີນ. ຊິນຮວາງກຳລັງຊອກເກັບຊື້ໝາກອຶແຕ່ຍ້ອນບໍ່ມີຂໍ້ຕົກລົງ; ຊາວກະສິກອນເວົ້າວ່າເຂົາເຈົ້າຈະບໍ່ຂາຍຜົນຜະລິດໃຫ້ລາວເພາະວ່າເຂົາເຈົ້າເຄົາລົບຂໍ້ຕົກລົງ ແລະ ຈະຖືກປັບໄໝຖ້າຫາກບໍ່ປະຕິບັດຕາມຂໍ້ຕົກລົງ.

ການຜະລິດແບບມີຂໍ້ຕົກລົງໄດ້ຖືກຮັບຮອງ ແລະ ເຊັນໂດຍຊາວກະສິກອນ, ທ່ານ ຄຳແດດ, ຫ້ອງການກະສິກຳ-ປ່າໄມ້ເມືອງ ແລະ ອົງການຈັດຕັ້ງອື່ນໆທີ່ກ່ຽວຂ້ອງໃນທ້ອງຖິ່ນ. ມັນມີຫຼາຍເຫດຜົນສຳລັບການຈັດຕັ້ງການຜະລິດແບບມີຂໍ້ຕົກລົງ. ຊາວກະສິກອນຄົນໜຶ່ງຊື່ ທ່ານ ແດນ ເວົ້າວ່າ: "ພວກເຮົາບໍ່ມີທຶນທີ່ຈະຊື້ແນວພັນ, ປັດໃຈການຜະລິດ. ທຶນທີ່ພວກເຮົາມີພວກເຮົານຳໃຊ້ທຶນຂອງພວກເຮົາເພື່ອລົງທຶນໃສ່ພືດຜັກອື່ນໆທີ່ພວກເຮົາຮູ້ສຶກວ່າມັນມີຄວາມແນ່ນອນກວ່າເຊັ່ນວ່າ: ຖົ່ວ, ສາລີ, ກະຫຼ່ຳ ແລະ ຜັກບົ່ວ,".

ທ່ານ ຈັນສີ ໄດ້ໃຫ້ຄວາມຄິດເຫັນກ່ຽວກັບຜູ້ລົງທຶນ, ຄວາມສ່ຽງ, ການເຂົ້າເຖິງຕະຫຼາດ ແລະ ການຜະລິດແບບມີຂໍ້ຕົກລົງວ່າ: "1) ເພື່ອກຳຈັດຜູ້ລົງທຶນທີ່ມາລົງທຶນ ແລະ ໜີປະທຸລະກິດ, ນຳໄປໃນທາງຜິດ, ບໍ່ເກັບຊື້ຜົນຜະລິດ ແລະ ເຮັດໃຫ້ພວກເຮົາບໍ່ສາມາດຂາຍໄດ້. 2), ການເຂົ້າເຖິງຕະຫຼາດໃນ ສປ ຈີນ ມີຄວາມຫຍຸ້ງຍາກ. ມີທັງຄ່າຂົນສົ່ງ, ບັນຫາກ່ຽວກັບພາສີອາກອນ ແລະ ຄ່າທຳນຽມດ່ານ. ສະນັ້ນ, ການເຮັດແບບມີສັນຍາເຮັດໃຫ້ທຸກຢ່າງງ່າຍຂຶ້ນສຳລັບພວກເຮົາ, ພວກເຮົາສາມາດໝັ້ນໃຈກັບຕະຫຼາດ. ທ່ານ ຄຳແດດ ມັດຈຳເງິນໃນຈຳນວນ 20,000 ຢວນ ກັບເຈົ້າໜ້າທີ່ຂອງເມືອງ. ຖ້າມີບັນຫາຫຍັງເກີດຂຶ້ນເງິນຈຳນວນນີ້ຈະຖືກມອບໃຫ້ພວກເຮົາເພື່ອເປັນການຊົດເຊີຍ. ແລະ ຖ້າບໍ່ມີບັນຫາເງິນຈຳນວນນີ້ກໍ່ຈະໄດ້ສົ່ງຄືນໃຫ້ລາວ,"

ສຳລັບຊາວກະສິກອນ, ມັນເປັນການຍາກທີ່ຈະໄດ້ຮັບໃບອະນຸຍາດສຳລັບການສົ່ງອອກຈາກເຈົ້າໜ້າທີ່ເມືອງ. ທ່ານ ຈັນສີ ໃຫ້ຄວາມເຫັນວ່າຄ່າສິ້ນເປືອງໃນເມືອງນາໝໍ້ ແລະ ຍອດອູ ແມ່ນຕໍ່າ; ເພື່ອແກ້ໄຂອຸປະສັກໃນການສົ່ງອອກ, ເຈົ້າໜ້າທີ່ເມືອງກຳນົດພຽງແຕ່ຄ່າທຳນຽມໜ້ອຍໜຶ່ງສຳລັບການສົ່ງອອກ. "ພວກເຮົາສ້າງຕັ້ງກຸ່ມຜະລິດໃນບ້ານຂຶ້ນແຕ່ພວກເຮົາຂໍລາຍເຊັນຈາກເມືອງ ແລະ ແຂວງ ສຳລັບການສົ່ງອອກຜົນຜະລິດບໍ່ໄດ້. ຂ້າພະເຈົ້າສັນນິຖານວ່ານີ້ເປັນເພາະວ່າບາງບໍລິສັດໄດ້ມີຂໍ້ຕົກລົງການຜະລິດຮ່ວມກັບເຈົ້າໜ້າທີ່ເພື່ອປ້ອງກັນການເຂົ້າມາລົງທຶນຂອງນັກລົງທຶນອື່ນ," ທ່ານຈັນສີເວົ້າວ່າ: "ພວກເຮົາຕ້ອງການຂໍ້ຍົກເວັ້ນພາສີອາກອນສຳລັບການສົ່ງອອກ. ປະຈຸບັນນີ້ຊາວກະສິກອນມີທຶນຈຳນວນໜຶ່ງທີ່ຈະລົງທຶນດ້ວຍຕົນເອງ, ແຕ່ວ່າອາກອນສຳລັບການສົ່ງອອກສູງ ແລະ ຍາກທີ່ຈະມີກຳໄລ. ທຸກຄັ້ງທີ່ພວກເຮົາພົບກັບພະນັກງານລັດພວກເຮົາເນັ້ນໜັກບັນຫານີ້."

ຜູ້ລົງທຶນຕ້ອງການຂໍ້ຕົກລົງເຊັ່ນກັນເພື່ອຈະໄດ້ຮັບການຊ່ວຍເຫຼືອຈາກລັດ ແລະ ເຮັດທຸລະກິດຕາມລະບຽບການທີ່ຄຸ້ມຄອງການຜະລິດໃນພື້ນທີ່. ທ່ານ ຄຳແດດ ເວົ້າວ່າ: "ບໍ່ມີໃຜຈະຮັບຟັງ ທ່ານ ແລະ ເຈົ້າໜ້າທີ່ຈະບໍ່ຊ່ວຍເຫຼືອພວກເຮົາຖ້າບໍ່ມີຂໍ້ຕົກລົງ. ໃນ ສປ ຈີນ ລະບຽບການຄຸ້ມຄອງແມ່ນເຂັ້ມງວດກວ່າທີ່ນີ້ຫຼາຍ, ພວກເຮົາຕ້ອງໄດ້ຈົດທະບຽນສັນຍາກັບຫ້ອງການສານ,"

ການລົງທຶນໃນພື້ນທີ່ດັ່ງກ່າວແມ່ນຖືກຄວບຄຸມໂດຍຜູ້ລົງທຶນ 2 ທ່ານ ຈາກ ສປ ຈີນ ຊຶ່ງມີສິດທີ່ຈະເຂົ້າເຖິງ ແລະ ສົ່ງອອກ. ເຖິງແນວໃດກໍ່ຕາມສິດນັ້ນບໍ່ໄດ້ຜູກຂາດເພາະວ່າ ທ່ານ ຄຳແດດ ກໍ່ສາມາດລົງທຶນໃນເຂດ

ນັ້ນເຊັ່ນກັນ. ສຳລັບ 2 ປີທຳອິດລາວສາມາດສົ່ງອອກເອງໄດ. ສຳລັບ 2011-2013 ທ່ານ ຄຳແດດ ຈຳຕ້ອງໄດ້ຈ່າຍ 1 ໂຈ ຕໍ່ ໝາກອຶ 1 ກິໂລກຼາມ ເປັນເງິນສົດສຳລັບການສົ່ງອອກຜ່ານບໍລິສັດສົ່ງເສີມການປູກພືດເປັນສິນຄ້າ ແລະ ສົ່ງອອກເພື່ອການປັບປຸງຊີວິດການເປັນຢູ່ຊຶ່ງເປັນບໍລິສັດຂອງຈີນທີ່ໄດ້ຮັບອະນຸຍາດການລົງທຶນໃນພື້ນທີ່ມາກ່ອນ. ທ່ານຈັນສີ ເວົ້າວ່າ: ທຸລະກິດຂອງບໍລິສັດດັ່ງກ່າວດຳເນີນໄປບໍ່ໄດ້ດີປານໃດ; ຊາວກະສິກອນຈະປ່ຽນຂໍ້ຕົກລົງກັບບໍລິສັດມາຮ່ວມກັບ ທ່ານ ຄຳແດດ ພາຍຫຼັງທີ່ສັນຍາເຂົາເຈົ້າ ສິ້ນສຸດໃນປີ 2012.

ເຂົາເຈົ້າທັງໝົດເນັ້ນໜັກວ່າຄວາມເຂົ້າໃຈຊຶ່ງກັນ ແລະ ກັນເປັນປັດໃຈທີ່ຈຳເປັນຊ່ວຍໃຫ້ການເຮັດທຸລະກິດຮ່ວມກັນປະສົບຜົນສຳເລັດ. ທ່ານ ແດນ ເວົ້າວ່າ: "ສິ່ງທີ່ສຳຄັນກໍ່ແມ່ນຄວາມເຂົ້າໃຈຊຶ່ງກັນ ແລະ ກັນ. ພວກເຮົາສາມາດພັດທະນາຄວາມເຂົ້າໃຈນຳກັນໂດຍຜ່ານການປຶກສາຫາລືເມື່ອພວກເຮົາມີບັນຫາຫຍັງພວກເຮົາກໍ່ສາມາດຍົກຂຶ້ນມາປຶກສາຫາລືກັບລາວ ແລະ ເມື່ອລາວມີຂໍ້ຫຍຸ້ງຍາກຫຍັງລາວກໍ່ສາມາດເຂົ້າມາຫາພວກເຮົາ."

ການເຄົາລົບເງື່ອນໄຂຕ່າງໆໃນຂໍ້ຕົກລົງເປັນສິ່ງທີ່ສຳຄັນ. ທ່ານຈັນສີ ເວົ້າວ່າ: " ເມື່ອມີການກຳນົດລາຄາແບບຄົງທີ່ທັງສອງຝ່າຍຄວນຈະຖືເອົາກັບລາຄານັ້ນ.". ທ່ານ ຄຳແດດ ເວົ້າເສີມອີກວ່າ: "ຖ້າລາຄາຫຼຸດລົງ, ພວກເຮົາຈະເສຍຜົນປະໂຫຍດແຕ່ພວກເຮົາພໍໃຈທີ່ຈະຈ່າຍເພາະວ່າພວກເຮົາໄດ້ຕົກລົງລາຄາຮ່ວມກັນໃນຂໍ້ຕົກລົງແລ້ວ. ພວກເຮົາຕ້ອງການໃຫ້ທຸກຝ່າຍປະຕິບັດຢ່າງຍຸດຕິທຳ. "ການພັດທະນາຄວາມສຳພັນແມ່ນອີກປັດໃຈໜຶ່ງ. ທ່ານ ຈັນສີ ເວົ້າວ່າ: "ສິ່ງໜຶ່ງອີກແມ່ນການໃຫ້ລາງວັນຊາວກະສິກອນ, ຕົວຢ່າງທີ່ພົບຜ່ານມາແມ່ນ: ພາຍຫຼັງທີ່ຂາຍຜົນຜະລິດສູ່ ສປ ຈີນ ສຳເລັດແລ້ວຜູ້ລົງທຶນໄດ້ນຳເອົາໝູມາສະຫຼອງກັບຊາວກະສິກອນ". ຄວາມຍືນຍຸ່ນ ແລະ ການປັບຕົວກໍ່ສາມາດຊ່ວຍໄດ້. ທ່ານ ຄຳແດດ ເວົ້າວ່າ: "ພວກເຮົາພະຍາຍາມເຮັດໃຫ້ເຂົາເຈົ້າເພິ່ງພໍໃຈກັບເງື່ອນໄຂການກຳນົດລາຄາ. ຕົວຢ່າງ: ປີນີ້ເຮັດເປັນລາຄາດຽວ, ປີໜ້າພວກເຮົາພະຍາຍາມເຮັດໃຫ້ໄດ້ຕາມຄວາມຕ້ອງການຂອງຊາວກະສິກອນຄື: ການຍົກລາຄາໃຫ້ສູງຂຶ້ນ,"

ເຂົ້າໃຈ, ຮັບຮູ້ ແລະ ປັບຕົວສ່ວນໜຶ່ງແມ່ນຍ້ອນເງື່ອນໄຂທາງດ້ານສັງຄົມ. ທ່ານຈັນສີ ໄດ້ພົບກັບ ທ່ານ ຄຳແດດ ຄັ້ງທຳອິດແມ່ນຢູ່ເມືອງຫຼາ 20 ປີ ຜ່ານມາໃນຕອນທີ່ໄປຊື້ເຄື່ອງໃຊ້ສຳລັບຄອບຄົວ ໃນ ສປ ຈີນ ແລະ 10 ປີຕໍ່ມາ ທ່ານ ແດນໄດ້ພົບ ທ່ານ ຄຳແດດ ອີກທີ່ຕະຫຼາດໃນບ້ານຍໍ້.

ພໍເມື່ອການຊັ່ງນ້ຳໜັກ ແລະ ຂົນໝາກອຶຂຶ້ນລົດສຳເລັດແລ້ວກໍ່ທ່ຽງພໍດີ, ອາຫານທ່ຽງໄດ້ຈັດຂຶ້ນທີ່ຕູບນ້ອຍແຫ່ງໜຶ່ງຊຶ່ງເປັນທີ່ພັກຂອງທະຫານຮັກສາຄວາມສະຫງົບໃນພື້ນທີ່ດັ່ງກ່າວໂດຍນຳໃຊ້ສາດປູພື້ນເພື່ອເປັນທີ່ນັ່ງສຳລັບການຮັບປະທານອາຫານ. ທ່ານ ຄຳແດດ, ທ່ານຈັນສີ, ທ່ານແດນ, ຊິນຮວງ, ຊາວກະສິກອນ ອື່ນໆ, ແມ່ຍິງ 2 ທ່ານ ທີ່ເຮັດທຸລະກິດ ແລະ ເດີນທາງ ຮ່ວມກັບທ່ານ ຄຳແດດ, ແລະ ທະຫານໄດ້ຮັບປະທານອາຫານພ້ອມດ້ວຍການສົນທະນາຮ່ວມກັນ.

## ການສັງເກດການ

ຜູ້ຊື້ຈາກ ສປ ຈີນ ກຳລັງແຂ່ງຂັນການເກັບຊື້ຜະລິດຕະພັນຊາວກະສິກອນ. ມີຜູ້ລົງທຶນຫຼັກ 2 ຫົວໜ່ວຍຄື: ບໍລິສັດສົ່ງເສີມການປູກພືດເປັນສິນຄ້າ ແລະ ສົ່ງອອກ ເພື່ອປັບປຸງຊີວິການເປັນຢູ່ ຊຶ່ງໄດ້ຮັບອະນຸຍາດ ແລະ ສະໜັບສະໜູນຈາກຫ້ອງການກະສິກຳ-ປ່າໄມ້ເມືອງ ເປັນຜູ້ລົງທຶນທຳອິດ. ທ່ານ ຄຳແດດ ເປັນຜູ້ລົງທຶນທີ 2 ໃນພື້ນທີ່ຊຶ່ງເບິ່ງໄປແລ້ວອາດມີອຳນາດໜ້ອຍກວ່າຜູ້ລົງຄືນທຳອິດ. ນອກນັ້ນຍັງມີພໍ່ຄ້າອື່ນໆ. ເບິ່ງຄືວ່າຊາວກະສິກອນຮັບຮູ້ກຳລັງຂອງຄວາມຕອງການ ແລະ ການແຂ່ງຂັນຫຼາຍຮູບແບບຂອງຜູ້ຊື້ ຈາກ ສປ ຈີນ. ປະກົດວ່າ ທ່ານ ຄຳແດດ ໃຫ້ເງື່ອນທີ່ດີກວ່າສຳລັບການຜະລິດແບບມີຂໍ້ຕົກລົງກວ່າຜູ້ລົງທຶນທຳອິດ. ຜູ້ລົງທຶນຕ້ອງການການຜະລິດແບບມີຂໍ້ຕົກລົງເພື່ອຮັບປະກັນການສະໜອງ ແລະ ປ້ອງກັນການແຂ່ງຂັນຈາກຜູ້ລົງທຶນອື່ນ. ຊາວກະສິກອນເຂົ້າຮ່ວມການຜະລິດແບບມີຂໍ້ຕົກລົງເພື່ອປົກປ້ອງຕົນເອງຈາກຜູ້ລົງທຶນທີ່ມັກຜິດສັນຍາ ແລະ ທີ່ບໍ່ເຂັ້ມແຂງ ແລະ ເພື່ອເອົາຊະນະສິ່ງກີດຂວາງຕ່າງໆໂດຍສະເພາະການເຂົ້າເຖິງຕະຫຼາດ.

ຄວາມເຊື່ອໃຈ ແລະ ໝັ້ນໃຈຂອງຊາວກະສິກອນ ແລະ ທ່ານ ຄຳແດດ ໃນການຜະລິດແບບມີຂໍ້ຕົກລົງຟື້ນຄືນຄວາມສຳພັນ ແລະ ຄວາມຮູ້ຈັກກັນໃນຫຼາຍປີຜ່ານມາ. ເງື່ອນໄຂທາງດ້ານສັງຄົມສາມາດເຮັດໃຫ້ ຕົວແທນຂອງຊາວກະສິກອນ ແລະ ຜູ້ລົງທຶນສາມາດຮຽນຮູ້ຊຶ່ງກັນ ແລະ ກັນ ແລະ ມີປະສິດທິພາບ, ເຂົ້າໃຈໃນຄວາມຕ້ອງການ ແລະ ສົນໃຈຊຶ່ງກັນ ແລະ ກັນຢ່າງເລິກເຊິ່ງຫຼາຍຂຶ້ນ. ເຂົາເຈົ້າໄດ້ເນັ້ນໜັກເຖິງຄວາມສຳຄັນຂອງການເຂົ້າໃຈຊຶ່ງກັນ ແລະ ກັນໃນການບຳລຸງຮັກສາຄວາມສຳພັນທີ່ດີຊຶ່ງເປັນພື້ນຖານສຳລັບການຮ່ວມມືໃນການຜະລິດແບບມີຂໍ້ຕົກລົງ. ທ່ານ ຄຳແດດ

ຍອມຮັບວ່າ: ການຜະລິດທີ່ບໍ່ໄດ້ຮັບຜົນດີບໍ່ແມ່ນຍ້ອນຊາວກະສິກອນແຕ່ເນື່ອງມາຈາກແນວພັນທີ່ບໍ່ດີ. ການທີ່ທ່ານ ຄຳແດດ ກ່າວໃນລັກສະນະນີ້ຊີ້ໃຫ້ເຫັນເຖິງລະດັບຄວາມເຊື່ອໝັ້ນ ແລະ ຄວາມສົນໃຈຂອງຜູ້ລົງທຶນໃນການສ້າງຄວາມສຳພັນກັບຊາວກະສິກອນ; ແລະກົງກັນຂ້າມຜູ້ລົງທຶນທີ່ບໍ່ມີຄວາມສົນໃຈໃນການສ້າງຄວາມສຳພັນກັບຊາວກະສິກອນອາດຕຳນິວ່າຜົນເກັບກ່ຽວທີ່ບໍ່ດີແມ່ນຍ້ອນຊາວກະສິກອນ ແລະ ອາດນຳສະເໜີບັນຫານີ້ຕໍ່ຫ້ອງການກະສິກຳ-ປ່າໄມ້ເມືອງເພື່ອຊອກຫາວິທີທາງໃນແກ້ໄຂບັນຫາ. ສຳລັບການຈັດທະບຽນສັນຍາກັບຫ້ອງການກະສິກຳ-ປ່າໄມ້ເມືອງ, ຜູ້ລົງທຶນ ແລະ ຊາວກະສິກອນມີເຫດຜົນຂອງໃຜຂອງລາວແຕກຕ່າງກັນໄປ.

ຫ້ອງການກະສິກຳ-ປ່າໄມ້ເມືອງສະໜັບສະໜູນການຜະລິດແບບມີຂໍ້ຕົກລົງດ້ວຍການ ໃຫ້ການຊ່ວຍເຫຼືອພື້ນຖານສຳລັບການລົງທຶນ, ສົ່ງອອກ ແລະ ການບັງຄັບໃຊ້ມາດຕະການຕ່າງໆຊຶ່ງຊາວກະສິກອນ ແລະ ຜູ້ລົງທຶນຮັບຮູ້, ຍອມຮັບໄດ້ ແລະ ໃຫ້ຄວາມສຳຄັນຈຳນວນໜຶ່ງ. ເຖິງແນວໃດກໍ່ຕາມບາງຄັ້ງຄຸນນະພາບຂອງການບໍລິການ ຫຼື ການຊ່ວຍນັ້ນອາດຍັງບໍ່ຕອບສະໜອງໄດ້ຕາມຄວາມໝູ້ງຫວັງຂອງຊາວກະສິກອນ ແລະ ຜູ້ລົງທຶນ. ນອກນັ້ນຊາວກະສິກອນຍັງເຫັນວ່າຫ້ອງການກະສິກຳ-ປ່າໄມ້ເມືອງຍັງຂັດຂວາງຄວາມພະຍາຍາມຂອງເຂົາເຈົ້າທີ່ຈະສົ່ງອອກໂດຍກົງສູ່ຕະຫຼາດໃນ ສປ ຈີນ. ໃນຄວາມເປັນຈິງການສົ່ງອອກຜົນຜະລິດແມ່ນບໍ່ໄດ້ຖືກກີດຂວາງແຕ່ມັນຂຶ້ນກັບຊະນິດພືດຜັກ, ລະດູການ ແລະ ຄວາມຕ້ອງການຫຼາຍກວ່າ. ເຖິງຢ່າງໃດກໍ່ຕາມ, ສິ່ງນີ້ຊີ້ໃຫ້ເຫັນວ່າມັນຍັງມີຄວາມບໍ່ເຂົ້າໃຈໃນລະຫວ່າງຊາວກະສິກອນ ແລະ ຫ້ອງການກະສິກຳ-ປ່າໄມ້ເມືອງ ຫຼື ອາດຊີ້ໃຫ້ເຫັນເຖິງຂໍ້ຂັດແຍ່ງ ແລະ ຄວາມສັບສົນກ່ຽວກັບໜ້າທີ່ ແລະ ຜົນປະໂຫຍດຂອງຫ້ອງການກະສິກຳ-ປ່າໄມ້ເມືອງ

ດ້ວຍເຫດຜົນໃດກໍ່ຕາມສຳລັບການຄວບຄຸມການລົງທຶນ, ແບ່ງຊັ້ນຜູ້ລົງທຶນ; ຜົນທີ່ປະກົດອອກມາມັກຈະເປັນທາງລົບຕໍ່ການປັບປຸງຊີວິດການເປັນຢູ່ຂອງຊາວກະສິກອນ. ສະນັ້ນ, ມັນຮຽກຮ້ອງໃຫ້ມີລະບອບການລົງທຶນທີ່ມີປະສິດທິພາບ, ແບບລຽບງ່າຍຊຶ່ງອະນຸຍາດໃຫ້ຜູ້ລົງທຶນໃດໆກໍ່ຕາມສາມາດລົງທຶນໄດ້ຖ້າເຫັນວ່າເຂົາເຈົ້າໄດ້ຕາມເງື່ອນໄຂມາດຖານ ແລະ ວາງເງິນມັດຈຳກັບຫ້ອງການກະສິກຳ-ປ່າໄມ້ເມືອງ .

## ສະຫຼຸບ

- ຊາວກະສິກອນ ແລະ ຜູ້ລົງທຶນຕ້ອງການຂໍ້ຕົກລົງສຳລັບການຈັດຕັ້ງການຜະລິດ
- ສະພາບເງື່ອນໄຂທາງດ້ານສັງຄົມຊ່ວຍສ້າງຄວາມເຊື່ອໝັ້ນ, ຄວາມໝັ້ນໃຈ ແລະ ຄວາມເຂົ້າໃຈ
- ຫ້ອງການກະສິກຳ-ປ່າໄມ້ ເມືອງ ສາມາດໃຫ້ການຊ່ວຍເຫຼືອທີ່ມີຄຸນຄ່າສຳລັບການຈັດຕັ້ງການຜະລິດແບບມີຂໍ້ຕົກລົງໂດຍສະເພາະ ການຮຽກຮ້ອງເງິນຄ້ຳປະກັນຈາກຜູ້ລົງທຶນ
- ຫ້ອງການກະສິກຳ-ປ່າໄມ້ເມືອງສາມາດຂັດຂວາງຜົນປະໂຫຍດ ແລະ ຄວາມປາດຖະໜາຂອງຊາວກະສິກອນສຳລັບສົ່ງອອກ ແລະ ຄ້າຂາຍກັບຜູ້ຊື້ໃນ ສປ ຈີນໂດຍກົງສຳລັບບາງຜະລິດຕະພັນ
- ນະໂຍບາຍທີ່ຊ່ວຍຜູ້ລົງທຶນໃດໜຶ່ງອາດຕ້ານຜູ້ລົງທຶນອື່ນໂດຍສະເພາະ ການຈັດຕັ້ງການຜະລິດແບບມີຂໍ້ຕົກລົງ ແລະ ສ້າງລາຍຮັບສຳລັບຊາວກະສິກອນ
- ຄວາມຕ້ອງການ ແລະ ການແຂ່ງຂັນຈາກ ສ ປ ຈີນ ເປັນເງື່ອນໄຂເອື້ອຍອຳນວຍສຳລັບຊາວກະສິກອນໃນ ສ ປ ປ ລາວ ແລະ ປັບປຸງ ການຜະລິດແບບມີຂໍ້ຕົກລົງໃຫ້ດີຂຶ້ນ

## ປັດໃຈທີ່ພາໃຫ້ເກີດຜົນສຳເລັດ

1. ຊາວກະສິກອນ ແລະ ຜູ້ລົງທຶນໃຫ້ຄວາມສົນໃຈຫຼາຍ ແລະ ເຫັນຄຸນຄ່າຂອງການຜະລິດແບບມີຂໍ້ຕົກລົງ
2. ເງື່ອນໄຂສະພາບທາງດ້ານສັງຄົມ ແລະ ຄວາມໝູ້ງໝັ້ນທີ່ຈະສ້າງເຂົ້າໃຈ ແລະ ພັດທະນາໃນຄວາມສຳພັນລະຫວ່າງ ຊາວກະສິກອນ ແລະ ຜູ້ລົງທຶນ
3. ຜູ້ລົງທຶນວາງເງິນມັດຈຳ-ຄ້ຳປະກັນກັບເຈົ້າໜ້າທີ່ທ້ອງຖິ່ນ
4. ເງື່ອນໄຂອຳນວຍສຳລັບການຜະລິດ ແລະ ການບໍລິໂພກລະຫວາງ ສ ປ ປ ລາວ ແລະ ຕະຫຼາດຈຳນວນໜຶ່ງໃນ ສ ປ ຈີນ

## ຄຳຖາມ

ກ. ຍ້ອນຫຍັງການສະໜັບສະໜູນຜູ້ລົງທຶນທີ່ມາກ່ອນ (ບໍລິສັດສົ່ງເສີມການຜະລິດພືດເປັນສິນຄ້າ) ຈຶ່ງເຮັດໃຫ້ການຜະລິດບໍ່ໄດ້ຮັບຜົນດີ ແລະ ບໍ່ມີປະສິດທິພາບເທົ່າກັບເຮັດກັບຜູ້ລົງທຶນ ຜູ້ ລົງທຶນທີ່ມາຫຼັງ (ທ່ານ ຄຳແດດ)?

ຂ. ການສະໜັບສະໜູນ ພຽງຜູ້ລົງທຶນໃດໜຶ່ງ ຫຼາຍກວ່າຜູ້ອື່ນມີຜົນກະທົບຫຍັງຕໍ່ການປັບປຸງຊີວິດການເປັນຢູ່ ແລະ ການຫຼຸດຜ່ອນຄວາມທຸກຈົນ?

ຄ. ຍ້ອນຫຍັງຊາວກະສິກອນຈຶ່ງບໍ່ໄດ້ຮັບໃບອະນຸຍາດສຳລັບການສົ່ງອອກ ແລະ ບໍ່ສາມາດເຈລະຈາເພື່ອຫຼຸດພາສີສົ່ງອອກໃຫ້ຕ່ຳ ລົງໄດ້?

ງ. ຫ້ອງການກະສິກຳ-ປ່າໄມ້ ເມືອງຄວນຈະສຸມການຊ່ວຍເຫຼືອໃສ່ດ້ານໃດແດ່, ການປະຕິບັດໜ້າທີ່ ແລະ ສະໜອງການຊ່ວຍເຫຼືອນັ້ນ ສາມາດປັບປຸງ ໄດ້ແນວໃດ ?

## 8.11. ເປັນກໍລະນີ 11. ຜູ້ລົງທຶນ ແລະ ພໍ່ຄ້າ

**ບ້ານ ນ້ຳແດງກາງ, ແຂວງຫຼວງນ້ຳທາ**




ທ່ານ ຄຳ ໄຊຍະສານ ປູກສາລີໃນຮູບແບບການຜະລິດທີ່ມີສັນຍາ ແລະ ເຊັ່ນດຽວກັບຕະຫຼາດເປີດ

### ປະສົບການ

ລະຫວ່າງເສັ້ນທາງຫຼວງນ້ຳທາຫາບໍ່ເຕັນທີມງານໄດ້ພົບ ແລະ ສຳພາດ ທ່ານ ຄຳ ໄຊຍະສານ ຊຶ່ງອາໃສຢູ່ບັງກາໂລທີ່ສ້າງດ້ວຍໄມ້, ຕັ້ງຢູ່ຈ້າຍພູຊັນຊຶ່ງເບື້ອງລຸ່ມຈະມີສາຍນ້ຳ. ໃນເຮືອນຂອງ ທ່ານ ຄຳ ໄຊຍະສານ; ດ້ານຫຼັງເປັນບ່ອນຕັ້ງໂທລະທັດ, ຕຽງນອນ, ມຸ້ງ ແລະ ໂຕະພ້ອມດ້ວຍຕັ່ງນັ່ງຕ່າງໆ; ດ້ານໜ້າຂອງເຮືອນເປີດເປັນຮ້ານຂາຍເຄື່ອງສຳລັບພໍ່ຄ້າ ແລະ ຄົນທ່ຽວທາງທີ່ກາຍໄປກາຍມາ. ເຄື່ອງທີ່ວາງຂາຍປະກອບດ້ວຍຜັກທຽມດອງ, ເຄື່ອງໃຊ້ຄົວເຮືອນ, ຢາສູບ ແລະ ເຄື່ອງດື່ມຈາກປະເທດຈີນ ແລະ ໄທ.

ທ່ານ ຄຳ ບໍ່ພຽງແຕ່ເປັນຄົນຂາຍເຄື່ອງ ລາວຍັງປູກສາລີໃນຮູບແບບການຜະລິດແບບມີຂໍ້ຕົກລົງຊຶ່ງເລີ່ມແຕ່ປີ 2007 ເປັນຕົ້ນມາ. ທ່ານ ຄຳ ປະເມີນວ່າສວນຂອງລາວມີປະມານ 5 ໄລ່ ເພາະວ່າໄດ້ນຳໃຊ້ແນວພັນປະມານ 15 ກິໂລກຼາມ ຫຼື ໂດຍສະເລ່ຍແລ້ວແມ່ນ 3 ກິໂລກຼາມ ຕໍ່ ໄລ່. ແລະ ຜົນຜະລິດໄດ້ ປະມານ 2 ໂຕນຕໍ່ລະດູການ. ຄວາມຈິງແລ້ວ ທ່ານ ຄຳ ໄດ້ເຂົ້າຮ່ວມການຜະລິດນຳຫຼັງຄົນອື່ນໝູ່ເພື່ອນ ແລະ ເພື່ອນບ້ານໃກ້ຄຽງໄດ້ເລີ່ມການຜະລິດແບບມີສັນຍາຕັ້ງແຕ່ປີ 2005. ທ່ານ ຄຳ ເວົ້າວ່າ: "ຖ້າມີຊາວບ້ານຫຼາຍຄົນຕົກລົງເຮັດການຜະລິດກັບຜູ້ລົງທຶນແລ້ວຜູ້ອື່ນໆກໍ່ຮູ້ສຶກວ່າເຂົາເຈົ້າຄວນເຮັດເຊັ່ນກັນ,".

ຊາວກະສິກອນສາມາດປັບປຸງການຄ້າປະກັນດານຊີວິດການເປັນຢູ່ ແລະ ລຸດຜ່ອນຄວາມສ່ຽງຂອງການຜະລິດທີ່ແຍກກັນລະຫວ່າງຜູ້ລົງທຶນ ແລະ ພໍ່ຄ້າ

ໃນເບື້ອງຕົ້ນຊາວກະສິກອນໄດ້ເຮັດການຜະລິດແບບມີຂໍ້ຕົກລົງເພື່ອຫຼຸດຜ່ອນຄວາມສ່ຽງ. ທ່ານ ຄຳ ເວົ້າວ່າ: "ມີ 2 ເຫດຜົນສຳລັບການເຮັດການຜະລິດແບບມີຂໍ້ຕົກລົງຮ່ວມກັບຜູ້ລົງທຶນ. 1) ເພາະວ່າການເຮັດການຄ້າກັບພໍ່ຄ້າພຽງຢ່າງດຽວແມ່ນບໍ່ມີຄວາມແນ່ນອນ. 2) ເພື່ອຫຼຸດຜ່ອນຄວາມສ່ຽງທີ່ຈະຖືກຜູ້ລົງທຶນທັກຫຼັງເພາະວ່າພວກເຮົາໄດ້ພົບມາກ່ອນແລ້ວ, ດັ່ງນັ້ນພວກເຮົາຈຳຕ້ອງໄດ້ຂາຍສາລີໃນລາຄາ 500-600 ກີບ ຕໍ່ ກິໂລກຼາມເພາະລາຄາສາລີຕົກຕ່ຳ," ການເກັບຊື້ສາລີແມ່ນມີການແຂ່ງຂັນກັນຫຼາຍ. ທ່ານ ຄຳ ເວົ້າວ່າ: "ຈຳນວນຜູ້ເກັບຊື້ບໍ່ແຕກຕ່າງກັນຫຼາຍໃນແຕ່ລະປີ. ປົກກະຕິຈະມີພໍ່ຄ້າ 2 ຄົນ, ຜູ້ລົງທຶນ 2 ຄົນຊຶ່ງຄົນໜຶ່ງແມ່ນທາງພາກລັດແນະນຳມາ. ປະລິມານການຜະລິດເພີ່ມຂຶ້ນຫຼາຍແຕ່ຜູ້ລົງທຶນ ແລະ ພໍ່ຄ້າຊື້ເອົາທັງໝົດ," "ໂດຍທົ່ວໄປໃນບ້ານນີ້ພື້ນທີ່ກະສິກຳບໍ່ໄດ້ເພີ່ມຂຶ້ນແຕ່ວ່າພື້ນທີ່ການປູກສາລີແມ່ນຂະຫຍາຍເພີ່ມຂຶ້ນ."

ໃນເຂດນີ້ ມີຜູ້ລົງທຶນ 3 ກຸ່ມ ສະເໜີການລົງທຶນ 3 ແບບ ໃຫ້ຊາວກະສິກອນ:

- ຜູ້ລົງທຶນປະກອບການຄົນຈີນ: ແນວພັນ + ຢາປາບສັດຕູພືດຈຳນວນໜຶ່ງ + ລາຄາຕາມທ້ອງຕະຫຼາດ + ສິນເຊື່ອທີ່ບໍ່ມີດອກເບ້ຍ
- ຜູ້ລົງທຶນ ທີ່ແນະນຳຈາກ ຫ້ອງການກະສິກຳ-ປ່າໄມ້ເມືອງ: ແນວພັນ + ຢາປາບສັດຕູພືດ + ລາຄາຄົງທີ່
- ພໍ່ຄ້າ: ລາຄາຕາມແຕ່ລະພື້ນທີ່

ຊາວກະສິກອນຕ້ອງການຜູ້ລົງທຶນປະກອບການຄົນຈີນ ເພາະວ່າລາວໃຫ້ລາຄາດີ ແລະ ມີສິນເຊື່ອທີ່ບໍ່ມີດອກເບ້ຍ ຫຼື ກ່ອນປູກ, ເກັບ 10-15 % ຂອງມູນຄ່າປັດໃຈການຜະລິດທີ່ສະໜອງໃຫ້ໃນຮູບແບບສິນເຊື່ອ; ແຕ່ຊາວກະສິກອນສ່ວນຫຼາຍກູ້ຢືມຫຼັງຈາກທີ່ໄດ້ປູກພືດຜົນ ຫຼື ພາຍຫຼັງເພາະເຂົາເຈົ້າເຫັນວ່າມັນເປັນຈຸດໄດ້ປຽບໜຶ່ງ. ໃນການສ້າງຂໍ້ຕົກລົງ; ຕົວແທນຜູ້ລົງທຶນເປັນຜູ້ເຊັນຂໍ້ຕົກລົງກັບນາຍບ້ານ ແລະ ນາຍບ້ານສ້າງຂໍ້ຕົກລົງກັບຊາວກະສິກອນແບບປາກເປົ່າ, ລາຄາແມ່ນອີງໃສ່ຄາລາຕະຫຼາດ. ແນວໃດກໍ່ຕາມ, ຂໍ້ຕົກລົງກ່ຽວກັບສິນເຊື່ອສ່ວນຫຼາຍຈະຕົກລົງແບບປາກເປົ່າ.

ຊາວກະສິກອນບໍ່ໄດ້ເຮັດການຜະລິດແບບມີຂໍ້ຕົກລົງກັບຜູ້ລົງທຶນທີ່ຫ້ອງການກະສິກຳ-ປ່າໄມ້ເມືອງແນະນຳມາ ເພາະວ່າລາຄາຄົງທີ່ທີ່ກຳນົດແມ່ນຕ່ຳ ແລະ ບໍ່ມີສິນເຊື່ອ.

ປົກກະຕິຊາວກະສິກອນຂາຍຜົນຜະລິດພຽງເຄິ່ງໜຶ່ງໃຫ້ຜູ້ລົງທຶນຄົນຈີນ. ສ່ວນທີ່ເຫຼືອແມ່ນຂາຍໃຫ້ພໍ່ຄ້າຊຶ່ງບາງຄັ້ງຂັບລົດ 10 ລໍ້ ຊອກຊື້ສາລີທີ່ມີຕາມບ້ານຕ່າງໆ. ທ່ານ ຄຳ ຄິດວ່າ: ຜູ້ລົງທຶນອາດບໍ່ຮູ້ວ່າຊາວກະສິກອນແບ່ງຂາຍຜົນຜະລິດໃຫ້ພໍ່ຄ້າເຖິງແມ່ນວ່າຕົວແທນຂອງຜູ້ລົງທຶນລົງມາບ້ານເປັນປະຈຳກໍ່ຕາມ. ທ່ານ ຄຳເວົ້າວ່າ: "ຕົວແທນຜູ້ລົງທຶນມາປຶກສາຫາລືກັບຊາວກະສິກອນເປັນປະຈຳ ແລະ ທຸກຄັ້ງທີ່ລາວຈະມາລາວຈະແຈ້ງໃຫ້ຮູ້ລ່ວງໜ້າ ແລະ ພວກເຮົາຈຳຕ້ອງໄດ້ຢູ່ບ້ານເພື່ອພົບລາວເພື່ອມີບັນຫາຫຍັງຈະໄດ້ປຶກສາຫາລືກັນ."

ມາຮອດປະຈຸບັນການຜະລິດແບບມີຂໍ້ຕົກລົງເຫັນວ່າປະສົບຜົນສຳເລັດເນື່ອງຈາກຊາວກະສິກອນຜູ້ທີ່ສ້າງຂໍ້ຕົກລົງກັບຜູ້ລົງທຶນຍັງມີການຂາຍໃຫ້ພໍ່ຄ້າຄົນອື່ນ. ທ່ານ ຄຳ ເວົ້າວ່າ: " ຖ້າ [ບັນຫາ] ຫາກເກີດຂຶ້ນຈິງ ພວກເຮົາຈະຕ້ອງໄດ້ນັ່ງນຳກັນປຶກສາຫາລື, ອ່ານຜ່ານຂໍ້ຕົກລົງຄືນ. ພວກເຮົາຕ້ອງໄດ້ສັງເກດເບິ່ງປະຕິກິລິຍາຂອງຜູ້ຊື້ເພື່ອຕັດສິນໃຈວ່າພວກເຮົາຈະນຳໃຊ້ມາດຕະການໃດ. ມາຮອດປະຈຸບັນພວກເຮົາຍັງບໍ່ທັນໄດ້ປະສົບກັບບັນຫາລັກສະນະນີ້ເທື່ອ. ເຖິງແນວໃດກໍ່ຕາມ, ຄວາມຕ້ອງການຜະລິດຕະພັນຂ້ອນຂ້າງສູງ, ຖ້າພວກເຮົາຫາກມີບັນຫາກັບຕົວແທນຂອງຜູ້ລົງທຶນ ພວກເຮົາອາດຈະສາມາດຂາຍໃຫ້ພໍ່ຄ້າຄົນອື່ນໆໄດ້,"

ທ່ານ ຄຳ ຄາດວ່າ ການຜະລິດແບບມີຂໍ້ຕົກລົງຄົງຍັງຈະສືບຕໍ່. "ໃນອະນາຄົດມັນຂຶ້ນກັບສະພາບການຕົວຈິງ. ຕົວຢ່າງ: ຖ້າມີຜູ້ລົງທຶນຜູ້ທີ່ໃຫ້ເງື່ອນໄຂດີກວ່າພວກເຮົາຈະສ້າງຂໍ້ຕົກລົງກັບເຂົາເຈົ້າ. ສຳລັບການລົງທຶນດ້ວຍຕົນເອງນັ້ນ, ມັນຂຶ້ນກັບວ່າພວກເຮົາສາມາດເກັບເງິນໄດ້ພຽງພໍ ຫຼື ບໍ່."

### ການສັງເກດການ

ປົກກະຕິຂໍ້ຕົກລົງສຳລັບການຜະລິດປະກອບດ້ວຍການແລກປ່ຽນຜົນປະໂຫຍດ ແລະ ສິ່ງກະຕຸກຊຸກຍູ້ຕ່າງໆ. ຜູ້ລົງທຶນສະໜອງສິນເຊື່ອ 2 ປະເພດໃຫ້ຊາວກະສິກອນ. 1) ປັດໃຈການຜະລິດ. 2) ເງິນສົດ. ທັງສອງສິ່ງນີ້ເປັນການຮັບປະກັນມູນຄ່າຜົນຜະລິດໃນອະນາຄົດພາຍໃຕ້ການຜະລິດແບບມີຂໍ້ຕົກລົງ. ການສະໜອງສອງປັດໃຈນີ້ລ່ວງໜ້າໃຫ້ຊາວກະສິກອນແມ່ນຄວາມສ່ຽງໜຶ່ງສຳລັບຜູ້ລົງທຶນ. ແຕ່ສະແດງໃຫ້ເຫັນເຖິງຄວາມເຊື່ອໝັ້ນໃນຊາວກະສິກອນ ແລະ ຄວາມສາມາດທີ່ຈະປະຕິບັດມາດຕະການ ແລະ ເກັບທຶນ ຫຼື ສິນເຊື່ອຄືນໄດ້. ສຳລັບຊາວກະສິກອນເງິນສົດທີ່ກູ້ຢືມແມ່ນການຈ່າຍເງິນລ່ວງໜ້າ ແລະ ຊົດເຊີຍໃນກໍລະນີຜູ້ລົງທຶນປະຕິເສດທີ່ຈະຊື້ສາລີ. ສິນເຊື່ອອາດຈະເປັນກົນໄກສຳລັບການສ້າງຄວາມເຊື່ອໝັ້ນຂອງຊາວກະສິກອນຕໍ່ຜູ້ລົງທຶນ. ເຊັ່ນດຽວກັນ, ຜູ້ລົງທຶນອາດຈະສະແດງຄວາມເຊື່ອໝັ້ນຊາວກະສິກອນໂດຍສະໜອງສິນເຊື່ອທີ່ບໍ່ມີດອກເບ້ຍລ່ວງໜ້າພາຍຫຼັງທີ່ຊາວກະສິກອນໄດ້ລົງມືທຳການຜະລິດແລ້ວ.

ຜູ້ລົງທຶນ ໄດ້ລົງທຶນປັດໃຈການຜະລິດໃຫ້ຊາວກະສິກອນ. ການສະໜອງປັດໃຈການຜະລິດສາມາດຊ່ວຍຊາວກະສິກອນເອົາຊະນະຂໍ້ຫຍຸ້ງຍາກກ່ຽວກັບເງິນທີ່ຈະລົງທຶນຂອງເຂົາເຈົ້າ ຫຼື ທຶນທີ່ເຂົາເຈົ້າມີອາດສາມາດນຳໃຊ້ໃນຈຸດປະສົງອື່ນ. ເຖິງແນວໃດກໍ່ຕາມຊາວກະສິກອນບໍ່ໄດ້ນຳໃຊ້ປັດໃຈການຜະລິດທັງໝົດທີ່ຜູ້ລົງທຶນສະໜອງໃຫ້ເພື່ອຜະລິດສາລີໃຫ້ຜູ້ລົງທຶນ, ແຕ່ເຂົາເຈົ້າໄດ້ແບ່ງປັດໃຈການຜະລິດເຫຼົ່ານັ້ນສ່ວນໜຶ່ງ ສຳລັບການປູກພືດຜັກເພື່ອຂາຍໃຫ້ທັງຜູ້ລົງທຶນ ແລະ ພໍ່ຄ້າ. ນີ້ໝາຍວ່າຜູ້ລົງທຶນໄດ້ສະໜັບສະໜູນທາງດ້ານການເງິນສຳລັບປັດໃຈການຜະລິດຢ່າງພຽງພໍ ສຳລັບການຜະລິດເພື່ອພໍ່ຄ້າ ແລະ ເຮັດໃຫ້ການແຂ່ງຂັນຂອງພໍ່ຄ້າຍັງມີຢູ່.

ການທີ່ຊາວກະສິກອນແບ່ງຂາຍຜົນຜະລິດໃນສັດສ່ວນທີ່ສົມເຫດສົມຜົນສຳລັບພໍ່ຄ້າ ແລະ ຜູ້ລົງທຶນ ແລະ ຍັງສາມາດຮັບປະກັນການຢູ່ລອດຂອງຜູ້ຊື້ທັງສອງນັ້ນ ເປັນການຮັກສາການດຳເນີນທຸລະກິດຊຶ່ງຜູ້ລົງທຶນສາມາດສືບຕໍ່ຊື້ຜົນຜະລິດຈາກຊາວກະສິກອນ ແລະ ການກະຕຸ້ນການແຂ່ງຂັນ. ການຮັກສາທຸລະກິດໃນລັກສະນະດັ່ງກ່າວອາດມີຜົນປະໂຫຍດຕໍ່ຊາວກະສິກອນ ໂດຍສະເພາະຖ້າເຂົາເຈົ້າຕ້ອງໄດ້ຜະລິດ ແລະ ການສະໜອງຜົນຜະລິດປະເພດອື່ນ. ການແຂ່ງຂັນລະຫວ່າງຜູ້ລົງທຶນ ແລະ ພໍ່ຄ້າອາດຈະປັບປຸງເງື່ອນໄຂໃນການຜະລິດແບບມີຂໍ້ຕົກລົງສຳລັບຊາວກະສິກອນ ແລະ ບາງຄັ້ງເປັນການສ້າງຄວາມເຂັ້ມແຂງໃຫ້ຜູ້ລົງທຶນ.

ທ່ານ ຄຳ ຄິດວ່າຜູ້ລົງທຶນບໍ່ຮູ້ວ່າຊາວກະສິກອນແບ່ງຂາຍຜົນຜະລິດໃຫ້ພໍ່ຄ້າ, ທ່ານ ຄຳ ອາດຄິດຖືກແຕ່ຖ້າສົມມຸດວ່າຜູ້ລົງທຶນໄດ້ຄາດຄະເນຜົນໄດ້ຮັບໂດຍອີງໃສ່ແນວພັນແຕ່ລະປະເພດ ແລະ ເງື່ອນໄຂທ້ອງຖິ່ນແລ້ວ, ຜູ້ລົງທຶນອາດຈະເຫັນໄດ້ເຖິງຄວາມແຕກຕ່າງລະຫວ່າງຜົນຜະລິດທີ່ເຂົາເຈົ້າຄາດຄະເນໄວ້ ແລະ ປະລິມານຜົນຜະລິດທີ່ຊາວກະສິກອນຂາຍໃຫ້. ຜູ້ລົງທຶນອາດຈະຍອມຮັບໄດ້ທີ່ຊາວກະສິກອນຂາຍຜົນຜະລິດໃຫ້ພໍ່ຄ້າຖ້າເຂົາເຈົ້າຕ້ອງການສ້າງຄວາມສຳພັນການລົງທຶນໃນໄລຍະຍາວກັບຊາວກະສິກອນ ແລະ ກີດຂວາງຄູ່ແຂ່ງອື່ນໆ. ເຖິງວ່າຜົນຜະລິດສ່ວນໜຶ່ງໄດ້ຂາຍໃຫ້ພໍ່ຄ້າ, ແຕ່ຊາວກະສິກອນຕ້ອງໄດ້ຮັບປະກັນວ່າປະລິມານສາລີນັ້ນພຽງພໍຕາມທີ່ໄດ້ຕົກລົງໃນຂໍ້ຕົກລົງກັບຜູ້ລົງທຶນ.

ຜູ້ລົງທຶນອາດບໍ່ສາມາດທີ່ຈະຊື້ຜົນຜະລິດໄດ້ທັງໝົດຈາກຊາວກະສິກອນເມື່ອຜົນຜະລິດເພີ່ມຂຶ້ນຫຼາຍ. ໃນກໍລະນີນີ້ພໍ່ຄ້າອາດເຂົ້າມາເກັບຊື້ ແລະ ເກັບຮັກສາສາລີໄວ້ໃນຊ່ວງໃດໜຶ່ງຈົນກວ່າຜູ້ລົງທຶນຈະພ້ອມທີ່ຈະເກັບຊື້. ພໍ່ຄ້າອາດຂາຍສາລີໃນລາຄາສູງຂຶ້ນໃຫ້ຜູ້ລົງທຶນເພາະວ່າບໍ່ສະເພາະແຕ່ສ້າງກຳໄລ, ແຕ່ມັນຍັງເປັນໃຊ້ຈ່າຍສຳລັບພໍ່ຄ້າທີ່ສະໜອງສິນເຊື່ອ ແລະ ການເກັບຮັກສາຜົນຜະລິດນັ້ນໄວ້ໃຫ້.

ກໍລະນີນີ້ເປັນກໍລະນີທີ່ຂ້ອນຂ້າງແຕກຕ່າງກັບກໍລະນີອື່ນເພາະວ່າຊາວກະສິກອນຍັງຂາຍຜົນຜະລິດທີ່ນຳໃຊ້ປັດໃຈການຜະລິດທີ່ຜູ້ລົງທຶນສະໜອງໃຫ້ພາຍໃຕ້ຂໍ້ຕົກລົງໃຫ້ພໍ່ຄ້ານຳອີກ. ແນວໃດກໍ່ຕາມ, ມັນເປັນເລື່ອງແປກເພາະຊາວກະສິກອນເວົ້າເປັນປະຈຳວ່າມີພໍ່ຄ້າມາຊອກເກັບຊື້ແຕ່ເຂົາເຈົ້າປະຕິເສດທີ່ຈະຂາຍຜົນຜະລິດໃຫ້. ພໍ່ຄ້າຈະບໍ່ສາມາດດຳເນີນທຸລະກິດໄດ້ເຂົາເຈົ້າບໍ່ສາມາດເກັບຊື້ຜົນຜະລິດຈາກຊາວກະສິກອນໃນສະຖານທີ່ເຂົາເຈົ້າໄປເນື່ອງຈາກວ່າຊາວກະສິກອນເຮັດການຜະລິດພາຍໃຕ້ຂໍ້ຕົກລົງກັບຜູ້ລົງທຶນ. ແນວໃດກໍ່ຕາມ, ໃນແງ່ໜຶ່ງອີກ, ຊາວກະສິກອນຈຳນວນໜຶ່ງບໍ່ໄດ້ນຳໃຊ້ທີ່ດິນທັງໝົດທີ່ເຂົາເຈົ້າມີເພື່ອປູກພືດພາຍໃຕ້ຂໍ້ຕົກລົງ.

ຜູ້ລົງທຶນທີ່ແນະນຳໂດຍຫ້ອງການກະສິກຳ-ປ່າໄມ້ເມືອງຖືກປະຕິເສດໂດຍຊາວກະສິກອນເພາະວ່າໃຫ້ລາຄາຕ່ຳກວ່າ ແລະ ບໍ່ມີສິນເຊື່ອນັ້ນອາດເປັນເງື່ອນໄຂທີ່ຍາກສຳລັບຊາວກະສິກອນ ແລະ ສິ່ງນີ້ບໍ່ໄດ້ສະທ້ອນເຖິງ ຫຼື ເປັນໄປຕາມກົນໄກຂອງຕະຫຼາດ ແລະ ເບິ່ງຄືວ່າມັນຈະບໍ່ສາມາດຊ່ວຍປັບປຸງລາຍຮັບຂອງຊາວກະສິກອນ, ຫຼຸດຜ່ອນຄວາມທຸກຈົນ ແລະ ເພີ່ມຄວາມມັ່ງຄັ່ງເທົ່າກັບເງື່ອນໄຂ ກາລະໂອກາດທີ່ຜູ້ລົງທຶນ ຫຼື ພໍ່ຄ້າຄົນຈີນສະໜອງໃຫ້. ຖ້າຫ້ອງການກະສິກຳ-ປ່າໄມ້ເມືອງບໍ່ສາມາດແນະນຳຜູ້ລົງທຶນ ຫຼື ຕະຫຼາດທີ່ເໝາະສົມສຳລັບຊາວກະສິກອນມັນອາດເປັນສັນຍານບອກວ່າຫ້ອງການກະສິກຳ-ປ່າໄມ້ເມືອງ ຄວນຈະສຸມຊັບພະຍາກອນທີ່ມີໃສ່ໜ້າວຽກ ຫຼື ເຂດໃດໜຶ່ງ ແລະ ປ່ອຍການຜະລິດເປັນໄປຕາມກົນໄກຕະຫຼາດຖ້າບ່ອນໃດຄວາມຕ້ອງການມີສູງ ຫຼື ເໝາະສົມ ແລະ ແຕ່ວາງລະບຽບການທີ່ເໝາະສົມເພື່ອສ້າງຜົນປະໂຫຍດຈາກກາລະໂອກາດນັ້ນ.

**ສະຫຼຸບ**

- ການແຂ່ງຂັນໄດ້ສ້າງເງື່ອນໄຂດີຂຶ້ນສຳລັບຊາວກະສິກອນໃນການຜະລິດແບບມີຂໍ້ຕົກລົງ
- ສິນເຊື່ອທີ່ບໍ່ມີດອກເບ້ຍເປັນກົນໄກສຳລັບການສ້າງຄວາມເຊື່ອໝັ້ນຄວາມສຳພັນການຜະລິດ
- ສິນເຊື່ອທີ່ບໍ່ມີດອກເບ້ຍແມ່ນການຈ່າຍລ່ວງໜ້າສຳລັບຊາວກະສິກອນຊຶ່ງຫຼຸດຜ່ອນຄວາມສ່ຽງໃນການຜະລິດກັບຜູ້ລົງທຶນ
- ຜູ້ລົງທຶນອາດສາມາດໄດ້ຄືນສິນເຊື່ອທີ່ບໍ່ມີດອກເບ້ຍຖ້າຊາວກະສິກອນບໍ່ປະຕິບັດຕາມຂໍ້ຕົກລົງເພາະວ່າໜີ້ສິນບໍ່ແມ່ນເງິນຈ່າຍລ່ວງໜ້າ
- ຊາວກະສິກອນສາມາດສ້າງເງື່ອນໄຂການແຂ່ງຂັນ ແລະ ປ້ອງກັນ ຜູ້ຊື້ທີ່ອາດຈະຫຼິ້ນເຫຼວ ຖ້າເຂົາເຈົ້າແບ່ງສະໜອງຜົນຜະລິດ ໃຫ້ທັງຜູ້ລົງທຶນ ແລະ ພໍ່ຄ້າ
- ເປົ້າໝາຍຂອງລັດຖະບານທີ່ຈະຫຼຸດຜ່ອນຄວາມທຸກຈົນຂອງຊາວກະສິກອນ ອາດບໍ່ປະສົບຜົນສຳເລັດ ຖ້າຫ້ອງການ ກະສິກຳ-ປ່າໄມ້ ເມືອງ ແນະນຳພຽງແຕ່ ຜູ້ລົງທຶນທີ່ບໍ່ມີຄວາມອາດສາມາດໃນການແຂ່ງຂັນ ໃຫ້ຊາວກະສິກອນ

## ປັດໃຈທີ່ພາໃຫ້ເກີດມີຜົນສຳເລັດ

1. ຄວາມຕ້ອງການທີ່ແຂງແຮງ ແລະ ເປີດຕະຫຼາດ ໃຫ້ມີການແຂ່ງຂັນລະຫວ່າງຜູ້ລົງທຶນ ແລະ ພໍ່ຄ້າ
2. ລາຄາຕາມທ້ອງຕະຫຼາດ, ປັດໃຈການຜະລິດ ແລະ ສິນເຊື່ອເງິນສົດ

## ຄຳຖາມ

ກ. ຍ້ອນຫຍັງຊາວກະສິກອນຈຶ່ງຕັດສິນໃຈແບ່ງຂາຍຜົນຜະລິດທີ່ຜະລິດພາຍໃຕ້ການຊ່ວຍເຫຼືອທາງດ້ານດານເງິນຂອງຜູ້ລົງທຶນໃຫ້ການຄ້າ?

ຂ. ຊາວກະສິກອນຄິດວ່າຄວາມສຳພັນຂອງເຂົາເຈົ້າກັບຜູ້ລົງທຶນແລະພໍ່ຄ້າ, ຄວາມສຳພັນລະຫວ່າງຜູ້ລົງທຶນ ແລະ ພໍ່ຄ້າເປັນລັກສະນະໃດ?

ຄ. ຖ້າຊາວກະສິກອນສາມາດເຂົ້າເຖິງ ສິນເຊື່ອຈາກແຫຼ່ງອື່ນໆ ມັນຈະມີຜົນກະທົບຫຍັງຕໍ່ຄວາມສຳພັນຂອງເຂົາເຈົ້າ ແລະ ຜູ້ລົງທຶນ?

ງ. ຍ້ອນຫຍັງຫ້ອງການກະສິກຳ-ປ່າໄມ້ເມືອງຈຶ່ງແນະນຳຜູ້ລົງທຶນທີ່ບໍ່ມາດສະໜອງເງື່ອນໄຂທີ່ສາມາດແຂ່ງຂັນໄດ້?

## 8.12. ກໍລະນີ 12. ຄວາມສຳຄັນຂອງຄວາມເຊື່ອຖື ຫຼື ຊື່ສຽງ

**ບ້ານພຽງໄຊ, ເມືອງບຸນເໜືອ, ແຂວງ ຜົ້ງສາລີ**



ຊາປູກຢູ່ບ້ານເຂດເນີນສູງ

ຫ້ອງການກະສິກຳ ແລະ ປ່າໄມ້ເມືອງຂາດອຳນາດເມື່ອເວລາຜູ້ລົງທຶນລົບໜີຈາກຊາວກະສິກອນໂດຍປັດສະຈາກການຕະຫຼາດ.

### ປະສົບການ

ຕາມເສັ້ນທາງເມືອງບຸນເໜືອໄປຫາຊາຍແດນຈີນ,ລະຫວ່າງທາງດິນແດງ ແລະ ສາຍນ້ຳ ທີ່ມາຈາກຮ່ອມຫ້ວຍທີ່ເຕັມໄປດ້ວຍປ່າໄມ້ທີ່ຂຽວສະອຸ່ມນັ້ນແມ່ນ ບ້ານພຽງໄຊ ຊຶ່ງມີການຕັ້ງເຮືອນຕິດຈອດກັນເປັນກຸ່ມຍ່າງຄັບຄາໜາແໜ້ນ. ໃນຕອນທ່ຽງວັນໃນຂະນະທີ່ຊາວບ້ານກຳລັງລົງຫ້ວຍເພື່ອຫາປາ, ໄຕຮີມສາຍຄາຫ້ອງການ ບ້ານ ທານ ຄຳຕຸ່ນ ເມົ້າແສງສົນຊາດ ໄດ້ໃຫ້ຂໍ້ມູນກ່ຽວກັບຫ້ອງການກະສິກຳ-ປ່າໄມ້ເມືອງ ແລະ ຜູ້ລົງທຶນການປູກຊາຈາກ ສ ປ ຈີນ ວ່າ:

ໃນປີ 2005 ຫ້ອງການກະສິກຳ-ປ່າໄມ້ເມືອງໄດ້ແນະນຳຜູ້ລົງທຶນຈາກ ສປ ຈີນ ຊຶ່ງຕ້ອງການຜະລິດຊາຮ່ວມກັບຊາວບ້ານ. ຫ້ອງການກະສິກຳ-ປ່າໄມ້ເມືອງຮັບປະກັນວ່າຜູ້ລົງທຶນຈະກັບມາຊື້ຊານຳຊາວກະສິກອນ. ຂໍ້ຕົກລົງທີ່ເປັນລາຍລັກອັກສອນທັງພາສາລາວ ແລະ ຈີນໄດ້ອ່ານໃຫ້ຊາວກະສິກອນຟັງ ແລະ ຊາວກະສິກອນກໍ່ໄດ້ອ່ານເອງກ່ອນທີ່ຜູ້ລົງທຶນ, ນາຍບ້ານ ແລະ ຫ້ອງການກະສິກຳ-ປ່າໄມ້ເມືອງຈະເຊັນຂໍ້ຕົກລົງ. ທ່ານ ຄຳຕຸ່ນ ແມ່ນໜຶ່ງໃນຜູ້ເຂົ້າຮ່ວມການຜະລິດແບບມີຂໍ້ຕົກລົງ ແລະ ໄດ້ຮັບເບ້ຍຊາຈຳນວນ 5,000 ຕົ້ນຈາກຜູ້ລົງທຶນ. ໃນປີ 2010 ຊຶ່ງເປັນໄລຍະເວລາທີ່ຕ້ອງໄດ້ເກັບກ່ຽວຜົນຜະລິດຄັ້ງທຳອິດແຕ່ວ່າຜູ້ລົງທຶນບໍ່ໄດ້ກັບມາເກັບຊື້ຜົນຜະລິດ.

ຊາວບ້ານຮູ້ສຶກວ່າຫ້ອງການກະສິກຳ-ປ່າໄມ້ເມືອງເປັນຜູ້ຮັບຜິດຊອບສຳລັບຄວາມຫຼົ້ມເຫຼວຂອງຜູ້ລົງທຶນ. ພາຍຫຼັງທີ່ປະຊຸມກັບຊາວບ້ານໄດ້ຮຽກຮ້ອງໃຫ້ຫ້ອງການກະສິກຳ-ປ່າໄມ້ເມືອງຊື້ຊານັ້ນ ຫຼື ຊອກຫາຜູ້ຊື້ຄົນອື່ນໃຫ້ ແລະ ຫ້ອງການກະສິກຳ-ປ່າໄມ້ ເມືອງແນະນຳຊາວກະສິກອນຂາຍຊານັ້ນໃຫ້ແກ່ພໍ່ຄ້າ. ທ່ານ ຄຳຕຸ່ນ ເວົ້າວ່າ: “ ຂ້າພະເຈົ້າຂາດເງິນທີ່ຈະລົງລົງທຶນດ້ວຍຕົນເອງ. ເຖິງແນວໃດກໍ່ຕາມຜູ້ລົງທຶນບໍ່ໄດ້ຊື້ຊານັ້ນພວກເຮົາສາມາດຂາຍໃຫ້ພໍ່ຄ້າ ຊຶ່ງມາຊອກຊື້ໃນບ້ານໄດ້.” ປີນີ້ ທ່ານ ຄຳຕຸ່ນ ບໍ່ໄດ້ເກັບກ່ຽວຜົນຜະລິດຊາເພາະວ່າ ລາວຫຍຸ້ງກັບການປູກໝາກນອດ.

## ການສັງເກດການ

ເຖິງແມ່ນວ່າກໍລະນີນີ້ເປັນກໍລະນີ ທີ່ບໍ່ປະສົບຜົນສຳເລັດ ແລະ ມັນສະແດງໃຫ້ເຫັນວ່າຫ້ອງການກະສິກຳ-ປ່າໄມ້ເມືອງບໍ່ສາມາດບັງຄັບໃຊ້ຂໍ້ຕົກລົງທີ່ເຂົາເຈົ້າເປັນນາຍໜ້າສຳລັບຜູ້ລົງທຶນຕ່າງປະເທດດ້ວຍມາດຕະການທາງດ້ານບໍລິຫານ ຫຼື ວິທີການອື່ນໆ. ຊາວກະສິກອນເຫັນວ່າຄວາມຫຼົ້ມເຫຼວຂອງຜູ້ລົງທຶນແມ່ນຄວາມຮັບຜິດຊອບຂອງຫ້ອງການກະສິກຳ-ປ່າໄມ້ເມືອງຊຶ່ງຮັບປະກັນວ່າຜູ້ລົງທຶນຈະກັບມາເກັບຊື້ຜົນຜະລິດ. ວິທີການແກ້ໄຂຂອງຫ້ອງການກະສິກຳ-ປ່າໄມ້ເມືອງແມ່ນແນະນຳໃຫ້ຊາວກະສິກອນຂາຍຜົນຜະລິດໃຫ້ໃຜກໍ່ໄດ້. ການແກ້ໄຂແບບນັ້ນເຫັນວ່າເປັນການເພີກເສີຍຄວາມຮັບຜິດຊອບຕໍ່ຊາວກະສິກອນເພາະວ່າໃນກໍລະນີນີ້, ເຂົາເຈົ້າອາດບໍ່ຈຳເປັນຕ້ອງຂໍອະນຸຍາດຈາກຫ້ອງການກະສິກຳ-ປ່າໄມ້ເມືອງເພື່ອຂາຍໃຫ້ພໍ່ຄ້າ.

ຊາວກະສິກອນຜິດຫວັງກັບຫ້ອງການກະສິກຳ-ປ່າໄມ້ເມືອງ. ຄວາມຫຼົ້ມເຫຼວອາດເປັນເພາະຫຼາຍເຫດຜົນ. ຜູ້ລົງທຶນອາດຕັ້ງໃຈມາແຕ່ພົບກັບຂໍ້ຫຍຸ້ງຍາກທີ່ບໍ່ຄາດຄິດ ຫຼື ຜູ້ລົງທຶນອາດຈະບໍ່ຈິງໃຈ ຫຼື ພົບກາລະໂອກາດທີ່ໃຫ້ກຳໄລດີກວ່າໃນທີ່ອື່ນ. ຈະແມ່ນຫຍັງເປັນສາເຫດກໍ່ຕາມ ຫຼື ອາດບໍ່ສຳຄັນວ່າຫ້ອງການກະສິກຳ-ປ່າໄມ້ເມືອງພິຈາລະນາແບບໃດຄວາມຈິງກໍ່ຄື: ຜູ້ລົງທຶນບໍ່ເຮັດສຳເລັດໜ້າທີ່. ໃນສາຍຕາຂອງຊາວກະສິກອນຄວາມຫຼົ້ມເຫຼວນັ້ນແມ່ນຄວາມຮັບພິດຊອບຕິດພັນກັບຫ້ອງການກະສິກຳ-ປ່າໄມ້ເມືອງເພາະວ່າຫ້ອງການກະສິກຳ-ປ່າໄມ້ເມືອງເປັນຜູ້ແນະນຳຜູ້ລົງທຶນເຂົ້າມາ. ຄວາມຫຼົ້ມເຫຼວຍັງສະແດງໃຫ້ເຫັນວາຫ້ອງການກະສິກຳ-ປ່າໄມ້ເມືອງບໍ່ໄດ້ມີອຳນາດໃນການບັງຄັບໃຊ້ມາດຕະການ ຫຼື ສິດໜ້າທີ່ ຫຼື ຮຽກຮ້ອງໃຫ້ມີການຊົດເຊີຍ. ເຊັ່ນດຽວກັບໃນກໍລະນີ 11, ຫ້ອງການກະສິກຳ-ປ່າໄມ້ເມືອງແນະນຳຜູ້ລົງທຶນທີ່ໃຫ້ເງື່ອນໄຂທີ່ຕ່ຳກວ່າເມື່ອທຽບກັບຜູ້ລົງທຶນຄົນຈີນ. ສະນັ້ນ, ຊາວກະສິກອນສາມາດປະຕິເສດຂໍ້ສະເໜີເພາະວ່າມີການແຂ່ງຂັນລະຫວ່າງຜູ້ຊື້ຕ່າງໆ.

ການລົງທຶນທີ່ຫຼົ້ມເຫຼວ ຫຼື ການລົງທຶນທີ່ມີຄຸນນະພາບຕ່ຳໄດ້ເຮັດໃຫ້ທຳລາຍຄວາມເຊື່ອຖື ຫຼື ຊື່ສຽງຂອງຫ້ອງການກະສິກຳ-ປ່າໄມ້ເມືອງ. ໃນອະນາຄົດຊາວກະສິກອນອາດຈະຍອມຮັບຄວາມພະຍາຍາມຂອງຫ້ອງການກະສິກຳ-ປ່າໄມ້ເມືອງທີ່ຈະເປັນນາຍໜ້າໃນການສ້າງຂໍ້ຕົກລົງກັບຜູ້ລົງທຶນໜ້ອຍລົງຕໍ່ຊາວກະສິກອນອາດຈະຢາກຈັດຕັ້ງການຜະລິດແບບມີຂໍ້ຕົກລົງດ້ວຍຕົນເອງ; ຊຶ່ງຈະນຳໄປສູ່ການກຳຈັດຊ່ອງຫວ່າງ ແລະ ການເຂົ້າມາກ່ຽວຂ້ອງຂອງຫ້ອງການກະສິກຳ-ປ່າໄມ້ເມືອງໃນທຸລະກິດການຜະລິດລະຫວ່າງຊາວກະສິກອນ ແລະ ຜູ້ລົງທຶນຫ້ອງການກະສິກຳ-ປ່າໄມ້ເມືອງຕ້ອງໄດ້ໃຫ້ການຊ່ວຍເຫຼືອທີ່ໄດ້ມາດຖານທີ່ສູງຖ້າຢາກໃຫ້ປະຊາຊົນຕ້ອນຮັບ, ເຫັນຄຸນຄ່າເປັນທີ່ຕ້ອງການ ແລະ ເພື່ອຜົນປະໂຫຍດຂອງຊາວກະສິກອນ.

ຄວາມເປັນໜ້າເຊື່ອຖື ຫຼື ຊື່ສຽງ ແລະ ຄວາມສຳຄັນຂອງຫ້ອງການກະສິກຳ-ປ່າໄມ້ເມືອງອາດຈະໄດ້ຮັບການປັບປຸງຖ້າສາມາດຮຽກຮ້ອງເງິນມັດຈຳຈາກຜູ້ລົງທຶນ. ເງິນມັດຈຳນີ້ອາດສາມາດແບ່ງເພື່ອຊົດເຊີຍຊາວກະສິກອນໂດຍທີ່ຊາວກະສິກອນໄດ້ຮັບຮູ້ນຳ. ທາງເລືອກໜຶ່ງອາດຮຽກຮ້ອງໃຫ້ຜູ້ລົງທຶນສະໜອງສິນເຊື່ອເງິນສົດສຳລັບຊາວກະສິກອນ.

## ສະຫຼຸບ

- ຫ້ອງການກະສິກຳ - ປ່າໄມ້ເມືອງຢູ່ໃນຄວາມສ່ຽງກ່ຽວກັບຄວາມໜ້າເຊື່ອຖື ແລະ ຄວາມສຳພັນ ກັບຊາວກະສິກອນເມື່ອເຂົາເຈົ້າແນະນຳຜູ້ລົງທຶນ ແລະ ຊຸກຍູ້ຊາວກະສິກອນເພື່ອເຂົ້າຮ່ວມການຜະລິດແບບມີຂໍ້ຕົກລົງ
- ຖ້າຫ້ອງການກະສິກຳ-ປ່າໄມ້ເມືອງມີຄວາມໜ້າເຊື່ອຖືຕ່ຳສຳລັບຊາວກະສິກອນ ຫຼື ຜູ້ລົງທຶນມັນອາດຈະເປັນການຕ້ານຢັນການມີສ່ວນຮ່ວມຂອງຫ້ອງການກະສິກຳ-ປ່າໄມ້ເມືອງຫຼາຍກວ່າການຕ້ອນຮັບ
- ການເລືອກຜູ້ລົງທຶນແມ່ນມີຄວາມສ່ຽງເພາະວ່າມັນເປັນໄປໄດ້ຍາກທີ່ຈະແນ່ໃຈກ່ຽວກັບຄຸນນະພາບ ແລະ ເຈຕະນາຂອງເຂົາເຈົ້າ
- ຜົນຜະລິດຂອງຊາວກະສິກອນລາວອາດສາມາດແຂ່ງຂັນໄດ້ຖ້າຜະລິດຕະພັນທີ່ຜະລິດແຕກຕ່າງສິ່ງທີ່ມີໃນ ສປ ຈີນ ແລະ ມີຄຸນນະພາບສູງ

## ປັດໃຈທີ່ເຮັດໃຫ້ ຫຼົ້ມເຫຼວ

1. ການເລືອກສົ່ງເສີມຜູ້ລົງທຶນ
2. ບໍ່ມີຄວາມສາມາດທີ່ຈະຊິດເຊີຍ ແລະ ຊ່ວຍເຫຼືອຊາວກະສິກອນ

## ຄຳຖາມ

ກ. ຍ້ອນຫຍັງຜູ້ລົງທຶນບໍ່ກັບມາຊື້ຜົນຜະລິດທັງໆທີ່ເຂົາເຈົ້າສະໜອງເບ້ຍຊາ ແລະ ການຊ່ວຍເຫຼືອດ້ານອື່ນໆອີກ?

ຂ. ຍ້ອນຫຍັງຫ້ອງການກະສິກຳ - ປ່າໄມ້ເມືອງແນະນຳຜູ້ລົງທຶນທີ່ໃຫ້ຂໍ້ສະເໜີທີ່ຕ່ຳກວ່າ?

ຄ. ຍ້ອນຫຍັງ ຈຶ່ງເບິ່ງຄືວ່າຫ້ອງການ ກະສິກຳ - ປ່າໄມ້ເມືອງຈິງໃຈສ້າງສາຍສຳພັນກັບຜູ້ລົງທຶນທີ່ສະເໜີເງື່ອນໄຂຕ່ຳ?

ງ. ຊາວກະສິກອນຈະຮູ້ໄດ້ແນວໃດວ່າຜູ້ລົງທຶນໄດ້ວາງເງິນມັດຈຳ ຫຼື ບໍ່?

## 9. ປັດໃຈທີ່ພາໃຫ້ເກີດຜົນສຳເລັດ

### 9.1. ປັດໃຈພາຍໃນ

ປັດໃຈພາຍໃນສາມາດກຳນົດຜ່ານຫຼັກການ, ກົດເກນ ຫຼື ມາດຖານ ແລະ ສິ່ງທີ່ປະກົດເຫັນທີ່ສຳພັດ ແລະ ຄາດຄະເນໄດ້. ມັນຂຶ້ນກັບສັນຍາ, ໜ້າທີ່ ແລະ ເງື່ອນໄຂຂອງການຜະລິດແບບມີຂໍ້ຕົກລົງລວມທັງການຈັດຕັ້ງການຜະລິດແບບມີຂໍ້ຕົກລົງ.

**ຂໍ້ຕົກລົງທີ່ເປັນລາຍລັກອັກສອນ – ກໍລະນີ 1, 3, 4, 5, 6, 7, 9**

ບັນທຶກບັນດາຂໍ້ຕົກລົງ ແລະ ເງື່ອນໄຂຂອງການຕໍ່ລອງລະຫວ່າງຊາວກະສິກອນ ແລະ ຜູ້ລົງທຶນເປັນລາຍລັກອັກສອນຊ່ວຍປັບປຸງໃຫ້ເຂົ້າໃຈສິ່ງທີ່ທັງສອງຝ່າຍຄາດຫວັງໄວ້ ແລະ ເປັນບ່ອນອີງໃນກໍລະນີທີ່ມີຂໍ້ຂັດແຍ່ງເກີດຂຶ້ນ.ສັນຍາທີ່ເປັນລາຍລັກອັກສອນເປັນກົນໄກສຳລັບສ້າງຄວາມໂປ່ງໃສ , ຄວາມແນ່ນອນ ແລະ ຄວາມໝັ້ນໃຈ.

**ລາຄາຕາມທ້ອງຕະຫຼາດ – ກໍລະນີ 4, 11**

ຊາວກະສິກອນ ແລະ ຜູ້ລົງທຶນຮັບຮູ້ລາຄາທົ່ວໄປແມ່ນໄດ້ກຳນົດຕາມມາດຖານລາຄາຕະຫຼາດ. ລາຄາຕະຫຼາດຂຶ້ນກັບຄວາມຊື່ສັດຂອງການຕົກລົງເພາະວ່າຕາມທິດສະດີແລ້ວລາຄາຕະຫຼາດຄວນຈະເປັນລາຄາທີ່ດີສະເໜີຊຶ່ງພໍ່ຄ້າອາດຈະຍອມສ່ຽງເພື່ອຈະໄດ້ມາເງື່ອນໄຂສະເໜີທີ່ດີກວ່າ. ເຖິງແນວໃດກໍ່ຕາມ , ບ່ອນທີ່ພໍ່ຄ້າເປັນຕົວແທນຊື້ສົ່ງໃຫ້ຕະຫຼາດທີ່ຢູ່ບ່ອນອື່ນທີ່ມີກຳລັງຊື້ຫຼາຍກວ່າຈະບໍ່ມີຜົນກະທົບຫຼາຍຕໍ່ລາຄາ ແລະ ສາມາດໃຫ້ເງື່ອນໄຂສະເໜີທີ່ດີກວ່າ ແລະ ເອົາຊະນະ ລາຄາຕະຫຼາດໃນທ້ອງຖິ່ນໂດຍປາສະຈາກຄວາມສ່ຽງ. ເນື່ອງຈາກຕະຫຼາດບໍ່ໄດ້ກະແຈກກະຈາຍຍ້ອນການປັບປຸງການສື່ສານ, ສ້າງມີການພົວພັນ ແລະ ເຄືອຂ່າຍຜ່ານການກະຈາຍຂໍ້ມູນຂ່າວສານລະຫວ່າງຜູ້ລົງທຶນ, ພໍ່ຄ້າ ແລະ ຊາວກະສິກອນຊຶ່ງເຮັດໃຫ້ລາຄາເກາະກ່າຍກັນໃນບໍລິເວນທີ່ກວ້າງຂຶ້ນ. ລາຄາຕະຫຼາດໃນຂໍ້ຕົກລົງມັກຈະເພີ່ມຂຶ້ນຈາກລາຄາພື້ນຖານຕ່ຳສຸດເພື່ອຫຼຸດຜ່ອນຄວາມສ່ຽງຂອງຊາວກະສິກອນ. ການກຳນົດຖານລາຄາທີ່ຕ່ຳສຸດແມ່ນຕອບສະໜອງຜົນປະໂຫຍດ ແລະ ຫຼຸດຄວາມສ່ຽງຂອງຊາວກະສິກອນ ແລະ ຜູ້ລົງທຶນອາດຈະເປັນແຫຼ່ງກຳເນີດການແຂ່ງຂັນ. ລາຄາຄົງທີ່ແມ່ນຍາກທີ່ຈະປັບເມື່ອລາຄາຕະຫຼາດເພີ່ມຂຶ້ນ. ບ່ອນທີ່ສາມາດນຳໃຊ້ລາຄາຄົງທີ່ອາດໝາຍເຖິງຄວາມເຂັ້ມແຂງໃນການບັງຄັບໃຊ້ບັນດາມາດຕະການຕ່າງໆ.

**ການຈ່າຍລ່ວງໜ້າ**

ການຈ່າຍສ່ວນໃດສ່ວນໜຶ່ງລ່ວງໜ້າສະແດງວ່າຜູ້ລົງທຶນມີທຶນຮອນ, ມອບຄວາມໄວ້ວາງໃຈ ແລະ ຄວາມໝັ້ນໃຈຕໍ່ຊາວກະສິກອນ ແລະ ໂອກາດໃນການຜະລິດ. ຂະບວນການຮຽກຮ້ອງຂໍການຈ່າຍລ່ວງໜ້າອາດຈະເປັນການປ້ອງການຜູ້ລົງທຶນທີ່ບໍ່ເຂັ້ມແຂງ ແລະ ບໍ່ຈິງໃຈ. ຖ້າຜູ້ລົງທຶນຖອນຕົວກ່ອນ ຫຼື ລະຫວ່າງການຜະລິດການຈ່າຍລ່ວງໜ້າຈະເປັນການຊົດເຊີຍສຳລັບຊາວກະສິກອນ. ການຮັບເອົາການຈ່າຍລ່ວງໜ້າອາດຈະສ້າງຄວາມຮູ້ສຶກທີ່ເປັນພັນທະສຳລັບຊາວກະສິກອນ. ມັນອາດຈະສ້າງສິ່ງກີດຂວາງກັ້ນການເຂົ້າມາແຂ່ງຂັນຂອງຜູ້ລົງທຶນອື່ນ. ການຂຶ້ນກັບການຈ່າຍລ່ວງໜ້າອາດຈະເກັບຄືນໄດ້ຖ້າຊາວກະສິກອນບໍ່ປະສົບຜົນສຳເລັດໃນການຜະລິດ. ການສຳລະກ່ອນການເກັບກ່ຽວປະຕິບັດໃນຫຼາຍຮູບແບບ. ການສະໜອງສິນເຊື່ອໃນຮູບແບບປັດໃຈການຜະລິດບໍ່ໄດ້ຖືກພິຈາລະນາວ່າເປັນການຈ່າຍເພາະວ່າບໍ່ແມ່ນເງິນສົດ. ໂດຍທົ່ວໄປແລ້ວຍັງບໍ່ມີການສຳລະໜີ້ທີ່ເປັນເງິນສົດ ແລະ ນອກນັ້ນການຜະລິດກໍ່ໄດ້ຮັບຜົນດີ ແລະ ກໍ່ມີຜູ້ຊື້ໃໝ່ໆທີ່ປະກົດຕົວຂຶ້ນ.

- **ຄ່າທຳນຽມການນຳໃຊ້ທີ່ດິນ – ກໍລະນີ 6, 9**

ຜູ້ລົງທຶນຈ່າຍຄ່າທຳນຽມການນຳໃຊ້ທີ່ດິນໃຫ້ຊາວກະສິກອນໂດຍອີງຕາມພື້ນທີ່ ແລະ ກ່ອນການເກັບກ່ຽວ. ຈຳນວນເງິນອາດຈະໜ້ອຍ. ການເກັບເງິນຄືນ ອາດຈະຫຍຸ້ງຍາກຖ້າຊາວກະສິກອນຈັດຕັ້ງປະຕິບັດ ຫຼື ການຜະລິດບໍ່ໄດ້ຮັບຜົນເພາະວ່າເງິນທີ່ໃຫ້ບໍ່ແມ່ນການກູ້ຢືມເວັ້ນແຕ່ວ່າມີການກຳນົດເງື່ອນໄຂໃນຂໍ້ຕົກລົງ. ການຈັດຕັ້ງປະຕິບັດປະກົດວ່າມີການລິເລີ່ມໃນ ສປ ຈີນ .

- **ສິນເຊື່ອ ທີ່ບໍ່ມີດອກເບ້ຍແບບທົ່ວໄປ– ກໍລະນີ 4, 11**

ຜູ້ລົງທຶນໃຫ້ສິນເຊື່ອໃຫ້ຊາວກະສິກອນໂດຍປາສະຈາກດອກເບ້ຍເທົ່າກັບສັດສ່ວນໜຶ່ງຂອງມູນຄ່າຜົນຜະລິດທີ່ເກັບກ່ຽວທັງໝົດ. ຖ້າຜູ້ລົງທຶນຖອນຕົວກ່ອນຊາວກະສິກອນຄວນຈະສາມາດຄອບຄອງສິນເຊື່ອນັ້ນໄດ້. ຖ້າຊາວກະສິກອນບໍ່ປະສົບຜົນສຳເລັດທີ່ຈະສະໜອງຜົນຜະລິດດ້ວຍເຫດຜົນໃດໆກໍ່ຕາມນອກຈາກຍ້ອນບັນຫາສະພາບແວດລ້ອມທຳມະຊາດ; ຜູ້ລົງທຶນອາດຈະມີເຫດຜົນທີ່ຈະບັງຄັບໃຫ້ຊາວກະສິກອນຈ່າຍຄືນເພາະວ່າສິນເຊື່ອທີ່ໃຫ້ແມ່ນໜີ້ທີ່ເປັນພັນທະ. ເພື່ອຈ່າຍລ່ວງໜ້າໃນລັກສະນະສິນເຊື່ອຕ້ອງແມ່ນການປະຕິບັດກັບຊາວກະສິກອນສ່ວນໃຫຍ່, ຫຼື ເວົ້າອີກຢ່າງໜຶ່ງເປີດກວ້າງຫຼາຍເທົ່າທີ່ເປັນໄປໄດ້. ບ່ອນທີ່ສິນເຊື່ອທີ່ບໍ່ມີດອກເບ້ຍຖືກເລືອກປະຕິບັດ

- **ການລົງທຶນທີ່ວາງເງິນມັດຈຳ – ກໍລະນີ 6, 10**

ເງິນມັດຈຳ 10 % ຂອງມູນຄ່າຜົນຜະລິດທີ່ຄາດຄະເນທັງໝົດແມ່ນມອບໂດຍຜູ້ລົງທຶນ ແລະ ຮັກສາໄວ້ກັບຫ້ອງການກະສິກຳ-ປ່າໄມ້ເມືອງ. ຖ້າຜູ້ລົງທຶນຖອນຕົວຈາກການຜະລິດເງິນມັດຈຳນັ້ນຈະກະຈາຍໃຫ້ຊາວກະສິກອນເພື່ອເປັນການຊົດເຊີຍ. ເພື່ອໃຫ້ຍຸດຕິທຳ ແລະ ມີປະສິດທິພາບມັນຮຽກຮ້ອງໃຫ້ມີຄວາມໂປ່ງໃສ. ຊາວກະສິກອນຕ້ອງໄດ້ຮັບຮູ້ຂໍ້ມູນກ່ຽວກັບເງິນມັດຈຳ. ກົນໄກສຳລັບການແບ່ງປັນເງິນມັດຈຳ, ຕົວຢ່າງ: ແບ່ງຕາມພື້ນທີ່ທຳການຜະລິດ,ຕ້ອງໄດ້ຕົກລົງໃນຊ່ວງເຈລະຈາກ່ຽວກັບຂໍ້ຕົກລົງ. ເງິນມັດຈຳອາດສາມາດຈ່າຍໄດ້ທັນທີທີ່ຜູ້ລົງທຶນບໍ່ປະຕິບັດຕາມທີ່ຕົກລົງໄວ້ ຫຼື ຫຼົ້ມເຫຼວ. ເຖິງແນວໃດກໍ່ຕາມ, ມັນມີຈຸດອ່ອນໃນການການຈັດກຽມແບບນີ້:ຜູ້ລົງທຶນອາດຄິດວ່າເງິນມັດຈຳກັບເຈົ້າໜ້າທີ່ແມ່ນມູນຄ່າຂອງການລົງທຶນໃນທຸລະກິດ, ສະນັ້ນໂດຍທົ່ວໄປນັ້ນເປັນການເພີ່ມຕົ້ນທຶນ ແລະ ນອກຈາກນັ້ນອາດຫຼຸດກາລະໂອກາດທີ່ຊາວກະສິກອນຈະໄດ້ຮັບການຄ້ຳປະກັນລາຄາຜົນຜະລິດທີ່ສູງ.

**ລະບົບການຜະລິດທີ່ຮັບປະກັນ ຫຼື ໄດ້ຮັບການຮັບຮອງ– ເປັນກໍລະນີ 1**

ລະບົບການຜະລິດທີ່ຮັບປະກັນ ຫຼື ໄດ້ຮັບການຮັບຮອງໂດຍມີຝ່າຍທີ່ 3 ກວດສອບ ແລະ ຢັ້ງຢືນ ເຊັ່ນວ່າການຄ້າແບບຍຸດຕິທຳ ຫຼື ການຜະລິດແບບຊີວະພາບ,ເພື່ອຮັບປະກັນເງື່ອນໄຂທີ່ເປັນເອກະລັກຂອງຜູ້ຊື້. ລະບົບການຜະລິດແບບນີ້ເພີ່ມມູນຄ່າຜະລິດຕະພັນຊຶ່ງຜູ້ຊື້ຈຳນວນໜຶ່ງຈ່າຍໃນລາຄາທີ່ສູງກວ່າ. ລາຄາທີ່ສູງກວ່າສາມາດສ້າງລາຍຮັບທີ່ສູງຂຶ້ນຊຶ່ງເປັນສິ່ງກະຕຸກຊຸກຍູ້ສຳລັບຊາວກະສິກອນທີ່ຈະປະຕິບັດຕາມຂໍ້ຕົກລົງການຜະລິດ.

## 9.2. ປັດໃຈພາຍນອກ

ປັດໃຈພາຍນອກແມ່ນເງື່ອນໄຂທາງດ້ານສັງຄົມ ຫຼື ເສດຖະກິດຊຶ່ງການຜະລິດແບບມີຂໍ້ຕົກລົງຂຶ້ນກັບ. ມັນອາດຈະເປັນສະພາບເງື່ອນໄຂທີ່ມີກ່ອນແລ້ວທີ່ການຜະລິດແບບມີຂໍ້ຕົກລົງບໍ່ໄດ້ຂຶ້ນກັບ ຫຼື ອາດຈະເປັນການຜະລິດທີ່ເປັນສ່ວນໜຶ່ງຂອງຍຸດທະສາດເພື່ອສ້າງສະພາບແວດລ້ອມສຳລັບການຜະລິດເປັນສິນຄ້າ.ແຕ່ສິ່ງເຫຼົ່ານັ້ນມີຜົນສະທ້ອນຕໍ່ຄຸນຄ່າ, ວັດທະນະທຳ, ມູມມອງ, ການປະພຶດ ແລະ ປະສົບການ. ສິ່ງເຫຼົ່ານີ້ເປັນປັດໃຈພາຍນອກການຜະລິດແບບມີຂໍ້ຕົກລົງແຕ່ວ່າສາມາດມີອິດທິພົນຕໍ່ການຈັດຕັ້ງປະຕິບັດ ແລະ ຄວາມສຳພັນໃນການຜະລິດແບບມີ ຂໍ້ຕົກລົງ.

**ໃຫ້ຄຸນຄ່າແກ່ການສ້າງຄວາມສຳພັນ – ກໍລະນີ 1, 2, 3, 5, 10**

ຜູ້ລົງທຶນທີ່ໃຫ້ຄຸນຄ່າຕໍ່ການສ້າງຄວາມສຳພັນກັບຊາວກະສິກອນພຽງພໍທີ່ຈະລົງທຶນທາງດ້ານເວລາໃນການພັດທະນາຄວາມສຳພັນແມ່ນການສ້າງພື້ນຖານຄວາມເຂົ້າໃຈ, ຄວາມໄວ້ວາງໃຈ ແລະ ຄວາມເປັນມິດກັບຊາວກະສິກອນ. ການສ້າງຄວາມສຳພັນຢ່າງເທົ່າທຽມກັນເພື່ອຕ້ານກັບຄວາມເຂົ້າໃຈຜິດ ແລະ ບັນຫາທີ່ບໍ່ຄາດຄິດໄວ້. ຊາວກະສິກອນກໍ່ເຊັ່ນກັນຕ້ອງໄດ້ສະຫຼະເວລາທີ່ຈະຮັບຟັງ, ປຶກສາຫາລື ແລະ ຮຽນຮູ້ຈາກ ແລະ ກ່ຽວກັບຜູ້ລົງທຶນ. ເຖິງແນວໃດກໍ່ຕາມຜູ້ລົງທຶນຕ້ອງໄດ້ພະຍາຍາມຫຼາຍຂຶ້ນໃນການສ້າງຄວາມສຳພັນເພື່ອສ້າງຄວາມໝັ້ນໃຈສຳລັບຊາວກະສິກອນທີ່ຈະຮັບປະກັນທີ່ດິນ ແລະ ແຮງງານ ແລະ ຜົນຕອບແທນກໍ່ຄືລາຍຮັບທີ່ຕາມມາໃນຕໍ່ໜ້າ.

**ຄວາມສິນໃຈທາງດ້ານສັງຄົມ ແລະ ຄວາມເຊື່ອຖື –ກໍລະນີ 4, 7, 10**

ຊາວກະສິກອນ ແລະ ຜູ້ລົງທຶນ ຜູ້ທີ່ຮູ້ຊຶ່ງກັນ ແລະ ກັນ, ຜ່ານຄອບຄົວ ຫຼື ສາຍພົວພັນໃນຊຸມຊົນ ຫຼື ສັງຄົມສາມາດແລກປ່ຽນຄວາມສິນໃຈ ແລະ ໃຫ້ຄຸນຄ່າກ່ຽວກັບຄວາມເຊື່ອຖື ຫຼື ກຽດຊື່ສຽງຂອງເຂົາເພາະວ່າມັນເປັນຕົວຊີ້ບອກກ່ຽວກັບຄວາມສ່ຽງ ແລະ ຮູບແບບທີ່ເຂົາເຈົ້າຈະພົວພັນ ຫຼື ເຮັດວຽກຮ່ວມກັນ. ສະນັ້ນ ເຂົາເຈົ້າສາມາດມີສິ່ງກະຕຸກຊຸກຍູ້ທີ່ດີເພື່ອປະຕິບັດຢ່າງຍຸດຕິທຳ ແລະ ຕາມທີ່ໄດ້ຕົກລົງເພາະວ່າຖ້າບໍ່ດັ່ງນັ້ນອາດມີຜົນກະທົບທາງດ້ານສັງຄົມ ແລະ ການເງິນ . ໃນສະພາບການແບບນັ້ນຝ່າຍຕ່າງໆອາດຈະເຮັດວຽກຫຼາຍຂຶ້ນເພື່ອແກ້ໄຂບັນຫາ. ແລະ ໃນນັ້ນຄວາມສຳພັນສາມາດຊ່ວຍແກ້ໄຂອຸປະສັກກ່ຽວກັບຊາຍແດນ,ສ້າງພື້ນຖານທາງດ້ານສັງຄົມ ແລະ ທຳມະຊາດຂອງເສດຖະກິດທ້ອງຖິ່ນ.

**ຜູ້ອຳນວຍຄວາມສະດວກ – ກໍລະນີ 1, 7, 8, 10**

ຊ່ອງຫວ່າງລະຫວ່າງຊາວກະສິກອນ ແລະ ຜູ້ລົງທຶນສາມາດແກ້ໄຂໄດ້ໂດຍຝ່າຍທີ 3 ຜູ້ທີ່ມີ ຫຼື ຮູ້ຂໍ້ມູນຂ່າວສານ, ພາສາເປັນຂົວຕໍ່ໃຫ້. ອົງການຈັດຕັ້ງ ຫຼື ບຸກຄົນຜູ້ທີ່ອຳນວຍຄວາມສະດວກການຈັດກຽມການຜະລິດແບບມີຂໍ້ຕົກລົງອາດຈະສະແຫວງຫາຜົນຕອບແທນທາງດ້ານສັງຄົມສຳລັບການລົງທຶນຂອງເຂົາເຈົ້າເຊັ່ນ: ກໍລະນີ 1, ການປູກກາເຟຢູ່ພາກໃຕ້ຂອງລາວ ຫຼື ວ່າຜົນຕອບແທນທາງດ້ານການເງິນຊຶ່ງມີຫຼາຍກໍລະນີໃນພາກເໜືອເຊັ່ນວ່າ: ໄທລື້ - ພໍ່ຄ້າຄົນກາງ ຈາກ ສປ ຈີນ ຜູ້ທີ່ເຊື່ອມໂຍງຜູ້ລົງທຶນທີ່ມາຈາກເມືອງຮານ ສປ ຈີນ ກັບໄທລື້ໃນ ສປປ ລາວ ຊຶ່ງເປັນຜູ້ຕອບສະໜອງທີ່ດິນ ແລະ ແຮງງານ.

### ຄວາມສົມດູນລະຫວ່າງການຜະລິດ ແລະ ການບໍລິໂພກ – ເປັນກໍລະນີ 1, 7, 10

ຄວາມແຕກຕ່າງຂອງສະພາບອາກາດ ແລະ ສິ່ງແວດລ້ອມລະຫວ່າງຊາວກະສິກອນ ແລະ ຜູ້ບໍລິໂພກອາໃສຢູ່ເປັນທ່າແຮງ ແລະ ກາລະໂອກາດສຳລັບທຸລະກິດ. ໃນສະພາບການດັ່ງກ່າວນີ້ຊາວກະສິກອນມີທ່າໄດ້ປຽບຫຼາຍຢ່າງ; ຜູ້ບໍລິໂພກກໍ່ມີຄວາມຕ້ອງການຫຼາຍແຕ່ອາດຈະເຮັດກຳລັງຊື້ຂອງເຂົາເຈົ້າຫຼຸດລົງເພາະວ່າຢ່າງໜ້ອຍໃນຊ່ວງເວລາໃດໜຶ່ງເຂົາເຈົ້າບໍ່ອາດສາມາດຜະລິດສິ່ງທີ່ຕ້ອງການໃນທ້ອງຖິ່ນໄດ້. ເຖິງແນວໃດກໍ່ຕາມ, ການເຊື່ອມໂຍງຜູ້ລົງທຶນ, ຜູ້ທີ່ເປັນຕົວແທນຂອງຜູ້ບໍລິໂພກ, ກັບຊາວກະສິກອນອາດຈະຕ້ອງການຜູ້ອຳນວຍຄວາມສະດວກເພື່ອຊ່ວຍເອົາຊະນະຄວາມລະເລີຍ, ການຮັບຮູ້ ຫຼື ມີຂໍ້ມູນຂ່າວສານທີ່ແຕກຕ່າງກັນ ຫຼື ບໍ່ສົມສ່ວນ, ໄລຍະທາງ ແລະ ພາສາ.

### ຂໍ້ມູນຂ່າວສານຕະຫຼາດ – ກໍລະນີ 1, 5, 7, 9, 10

ການເຂົ້າເຖິງຂໍ້ມູນຂ່າວສານກ່ຽວກັບລາຄາ ແລະ ຂໍ້ມູນຂ່າວສານອື່ນໆທີ່ພົວພັນກັບຄວາມຕ້ອງການ ແລະ ກາລະໂອກາດໃນລະດັບຂົງເຂດສາມາດຊ່ວຍຊາວກະສິກອນໃນການຕັດສິນວ່າສິ່ງທີ່ຜູ້ລົງທຶນສະເໜີ ຫຼື ສະໜອງໃຫ້ສົມເຫດສົມຜົນຫຼືບໍ່ ແລະ ເຈລະຈາສຳລັບເງື່ອນໄຂທີ່ດີກວ່າ. ບ່ອນທີ່ຊາວກະສິກອນເຮັດການຜະລິດກັບຜູ້ລົງທຶນທີ່ມາຈາກຕະຫຼາດທີ່ຢູ່ຫ່າງໄກເຂົາເຈົ້າອາດຈະໄດ້ຜົນປະໂຫຍດຈາກຂໍ້ມູນຂ່າວສານກ່ຽວກັບລາຄາທີ່ຈ່າຍໂດຍຜູ້ບໍລິໂພກໃນເຂດນັ້ນໆ. ຂໍ້ມູນຂ່າວສານຕະຫຼາດທີ່ແມ່ນຍຳ ແລະ ທັນເວລາສາມາດຫຼຸດຜ່ອນຄວາມແຕກຕ່າງທາງດ້ານອຳນາດລະຫວ່າງຊາວກະສິກອນ ແລະ ຜູ້ລົງທຶນ.

### ເຮັດໃຫ້ດູນດ່ຽງລະຫວ່າງພໍ່ຄ້າ ແລະ ຜູ້ລົງທຶນ – ກໍລະນີ 1,11

ຊາວກະສິກອນທີ່ແບ່ງຂາຍຜົນຜະລິດໃຫ້ຜູ້ລົງທຶນ ແລະ ພໍ່ຄ້າຊ່ວຍຮັກສາການແຂ່ງຂັນ ແລະ ຈຳກັດກາລະໂອກາດທີ່ຈະມີການຜູກຂາດ. ການຂາຍຜົນຜະລິດໃຫ້ຜູ້ລົງທຶນ ແລະ ພໍ່ຄ້າຍັງເປັນການຄ້ຳປະກັນເພາະວ່າຫຼາຍຜູ້ຊື້ເທົ່າໃດກໍ່ຈະຫຼຸດການເພິ່ງພາອາໃສ ແລະ ຄວາມສ່ຽງຈຳນວນໃດໜຶ່ງ. ຊາວກະສິກອນຍັງເຮັດໃຫ້ດູນດ່ຽງການແບ່ງພື້ນທີ່ເພື່ອຜະລິດພາຍໃຕ້ຂໍ້ຕົກລົງ ແລະ ຕະຫຼາດທົ່ວໄປ ຫຼື ການຜະລິດ ຫຼື ຂາຍແບບລັບໆໃຫ້ພໍ່ຄ້າອື່ນໆ.

### ການຜະລິດແບບມີຂໍ້ຕົກລົງເປັນເຄື່ອງມືສຳລັບການສ້າງກາລະໂອກາດທຸລະກິດ – ກໍລະນີ 9, 10

ຊາວກະສິກອນ ແລະ ຜູ້ລົງທຶນຊີ້ໃຫ້ເຫັນວ່າການຜະລິດຂໍ້ຕົກລົງແມ່ນການຈັດກຸ່ມໜຶ່ງຊຶ່ງຊ່ວຍປັບປຸງເງື່ອນໄຂສຳລັບການເຮັດທຸລະກິດຂອງເຂົາເຈົ້າເຊັ່ນວ່າ: ການຮັບປະກັນການຈັດຕັ້ງປະຕິບັດ ແລະ ໄດ້ຮັບການຊ່ວຍເຫຼືອຈາກພາກລັດ.

### ຜູ້ລົງທຶນໃຫ້ຄວາມສຳຄັນຕໍ່ຄຸນນະພາບເໜືອກວ່າລາຄາ – ເປັນກໍລະນີ 1

ເມື່ອຄຸນນະພາບເປັນສິ່ງສຳຄັນສຳລັບຜູ້ລົງທຶນເຂົາເຈົ້າອາດຈະສາມາດ ແລະ ຈິງໃຈທີ່ຈະຈ່າຍໃຫ້ລາຄາທີ່ສູງກວ່າລາຄາໃນຕະຫຼາດຖ້າຊາວກະສິກອນສາມາດຈັດຕັ້ງປະຕິບັດຕາມຄຸນນະພາບ ຫຼື ມາດຖານທີ່ກຳນົດໄວ້. ຜູ້ລົງທຶນຈະຕ້ອງໄດ້ຖ່າຍທອດຄວາມຮູ້ ແລະ ເທັກໂນໂລຊີໃນບາງກໍລະນີ. ການຈ່າຍໃນລາຄາສູງກວ່າເປັນການໃຫ້ສິ່ງກະຕຸກຊຸກຍູ້ສຳລັບຊາວກະສິກອນທີ່ຈະທຳການຜະລິດຂໍ້ຕົກລົງຕາມເງື່ອນໄຂ ແລະ ສູນຄວາມພະຍາຍາມຕໍ່ຜູ້ລົງທຶນ, ເຖິງແມ່ນຜູ້ລົງທຶນເປັນຜູ້ຜູກຂາດ.

### ການຄັດເລືອກຜູ້ເຂົ້າຮ່ວມ – ເປັນກໍລະນີ 2

ຜູ້ລົງທຶນອາດໄດ້ຮັບການຊ່ວຍເຫຼືອຈາກເຈົ້າໜ້າທີ່ທ້ອງຖິ່ນ ຫຼື ພໍ່ຄ້າຄົນກາງ ແລະ ຕົວແທນເພື່ອຄັດເລືອກຊາວກະສິກອນທີ່ຈະເຂົ້າຮ່ວມໃນການຜະລິດແບບມີຂໍ້ຕົກລົງດ້ວຍການກວດສອບຄວາມໜ້າເຊື່ອຖື ຫຼື ຊື່ສຽງຂອງຊາວກະສິກອນ.

### ຜູ້ລົງທຶນເປັນຜູ້ສະໜອງປັດໃຈການຜະລິດ ແລະ ເກັບຊື້ທີ່ໜ້າເຊື່ອຖື – ກໍລະນີ 3, 4

ການສະໜອງປັດໃຈການຜະລິດ ແລະ ສະໜັບສະໜູນການຜະລິດອື່ນໆ ແລະ ການເກັບຊື້ຜົນຜະລິດຕາມເວລາທີ່ກຳນົດໄວ້ໃນຂໍ້ຕົກລົງການຜະລິດສ້າງຄວາມໝັ້ນໃຈ ແລະ ສະໜັບສະໜູນການພັດທະນາຄວາມສຳພັນຊາວກະສິກອນ.

### ຫ້ອງການກະສິກຳ-ປ່າໄມ້ເມືອງສະໜອງຂໍ້ມູນຂ່າວສານການຜະລິດທ້ອງຖິ່ນ – ເປັນກໍລະນີ 6

ຫ້ອງການກະສິກຳ-ປ່າໄມ້ເມືອງສາມາດສະໜອງຂໍ້ມູນຂ່າວສານກ່ຽວກັບຄຸນນະພາບຂອງດິນໃນທ້ອງຖິ່ນ ແລະ ຄວາມເໝາະສົມສຳລັບພືດຊະນິດຕ່າງໆເພື່ອເຮັດໃຫ້ຜູ້ລົງທຶນສາມາດເຮັດປະເມີນທີ່ໃກ້ກັບຄວາມເປັນຈິງ

ຂອງທ່າແຮງການຜະລິດ. ຂໍ້ມູນຂ່າວສານຕ້ອງຖືກຕ້ອງ ຫຼື ຊັດເຈນ, ລະອຽດ ແລະ ໃໝ່ເພື່ອໃຫ້ຫ້ອງການກະສິກຳ-ປ່າໄມ້ເມືອງຈະໄດ້ສະໜອງຂໍ້ມູນທີ່ເປັນປະໂຫຍດໃຫ້ຜູ້ລົງທຶນ ແລະ ຮັກສາ ຫຼື ເສີມຄວາມເຊື່ອໝັ້ນໃຫ້ຜູ້ລົງທຶນ

**ຫ້ອງການກະສິກຳ-ປ່າໄມ້ເມືອງອຳນວຍຄວາມສະດວກການເຈລະຈາລະຫວ່າງຜູ້ລົງທຶນ ແລະ ຊາວກະສິກອນ – ເປັນກໍລະນີ 6**

ບາງຄັ້ງຫ້ອງການກະສິກຳ-ປ່າໄມ້ເມືອງສາມາດອຳນວຍຄວາມສະດວກການເຈລະຈາລະຫວ່າງຜູ້ລົງທຶນ ແລະ ຊາວກະສິກອນ, ໂດຍສະເພາະຜູ້ລົງທຶນທີ່ບໍ່ມີເຄືອຂ່າຍທາງດ້ານສັງຄົມ ຫຼື ຜູ້ທີ່ຮູ້ຈັກໃນຊຸມຊົນຂອງຊາວກະສິກອນ.

## 9.3. ມາດຕະການບັງຄັບ

### ແນວທາງປະຕິບັດ

ປົກກະຕິແລ້ວແນວທາງປະຕິບັດມາດຕະການແມ່ນອີງໃສ່ກົນໄກທາງດ້ານເສດຖະກິດຊຶ່ງຊ່ວຍການຕໍ່ລອງລະຫວ່າງຊາວກະສິກອນ ແລະ ຜູ້ລົງທຶນເປັນທີ່ພໍໃຈ, ສົມເຫດສົມຜົນສຳລັບສອງຝ່າຍທີ່ຈະຈັດຕັ້ງປະຕິບັດການຜະລິດແບບມີຂໍ້ຕົກລົງ ແລະ ລົງທຶນທາງດ້ານເວລາ ແລະ ຄວາມພະຍາຍາມທີ່ຈະແກ້ໄຂບັນຫາຕ່າງໆ.

ກົນໄກທາງດ້ານສັງຄົມກໍ່ແມ່ນແນວທາງການປະຕິບັດມາດຕະການໜຶ່ງອີກ. ການພົວພັນສັງຄົມ, ຄອບຄົວ ຫຼື ໝູ່ເພື່ອນຊຶ່ງສ້າງຄວາມໝັ້ນໃຈ ແລະ ສະພາບແວດລ້ອມທີ່ເອື້ອອຳນວຍສຳລັບການຈັດຕັ້ງການຜະລິດແບບມີຂໍ້ຕົກລົງລະຫວ່າງຊາວກະສິກອນ ແລະ ຜູ້ລົງທຶນ (ກໍລະນີ 4, 7 ແລະ 10). ຄວາມໜ້າເຊື່ອຖື ແລະ ຄວາມສ່ຽງແມ່ນອົງປະກອບສຳລັບມາດຕະການທາງດ້ານສັງຄົມ (ເປັນກໍລະນີ 4). ບ່ອນໃດແນວທາງປະຕິບັດທາງດ້ານສັງຄົມທີ່ກ່າວມາບໍ່ພຽງພໍ, ຕົວຢ່າງ: ຜູ້ລົງທຶນທີ່ບໍ່ເປັນທີ່ຮູ້ຈັກສະນັ້ນອາດບໍ່ໄດ້ຮັບຄວາມເຊື່ອຖື, ຊາວກະສິກອນໃຫ້ຫ້ອງການກະສິກຳ-ປ່າໄມ້ເມືອງເປັນຕົວກາງປະສານລະຫວ່າງຊາວກະສິກອນ ແລະ ຜູ້ລົງທຶນ (ເປັນກໍລະນີ 9).

ມາດຕະການບັງຄັບທາງດ້ານການບໍລິຫານປະກົດໃນຫຼາຍກໍລະນີໃນການຜະລິດແບບມີຂໍ້ຕົກລົງແຕ່ປະກົດ ມີ2 ລັກສະນະຄື: 1) ສາມາດບັນທຶກໄດ້ ແລະ ເປັນຮູບປະທຳ ເຊັ່ນວ່າ: ຜູ້ລົງທຶນວາງເງິນມັດຈຳໄວ້ກັບຫ້ອງການກະສິກຳ-ປ່າໄມ້ເມືອງ (ກໍລະນີ 6 ແລະ 10). 2) ເປັນສິ່ງທີ່ຄາດຫວັງໄວ້ ແລະ ເປັນນາມມະທຳ, ເຊັ່ນວ່າ: ການເພິ່ງພາອາໃສຫ້ອງການກະສິກຳ-ປ່າໄມ້ເມືອງເປັນຜູ້ໄກ່ເກ່ຍ ແລະ ແກ້ໄຂບັນຫາ (ກໍລະນີ 8 ແລະ 12).

ຊາວກະສິກອນ ຫຼື ຜູ້ລົງທຶນບໍ່ໄດ້ຊີ້ໃຫ້ເຫັນແນວທາງປະຕິບັດໃນທາງກົດໝາຍໃນກໍລະນີໃດໆ.

### ປະສິດທິພາບ

ການປະເມີນປະສິດທິພາບຂອງແຕ່ລະກໍລະນີແມ່ນນອກເໜືອກອບການສຶກສາໃນຄັ້ງນີ້. ເຖິງຢ່າງນັ້ນກໍ່ຕາມ ,ການພິຈາລະນາຫຍໍ້ໆແນະນຳວ່າແມ່ນຫຍັງອາດຈະມີປະສິດທິພາບ ແລະ ເໝາະສົມສຳລັບສະພາບແວດລ້ອມນັ້ນໆ. ປະກົດວ່າ ເງື່ອນໄຂບັງຄັບທາງດ້ານເສດຖະກິດ ແລະ ທາງດ້ານສັງຄົມເປັນແນວທາງທີ່ງ່າຍດາຍ ແລະ ອາດຈະມີປະສິດທິພາບທີ່ສຸດ. ຝ່າຍຕ່າງໆທີ່ຮູ້ຈັກຊຶ່ງກັນແລະກັນ ແລະ ໃຫ້ຄວາມສຳຄັນກ່ຽວກັບກຽດຊື່ສຽງໃນຊຸມຊົນ ຫຼື ສັງຄົມອາດຈະຈູງໃຈສຳລັບການເຈລະຈາຕໍ່ລອງຊຶ່ງທັງສອງຝ່າຍຮັບຮູ້ຜົນປະໂຫຍດຂອງຕົນ ແລະ ຄົນອື່ນ. ແຕ່ລະຝ່າຍຕ້ອງມີຄວາມຄາດຫວັງຢ່າງຊັດເຈນທີ່ຈະໄດ້ຮັບຜົນປະໂຫຍດທາງດ້ານເສດຖະກິດທີ່ສົມເຫດສົມຜົນເພື່ອທີ່ຈະຮັບຜິດຊອບຈັດຕັ້ງປະຕິບັດຕາມທີ່ໄດ້ຕົກລົງໃນສັນຍາ ແລະ ຊອກຫາວິທີທາງແກ້ໄຂບັນຫາຢ່າງສັນຕິໃນກໍລະນີທີ່ມີບັນຫາເກີດຂຶ້ນ. ການແກ້ໄຂບັນຫາຢ່າງສັນຕິວິທີຈະເປັນຜົນດີຕໍ່ຊື່ສຽງ ແລະ ສາຍສຳພັນກັບສັງຄົມ.

ແນວທາງປະຕິບັດທາງດ້ານການບໍລິຫານ ແລະ ໃນທາງກົດໝາຍແມ່ນກົນໄກໜຶ່ງ. ຈຸດອ່ອນໃນຂະບວນການ,ໂຄງສ້າງທີ່ຍັງບໍ່ສົມບູນ ແລະ ຄວາມອາດສາມາດອາດເຮັດໃຫ້ມີຄວາມສ່ຽງທີ່ຈະພິດພາດ, ການຂາດຄວາມສາມາດ ແລະ ລຳອຽງ ຫຼື ບໍ່ເປັນໄປຕາມເປົ້າໝາຍຂອງນະໂຍບາຍ ແລະ ການຕານການສໍ້ລາດບັງຫຼວງ. ນອກຈາກປະເດັນກ່ຽວກັບການເຂົ້າເຖິງ, ຢ່າງນ້ອຍຝ່າຍຕ່າງໆສະແຫວງຫາການແກ້ໄຂດ້ວຍແນວທາງທາງດ້ານການບໍລິຫານ ຫຼື ໃນທາງກົດໝາຍອາດຈະຕ້ອງມີການແກ້ໄຂຂໍ້ຂັດແຍ່ງຢ່າງເປັນລະບົບ ແລະ ດູນດ່ຽງ. ຖ້ານີ້ເປັນການ ຕັດສິນ ແລະ ຫຼືສ່ວນໃດສ່ວນໜຶ່ງ ຫຼື ບໍ່ຍຸດຕິທຳຜົນຮັບທາງລົບຕໍ່ການຮ່ວມມືອາດຈະມີຜົນຍາວກວ່າການຂັດແຍ່ງ. ໃນການນຳໃຊ້ແນວທາງປະຕິບັດນັ້ນ ຫຼື ໃຫ້ຄວາມສຳຄັນການຮັກສາການຜະລິດແບບມີຂໍ້ຕົກລົງອາດຈະຈຳກັດສຳລັບມາດຕະການທີ່ງ່າຍກວ່າເຊັ່ນວ່າ: ເງິນມັດຈຳສຳລັບການລົງທຶນ, ໃນເວລາທີ່ຄວາມອາດສາມາດກຳລັງໄດ້ຮັບການພັດທະນາເພື່ອທີ່ຈະສະໜອງການບໍລິການທີ່ສັບສົນຢ່າງມີປະສິດທິພາບ.




ບໍລິສັດລົງທຶນຕ່າງປະເທດສົ່ງເສີມການຜະລິດກາເຟດ້ວຍຮູບແບບມີຂໍ້ຕົກລົງຢູ່ແຂວງຜົ້ງສາລີ

## 10. ການອິໃຈ ຫຼື ແລກປ່ຽນຄວາມຄິດເຫັນ?

### 10.1. ຊັບສິນ

#### ເງິນທຶນ ແລະ ສິນເຊື່ອ – ກໍລະນີ 1, 4, 11

ຊາວກະສິກອນບໍ່ມີທຶນພຽງພໍທີ່ຈະລົງທຶນໃນການຜະລິດດ້ວຍຕົນເອງ. ປົກກະຕິແລ້ວເຂົາເຈົ້າຂາດການເຂົ້າເຖິງສິນເຊື່ອການຄ້າທີ່ມີເງື່ອນໄຂສົມເຫດສົມຜົນ. ທະນາຄານການຄ້າ ແລະ ອື່ນໆຍັງບໍ່ທັນໄດ້ໃຫ້ການບໍລິການທົ່ວເຖິງຫຼາຍບ້ານ. ກົນໄກການເງິນໃນຊຸມຊົນເຊັ່ນວ່າ: ສິນເຊື່ອຂະໜາດນ້ອຍ, ທຶນໝູນວຽນ, ສິນເຊື່ອລວມໝູ່, ແລະ ກຸ່ມທ້ອນເງິນບໍ່ປະກົດໃນບ້ານທີ່ໄດ້ສຶກສາ, ກຳລັງພັດທະນາ, ຫຼື ບໍ່ສາມາດເຂົ້າເຖິງໃນຫຼາຍຊຸມຊົນ. ສະນັ້ນ, ປົກກະຕິແລ້ວຊາວກະສິກອນຈະຫັນເຂົ້າຫາພໍ່ຄ້າສຳລັບສິນເຊື່ອຊຶ່ງມີຜົນເກັບກ່ຽວ ຫຼື ສິດນຳໃຊ້ທີ່ດິນຄໍ້າປະກັນ. ການຈ່າຍຄືນປະກົດວ່າຕ້ອງໄດ້ປະຕິບັດຕາມສິນເຊື່ອທີ່ໄດ້ຮັບ, ແລະ ບາງຄັ້ງມາດຕະການທາງດ້ານບໍລິຫານ, ທາງກົດໝາຍຖືກນຳໃຊ້ເພື່ອຍຶດຄອງທີ່ດິນ. ມັນເປັນເລື່ອງປົກກະຕິສຳລັບຜູ້ລົງທຶນທີ່ມີການສະໜອງສິນເຊື່ອລ່ວງໜ້າ, ບໍ່ວ່າຈະເປັນເງິນສົດ ຫຼື ປັດໃຈການຜະລິດ, ຄໍ້າປະກັນກັບຜົນຜະລິດທີ່ຄາດວ່າຈະໄດ້ຮັບໃນລະດູການ, ຫຼື ໃນກໍລະນີທີ່ຜົນເກັບກ່ຽວຫາກບໍ່ໄດ້ດີການຈ່າຍຄືນຈະປະຕິບັດໃນລະດູການຕໍ່ໄປ.

ຊາວກະສິກອນກ່າວວ່າການຂາດທຶນຮອນເປັນອຸປະສັກສຳລັບການລົງທຶນການຜະລິດດ້ວຍຕົນເອງທີ່ຈະຂາຍຜົນຜະລິດສູ່ຕະຫຼາດເປີດ. ນີ້ສະແດງໃຫ້ເຫັນວ່າມັນມີຄວາມຕ້ອງການສຳລັບສິນເຊື່ອ. ປະຈຸບັນສິນເຊື່ອແມ່ນສະໜອງຜ່ານຄວາມສຳພັນກັບພໍ່ຄ້າ ຫຼື ການຜະລິດແບບມີຂໍ້ຕົກລົງກັບຜູ້ລົງທຶນຫຼາຍກໍລະນີ. ການເຂົ້າເຖິງສິນເຊື່ອແຫຼ່ງອື່ນອາດຈະເຮັດໃຫ້ແຕກແຍກຄວາມສຳພັນນັ້ນ. ມັນອາດຈະເປັນຜົນປະໂຫຍດຖ້າການຜະລິດແບບມີຂໍ້ຕົກລົງໃນປະຈຸບັນສະໜອງສິນເຊື່ອດ້ວຍມູນຄ່າທີ່ສູງ. ເຖິງແນວໃດກໍ່ຕາມ,ການສະໜອງສິນເຊື້ອຜ່ານການຜະລິດແບບມີຂໍ້ຕົກລົງບໍ່ແມ່ນບໍ່ມີດອກເບ້ຍສະເໝີໄປ ແລະ ສະນັ້ນການແຂ່ງຂັນສູງ ແລະ ການຊ່ວຍເຫຼືອທີ່ມີຄຸນຄ່າ ແລະ ມີອຳນາດເປັນສິ່ງກະຕຸກຊຸກຍູ້ສຳລັບຊາວກະສິກອນ. ໃນທາງກົງກັນຂ້າມສະໜອງສິນເຊື້ອຂອງພໍ່ຄ້າອາດຈະມີການເກັບຄ່າບໍລິການ ຫຼື ດອກເບ້ຍ, ເຖິງແມ່ນວ່າຊາວກະສິກອນຈະເຫັນວ່າມັນບໍ່ຍຸດຕິທຳສຳລັບການເກັບດອກເບ້ຍ ຫຼື ຫັກລາຄາຂອງຜົນຜະລິດ. ປະຈຸບັນສິນເຊື່ອພາຍໃຕ້ການຜະລິດແບບມີຂໍ້ຕົກລົງອາດຈະຊ່ວຍສະໜັບສະໜູນຈຸດຢືນຂອງຜູ້ຊື້ຊຶ່ງກະຕຸ້ນໃຫ້ມີການແຂ່ງຂັນ, ສັນນິຖານວ່າເຂົາເຈົ້າບໍ່ແມ່ນຜູ້ຜູກຂາດ,ແຕ່ສະໜັບສະໜູນລາຄາ ແລະ ໃຫ້ເງື່ອນໄຂທີ່ດີກວ່າ. ນອກຈາກນັ້ນ, ສິນເຊື້ອທີ່ບໍ່ມີດອກເບ້ຍທີ່ສະໜອງໃຫ້ຊາວກະສິກອນພາຍໃຕ້ການຜະລິດແບບມີຂໍ້ຕົກລົງເຮັດໜ້າທີ່ເປັນການຈ່າຍລ່ວງໜ້າ ແລະ ຮັບປະກັນການກະທຳຜິດສັນຍາຂອງຜູ້ລົງທຶນ.

ສະນັ້ນມັນບໍ່ຈຳເປັນທີ່ຈະຕ້ອງໄປຕາມການສະໜອງສິນເຊື້ອຂອງຜູ້ລົງທຶນ, ແລະ ພໍ່ຄ້າຊຶ່ງມັກຈະສ້າງຜົນລົບຢູ່ສະເໝີ. ທຶນ ແລະ ສິນເຊື່ອທີ່ມີຄວາມໝາຍສຳລັບການຈັດຕັ້ງ, ທາງເລືອກ ແລະ ກາລະໂອກາດສຳລັບຊາວກະສິກອນ. ມັນຍັງມີຄວາມໝາຍສຳລັບຄວາມເປັນອິດສະຫຼະ ແລະ ຄວາມຮັບປະກັນສຳລັບທີ່ດິນ. ຊາວກະສິກອນກຳລັງປະເຊີນກັບບັນຫາກ່ຽວກັບທຶນ ແລະ ສິນເຊື່ອຊຶ່ງຂ້ອນຂ້າງສັບສົນ ແລະ ອາດຈະຍັງບໍ່ທັນປະກົດມີ ຫຼື ມີທາງແກ້ໄຂແບບງ່າຍດາຍເທື່ອ.

ບ່ອນໃດທີ່ການສະໜອງສິນເຊື່ອປະຕິບັດແບບເປີດກວ້າງດັ່ງທີ່ກ່າວໃນປັດໃຈພາຍໃນທີ່ພາໃຫ້ເກີດຜົນສຳເລັດໃນການຜະລິດແບບມີຂໍ້ຕົກລົງ ( ຂໍ້ 9.1), ມັນຂຶ້ນກັບລັກສະນະຂອງການຈ່າຍລ່ວງໜ້າ. ສະນັ້ນຜູ້ລົງທຶນອາດຈະມີຄວາມສົນໃຈຫຼາຍກວ່າທີ່ຈະປະຕິບັດຂໍ້ຕົກລົງໃຫ້ສຳເລັດ. ໃນທາງດຽວກັນຖ້າຜູ້ລົງທຶນພົວພັນກັບຊຸມຊົນຢ່າງກວ້າງຂວາງຜ່ານການຂະຫຍາຍສິນເຊື້ອ, ປັດໃຈການຜະລິດ ຫຼື ການເລືອກໃຫ້ສິນເຊື່ອລ່ວງໜ້ານັ້ນໝາຍວ່າຜູ້ລົງທຶນໄດ້ຮ່ວມສ່ຽງກັບຊາວກະສິກອນໃນລະດັບໃດໜຶ່ງ ແລະ ມີຫຼາຍເຫດຜົນທີ່ຈະສືບຕໍ່ສະໜັບສະໜູນການຜະລິດໃຫ້ປະສົບຜົນສຳເລັດຈົນກວ່າຈະຮັບປະກັນວ່າຊາວກະສິກອນສາມາດຈ່າຍສິນເຊື້ອຄືນໄດ້.

ສິນເຊື່ອລ່ວງໜ້າສາມາດເຮັດໃຫ້ຜູ້ລົງທຶນ ແລະ ພໍ່ຄ້າຢູ່ໃນຈຸດໄດ້ປຽບພວກເຂົາເຈົ້າຄວນຈະມີຍຸດທະສາດໃນການຍຶດຄອງທີ່ດິນເພາະວ່າບ່ອນທີ່ຊາວກະສິກອນພົບຂໍ້ຫຍຸ້ງຍາກທີ່ຈະຈ່າຍຄືນເປັນເງິນສົດ, ການໂອນທີ່ດິນກໍ່ອາດຈະເປັນອີກທາງເລືອກໜຶ່ງ. ສີ (2008) ໄດ້ບັນທຶກສະພາບການທີ່ຄ້າຍຄືກັນກັບກໍລະນີຂອງຢາງພາລາໃນແຂວງຫຼວງນໍ້າທາ.

#### ການຄວບຄຸມ ແລະ ມູນຄ່າຂອງ ທີ່ດິນ – ກໍລະນີ 2, 6

ສະພາບ ແລະ ເງື່ອນໄຂຂອງການຜະລິດແບບມີຂໍ້ຕົກລົງ ຫຼື ມູນຄ່າເງິນມັດຈຳການຜະລິດຊີ້ໃຫ້ເຫັນວ່າໃນເງື່ອນໄຂໃດໜຶ່ງມີຜູ້ລົງທຶນຈຳນວນໜຶ່ງເຫັນຄຸນຄ່າ

ຂອງດິນຫຼາຍກວ່າແຮງງານ. ນີ້ອາດຈະ ໃຫ້ເຫັນໃນກໍລະນີອື່ນໆຊຶ່ງທຸກສິ່ງມີຄວາມເທົ່າທຽມກັນ, ຜູ້ລົງທຶນຕ້ອງການທີ່ຈະເຂົ້າເຖິງທີ່ດິນໂດຍກົງ ແລະ ຈ່າຍໃຫ້ຊາວກະສິກອນ. ເຖິງແນວໃດກໍ່ຕາມ, ເພາະວ່າທີ່ດິນຍັງບໍ່ແມ່ນບູລິມະສິດທີ່ສອງຂອງຜູ້ລົງທຶນ, ຫຼື ທາງເລືອກເພາະສົມທັດລົງມາແມ່ນການເຂົ້າເຖິງທີ່ດິນຊົ່ວຄາວໂດຍທາງອ້ອມຄືຜ່ານຊາວກະສິກອນ ແລະ ການຜະລິດແບບມີຂໍ້ຕົກລົງ.

ເລິກໆແລ້ວນີ້ອາດຈະມີຄວາມຕັ້ງໃຈ ຫຼື ຈຸດປະສົງທີ່ແທ້ຈິງເພື່ອໃຫ້ໄດ້ມາກ່ຽວກັບການຄວບຄຸມທີ່ດິນໂດຍກົງ. ມີຄວາມເປັນໄປໄດ້ທີ່ຈະສະແຫວງຫາການຍຶດທີ່ດິນຍ້ອນຊາວກະສິກອນເປັນໜີ້ສຳລັບປັດໃຈການຜະລິດ ຫຼື ອ້າງເພື່ອການສຳປະທານທີ່ດິນ. ສະນັ້ນໃນບາງສະພາບການອາດຈະບໍ່ຈຳເປັນທີ່ຈະນັບວ່າມັນມີຄວາມເປັນໄປໄດ້ທີ່ວ່າຜູ້ລົງທຶນຖືກຈູງໃຈເພື່ອມີສ່ວນຮ່ວມໃນສັນຍາເປັນບາດກ້າວໄປສູ່ການຍຶດຄອງການຄວບຄຸມທີ່ດິນໂດຍກົງ. ມັນຍັງບໍ່ຈະແຈ້ງວ່າການຈັດຕັ້ງການຜະລິດແບບມີຂໍ້ຕົກລົງໃນປະຈຸບັນ; ນະໂຍບາຍ ແລະ ລະບຽບທີ່ກ່ຽວຂ້ອງຈະພຽງພໍທີ່ຈະຮັບປະກັນວ່າສິດນຳໃຊ້ທີ່ດິນຂອງຊາວກະສິກອນຈະບໍ່ຕົກຢູ່ໃນຄວາມສ່ຽງທີ່ບໍ່ສົມຄວນ .

### ຂໍ້ມູນຂ່າວສານ – ກໍລະນີ 5, 6, 7, 9

ຂໍ້ມູນຂ່າວສານກ່ຽວກັບຕະຫຼາດທີ່ສຳຄັນ ແລະ ໜ້າເຊື່ອຖືແມ່ນບໍ່ມີສະໜອງໃຫ້ໂດຍສະເພາະລາຄາປະຈຸບັນໃນຂົງເຂດຕ່າງໆ. ລວມທັງແນວໂນ້ມຂອງຄວາມຕ້ອງການເພື່ອຊ່ວຍໃນການຕັດສິນວ່າຄວນຈະຜະລິດຫຍັງ, ກັບໃຜ, ພາຍໃຕ້ເງື່ອນໄຂອັນໃດສຳລັບການຜະລິດແບບມີຂໍ້ຕົກລົງ. ຂໍ້ມູນຂ່າວສານຕະຫຼາດທີ່ຊາວກະສິກອນຕ້ອງການຕ້ອງແມ່ນມາຈາກປະເທດໃກ້ຄຽງ, ແລະ ຫຼື ຫຼາຍກວ່ານັ້ນ. ມີຫຼາຍປັດໃຈທີ່ກີດກັ້ນການເຂົ້າເຖິງຂໍ້ມູນຂ່າວສານລວມທັງເທັກໂນໂລຊີ, ພາສາ ແລະ ຍ້ອນຂາດຄວາມຮູ້. ເມື່ອຊາວກະສິກອນປະເຊີນຂໍ້ມູນຂ່າວສານທີ່ຄາດເຄື່ອນ ຫຼື ບໍ່ຖືກຕ້ອງເຂົາເຈົ້າອາດຕົກຢູ່ໃນຄວາມສ່ຽງ ຖ້າຫາກເຂົ້າຮ່ວມການຜະລິດແບບມີຂໍ້ຕົກລົງ ແລະ ບໍ່ສາມາດຄ້ວາເອົາຜົນຕອບແທນທີ່ສູງໄດ້ຊຶ່ງຜົນປະໂຫຍດນັ້ນອາດຕົກເປັນຂອງຄົນກາງຜູ້ທີ່ຮູ້ຂໍ້ມູນຂ່າວສານແທນ. ດັ່ງທີ່ກ່າວໃນຫົວຂໍ້ແນວໂນ້ມ, ກົນໄກຕະຫຼາດໄດ້ເຮັດໃຫ້ຫຼຸດຜ່ອນຊ່ອງຫວ່າງຂອງຂໍ້ມູນໃນລະດັບໜຶ່ງ ແລະ ມັນຍັງບໍ່ຊັດເຈນເທື່ອວ່າ ລັດຄວນເຂົ້າໄປແກ້ໄຂແນວໃດ,ແຕ່ອາດຈຳເປັນທີ່ຕ້ອງໄດ້ກຳຈັດອຸປະສັກສຳລັບພາກສ່ວນເອກະຊົນ ແລະ ການແຂ່ງຂັນຂໍ້ມູນຂ່າວສານຕະຫຼາດ.

## 10.2. ໂຄງສ້າງ

### ລາຄາຕະຫຼາດ – ກໍລະນີ 4, 11

ຊາວກະສິກອນຜູ້ໄດ້ເຮັດສັນຍາທີ່ກຳນົດລາຄາຕາມທ້ອງຕະຫຼາດສະແດງໃຫ້ເຫັນວ່າເຂົາເຈົ້າຕ້ອງການລົງທຶນການຜະລິດດ້ວຍຕົນເອງ ແລະ ຂາຍສູ່ຕະຫຼາດທົ່ວໄປ. ນີ້ຍັງເປັນປົດສະໜາຢູ່ທີ່ຫຼາຍຄົນຄິດວ່າລາຄາຕະຫຼາດແມ່ນຄຳຕອບສຳລັບບັນຫາທີ່ຊາວກະສິກອນລະເມີດການຜະລິດແບບມີຂໍ້ຕົກລົງທີ່ກຳນົດລາຄາຄົງທີ່ ແລະ ເພາະພໍ່ຄ້າສະເໜີໃຫ້ລາຄາຕະຫຼາດທີ່ດີກວ່າ.

ບາງພື້ນທີ່ລາຄາໃນຫຼາຍຕະຫຼາດອາດຊ່ວຍອະທິບາຍບັນຫານີ້ໄດ້. ຜູ້ລົງທຶນມັກສະເໜີລາຄາຕະຫຼາດໂດຍປາສະຈາກການກຳນົດວ່າຕະຫຼາດໃດທີ່ເປັນບ່ອນອີງ ຫຼື ມາດຖານ. ບັນຫານີ້ອາດຍັງຈະເກີດຂຶ້ນແມ່ນແຕ່ເມື່ອຜູ້ລົງທຶນ ແລະ ຊາວກະສິກອນຕົກລົງເຫັນດີເປັນເອກະພາບກ່ຽວກັບລາຄາອ້າງອີງ. ຕົວຢ່າງ, ຕະຫຼາດອາດຈະກຳນົດຢູ່ປະເທດໄທຊຶ່ງຊາວກະສິກອນຮູ້ ແລະ ສາມາດກວດສອບຢ່າງອິດສະຫຼະໄດ້. ລາຄາຕະຫຼາດຂອງຜູ້ລົງທຶນອາດຈະຕໍ່າກວ່າເພື່ອຮັບປະກັນຜົນກຳໄລເມື່ອລົບລາຍຈ່າຍສຳລັບການສະໜອງການບໍລິການ, ລວມທັງທຶນ, ເຊື່ອມໂຍງຊາວກະສິກອນກັບຕະຫຼາດ. ການເຂົ້າມາຊື້ຜົນເກັບກ່ຽວຂອງພໍ່ຄ້າ, ຈາກ ສປ ຈີນ ຫຼາຍກໍລະນີປະກົດວ່າພໍ່ຄ້າຄົນກາງອື່ນໆໂທລະສັບຖາມຊາວກະສິກອນວ່າເຂົາເຈົ້າສາມາດຂາຍຜົນຜະລິດໃຫ້ໃນລາຄາຕະຫຼາດເທົ່າໃດ. ເຂົາເຈົ້າກຳລັງສະເໜີຕະຫຼາດ ແລະ ລາຄາທີ່ແຕກຕ່າງກັນ. ເຂົາເຈົ້າອາດຈະໃຫ້ລາຄາຕະຫຼາດທີ່ດີກວ່າຍ້ອນຫຼາຍເຫດຜົນລວມທັງການແຂ່ງຂັນທີ່ເພີ່ມຂຶ້ນ, ກຳລັງການຊື້, ຄວາມເປັນໄປໄດ້ທີ່ຈະເພີ່ມມູນຄ່າ, ຂາດຜົນຜະລິດໃນທ້ອງຖິ່ນ, ເຂົາເຈົ້າໃຫ້ການຊ່ວຍເຫຼືອທາງດ້ານການເງິນ ແລະ ອື່ນໆ.

ໃນສະພາບແວດລ້ອມການແຂ່ງຂັນໃນລະດັບຂົງເຂດລະຫວ່າງຕະຫຼາດສຳລັບຊາວກະສິກອນນັ້ນ;ລະບົບເຄືອຂ່າຍເສັ້ນທາງຄົມມະນາຄົມທີ່ດີ, ການຜະລິດແບບມີຂໍ້ຕົກລົງທີ່ກຳນົດຕາມລາຄາຕະຫຼາດອາດຈະໜ້າສົນໃຈເມື່ອລາຄາຕະຫຼາດເພີ່ມຂຶ້ນແຕ່ບໍ່ແມ່ນລາຄາຕະຫຼາດທີ່ເໝາະກັບຜູ້ລົງທຶນ ຫຼື ຕະຫຼາດທີ່ຜູ້ລົງທຶນ ສະເໜີ. ການປ່ຽນແປງນີ້ອາດເປັນຄວາມສ່ຽງຕໍ່ຜູ້ລົງທຶນເພາະວ່າລາຄາໃນຕະຫຼາດທີ່ມີການແຂ່ງຂັນອາດຈະສູງພຽງພໍທີ່ກຳຈັດຜູ້ລົງທຶນບໍ່ເຂັ້ມແຂງອອກໄປ.

ຖ້າການອະທິບາຍຖືກຕ້ອງມັນອາດຈະເຕືອນວ່າຈະບໍ່ມີຄວາມເປັນໄປໄດ້ເທົ່າໃດໃນອະນາຄົດສຳລັບການ

ຜະລິດແບບມີຂໍ້ຕົກລົງເປັນສິນຄ້າເຊັ່ນ: ສາລີເມື່ອຊາວກະສິກອນສາມາດສະສົມທຶນພຽງພໍທີ່ລົງທຶນການຜະລິດດ້ວຍຕົນເອງ ແລະ ເຊື່ອມໂຍງກັບຕະຫຼາດຕ່າງໆໂດຍໃຊ້ເສັ້ນທາງເຊື່ອມຕໍ່ ແລະ ການສື່ສານທາງໂທລະສັບ. ໃນກໍລະນີນີ້, ການຜະລິດແບບມີຂໍ້ຕົກລົງຈະຕອບສະໜອງຈຸດປະສົງກ່ຽວກັບການລິເລີ່ມຂະບວນການ ແລະ ໃຫ້ແນວທາງໃນການສືບທອດ, ບາງຄັ້ງອາດຈະມີປະສິດທິພາບຫຼາຍຂຶ້ນສຳລັບການຈັດຕັ້ງການຜະລິດ.

ການປັບປຸງການຂົນສົ່ງ ແລະ ການສື່ສານເຮັດໃຫ້ເຂົ້າເຖິງເຂດທີ່ຢູ່ຫ່າງໄກ ແລະ ການຂຶ້ນກັບຕະຫຼາດທ້ອງຖິ່ນພຽງແຕ່ຢ່າງດຽວ. ການກະຈາຍຕະຫຼາດເປັນແນວທາງທີ່ຂະຫຍາຍຕະຫຼາດກ້ວາງອອກສູ່ພາຍນອກ ຫຼື ນອກປະເທດ. ຕະຫຼາດໃນລະດັບຂົງເຂດກຳລັງພັດທະນາສຳລັບຊາວກະສິກອນ, ຜູ້ລົງທຶນ ແລະ ຜູ້ບໍລິໂພກ ເພາະວ່າການກະຈາຍຂໍ້ມູນຂ່າວສານຕະຫຼາດກຳລັງໄດ້ຮັບການປັບປຸງ ເນື່ອງຈາກລະບົບສື່ສານແບບມືຖື ແລະ ຄວາມສາມາດໃນການຊື້ ແລະ ຂາຍຍົກທີ່ໄວດ້ວຍທະໜົນຫົນທາງທີ່ໄປໄດ້ທຸກລະດູການ. ການເຄື່ອນຍ້າຍຈາກຕະຫຼາດທ້ອງຖິ່ນສູ່ຂົງເຂດຜູ້ລົງທຶນອາດຈະເສຍອຳນາດທີ່ຈະກຳນົດ ຫຼື ຄັດເລືອກຕະຫຼາດອ້າງອີງທີ່ຕົນເອງຕ້ອງການຊຶ່ງໃຫ້ມູນຄ່າສູງສຳລັບເຂົາເຈົ້າ. ແຕ່ກົງກັນຂ້າມຊາວກະສິກອນອາດມີຄວາມສາມາດຄັດເລືອກຕະຫຼາດອ້າງອີງໄດ້.

**ການຜູກຂາດ, ກຸ່ມຜູ້ລົງທຶນ ແລະ ການແຂ່ງຂັນ – ກໍລະນີ 4, 7**

ມັນເປັນເລື່ອງປົກກະຕິສຳລັບຜູ້ລົງທຶນທີ່ຈະເຂົ້າຮ່ວມການຜະລິດແບບມີຂໍ້ຕົກລົງກັບບ້ານໃດໜຶ່ງ, ເຖິງແມ່ນວ່າຈະບໍ່ມີຊາວກະສິກອນເຂົ້າຮ່ວມທັງໝົດ. ສ່ວນຫຼາຍການສັນຍາຜູກຂາດແມ່ນຮັບຮອງ ແລະ ອຳນວຍຄວາມສະດວກໂດຍເຈົ້າໜ້າທີ່ທ້ອງຖິ່ນ. ຜູ້ລົງທຶນອື່ນໆທີ່ຈະມາລົງທຶນກັບຊາວກະສິກອນໃນພື້ນທີ່ນັ້ນອາດຈະຖືກກີດກັ້ນ. ບ່ອນທີ່ຜູ້ລົງທຶນຈຳນວນຫຼາຍໃນເມືອງດຽວກັນເຂົາເຈົ້າອາດຈັດຕັ້ງເປັນກຸ່ມຜູ້ລົງທຶນຢ່າງເປັນທາງການ. ການຜູກຂາດອາດຈະເປັນຜົນປະໂຫຍດຖ້າມັນສາມາດເຮັດໃຫ້ຜູ້ລົງທຶນບັນລຸລະດັບການຜະລິດ ແລະ ການຄ້າ ແລະ ຂະຫຍາຍຜົນປະໂຫຍດໂດຍການສະໜອງປັດໃຈການຜະລິດຕາມລາຄາຕະຫຼາດ. ນີ້ມັນອາດຈະຂຶ້ນກັບມາດຕະການບັງຄັບທາງເສດຖະກິດ ແລະ ທາງດ້ານສັງຄົມໃນເງື່ອນໄຂທີ່ສົມເຫດສົມຜົນ, ແລະ ອາດເປັນໄປໄດ້ສຳລັບມາດຕະການທາງດ້ານບໍລິຫານ.

ນອກຈາກນັ້ນ ການຜະລິດແບບມີຂໍ້ຕົກລົງແບບຜູກຂາດ ຫຼື ເປັນກຸ່ມຜູ້ລົງທຶນອາດຈະເຮັດໃຫ້ຜູ້ລົງທຶນສາມາດສະສົມຊັບພະຍາກອນທີ່ຈະສະໜອງປັດໃຈການຜະລິດ ແລະ ເກັບຊື້ທີ່ໜ້າເຊື່ອຖືບວກກັບສິນເຊື່ອທີ່ບໍ່ມີດອກເບ້ຍ. ເຖິງແນວໃດກໍ່ຕາມ, ບ່ອນທີ່ຜົນປະໂຫຍດທາງພາກລັດສ້າງຄວາມກົດດັນ ແລະ ອຳນາດໃນການຕໍ່ລອງຂອງຊາວກະສິກອນບໍ່ເຂັ້ມແຂງ; ຜູ້ລົງທຶນອາດຈະສາມາດກຳນົດເງື່ອນໄຂທີ່ຕ່ຳສຳລັບຊາວກະສິກອນ. ການແຂ່ງຂັນທີ່ມີແມ່ນເກີດຈາກຄວາມພະຍາຍາມທີ່ຈະສືບຕໍ່ການລົງທຶນໃນແຕ່ລະລະດູການຂອງຜູ້ລົງທຶນ ຫຼື ພໍ່ຄ້າ. ການປົກປ້ອງຊາວກະສິກອນຈາກການຜູກຂາດ ແລະ ສ້າງຜົນປະໂຫຍດສູງສຸດໃຫ້ຊາວກະສິກອນເປັນສິ່ງທ້າທາຍຫຼາຍຊຶ່ງອາດຈະຮຽກຮ້ອງໃຫ້ມີການແກ້ໄຂບັນຫາຫຼາຍຢ່າງເພີ່ມເຕີມ, ລວມທັງຂໍ້ມູນຂ່າວສານຕະຫຼາດທີ່ດີກວ່າ ແລະ ການແຍກຂາຍການຜະລິດໃຫ້ຜູ້ລົງທຶນ ແລະ ບັນດາພໍ່ຄ້າຕ່າງໆ.

ໃນທາງກົງກັນຂ້າມ, ການຢັບຢັ້ງການຜູກຂາດທີ່ໄດ້ຮັບອະນຸຍາດຢ່າງເປັນທາງການຈະຕ້ອງການຂໍ້ບັງຄັບ ຫຼື ການກວດກາຈາກຜູ້ຄຸ້ມຄອງໃນລະດັບທີ່ສູງກວ່າ. ບາງກໍລະນີ, ພະນັກງານຂອງພາກລັດອາດຈະມີການພົວພັນຢ່າງໃກ້ສິດ, ກວດກາ ແລະ ຈັດຕັ້ງການຜະລິດກະສິກຳເປັນສິນຄ້າແບບມີຂໍ້ຜູກພັນໃນສັນຍາ, ແລະ ການຜູກຂາດຈຳກັດ ແລະ ຄວບຄຸມຕະຫຼາດ. ນີ້ຄ້າຍໆວ່າເປັນການຂັດກັບການຜະລິດແບບມີຂໍ້ຜູກພັນໃນສັນຍາ, ຢ່າງໜ້ອຍກໍ່ຂັດກັບທັດສະນະຂອງຊາວກະສິກອນ ເຊັ່ນ: ການຈຳກັດໂອກາດ ແລະ ທາງເລືອກທີ່ຈະຮ່ວມການຜະລິດກັບຜູ້ລົງທຶນຄົນອື່ນ ຫຼື ໂອກາດທີ່ດີກວ່າ ແລະ ຜົນຕອບຮັບສຳລັບຊາວກະສິກອນກໍ່ຈຳກັດເຊັ່ນກັນ. ສະນັ້ນມັນມີຈຸດໄດ້ຈຸດເສຍສະເໝີລະຫວ່າງຕະຫຼາດເປີດທີ່ມັກຈະໃຫ້ລາຄາທີ່ສູງກວ່າ ແລະ ການຜະລິດແບບມີຂໍ້ຕົກລົງທີ່ມີການຜູກຂາດລາຄາ.

ພະນັກງານເມືອງ ຫຼື ແຂວງນຳໃຊ້ໂອກາດທາງດ້ານຕະຫຼາດ ແລະ ການຊ່ວຍເຫຼືອຕ່າງໆເປັນການຊັກຈູງຜູ້ລົງທຶນໃນການຊ່ວຍການພັດທະນາໂຄງລ່າງພື້ນຖານເຊັ່ນວ່າ: ການສ້າງທະໜົນຫົນທາງໃນຊົນນະບົດ ຫຼື ແມ່ນແຕ່ໂຮງໝໍ ແລະ ໂຮງຮຽນ. ມີແຕ່ບ່ອນທີ່ການລົງທຶນໃນຮູບແບບການຜະລິດແບບມີຂໍ້ຕົກລົງເທົ່ານັ້ນທີ່ສາມາດພິສູດໄດ້ວ່າການກຳນົດລາຄາສຳລັບຊາວກະສິກອນນັ້ນສາມາດສ້າງຜົນກຳໄລໃຫ້ຊາວກະສິກອນ. ໂດຍທົ່ວໄປມັນອາດຈະມີກໍລະນີທີ່ພາກລັດເຂົ້າມາມີສ່ວນໃນຜົນປະໂຫຍດໃນການຜະລິດ ແລະ ເຮັດໃຫ້ສັດສ່ວນຜົນໄດ້ຮັບສຳລັບຊາວກະສິກອນຫຼຸດລົງ. ການທີ່ເພີ່ມຄ່າສິ້ນເປືອງອື່ນໆຂອງພາກລັດເຂົ້າໃນການຜະລິດ ແລະ ຈຳກັດ

ຜົນຮັບ, ອາດຈະເຫັນວ່າເປັນເລື່ອງທີ່ບໍ່ຍຸດຕິທຳສຳລັບຜູ້ຜະລິດ. ສະນັ້ນຊາວກະສິກອນອາດເຫັນວ່າການລົງທຶນຂອງພາກລັດແມ່ນບໍ່ໄດ້ຊ່ວຍໃຫ້ໄດ້ຮັບຜົນຈາກທ່າແຮງຂອງຕະຫຼາດ.

**ຜູ້ອຳນວຍຄວາມສະດວກ – ກໍລະນີ 1, 7, 10**

ຜູ້ອຳນວຍຄວາມສະດວກສາມາດມີບົດບາດທີ່ສຳຄັນໃນການໝູນໃຊ້ກາລະໂອກາດຊຶ່ງນຳໄປສູ່ການເຮັດການຜະລິດແບບມີຂໍ້ຕົກລົງຮ່ວມກັນລະຫວ່າງຊາວກະສິກອນ ແລະ ຜູ້ລົງທຶນ. ຖ້າການເຊື່ອມໂຍງຜູ້ຜະລິດ ແລະ ຜູ້ລົງທຶນນີ້ຂຶ້ນກັບຜູ້ອຳນວຍຄວາມສະດວກ ແລະ ຖ້າຈຸດຢືນຂອງຜູ້ອຳນວຍຄວາມສະດວກບໍ່ມີຄວາມຍືນຍົງອາດຈະເຮັດໃຫ້ຄວາມສຳພັນການຜະລິດອາດຈະມີຄວາມສ່ຽງ. ແລະ ຜູ້ອຳນວຍຄວາມສະດວກອາດຈະສາມາດກຳນົດເງື່ອນໄຂສຳລັບແຕ່ລະຝ່າຍ. ຜູ້ອຳນວຍຄວາມສະດວກອາດຈະນຳໃຊ້ຈຸດໄດ້ປຽບນັ້ນຊຶ່ງຄ້າຍຄືກັນກັບການຜູກຂາດ, ໂດຍສະເພາະບ່ອນທີ່ເຂົາເຈົ້າມີ ຫຼື ຮູ້ຂໍ້ມູນຂ່າວສານຕະຫຼາດຫຼາຍກວ່າຊາວກະສິກອນ ແລະ ຮູ້ຂໍ້ມູນຊາວກະສິກອນຫຼາຍກວ່າຜູ້ຊື້ ຫຼື ລູກຄ້າ. ຮັບປະກັນກາລະໂອກາດສຳລັບຜູ້ອຳນວຍຄວາມສະດວກຕ່າງໆອາດຈະຮັບປະກັນລາຄາທີ່ດີ.

**ອຳນາດທີ່ບໍ່ສົມສ່ວນ – ກໍລະນີ 3, 9, 10**

ຜູ້ລົງທຶນ, ແລະ ຜູ້ອຳນວຍຄວາມສະດວກເພາະວ່າພາກລັດໄດ້ຈັດຕັ້ງການບໍລິຫານ ຫຼື ລະບອບທີ່ຈຳກັດ ຫຼື ການຄວບຄຸມການເຂົ້າເຖິງຕະຫຼາດ, ຂາດການການແຂ່ງຂັນ, ເອື່ອຍອີງ ແລະ ຂໍ້ມູນຂ່າວສານທີ່ບໍ່ສົມສ່ວນກັນສາມາດສ້າງອຳນາດທີ່ເຫຼືອມລ້ຳກັນ, ກຳນົດຮູບແບບ, ສະພາບ ແລະ ເງື່ອນໄຂສຳລັບການຜະລິດແບບມີຂໍ້ຕົກລົງ. ໃນສະພາບແບບນີ້ຜູ້ລົງທຶນສາມາດນຳໃຊ້ ອຳນາດທີ່ເໜືອກວ່ານັ້ນເພື່ອກຳນົດ ຫຼື ຄວບຄຸມເງື່ອນໄຂສຳລັບຊາວກະສິກອນ, ຕົວຢ່າງ ການກຳນົດລາຄາຄົງທີ່ທັ້ງໆທີ່ຊາວກະສິກອນຕ້ອງການລາຄາຕາມທ້ອງຕະຫຼາດ. ເຊັ່ນດຽວກັນ, ເຈົ້າໜ້າທີ່(ຫ້ອງການກະສິກຳ-ປ່າໄມ້ເມືອງ ແລະ ຫ້ອງການ ອື່ນໆ) ສາມາດກຳນົດເງື່ອນໄຂ, ຄວບຄຸມລາຄາ. ຊາວກະສິກອນຈະຕົກຢູ່ໃນຈຸດທີ່ເສຍປຽບ, ຂາດໂອກາດທີ່ຈະປັບປຸງເງື່ອນໄຂໃນສັນຍາ. ທ່ານ ຈີເບີດ (2010)ໄດ້ສັງເກດການຄືກັນໃນການສຶກສາຢ່າງກວ້າງຂວາງກ່ຽວກັບອຳນາດໃນການເຈລະຈາ-ຕໍ່ລອງຂອງຊາວກະສິກອນພົບວ່າໃນເງື່ອນໄຂສະພາບດັ່ງກ່າວຜົນຂອງການຕໍ່ລອງກ່ຽວກັບການຜະລິດຊາວກະສິກອນມັກຈະຢູ່ໃນຈຸດທີ່ເສຍປຽບແຕ່ກົງກັນຂ້າມພະນັກງານລັດຜູ້ທີ່ສະແຫວງຫາຜົນປະໂຫຍດໃສ່ຕົນເອງເປັນຜູ້ໄດ້ປຽບ.

**ການເອື່ອຍອີງ – ກໍລະນີ 3, 9**

ເຖິງແມ່ນວ່າຊາວກະສິກອນມີຄວາມອາດສາມາດຕໍ່ລອງໄດ້ແຕ່ບາງຄັ້ງເຂົາເຈົ້າຍັງກັງວົນທີ່ຈະນຳໃຊ້ຄວາມອາດສາມາດນັ້ນເພື່ອປົກປ້ອງຜົນປະໂຫຍດຂອງຕົນເອງ ຫຼື ປັບປຸງສະພາບການ. ຄວາມຮູ້ສຶກຢ້ານຕໍ່ອິດທິພົນ ແລະ ຜົນຮັບທີ່ຕາມມາຈາກການທ້າທາຍຕໍ່ອິດທິພົນນັ້ນອາດຈະເປັນປັດໃຈໜຶ່ງຊຶ່ງຢັບຢັ້ງການຈັດຕັ້ງປະຕິບັດຂອງເຂົາເຈົ້າ. ໃນທາງກົງກັນຂ້າມພະນັກງານຂອງລັດສະເໜີໃຫ້ຊາວກະສິກອນເວົ້າຢ່າງເປີດເຜີຍ ແລະ ກົງໄປກົງມາ. ໃນທາງໜຶ່ງອາດແປວ່າຄວາມສຳພັນຂອງຊາວກະສິກອນກັບຜູ້ລົງທຶນ ຫຼື ຫ້ອງການກະສິກຳ-ປ່າໄມ້ເມືອງໄດ້ພັດທະນາໃນລັກສະນະທີ່ມີການເອື່ອຍອີງ ແລະ ແບບຜູ້ປົກຄອງ, ເພາະວ່າ ນິໄສ, ວັດທະນະທຳ, ຂໍ້ຫຍຸ້ງຍາກທາງດ້ານການບໍລິຫານຄຸ້ມຄອງ, ຫຼື ຄວາມບໍ່ປອດໄພ.ຖ້າຄວາມສຳພັນຂອງຊາວກະສິກອນກັບຜູ້ລົງທຶນ ແລະ ຫ້ອງການກະສິກຳ-ປ່າໄມ້ເມືອງມີລັກສະນະເອື່ອຍອີງແບບນັ້ນມັນອາດຈະໝາຍວ່າຊາວກະສິກອນອາດບໍ່ເຕັມໃຈທີ່ຈະຍອມຮັບຄວາມຮັບຜິດຊອບສຳລັບສະພາບການ ແລະ ໜ້າທີ່ຂອງເຂົາເຈົ້າ. ໃນກໍລະນີໃດກໍ່ຕາມ, ບ່ອນທີ່ຊາວກະສິກອນຂາດຄວາມໝັ້ນໃຈທີ່ຈະນຳໃຊ້ຄວາມອາດສາມາດ ຫຼື ປະຕິບັດເພື່ອຊອກຫາກາລະໂອກາດທີ່ດີກວ່າເຂົາເຈົ້າຈຳກັດໂອກາດຂອງຕົນເອງ ແລະ ເຮັດການຜະລິດແບບມີຂໍ້ຕົກລົງທີ່ອາດບໍ່ໄດ້ປຽບໄປຕະຫຼອດ.

## 10.3. ຄວາມບໍ່ກົມກຽວ

***ຄວາມຍືນຍົງຂອງ ການຜະລິດ – ກໍລະນີ 5***

ການຜະລິດແບບມີຂໍ້ຕົກລົງມີຄວາມອາດສາມາດເພີ່ມ ແລະ ລະດັບ ແລະ ຜົນຜະລິດເໜືອຂອບເຂດຄວາມຍືນຍົງຂອງຊັບພະຍາກອນດິນທີ່ຮອງຮັບ. ໃນກໍລະນີນີ້, ການຜະລິດແບບມີຂໍ້ຕົກລົງ, ເທັກໂນໂລຊີການຜະລິດ, ແລະ ກົດເກນບໍ່ໄດ້ຄຳນຶງເຖິງຂີດຈຳກັດຂອງນິເວດວິທະຍາ. ຄຸນນະພາບຂອງຊີວະນາໆພັນ ແລະ ສະພາບຂອງນິເວດວິທະຍາ, ຊຶ່ງເປັນເງື່ອນໄຂພື້ນຖານທີ່ຈະຮັກສາຜົນຜະລິດ, ໄດ້ເຊື່ອມໂຊມຊຶ່ງໃນໄລຍະສັ້ນມັນອາດຈະທົດແທນໄດ້ດ້ວຍການເພິ່ງພາປັດໃຈການຜະລິດທີ່ມາຈາກ ຮີໂດກາກບ້ອນ (Hooper, et al. 2005). ການເຊື່ອມໂຊມຈະສ້າງຜົນກະທົບຕໍ່ການປັບຕົວຊຶ່ງສາມາດເພີ່ມຄວາມສ່ຽງໃນສະພາບທີ່ມີການປ່ຽນແປງ (Scheffer, et al. 2001). ການຫຼຸດຜ່ອນຄວາມສ່ຽງຕໍ່ການສູນເສຍຮີໂດກາກບ້ອນ ແລະ ສະພາບການປ່ຽນແປງຮຽກຮ້ອງໃຫ້ມີການບຳລຸງຮັກສາຊີວະນາໆພັນ ແລະ ລະບົບນິວິທະຍາໃນລະດັບພື້ນທີ່ (Swift, Izac and van Noordwijk 2004). ສະນັ້ນ, ຄວາມສຳຄັນບໍ່ແມ່ນແຕ່

ສຳລັບຊີວິດການເປັນຢູ່ຂອງຊາວກະສິກອນທ້ອງຖິ່ນທີ່ຈະຮັກສາຄຸນນະພາບຂອງຊີວະນາໆພັນ ແລະ ນິເວດວິທະຍາແຕ່ວ່າມັນຍັງສຳຄັນສຳຊຸມຊົນໃນລະດັບກ້ວາງ. ການຜະລິດແບບມີຂໍ້ຕົກລົງເປັນກົນໄກສຳລັບການສະສົມທຶນໃນໄລຍະສັ້ນລະຫວ່າງຜູ້ລົງທຶນ ແລະ ຊາວກະສິກອນແຕ່ມັນຈະສ້າງການເຊື່ອມໂຊມທາງນິເວດວິທະຍາສຳລັບຊີວິດການເປັນຢູ່, ກາລະໂອກາດ ແລະ ທ່າແຮງສຳລັບຊາວກະສິກອນໃນໄລຍະຍາວ. ເຖິງແມ່ນວ່າທີ່ດິນບໍ່ແມ່ນຊັບພະຍາກອນທີ່ເຂົ້າເຖິງໄດ້ແບບເປີດກ້ວາງສະເໝີໄປ, ການແກ້ບັນຫາກ່ຽວກັບການປູກຝັງທີ່ບໍ່ຍືນຍົງໂດຍນຳໃຊ້ການຜະລິດແບບມີຂໍ້ຕົກລົງທີ່ມີການລະດົມທຶນອາດຈະຮຽກຮ້ອງໃຫ້ຊາວກະສິກອນໃນຊຸມຊົນ ແລະ ຜູ້ລົງທຶນຕ້ອງໄດ້ຈັດຕັ້ງປະຕິບັດຢ່າງຖືກຕ້ອງ. ໂດຍທົ່ວໄປບ່ອນທີ່ຕະຫຼາດມີລະບຽບການທີ່ບໍ່ເຂັ້ມງວດ ແລະ ຈັດຕັ້ງປະຕິບັດບໍ່ມີຄຸນນະພາບ ແລະ ບໍ່ໃຫ້ຄວາມສຳຄັນພຽງພໍກັບການພັດທະນາໃນໄລຍະຍາວມັກຈະມີບັນຫາທີ່ຕິດພັນກັບການນຳໃຊ້ຊັບພະຍາກອນແບບຍືນຍົງ. ສະນັ້ນມັນມີຄວາມຕ້ອງການທີ່ຊັດເຈນວ່າຕ້ອງໄດ້ມີກົນໄກການປະສານງານປັບໃຫ້ເຂົ້າກັບການຜະລິດແບບມີຂໍ້ຕົກລົງເພື່ອການຜະລິດທີ່ຮັກສາຄວາມຍືນຍົງທາງດ້ານນິເວດວິທະຍາ.

### ຄວາມຕ້ອງການຕະຫຼາດເປີດ – ກໍລະນີ 4, 5

ຊາວກະສິກອນສະແດງໃຫ້ເຫັນເຖິງຄວາມຕ້ອງການທີ່ຈະປ່ຽນຈາກການຜະລິດແບບມີຂໍ້ຕົກລົງໄປສູ່ການຜະລິດສຳລັບຕະຫຼາດເປີດ ຫຼື ທົ່ວໄປ. ຂໍ້ຫຍຸ້ງຍາກທີ່ຈະຫັນປ່ຽນໄປສູ່ຕະຫຼາດເປີດນັ້ນແມ່ນທຶນທີ່ບໍ່ພຽງພໍ, ການເຂົ້າເຖິງຕະຫຼາດ, ເທັກໂນໂລຊີ, ແລະ ບາງຄັ້ງຄວາມໝັ້ນໃຈ. ການຜະລິດແບບມີຂໍ້ຕົກລົງເປັນກົນໄກສຳລັບເອົາຊະນະອຸປະສັກເຫຼົ່ານັ້ນ. ໃນບ່ອນທີ່ການຜະລິດແບບມີຂໍ້ຕົກລົງເຮັດໃຫ້ຊາວກະສິກອນສາມາດສະສົມທຶນເພື່ອຫັນໄປສູ່ການຜະລິດສຳລັບຕະຫຼາດເປີດໃນທີ່ສຸດນັ້ນໝາຍເຖິງຜົນສຳເລັດໜຶ່ງຈະແຈ້ງທີ່ການຜະລິດແບບມີຂໍ້ຕົກລົງສາມາດຊ່ວຍໃຫ້ຊາວກະສິກອນບັນລຸເປົ້າໝາຍຂອງເຂົາເຈົ້າທີ່ຊາວກະສິກອນສ່ວນຫຼາຍຕ້ອງການລົງທຶນການຜະລິດດ້ວຍຕົນເອງສຳລັບຕະຫຼາດເປີດ.

ໄປສູ່ການຜະລິດສຳລັບຕະຫຼາດເສລີ.ການຜະລິດແບບມີຂໍ້ຕົກລົງເປັນປະໂຫຍດ ແລະ ເບິ່ງຄືວ່າຈະບໍ່ສູນເສຍໄປ. ເຖິງຢ່າງນັ້ນກໍ່ຕາມ, ຄວາມບໍ່ສອດຄ່ອງກັນລະຫວ່າງນະໂຍບາຍຂອງລັດ ແລະ ເປົ້າໝາຍຂອງຊາວກະສິກອນອາດຈະເປັນເຫດຜົນທີ່ຕ້ອງໄດ້ພິຈາລະນາລະດັບທີ່ຄວາມສຳຄັນ ແລະ ການນຳໃຊ້ຊັບພະຍາກອນສຳລັບການສົ່ງເສີມການຜະລິດແບບມີຂໍ້ຕົກລົງກັບການສ້າງຄວາມເຂັ້ມແຂງສຳລັບທຸລະກິດກະສິກຳຂະໜາດນ້ອຍເພື່ອຄວາມນັ່ງຄັ່ງເຊັ່ນວ່າ: ການພັດທະນາທັກສະ, ຄວາມຮູ້ດ້ານເທັກໂນໂລຊີ ແລະ ການເຂົ້າເຖິງຂໍ້ມູນຂ່າວສານຕະຫຼາດ.



ການສີດຝຸ່ນຢາເຄມີໃນສວນສາລີ

ນະໂຍບາຍຂອງລັດ ແລະ ກົດຈະກຳຕ່າງໆແມ່ນສຸມໃສ່ການສົ່ງເສີມການພັດທະນາການຜະລິດແບບມີຂໍ້ຕົກລົງສຳລັບການພັດທະນາກະສິກຳ ໃນ ສປປ ລາວ ໃນອະນາຄົດ. ດ້ວຍເຫດນີ້, ນະໂຍບາຍຂອງລັດ ແລະ ເປົ້າໝາຍຂອງຊາວກະສິກອນແມ່ນຍັງບໍ່ສອດຄ່ອງເທົ່າທີ່ຄວນ. ພາກລັດກຳລັງມຸ່ງໄປສູ່ການເພີ່ມການຜະລິດໃຫ້ຫຼາຍຂຶ້ນແຕ່ຊາວກະສິກອນຈຳນວນໜຶ່ງແມ່ນກຳລັງມຸ່ງ

## 11. ສິ່ງທ້າທາຍ ແລະ ໂອກາດສຳລັບຫ້ອງການກະສິກຳ-ປ່າໄມ້ ເມືອງ

### 11.1. ປະເມີນສະພາບການປະຈຸບັນຂອງຫ້ອງການກະສິກຳ-ປ່າໄມ້ເມືອງ

ການຜະລິດແບບມີສັນຍາກຳລັງປ່ຽນແປງໂສມໜ້າດ້ານທຸລະກິດກະສິກຳໃນ ສປປ ລາວ ເຊິ່ງເຫັນໄດ້ໃນກໍລະນີສຶກສາເຫຼົ່ານີ້. ແຕ່ຫຼັກຖານທີ່ເປັນເອກະພາບກັນຍັງບໍ່ມີຄວາມສອດຄ່ອງ, ການຮ່ວມມືໃນການອຳນວຍຄວາມສະດວກ ແລະ ກົດລະບຽບທີ່ມີຮູບແບບຂອງການຮ່ວມມືຂອງຜົນປະໂຫຍດ ແລະ ອຸປະສັກຂອງຄວາມສ່ຽງລະຫວ່າງຜູ້ລົງທຶນ ແລະ ຜູ້ຜະລິດ. ໂດຍທົ່ວໄປແລ້ວຫ້ອງການກະສິກຳປ່າໄມ້ເມືອງບໍ່ມີພາລະບົດບາດທີ່ຈະແຈ້ງທີ່ຈະຮັບຜິດຊອບການພັດທະນາການຜະລິດໃຫ້ເປັນສິນຄ້າ ຫຼື ການກວດສອບສັນຍາການຜະລິດເຊັ່ນດຽວກັນກັບບົດບາດຂອງກະຊວງຕ່າງໆ: ກະຊວງແຜນການ ແລະ ການລົງທຶນ, ກະຊວງອຸດສາຫະກຳ ແລະ ການຄ້າ ແລະ ກະຊວງກະສິກຳ ແລະ ປ່າໄມ້ ຊຶ່ງແບ່ງຄວາມຮັບຜິດຊອບຮ່ວມກັນໃນຫຼາຍດ້ານ, ແລະ ຫ້ອງການເມືອງ ແລະ ແຂວງຮັບຜິດຊອບການລົງທຶຂະໜາດໃຫຍ່. ຍ້ອນພາລະບົດບາດບໍ່ຈະແຈ້ງ; ແຕ່ລະເມືອງແມ່ນປະຕິບັດແຕກຕ່າງກັນໄປ, ສ່ວນຫຼາຍແມນຂັບເຄື່ອນໂດຍບຸກຄົນ ແລະ ຄວາມສາມາດໃນການນຳພາ. ເມື່ອຫ້ອງການກະສິກຳປ່າໄມ້ເມືອງມີການນຳທີ່ເຂັ້ມແຂງພ້ອມກັບຄວາມຊຳນານ ຫຼື ທັກສະໃນການອຳນວຍຄວາມສະດວກຈະເຮັດໜ້າທີ່ໃນຂັ້ນສູນກາງໃນສັນຍາການຜະລິດ; ໃນບ່ອນທີ່ມີຄວາມສາມາດໜ້ອຍ, ຫ້ອງການກະສິກຳ ແລະ ປ່າໄມ້ເມືອງອາດຈະເຮັດໜ້າທີ່ເປັນບ່ອນປະສານງານໃນລະດັບພາກສະໜາມ ຫຼື ບໍ່ໄດ້ເຮັດໜ້າທີ່ນັ້ນເລີຍ.

ຖ້າວ່າຫ້ອງການກະສິກຳ-ປ່າໄມ້ເມືອງມີສ່ວນພົວພັນໃນການອຳນວຍຄວາມສະດວກໃນການຜະລິດແບບມີຂໍ້ຕົກລົງຈະເຫັນວ່າມັນຈະມີອຸປະສັກຫຼາຍໆດ້ານ. ບັນຫາເຫຼົ່ານັ້ນລວມທັງການຂາດວິທີການທີ່ເປັນມາດຕະຖານ, ເຄື່ອງມື, ຫຼື ກົດລະບຽບໃຫ້ປະຕິບັດຕາມ. ໃນລາວຍັງບໍ່ທັນມີບົດແນະນຳທີ່ລະອຽດ ຫຼື ເຄື່ອງມືເຊິ່ງຜູ້ອຳນວຍຄວາມສະດວກໃນທ້ອງຖິ່ນສາມາດຖືເປັນບ່ອນອີງໄດ້. ບໍ່ມີການສ້າງຫຼັກການເພື່ອນຳທາງໃນການປະຕິບັດແບບເປັນປະຈຳ, ມີຄວາມຮັບພິດຊອບຫຼາຍຂຶ້ນເພື່ອຊ່ວຍເຫຼືອຊາວກະສິກອນ. ເຖິງແມ່ນວ່າຫ້ອງການກະສິກຳ-ປ່າໄມ້ເມືອງໄດ້ລິເລີ່ມຢ່າງຫ້າວຫັນ ແລະ ດຳເນີນວຽກງານເພື່ອປັບປຸງການຜະລິດແບບມີຂໍ້ຕົກລົງແຕ່ປະສົບການໃນການອຳນວຍຄວາມສະດວກທຸລະກິດກະສິກຳຂະໜາດໃຫຍ່ຍັງຈຳກັດ, ບໍ່ມີຜູ້ໃດໄດ້ຮັບການຝຶກອົບຮົມພຽງພໍທີ່ຈະພິຈາລະນາຄວາມສ່ຽງ ແລະ ໂອກາດ ສຳລັບຊາວກະສິກອນ.

ນອກຈາກ, ຫ້ອງການກະສິກຳ-ປ່າໄມ້ເມືອງບໍ່ມີບົດບາດໃນການບັງຄັບໃຊ້ສັນຍາກັບບໍລິສັດຕ່າງຊາດ ຫຼື ສາກົນໄດ້. ການບໍລິການຂອງຫ້ອງການກະສິກຳ-ປ່າໄມ້ ເມືອງມອງຂ້າມບັນຫາກ່ຽວກັບເທັກໂນໂລຊີ ການຜະລິດ, ການໃຫ້ຄຳຕອບທາງດ້ານວິຊາການຕໍ່ບັນຫາການຜະລິດ ແລະ ອຳນວຍຄວາມສະດວກການເຂົ້າເຖິງປັດໃຈການຜະລິດເປັນຕົ້ນແມ່ນແນວພັນ ແລະ ປຸ໋ຍ ຫຼື ບໍ່ກ່ຽວຂ້ອງໃນການຜະລິດແບບມີຂໍ້ຕົກລົງເພື່ອເປັນສິນຄ້າ ຫຼື ມອງຂ້າມຈຸດແຂງ ແລະ ຊັບພະຍາກອນທີ່ນຳມາໂດຍຜູ້ລົງທຶນ.

ເຖິງແມ່ນວ່າມີພາລະບົດບາດ ແລະ ມີເຄື່ອງກໍ່ຕາມ, ຫ້ອງການກະສິກຳ-ປ່າໄມ້ເມືອງກໍ່ບໍ່ມີງົບປະມານພຽງພໍສຳລັບກິດຈະກຳໃນພາກສະໜາມທີ່ຮຽກຮ້ອງໃຫ້ມີການຕິດຕາມກວດກາ ແລະ ຕິດຕາມຜົນຂອງກິດຈະກຳພາຍໃຕ້ສັນຍາ. ສິ່ງນີ້ເຮັດໃຫ້ຫ້ອງການກະສິກຳ-ປ່າໄມ້ເມືອງ ຈຶ່ງມີຍຸດທະສາດທີ່ຈະສຸມໃສ່ການອຳນວຍຄວາມສະດວກໃຫ້ນັກລົງທຶນຜູ້ທີ່ນຳເອົາຊັບພະຍາກອນຂອງເຂົາເຈົ້າເຂົ້າມາເພື່ອສົ່ງເສີມການຂະຫຍາຍການບໍລິການ ຫຼື ການດຳເນີນວຽກງານກັບນັກລົງທຶນ ທີ່ມີຄວາມເຕັມໃຈໃຫ້ທຶນໃນການບໍລິຫານງານຂອງຫ້ອງການກະສິກຳ-ປ່າໄມ້ ເມືອງ. ໃນທາງໃດໜຶ່ງຄວາມບໍລິງຮ່ອຍກັນ ແລະ ຄວາມເປັນເອກະລາດຂອງຫ້ອງການກະສິກຳປ່າໄມ້ເມືອງອາດບໍ່ເປັນໄປໄດ້ເທົ່າທີ່ຄວນ.

ດ້ວຍຊັບພະຍາກອນເຫຼົ່ານັ້ນທີ່ມັນສາມາດລະດົມທຶນ ແລະ ຄວາມສາມາດຕາມທີ່ຄວບຄຸມໄດ້ນັ້ນຄາດວ່າຫ້ອງການກະສິກຳປ່າໄມ້ເມືອງຕ້ອງເປັນຜູ້ດຳເນີນການທີ່ສຳຄັນໃນການຂະຫຍາຍຜົນປະໂຫຍດການພັດທະນາກະສິກຳໃນຊຸມຊົນໃນຂອບເຂດການປູກຝັງທົ່ວປະເທດ. ສະນັ້ນຈຶ່ງບໍ່ເປັນເລື່ອງທີ່ແປກໃຈຫ້ອງການກະສິກຳ-ປ່າໄມ້ເມືອງຈຳນວນໜຶ່ງຍຶດເອົາການຜະລິດແບບມີຂໍ້ຕົກລົງເປັນເຄື່ອງມືເພື່ອນຳຊາວກະສິກອນໄປສູ່ການຜະລິດທີ່ທັນສະໄໝ ແລະ ຫວັງວ່າສິ່ງນີ້ຈະນຳໄປສູ່ການປັບປຸງການຮັບປະກັນທາງດ້ານສະບຽງອາຫານ. ໂດຍມີປະສົບການໃນການເຮັດວຽກ ແລະ ເຈລະຈາກັບບັນດາບໍລິສັດຕ່າງໆ ແລະ ຊັບພະຍາກອນທີ່ຈຳກັດຫ້ອງການກະສິກຳ-ປ່າໄມ້ເມືອງແມ່ນບໍ່ຢູ່ໃນຕຳແໜ່ງທີ່ທີ່ສາມາດເປັນຕົວແທນຜົນປະໂຫຍດຂອງຊາວກະສິກອນໄດ້ຢ່າງເຕັມທີ່ ແລະ ກໍ່ເປັນສິ່ງທີ່ບໍ່ປົກກະຕິທີ່ຫ້ອງການກະສິກຳປ່າໄມ້ເມືອງບໍ່ສາມາດຮັກສາຈຸດປະສົງ ຫຼື ເຫັນຜົນປະໂຫຍດຂອງນັກລົງທຶນ (ຕ່າງປະເທດຈຳນວນໜຶ່ງ) ເໜືອຜົປະໂຫຍດຂອງຊາວກະສິກອນ. ການສະແຫວງຫາຜົນປະໂຫຍດ ທາງດ້ານ

ເສດຖະກິດບໍ່ແມ່ນຜົນໄດ້ຮັບທີ່ໜ້າແປກໃຈ(ຈີເບີດ 2010) ແລະ ກໍ່ບໍ່ໄດ້ມີການຈຳກັດໂດຍຫ້ອງການ ກະສິກຳ-ປ່າໄມ້ເມືອງ (ກໍລະນີທີ່ 8).

ສິ່ງທີ່ເຮັດໃຫ້ຫ້ອງການກະສິກຳ-ປ່າໄມ້ເມືອງ ບໍ່ສາມາດບັນລຸຕາມຈຸດປະສົງຂອງຊາວກະສິກອນຜົນທີ່ດີທີ່ສຸດນັ້ນແມ່ນເນື່ອງຈາກຄວາມບໍ່ສອດຄ່ອງ ຫຼື ສົມສ່ວນກັນລະຫວ່າງບົດບາດ, ຄວາມຮັບຜິດຊອບກັບຄວາມສາມາດ ແລະ ຊັບພະຍາກອນ. ຢ່າງໃດກໍ່ຕາມ ຊາວກະສິກອນ, ຜູ້ວາງແຜນ, ການນຳ ຂອງລັດຖະບານ ແລະ ແມ່ນແຕ່ບໍລິສັດຍັງສືບຕໍ່ຊຸກຍູ້ການມີສ່ວນຮ່ວມຂອງຫ້ອງການກະສິກຳ-ແລະປ່າໄມ້ເມືອງ. ອາດຈະມີໂອກາດທີ່ຈະສ້າງຄວາມເຂັ້ມແຂງໃຫ້ຫ້ອງການກະສິກຳ-ປ່າໄມ້ເມືອງ ແລະ ຫຼຸດຜ່ອນຈຸດອ່ອນແຕ່ມັນກໍ່ຈຳເປັນຕ້ອງໄດ້ແກ້ໄຂບັນຫາຄວາມບໍ່ສົມສ່ວນກັນນັ້ນນຳໃຊ້ມາດຕະການ ຢ່າງແຂງແຮງ ແລະ ທັນການ. ຖ້າບໍ່ມີການດຳເນີນການເຊັ່ນນັ້ນຈຳເປັນໃຫ້ລົດລະດັບການເປັນຕົວແທນຜົນປະໂຫຍດຂອງຊາວກະສິກອນລົງ ແລະ ບໍ່ສາມາດຊ່ວຍເຫຼືອຊາວກະສິກອນໄດ້. ຖ້າວ່າບໍ່ມີຫຍັງໄດ້ຖືກດຳເນີນເພື່ອແກ້ໄຂບັນຫາການຂາດຄວາມສາມາດ, ການມອງຂ້າມ ຫຼື ລະເລີຍ ແລະ ມາດຕະຖານ-ຄຸນນະພາບຂອງການບໍລິການ; ຄວາມຍືນຍົງຂອງຊາວກະສິກອນ ແລະ ຊີວິດການເປັນຢູ່ ເຊື່ອມລົງ ຫຼາຍກວ່າທີ່ຈະປັບປຸງໃນທາງທີ່ດີຂຶ້ນ. ເພື່ອທັນປ່ຽນຄວາມສ່ຽງກ່ຽວກັບການຜະລິດເປັນສິນຄ້າໃຫ້ເປັນໂອກາດສຳລັບຜູ້ຜະລິດຂະໜາດນ້ອຍ ແລະ ປັບປຸງຂະຫຍາຍຊີວິດການເປັນຢູ່ມັນຮຽກຮ້ອງໃຫ້ມີການປັບປຸງການບໍລິການ ແລະ ອຳນວຍຄວາມສະດວກໃນການສ້າງສາຍສຳພັນລະຫວ່າງຊາວກະສິກອນ ແລະ ນັກລົງທຶນ.

ຄວາມຄາດຫວັງທີ່ພາກສວນເອກະຊົນ, ລັດ ແລະ ຄູ່ຮ່ວມພັດທະນາທີ່ຫວັງໄວ້ກັບຫ້ອງການ ກະສິກຳ-ປ່າໄມ້ເມືອງອາດຈະບໍ່ຜິດທັງໝົດ. ເຖິງແມ່ນວ່າຈະມີຂໍ້ບົກຜ່ອງ ແລະ ຈຸດອ່ອນທາງດ້ານສະຖາບັນກໍ່ຕາມ, ຫ້ອງການກະສິກຳປ່າໄມ້ເມືອງອາດຈະເປັນຕຳແໜ່ງທີ່ດີທີ່ສຸດຢ່າງນ້ອຍແມ່ນໄລຍະສັ້ນ ແລະ ຖ້າວ່າມີຄວາມພະຍາຍາມໃນການສ້າງຄວາມສາມາດເພື່ອສະໜັບສະໜູນ ແລະ ສົ່ງເສີມຢ່າງມີປະສິດທິພາບ, ການດຳເນີນການທີ່ຍຸດຕິທຳ. ສະນັ້ນມັນດຶງກັບຄືນມາສູ່ຄຳຖາມເດີມທີ່ສອງຄື: ຫ້ອງການກະສິກຳປ່າໄມ້ເມືອງສາມາດເຮັດຫຍັງເພື່ອສົ່ງເສີມການຜະລິດເປັນສິນຄ້າແບບມີສັນຍາທີ່ຍຸດຕິທຳ ແລະ ສ້າງເງື່ອນໄຂເພື່ອຊຸກຍູ້ການປະຕິບັດວຽກງານທີ່ດີຂອງໝົດທຸກພາກສວນ.

### 11.2. **ຄຳແນະນຳສຳລັບການປັບປຸງໃນການເສີມຂະຫຍາຍການສະໜັບສະໜູນການຜະລິດແບບມີຂໍ້ຕົກລົງ**

ການປັບປຸງ ແລະ ແກ້ໄຂບັນຫາຕ່າງໆທີ່ກ່າວມາແມ່ນມີຄວາມຈຳເປັນການສົ່ງເສີມກະສິກຳເພື່ອສາມາດສະໜັບສະໜູນຊີວິດການເປັນຢູ່ທີ່ຍືນຍົງຂອງຊາວກະສິກອນທີ່ເຮັດການຜະລິດເປັນສິນຄ້າຢ່າງມີປະສິດທິພາບ ແລະ ສອດຄ່ອງ. ການປັບປຸງອາດຈັດຕັ້ງປະຕິບັດໂດຍກະຊວງກະສິກຳ ແລະ ປ່າໄມ້, ສະຖາບັນກະສິກຳ-ປ່າໄມ, ສິ່ງແວດລ້ອມແຫ່ງຊາດ, ຫ້ອງການກະສິກຳປ່າ-ໄມ້ເມືອງຊຶ່ງອາດກວມເອົາວຽກງານທີ່ສຳຄັນດັ່ງນີ້:

ຮັບຮູ້ ແລະ ເສີມສ້າງຈາກຈຸດແຂງຂອງຫ້ອງການກະສິກຳ-ປ່າໄມ້ ເມືອງ

1. ໂດຍທົ່ວໄປແລ້ວ ຫ້ອງການ ກະສິກຳ-ປ່າໄມ້ ເມືອງມີພະນັກງານຈຳນວນຫຼາຍຊຶ່ງລວມມີ ພະນັກງານທີ່ໄດ້ຮັບເງິນເດືອນ ແລະ ພະນັກງານທີ່ເຮັດວຽກເປັນບາງຄັ້ງຄາວ "ອາສາສະມັກ" ທີ່ລໍຖ້າໂຄຕ້າ ຫຼາຍກວ່າ ຫ້ອງການ ຫຼື ຂະແໜງການອື່ນ
2. ພະນັກງານຫ້ອງການກະສິກຳປ່າໄມ້ເມືອງສ່ວນຫຼາຍແມ່ນຄຸ້ນເຄີຍ ແລະ ຄາດຫວັງວ່າຈະໄດ້ລົງໄປຢ້ຽມຢາມຊາວບ້ານ ແລະ ເຮັດວຽກກັບຊາວກະສິກອນ; ແລະ ບາງຈຳນວນແມ່ນມີຄວາມເຂົ້າໃຈທີ່ດີ ໃນການວິເຄາະການມີສ່ວນຮ່ວມ ແລະ ວິທີການວາງແຜນ
3. ໂດຍລວມແລ້ວ, ພະນັກງານຫ້ອງການກະສິກຳປ່າໄມ້ເມືອງແມ່ນມີຄວາມເຂົ້າໃຈກ່ຽວກັບຄວາມອາດສາມາດໃນການຜະລິດທາງດ້ານເຕັກນິກ ຂອງເຂດນິເວດວິທະຍາກະສິກຳພາຍໃນເມືອງຂອງເຂົາເຈົ້າເຖິງແມ່ນວ່າຈະຂາດຄວາມຮູ້ທາງດ້ານວິທະຍາສາດທີ່ເລິກເຊິ່ງ, ການນຳໃຊ້ພາບຖ່າຍດາວທຽມ, ພັນລະນາເຂດການຜະລິດແບບລະອຽດ
4. ພະນັກງານຫ້ອງການກະສິກຳປ່າໄມ້ເມືອງມີຄວາມຄຸ້ນເຄີຍໃນການດຳເນີນວຽກງານກັບກຸ່ມຊົນຊົນເຜົ່າທີ່ເປັນຕົວແທນໃນຫຼາຍເຂດຂອງຊຸມຊົນການປູກຝັງໃນເມືອງຂອງເຂົາເຈົ້າ.

### ລັດຖະບານ, ການອຳນວຍຄວາມສະດວກ ແລະ ການບັງຄັບໃຊ້ລະບຽບກົດໝາຍ

ຖ້າວ່າບົດບາດຕົ້ນຕໍຂອງຫ້ອງການກະສິກຳ-ປ້າໄມ້ເມືອງເປັນຕົວແທນ ແລະ ປົກປ້ອງຊາວກະສິກອນຜູ້ຜະລິດໃຫ້ຢູ່ລອດ ແລະ ສາມາດພັດທະນາໄດ້ໃນໄລຍະຍາວນານ, ສິ່ງນີ້ຕ້ອງໄດ້ກຳນົດຢ່າງຈະແຈ້ງ ແລະ ຮັບຮູ້ຢ່າງເປີດເຜີຍ. ກົນໄກການຕິດຕາມ ແລະ ການປະເມີນຜົນ

ຕ້ອງສອດຄ່ອງກັບການຄຸ້ມຄອງການປະຕິບັດຂອງແຕ່ລະຫ້ອງການກະສິກຳປ່າໄມ້ເພື່ອໃຫ້ສອດຄ່ອງກັບຈຸດປະສົງ ແລະ ວິທີການຂອງກະຊວງ. ໃນບ່ອນທີ່ບໍ່ດບາດຫ້ອງການກະສິກຳ-ປ່າໄມ້ບໍ່ສອດຄ່ອງກັບຫຼັກການເຫຼົ່ານີ້ອາດສ້າງຄວາມສ່ຽງ ຫຼື ສ້າງຜົນກະທົບຕໍ່ຊາວກະສິກອນໄດ້ງ່າຍ. ການສ່ອງແສງ ແລະ ການປັບປຸງຈຳເປັນຕ້ອງໄດ້ມີການຈັດຕັ້ງປະຕິບັດຢ່າງຮີບດ່ວນ ແລະ ສອດຄ່ອງກັນ. ຫ້ອງການກະສິກຳປ່າໄມ້ຈຳເປັນຕ້ອງມີອົງກອນທີ່ມີປະສິດທິພາບເພື່ອໃຫ້ການກວດສອບ ແລະ ສ້າງຄວາມດຸນດ່ຽງກັບຄວາມກົດດັນທີ່ເຂົາເຈົ້າໄດ້ປະເຊີນໜ້າຈາກຂະແໜງການຂອງເອກະຊົນ, ແລະ ອົງກອນນີ້ຈຳຕ້ອງໄດ້ປະຕິບັດຢ່າງເດັດດ່ຽວໃນກໍລະນີທີ່ການປະພຶດທີ່ອາດກໍ່ໃຫ້ຜົນກະທົບທາງລົບ. ການເຂົ້າສູ່ອົງກອນນີ້ໂດຍກົງຄວນຈະເຮັດໃຫ້ຊາວກະສິກອນໄດ້ສະແດງອອກເຖິງຄວາມກັງວົນເປັນຕົ້ນແມ່ນສາຍດ່ວນທາງໂທລະສັບຂອງສະພາແຫ່ງຊາດໃນປະຈຸບັນ.

## ລັດຖະບານ ແລະ ການຜະລິດກະສິກຳຂະໜາດນ້ອຍ

ຕາມທັດສະນະຂອງຫ້ອງການກະສິກຳປ່າໄມ້ເມືອງທີ່ສະແດງອອກໃນຊ່ວງສຳມະນາໃນເດືອນພຶດສະພາທີ່ແຂວງຫຼວງພະບາງທີ່ຄິດວ່າພາກລັດເປັນຜູ້ປະສານງານການຜະລິດ ຫຼື ແມ້ແຕ່ການຄວບຄຸມ. ຄວາມຄິດນີ້ອາດຈະບໍ່ແມ່ນທົ່ວໄປ ແລະ ອາດຈະເປັນວິທີການປະຕິບັດທີ່ສືບທອດກັນມາສຳລັບການຈັດຕັ້ງການຜະລິດກະສິກຳເຊິ່ງມີການນຳໃຊ້ກ່ອນການນຳສະເໜີກົນໄກເສດຖະກິດໃໝ່ໃນປີ 1986. ແນວຄວາມຄິດນັ້ນອາດສະທ້ອນເຖິງນະໂຍບາຍທີ່ເປັນທາງການເຊັ່ນນັ້ນ ຫຼື ບໍ່; ມັນເປັນໄປບໍ່ໄດ້ທີ່ຈະປະຕິບັດໃຫ້ມີປະສິດທິພາບ ແລະ ມີປະສິດທິຜົນເນື່ອງຈາກວ່າຂະໜາດ ແລະ ຄວາມສັບສົນຂອງການດຳເນີນການໃນຕະຫຼາດກະສິກຳນັ້ນອາດເກີນຄວາມສາມາດຂອງອົງການຈັດຕັ້ງຂອງລັດ. ຄວາມລະອຽດກ່ຽວກັບກິດຈະກຳທາງດ້ານເສດຖະກິດເຫຼົ່ານີ້ເປັນບ່ອນກຳເນີດທາງດ້ານທຳມະຊາດຂອງເອກະຊົນ: ຊາວກະສິກອນສາມາດຕັດສິນໄດ້ດີທີ່ສຸດວ່າຄວນຈະປູກຫຍັງໃສ່ດິນຂອງເຂົາເຈົ້າ, ນັກລົງທຶນຈະສາມາດຕັດສິນໃຈໄດ້ດີທີ່ສຸດວ່າພືດສະນິດໃດທີ່ພວກເຂົາຄວນຈະໃຊ້ເປັນຊັບພະຍາກອນຂອງເຂົາເຈົ້າ; ແລະ ຊາວກະສິກອນ ແລະ ພໍ່ຄ້າຈະສາມາດຕັດສິນໃຈໄດ້ດີທີ່ສຸດວ່າເມື່ອໃດ, ພາຍໃຕ້ເງື່ອນໄຂໃດຮູບແບບໃດທີ່ຈະກຳນົດສັນຍາເຮັດໃຫ້ແລ້ວຢ່າງສົມບູນ. ການນຳໃຊ້ຊັບພະຍາກອນຂອງຫ້ອງການກະສິກຳປ່າໄມ້ເມືອງທີ່ດີທີ່ສຸດບໍ່ແມ່ນເພື່ອການຄວບຄຸມ ແລະ ການກຳນົດສັນຍາແຕ່ເປັນຜູ້ແນະນຳ, ໃຫ້ຂໍ້ມູນຊາວກະສິກອນກ່ຽວກັບບັນຫາທີ່ສຳຄັນ ເຊັ່ນ: ຄວາມສ່ຽງ, ຜົນປະໂຫຍດ ແລະ ໃຫ້ຄຳແນະນຳຕໍ່ຊາວກະສິກອນ ແລະ ນັກລົງທຶນກ່ຽວກັບການປະຕິບັດທີ່ຍຸດຕິທຳ ແລະ ໄດ້ຮັບຜົນ.

## ຄວາມຍືນຍົງທາງຂອງລະບົບນິເວດກະສິກຳ

ໃນປະຈຸບັນໃນການຜະລິດທີ່ຍືນຍົງ, ການຜະລິດແບບມີຂໍ້ຕົກລົງບໍ່ໄດ້ພິຈາລະນາຄວາມອາດສາມາດໃນການຮອງຮັບຂອງນິເວດວິທະຍາກະສິກຳໄລຍະຍາວຢ່າງອັດຕະໂນມັດ. ສະນັ້ນ, ຈຶ່ງເໝາະສົມສຳລັບລັດຖະບານທີ່ຈະສ້າງກົນໄກການກວດສອບສຳລັບໂຄງການສະເໜີການລົງທຶນຂະໜາດໃຫຍ່ ແລະ ຊ່ວຍອອກແບບພັດທະນາລະບົບຂໍ້ມູນ ແລະ ການຕັດສິນໃຈ ເພື່ອຊ່ວຍເຫຼືອຊາວກະສິກອນໃນການພິຈາລະນາຜົນກະທົບຂອງນິເວດວິທະຍາຈາກການຜະລິດເປັນສິນຄ້າ.

## ທິດຊີ້ນຳ ແລະ ເຄື່ອງມື

ເຄື່ອງມື ແລະ ທິດຊີ້ນຳເຫຼົ່ານີ້ຄວນຈະປະກອບດ້ວຍຂໍ້ມູນຂ່າວສານ ແລະ ການວິເຄາະຄວາມສ່ຽງທີ່ເປັນໄປໄດ້, ລາຄາ ແລະ ຜົນປະໂຫຍດທີ່ຫຼາຍພາກສ່ວນມີສ່ວນຮ່ວມໃນການຜະລິດແບບມີຂໍ້ຕົກລົງ, ການສ້າງຄວາມຊຳນານການໃນການເຈລະຈາ ແລະ ການຕັດສິນໃຈ ແລະ ນຳໄປສູ່ການຜະລິດທີ່ເຂັ້ມແຂງ ແລະ ສັນຍາທີ່ຍຸດຕິທຳ. ເຄື່ອງມືເຫຼົ່ານີ້ສາມາດທົບທວນຄືນ, ຂະຫຍາຍເພີ່ມ ຫຼື ປ່ຽນແທນເປັນປະຈຳ, ແຕ່ວ່າຄວນຈະມີເຄື່ອງມືທີ່ເໝາະສົມສຳລັບຜູ້ອຳນວຍຄວາມສະດວກ ແລະ ຊາວກະສິກອນ.

### 11.3. ບົດບາດ ແລະ ຄວາມຮັບຜິດຊອບຂອງຫ້ອງການກະສິກຳ-ປ່າໄມ້ເມືອງໃນການເອື້ອອຳນວຍໃຫ້ການຜະລິດແບບມີຂໍ້ຕົກລົງ

ເພື່ອໃຫ້ສອດຄ່ອງກັບພາລະບົດບາດຂອງຫ້ອງການກະສິກຳປ່າໄມ້ເມືອງ ແລະ ມີທີ່ຕັ້ງທີ່ເໝາະສົມໃນລະບົບການຜະລິດເປັນສິນຄ້າ ຊຶ່ງມີທັງຜູ້ໃຫ້ບໍລິການ ແລະ ອົງກອນທີ່ກ່ຽວຂ້ອງມັນຈຳເປັນທີ່ຈະຕ້ອງໄດ້ກຳນົດບົດບາດກະຊວງກະສິກຳ ແລະ ປ່າໄມ້ໃຫ້ຈະແຈ້ງເພື່ອທຳໜ້າທີ່ສະໜັບສະໜູນການພັດທະນາການຫັນກະສິກຳໄປສູ່ການຄ້າໂດຍສະເພາະແມ່ນການຜະລິດແບບມີຂໍ້ຕົກລົງ.

ເພື່ອເຮັດໃຫ້ຊາວກະສິກອນສາມາດເຂົ້າເຖິງການຜະລິດແບບມີຂໍ້ຕົກລົງທີ່ຍຸຕິທຳ ຈຳເປັນຕ້ອງມີສ່ວນຮ່ວມໃນການສ້າງໄລຍະທ່າງ ແລະ ສ້າງຄວາມເຂັ້ມແຂງໃຫ້ການຈັດຕັ້ງກຸ່ມຜູ້ຜະລິດ, ຊຸ່ມຊົນກະສິກອນ ແລະ ອົງການທີ່ບໍ່ຫວັງຜົນກຳໄລ. ໃນຊ່ວງໄລຍະດຽວກັນ, ຫ້ອງການກະສິກຳປ່າໄມ້ອາດຈະມີຄວາມສຳຄັນ ແລະ ມີຜົນໃນການອຳນວຍຄວາມສະດວກຂອງສັນຍາການຜະລິດຖ້າມີການປັບປຸງຄວາມສາມາດ, ການຄຸ້ມຄອງ ແລະ ຈັດຕັ້ງປະຕິບັດບັນດາກິດຈະກຳຂ້າງລຸ່ມນີ້ຢ່າງຊຳນານການ:

- ໃຫ້ການບໍລິການບ່ອນທີ່ມີຄວາມຕ້ອງການໃນການຊ່ວຍເຫຼືອພຽງຢ່າງດຽວ
- ຈັດຫາຂໍ້ມູນໃຫ້ຊາວກະສິກອນ ແລະ ອົງກອນຂອງຊາວກະສິກອນ ກ່ຽວກັບການເຈລະຈາສັນຍາທີ່ດີ, ການເລືອກຜູ້ລົງທຶນທີ່ດີ, ວິທີການໄກ່ເກ່ຍ ຫຼື ແຫຼ່ງ ສຳລັບການແກ້ໄຂການຮ້ອງທຸກ, ຂໍ້ມູນລາຄາໃນຕ່າງປະເທດ, ປະຫວັດຄວາມເປັນມາ ແລະ ການປະຕິບັດງານຂອງຜູ້ລົງທຶນຢ່າງຮອບດ້ານ, ໂອກາດທີ່ຈະບັນລຸຄວາມຕ້ອງການຂອງຜະລິດຕະພັນຕ່າງໆ
- ອຳນວຍຄວາມສະດວກໃຫ້ກຸ່ມຊາວກະສິກອນເພື່ອຈັດຕັ້ງກຸ່ມຜູ້ຜະລິດໃນການຜະລິດແບບມີຂໍ້ຕົກລົງ
- ເປັນສື່ກາງຊຸກຍູ້ການເຈລະຈາແບບຊື່ສັດ ແລະ ເປີດເຜີຍ. ໃນບ່ອນໃດທີ່ຊາວກະສິກອນສາມາດຮັບປະກັນການຈັດຕັ້ງປະຕິບັດ ອາດສາມາດຍິນຍອມ ແລະ ບໍ່ເຂົ້າຮ່ວມຢ່າງເຕັມຕົວ
- ສ້າງທາງເລືອກ ສັນຍາການຜະລິດ ແລະ ຜະລິດຕະພັນໃຫ້ຜູ້ລົງທຶນ,
- ດຶງດູດເອົານັກລົງທຶນທີ່ມີຄຸນນະພາບໂດຍການສະໜັບສະໜູນທີ່ເປັນຜົນດີ ແລະ ທຸລະກິດທີ່ຍຸຕິທຳ ກັບວິທີການທີ່ເປັນມາດຕະຖານ ແລະ ກົດລະບຽບທີ່ໝັ້ນຄົງສຳລັບນັກລົງທຶນ
- ສະໜັບສະໜູນການຮຽນຮູ້ຂອງຊາວກະສິກອນກ່ຽວກັບເຕັກໂນໂລຊີການຜະລິດ, ທາງນິເວດວິທະຍາທີ່ຍືນຍົງ ແລະ ຜົນກະທົບທາງດ້ານສິ່ງແວດລ້ອມຂອງການສະເໜີ ເຕັກໂນໂລຊີການຜະລິດເພື່ອເປັນສິນຄ້າ.

## 12. ຂໍ້ແນະນຳ

**ຄຳແນະນຳລວມ**

1. ປັບປຸງສະພາບພື້ນຖານ ແລະ ສະພາບການຂອງເສດຖະກິດກະສິກຳສຳລັບຊາວກະສິກອນ ແລະ ນັກລົງທຶນ ເຊິ່ງຈະຊ່ວຍກຳນົດບົດບາດ ແລະ ຄວາມຮັບຜິດຊອບຂອງຫ້ອງການກະສິກຳປ່າໄມ້ເມືອງ (ແລະ ອົງກອນອື່ນໆ).
2. ປະເມີນ ການປະຕິບັດງານ ແລະ ສ້າງຄວາມຮັບຜິດຊອບ ທີ່ເຊື່ອມຕໍ່ກັບການໃຫ້ລາງວັນ ສຳລັບພະນັກງານທ້ອງຖິ່ນ ໂດຍການປະຕິບັດງານ ທີ່ຜ່ານກົນໄກການສ່ອງແສງທີ່ໂປ່ງໃສ ຈາກຊາວກະສິກອນ ແລະ ນັກລົງທຶນ ເພື່ອຕັດສິນ ການສະໜັບສະໜູນ ແລະ ການບໍລິການທີ່ເຂົາເຈົ້າໄດ້ຮັບ ແລະ ຕິດຕາມກ່ຽວກັບບາງບັນຫາທີ່ມີມາດຕະການທີ່ເຂັ້ມແຂງແລະຖືກຕ້ອງ.
3. ສ້າງອົງກອນກຳນົດການຕັດສິນທີ່ຈະແຈ້ງ (ກໍລະນີ 8) ປະຈຸບັນນີ້ມີຫຼາຍອົງກອນ ມີອຳນາດ ແລະ ຄວາມຮັບຜິດຊອບສຳລັບຫຼາຍດ້ານ ຂອງທຸລະກິດ ກະສິກຳເຊິ່ງເປັນການສູນເສຍຊັບພະຍາກອນທີ່ມີຄ່າຂອງລັດຖະບານ ແລະ ສ້າງ ຄວາມສັບສົນໃຫ້ຊາວກະສິກອນ ແລະ ນັກລົງທຶນ ເຊິ່ງອາດຈະຖືກໃຊ້ໃຫ້ເກີດປະໂຫຍດໂດຍນັກລົງທຶນ ແລະ ສິ່ງຜົນໃນບັນຫາຂອງຊາວກະສິກອນ ແລະ ນັກລົງທຶນຄາດຫວັງວ່າ ຫ້ອງການກະສິກຳປ່າໄມ້ເມືອງ ຈະເປັນຜູ້ແກ້ໄຂ.
4. ຄຸນນະພາບຂອງສິ່ງແວດລ້ອມທາງດ້ານເສດຖະກິດເພື່ອດຶງດູດເອົານັກລົງທຶນທີ່ມີຄຸນະພາບ (ກໍລະນີ 6) ນັກລົງທຶນທີ່ມີຄຸນນະພາບໃຫ້ການຊ່ວຍເຫຼືອທີ່ຈະແຈ້ງ, ກົດລະບຽບ ແລະ ຂໍ້ກຳນົດທີ່ໂປ່ງໃສເປັນຕົ້ນແມ່ນການປະກັນພື້ນທະບັດ, ປະຕິບັດໂດຍອົງກອນທີ່ມີຄວາມຮັບຜິດຊອບທີ່ຈະແຈ້ງເພື່ອກຳນົດການບໍລິການໂດຍຜ່ານການບໍລິການຜ່ານປະຕູດຽວໃນວັນດຽວ
5. ສ້າງໄລຍະຫ່າງກາລະໂອກາດຫຼາຍດ້ານໃຫ້ແກ່ຜູ້ໃຫ້ການບໍລິຫານ ທີ່ບໍ່ແມ່ນລັດຖະບານ, ອົງກອນຂອງຊາວກະສິກອນ, ອົງການຈັດຕັ້ງທີ່ອີງໃສ່ຊຸມຊົນ, ສະມາຄົມທີ່ບໍ່ຫວັງຜົນກຳໄລ, ທຸລະກິດຈຸລະພາກ ແລະ ຂະໜາດນ້ອຍ, ກຸ່ມຜູ້ຜະລິດ ແລະ ອື່ນໆ ເພື່ອອຳນວຍຄວາມສະດວກ ແລະ ການເຈລະຈາໂດຍກົງກັບນັກລົງທຶນໂດຍອີງໃສ່ ຈຸດຢືນຂອງເຂົາເຈົ້າ.
6. ກົດລະບຽບທີ່ໄດ້ມາດຕະຖານ (ກໍລະນີ 10) ຮັບປະກັນກົດລະບຽບສຳລັບ ທຸລະກິດກະສິກຳ ແລະ ການຄ້າທີ່ຖືກປະຕິບັດຄືກັນໃນທຸກເມືອງ ແລະ ຊີ້ນຳໂດຍຫຼັກການທີ່ມີປະສິດທິພາບ ແລະ ຄວາມສະດວກໃນການສົ່ງເສີມການຜະລິດ ແລະ ການຄ້າໂດຍຊາວກະສິກອນ ແລະ ນັກລົງທຶນ.
7. ການໄກ່ເກ່ຍສ້າງຕັ້ງ ແລະ ເຜີຍແຜ່ວິທີການທີ່ງ່າຍເປັນມາດຕະຖານ ແລະ ໂປ່ງໃສພາຍໃນຊຸມຊົນເພື່ອແກ້ໄຂຂໍ້ຂັດແຍ່ງ ລະຫວ່າງ ຊາວກະສິກອນ ແລະ ນັກລົງທຶນ ເຊິ່ງປະຈຸບັນນີ້ ແມ່ນມີຄວາມສ່ຽງຂອງການບໍ່ແກ້ໄຂຂໍ້ຂັດແຍ່ງເຊິ່ງອາດຈະເຮັດໃຫ້ສິ່ງແວດລ້ອມທາງດ້ານທຸລະກິດເສຍຫາຍ (Fullbrook, 2007).
8. ຄວາມຍືນຍົງ (ກໍລະນີ 5) ການລວບລວມທຶນໂດຍສັນຍາການຜະລິດໃຫ້ການຄາດຫວັງຂອງການສ້າງລາຍຮັບ ແລະ ຫຼຸດຜ່ອນຄວາມທຸກຍາກ, ເຖິງຢ່າງໃດກໍ່ຕາມ ສິ່ງນີ້ກໍ່ອາດຈະນຳໄປສູ່ການນຳໃຊ້ຊັບພະຍາກອນທີ່ບໍ່ຍືນຍົງ. ເພື່ອປ້ອງກັນຂັດຄ້ານຄວາມເປັນໄດ້ນີ້ ແລະ ຮັບປະກັນການຢູ່ຕໍ່ໄປໄດ້ຂອງການປູກຝັງທາງດ້ານການຄ້າຢ່າງຖືກຕ້ອງ ຄືກັບຂະແໜງກະສິກຳທີ່ເຕີບໂຕໃນດ້ານມູນຄ່າ (Grantham, 2011) ຂະແໜງການຕ້ອງການລະບຽບໃໝ່ ແລະ ລະບົບການຄຸ້ມຄອງທີ່ສຸມໃສ່ຄວາມຍືນຍົງຂອງລະບົບການບໍລິການນິເວດວິທະຍາ.
9. ດ້ານອົງການຈັດຕັ້ງ, ປັບປຸງໂຄງສ້າງຄືນໃໝ່ເພື່ອສະໜັບສະໜູນການຊ່ວຍເຫຼືອດ້ານກະສິກຳໃນພື້ນທີ່ການຜະລິດໃນທຳມະຊາດແທນທີ່ຂອບເຂດການເມືອງຂອງເມືອງເພື່ອຫຼຸດຕົ້ນທຶນ ແລະ ປັບປຸງໃຫ້ມີປະສິດທິພາບ ແລະ ປະສິດທິຜົນ.

ການກະສິກຳແບບຍືນຍົງ

1. ກຳນົດ ແລະ ສ້າງຄວາມເຂົ້າໃຈເຖິງຄຸນລັກສະນະພິເສດ ແລະ ຈຸດເລີ້ມຕົ້ນຂອງເຂດນິເວດວິທະຍາທາງດ້ານກະສິກຳ
2. ສະໜັບສະໜູນແຜນການຄຸ້ມຄອງສິ່ງແວດລ້ອມກະສິກຳຂອງຊຸມຊົນ ແລະ ປະຕິບັດການບໍລິການເພື່ອຮັກສາລະບົບນິເວດວິທະຍາ (ກໍລະນີ 5)
3. ກວດສອບສະຖານະພາບທາງດ້ານນິເວດວິທະຍາຂອງເນື້ອທີ່ການຜະລິດ
4. ການຄົ້ນຄວ້າພັດທະນາ ແລະ ສົ່ງເສີມນິເວດວິທະຍາທີ່ຍືນຍົງ ແລະ ວິທີການຄືນສູ່ສະພາບເດີມຂອງການປະຕິບັດກະສິກຳ ເຊິ່ງປອດໄພສຳລັບຊາວກະສິກອນ (Fullbrook, 2007, p. 20) ໂດຍອາໃສການສ້າງຕັ້ງຄວາມຊຳນານແລະ ປະສົບການໃນລະດັບສາກົນເຊິ່ງລວມມີຫຼັກການການກະສິກຳນິເວດວິທະຍາຂອງປະເທດທີ່ກຳລັງພັດທະນາ ເຊິ່ງລວມມີ ບຣາຊິວ, ກຸຍບ້າ, ຄອດຕະຣິກ້າ, ເມກຊິໂກ ແລະ ຫວຽດນາມ
5. ໃຫ້ການຊ່ວຍໃນການກວດສອບເຊື້ອພະຍາດ ແລະ ການຄຸ້ມຄອງ ແລະ ການປະຕິບັດການຜະລິດທີ່ປອດໄພ (Fullbrook, 2007, p. 19)

## ສິ່ງແວດລ້ອມຂອງວິສາຫະກິດ

1. ຈັດຫາຂໍ້ມູນລະອຽດກ່ຽວກັບສະພາບທາງດ້ານກະສິກໍາ ແລະ ພື້ນທີ່ເໝາະສົມໃຫ້ ຊາວກະສິກອນ ແລະ ນັກລົງທຶນ (ກໍລະນີ 5 ແລະ 6) (Fullbrook, 2007, p. 37)
2. ຮຽກຮ້ອງໃຫ້ຊາວກະສິກອນ ແລະ ນັກລົງທຶນນໍາໃຊ້ສັນຍາການຜະລິດທີ່ເປັນມາດຕະຖານເຊິ່ງມີຄວາມຈະແຈ້ງ ແລະ ສະເໝີພາບກັນ ເປັນສິ່ງທີ່ຈໍາເປັນຕ້ອງເຮັດກ່ອນເພື່ອເຂົ້າສູ່ການບໍລິການ ຂອງລັດຖະບານ ແລະ ສະໜັບສະໜູນການໄກ່ເກ່ຍ
3. ຄຸ້ມຄອງແຜນການປະກັນທີ່ຮຽກຮ້ອງໃຫ້ນັກລົງທຶນຕ້ອງມັດຈໍາ ການປະຕິບັດງານ (ຫຼືການຈ່າຍເງິນລ່ວງໜ້າໂດຍສັນຍາທີ່ມີຜົນປະໂຫຍດກັບຊາວກະສິກອນ) ດັ່ງທີ່ໄດ້ເຮັດໄວ້ກ່ອນສໍາລັບການສອບສວນໃນການຜະລິດກັບຊາວກະສິກອນ (ກໍລະນີ 6)
4. ປະສານງານກັບຜູ້ໃຫ້ບໍລິການ ການພັດທະນາທຸລະກິດລວມທັງ ກິດຈະການ ທາງສັງຄົມ ( ກໍລະນີ 1) ເພື່ອອໍານວຍຄວາມສະດວກກັບຄວາມຕ້ອງການທີ່ຊັບເຊື່ອນ ການບໍລິການສໍາລັບສັນຍາການຜະລິດ
5. (ກໍລະນີ 8) ສະໜັບສະໜູນຄວາມໂປ່ງໃສ ແລະ ການໄກ່ເກ່ຍທີ່ເໝາະສົມໃນຊຸມຊົນ (Fullbrook, 2007, pp. 19, 37)
6. ກະຕຸກຊຸກຍູ້ ພະນັກງານພາກສະໜາມໂດຍການຈ່າຍເງິນທີ່ເປັນສິ່ງຈູງໃຈທີ່ຂຶ້ນກັບ ການສ່ອງແສງທີ່ເປັນຜົນດີ ໂດຍຜ່ານ ການຈັດການບໍລິການທີ່ໜ້າພໍໃຈໂດຍ ຊາວກະສິກອນ ແລະ ນັກລົງທຶນ

ຜູ້ມີສ່ວນຮ່ວມໃນການພັດທະນາ

ລັດຖະບານສາມາດເປັນຜູ້ມີສ່ວນຮ່ວມໃນການພັດທະນາໂດຍກົງໂດຍນໍາໃຊ້ຊັບພະຍາກອນ ແລະ ຄວາມຊໍານານຂອງເຂົາເຈົ້າສໍາລັບການແກ້ໄຂບັນຫາຊົ່ວຄາວ ທີ່ສຸມໃສ່ການພັດທະນາຄວາມສາມາດຂອງອົງກອນກະສິກໍາເພື່ອອໍານວຍຄວາມສະດວກໃນສັນຍາທີ່ສະເໝີພາບກັນ ແລະ ສ້າງສິ່ງແວດລ້ອມທີ່ສາມາດ ສົ່ງເສີມການຄ້າດ້ານກະສິກໍາ.

1. ການຄົ້ນຄວ້າທົດລອງຂອງການຜະລິດການຄ້າ ແລະ ຄວາມຍືນຍົງ ແລະ ການພັດທະນາແຜນການຄຸ້ມຄອງສິ່ງແວດລ້ອມຂອງຊຸມຊົນ ທີ່ທັນປ່ຽນການຄົ້ນພົບ ແລະ ປະສົບການເຂົ້າໃນໂຄງການຝຶກອົບຮົມສໍາລັບຊາວກະສິກອນ ແລະ ພະນັກງານ (ກໍລະນີ 5)
2. ໂຄງການ ຝຶກອົບຮົມກະສິກໍາແບບຍືນຍົງສໍາລັບຊາວກະສິກອນ, ນັກລົງທຶນ ແລະ ພະນັກງານ
3. ຄົ້ນຄວ້າ ແລະ ການພັດທະນາການປະຕິບັດກະສິກໍາແບບຍືນຍົງ, ອີງໃສ່ປະສົບການໃນບັນດາປະເທດທີ່ກໍາລັງພັດທະນາ, ແລະ ການຝຶກອົບຮົມສໍາລັບຊາວກະສິກອນ ແລະ ພະນັກງານທີ່ຈະສືບຕໍ່ນໍາໃຊ້ ວິທີການໃໝ່ ກ່ຽວກັບ ການຜະລິດທີ່ຍືນຍົງ
4. ພັດທະນາ ແລະ ສະໜັບສະໜູນໂຮງຮຽນທຸລະກິດຊາວກະສິກອນເພື່ອເດີນທາງໄປສູ່ຂຸມຊົນທາງດ້ານກະສິກໍາເພື່ອເຕີມຊ່ອງວ່າງທາງດ້ານຄວາມຮູ້ກ່ຽວກັບທຸລະກິດກະສິກໍາ, ການຕະຫຼາດ, ແລະ ລາຄາດັ່ງນັ້ນ ຊາວກະສິກອນສາມາດສ້າງຄວາມຜິດໃຫ້ໜ້ອຍລົງໄດ້, ສາມາດປະຕິເສດການຕໍ່ລອງທີ່ບໍ່ເປັນຜົນດີ ແລະ ບັນຫາໃນປະຈຸບັນ ເພື່ອໃຫ້ ຫ້ອງການກະສິກໍາປ່າໄມ້ເມືອງ ຫຼື ອົງການຈັດຕັ້ງອື່ນໆ ຂອງລັດຖະບານ (ກໍລະນີ 3, 4, 5, 7, 9, 10, ແລະ 12)
5. ເພື່ອເລັ່ງໃຫ້ຊາວກະສິກອນເຂົ້າສູ່ ຂໍ້ມູນທາງດ້ານກະສິກໍາໂດຍຜ່ານເຕັກໂນໂລຊີຂໍ້ມູນການສື່ສານເຂົ້າສູ່ລາຄາ ແລະ ຂ່າວກະສິກໍາເພື່ອຫຼຸດຜ່ອນຂໍ້ມູນທີ່ບໍ່ສົມສ່ວນກັນເຊິ່ງປະຈຸບັນນີ້ເຮັດໃຫ້ຊາວກະສິກອນເສຍປຽບໃນການຕໍ່ລອງລາຄາກັບນັກລົງທຶນທີ່ເປັນຜົນລົບສໍາລັບຄວາມພະຍາຍາມໃນການຫຼຸດຜ່ອນຄວາມທຸກຍາກ (ກໍລະນີ 4, 5, 7, 9, 10, ແລະ 12)
6. ສົ່ງເສີມໃຫ້ຜູ້ຜະລິດເປັນເຈົ້າຂອງອົງກອນ (ການຄ້າ ຫຼື ເສດຖະກິດສັງຄົມ, ສະຫະກອນ ແລະ ອື່ນໆ) ເພື່ອສົ່ງເສີມຕະຫຼາດກະສິກໍາຢ່າງມີປະສິດທິພາບ ແລະ ຂໍ້ມູນການຜະລິດ ທີ່ໃຫ້ພະລັງກັບ ຊາວກະສິກອນໃຊ້ການລິເລີ່ມການຕັດສິນໃຈ ແລະ ສິດທິ ທີ່ບໍ່ພົວພັນໃນສັນຍາຖ້າວ່າເຂົາເຈົ້າບໍ່ເຫັນດີນໍາ.
7. ສະໜັບສະໜູນການພັດທະນາຂອງສະໂມສອນກະສິກອນສໍາລັບເລື່ອງທີ່ໄດ້ເນັ້ນໜັກ, ເປັນຕົ້ນແມ່ນຢາຂ້າຫຍ້າທີ່ເປັນທໍາມະຊາດ ແລະ ຢາຂ້າແມງໄມ້, ການຄຸ້ມຄອງສັດທີ່ທໍາລາຍພືດ, ການປູກພືດຫຼາຍຊະນິດ, ການລ້ຽງສັດ, ການດໍາເນີນການ, ການປ່ຽນແປງຂອງດິນຟ້າອາກາດເປັນເຄື່ອງມືພາຍໃນການຂະຫຍາຍຄວາມສາມາດ ແລະ ການບໍລິການພາຍໃນຊຸມຊົນກະສິກໍາດ້ວຍວິທີນີ້ຈຶ່ງອະນຸຍາດໃຫ້ອົງການຈັດຕັ້ງທ້ອງຖິ່ນ ສຸມໃສ່ການຈໍາກັດຊັບພະຍາກອນກ່ຽວກັບການປະຕິບັດງານເພື່ອແນະນໍາບົດບາດ ແລະ ຄວາມຮັບຜິດຊອບ.
8. ສະໜັບສະໜູນການພັດທະນາຂອງຜູ້ອໍານວຍຄວາມສະດວກທາງດ້ານເສດທະກິດສັງຄົມ (ກໍລະນີ 1) ເພື່ອເຊື່ອມຕໍ່ກັບຊາວກະສິກອນກັບຊ່ອງວ່າງຂອງຕະຫຼາດ

## 13. ສະຫຼຸບ

ສັນຍາການຜະລິດມີຄວາມສາມາດເຮັດໃຫ້ຊາວກະສິກອນ ແລະ ນັກລົງທຶນເຫັນໄດ້ເຖິງໂອກາດສຳລັບການຜະລິດ ໂດຍຜົນໄດ້ຮັບເຊິ່ງເປັນຜົນສຳເລັດ, ການວິເຄາະ ຂອງ ກໍລະນີ 11. ເຊິ່ງສະແດງອອກເຖິງອົງປະກອບຂອງຄວາມສຳເລັດ ແລະ ກໍລະນີ 1 ທີ່ບໍ່ປະສົບຜົນສຳເລັດ ທີ່ໄດ້ພົບຄຳຕອບສຳລັບຄຳຖາມເຊິ່ງເປັນທິດຊີ້ນຳຕໍ່ຄວາມຕ້ອງການ

1. ເປັນຫຍັງ ບາງສັນຍາສຳລັບການຜະລິດລະຫວ່າງ ຊາວກະສິກອນ ແລະ ນັກລົງທຶນຈຶ່ງປະສົບຜົນສຳເລັດ?

ຜົນໄດ້ຮັບທີ່ປະສົບຜົນສຳເລັດຂອງສັນຍາການຜະລິດແມ່ນຂຶ້ນກັບຫຼາຍປັດໃຈທັງພາຍນອກ ແລະ ພາຍໃນຂອງສັນຍາ. ປັດໃຈພາຍໃນແມ່ນສັນຍາການຜະລິດທີ່ເປັນລາຍລັກອັກສອນ, ລາຄາໃນຕະຫຼາດການຈ່າຍເງິນລ່ວງໜ້າ ແລະ ລະບົບການຢັ້ງຢືນການຜະລິດ. ປັດໃຈພາຍນອກລວມມີສາຍພົວພັນທາງດ້ານມູນຄ່າ, ຄວາມສົນໃນຂອງສັງຄົມ, ຜູ້ອຳນວຍຄວາມສະດວກ. ມີຜົນຜະລິດທີ່ສູງ ແລະ ການບໍລິໂພກ ແລະ ຂໍ້ມູນທາງດ້ານການຕະຫຼາດ. ປັດໃຈທີ່ໄດ້ຮັບຜົນສຳເລັດສາມາດຖືກສົ່ງເສີມໂດຍນະໂຍບາຍ ແລະ ໂຄງການດັ່ງລຸ່ມນີ້:

- ສັນຍາການຜະລິດທີ່ຂຽນເປັນລາຍລັກອັກສອນ
- ລາຄາຂອງຕະຫຼາດ
- ການຈ່າຍເງິນລ່ວງໜ້າ
- ການຢັ້ງຢືນລະບົບການຜະລິດ
- ການອຳນວຍຄວາມສະດວກ
- ຂໍ້ມູນ ດ້ານການຕະຫຼາດ.

ບໍ່ແມ່ນທຸກປັດໃຈທີ່ຕ້ອງໄດ້ນຳສະເໜີເພື່ອຜົນໄດ້ຮັບທີ່ປະສົບຜົນສຳເລັດ. ເຖິງຢ່າງໃດກໍ່ຕາມ, ຄວາມຫວັງສຳລັບຄວາມສຳເລັດອາດຈະເພີ່ມຂຶ້ນເນື່ອງຈາກປັດໃຈພາຍໃນ ແລະ ພາຍນອກ.

2. ມີຫຍັງແດ່ທີ່ຫ້ອງການກະສິກຳ-ປ່າໄມ້ເມືອງສາມາດປະຕິບັດໄດ້ເພື່ອສົ່ງເສີມການຜະລິດແບບມີຂໍ້ຕົກລົງ ຢ່າງເໝາະສົມ ແລະ ແທດເໝາະກັບສະພາບການຕົວຈິງເພື່ອສົ່ງເສີມການປະຕິບັດງານທີ່ດີຂອງທຸກຝ່າຍ?

ຄວາມສາມາດຂອງຫ້ອງການກະສິກຳ-ປ່າໄມ້ເມືອງແມ່ນມີຜົນກະທົບທີ່ດີໃນຂອບເຂດຈຳກັດຍ້ອນຄວາມບໍ່ແທດເໝາະທາງດ້ານບົດບາດ ແລະ ຄວາມຮັບຜິດຊອບ, ຄວາມສາມາດ, ງົບປະມານ ແລະ ພະນັກງານ. ຖ້າວ່າມີການຕິດຕາມຄຳແນະນຳທີ່ໄດ້ກ່າວມາໃນຂ້າງເທິງ (ພາກ 11) ອາດຈະເຊື່ອມຕໍ່ກັບການເຮັດໃຫ້ ຫ້ອງການກະສິກຳ-ປ່າໄມ້ ເມືອງ ຕອບສະໜອງ ຕໍ່ຜົນປະໂຫຍດ ແລະ ຄວາມຕ້ອງການຂອງຊາວກະສິກອນຂະໜາດນ້ອຍທົ່ວປະເທດ. ໃນການດຳເນີນວຽກງານດັ່ງກ່າວ,ຫ້ອງການກະສິກຳປ່າໄມ້ເມືອງຈະຊ່ວຍໃນລະດັບພາກສະໜາມ ແລະ ບໍ່ພຽງແຕ່ສ້າງສິ່ງແວດລ້ອມທີ່ຍຸຕິທຳສຳລັບຊາວກະສິກອນແຕ່ວ່າສິ່ງແວດລ້ອມທີ່ສາມາດສະໜັບສະໜູນທຸລະກິດທັງສອງຝ່າຍ ໃນສັນຍາ, ຜູ້ຜະລິດ ແລະ ນັກລົງທຶນຢືນຢູ່ໃນຜົນປະໂຫຍດທີ່ຍືນຍົງຈາກການດຳເນີນການທາງການຄ້າ.

ໃນການຕອບຄຳຖາມກ່ຽວກັບຫ້ອງການກະສິກຳປ່າໄມ້ເມືອງ, ທີ່ເຫັນໄດ້ຢ່າງຈະແຈ້ງມັນມີການພົວພັນກັບຂະແໜງການອື່ນໆທີ່ກ່ຽວຂ້ອງຂອງອົງການຈັດຕັ້ງລັດຖະບານຢ່າງກວ້າງຂວາງ. ເຖິງຢ່າງໃດກໍ່ຕາມມີຄວາມເປັນໄປໄດ້ທາງດ້ານວິຊາການໃນການປຸ່ງແປງນີ້ ແລະ ການໃຫ້ພະລັງຂອງການບໍລິການກະສິກອນຂະໜາດນ້ອຍອາດເປັນໄປໄດ້, ມີຫຼາຍບັນຫາ ແລະ ປະເດັນທີ່ຫ້ອງການກະສິກຳ-ປ່າໄມ້ເມືອງໄດ້ປະເຊີນໜ້າທີ່ສະແດງໃຫ້ເຫັນບັນຫາທົ່ວທີ່ພົວພັນເຖິງການປະຕິບັດງານຂອງລັດຖະບານ, ໂດຍສະເພາະແມ່ນໃນລະດັບທ້ອງຖິ່ນ. ເປົ້າໝາຍໃນການຫຼຸດຜ່ອນຄວາມທຸກຍາກ, ການປັບປຸງຊີວິດການເປັນຢູ່ ແລະ ການສ້າງຄວາມເຂັ້ມແຂງຂອງຊາດ ແລະ ການປັບຕົວຄືນສູ່ສະພາບເດີມທີ່ອີງໃສ່ການປັບປຸງໂດຍທົ່ວໄປຂອງລັດຖະບານ, ເພື່ອສ້າງການບໍລິການຂອງລັດຖະບານທີ່ຕອບສະໜອງເຖິງຄວາມສົນໃຈຂອງຊາວກະສິກອນຂະໜາດນ້ອຍ.ການບໍລິການຈາກຫ້ອງການກະສິກຳປ່າໄມ້ເມືອງ ແມ່ນຈະປັບປຸງຂຶ້ນຫຼາຍຖ້າວ່າສິ່ງແວດລ້ອມໂດຍທົ່ວໄປຂອງລັດຖະບານກໍ່ໄດ້ຮັບການປັບປຸງຄືກັນ. ຖ້າວ່າບໍ່ມີຫຍັງທີ່ໄດ້ຖືກດຳເນີນ, ຢ່າງໜ້ອຍສຸດພາວະຂອງການເປັນຜູ້ນຳກໍ່ສາມາດລະບຸໄດ້ຢ່າງຈະແຈ້ງ ແລະ ອະທິບາຍເຖິງອຳນາດ, ການຕັດສິນໃຈ, ຄວາມຮັບຜິດຊອບຂອງຫຼາຍກະຊວງ ແລະ ເຮັດໃຫ້ຫຼາຍອົງການ ແລະ ພະນັກງານມີຄວາມຮັບຜິດຊອບຕໍ່ປະຊາຊົນ.

ສິ່ງທີ່ຊາວກະສິກອນປະເຊີນຢູ່ແມ່ນຄວາມຂາດແຄນ ຫຼື ຈຸດອ່ອນກ່ຽວກັບເງິນທຶນ ແລະ ສິນເຊື່ອ, ສິດໃນການໃຊ້ທີ່ດິນ ແລະ ຂໍ້ມູນ-ຂ່າວສານ. ໂຄງສ້າງຂອງການລົງທຶນ ແລະ ໂອກາດທາງການຕະຫຼາດທີ່ປະໃຫ້ມີຈຸດອ່ອນເງື່ອນໄຂທີ່ບໍ່ສາມາດຊ່ວຍໄດ້ເນື່ອງຈາກອຳນາດທີ່ບໍ່ສົມສ່ວນກັນ. ມີການບໍ່ເຂົ້າຮ່ວມກຸ່ມກັນຫຼາຍ: ອັນໜຶ່ງແມ່ນຄວາມເຂັ້ມແຂງຂອງການຜະລິດພາຍໃຕ້ສັນຍາການຜະລິດຫຼາຍກວ່າຄວາມຍືນຍົງທາງດ້ານນິເວດວິທະຍາ; ອັນທີ່ສອງແມ່ນມີຊາວກະສິກອນຫຼາຍຄົນມີເຈດຈຳນົງທີ່ຈະລົງທຶນໃນການຜະລິດຂອງເຂົາເຈົ້າເອງສຳລັບການເປີດຕະຫຼາດໃນຄະນະທີ່ລັດຖະບານໄດ້ເນັ້ນໜັກໃສ່ສັນຍາການຜະລິດ; ອັນທີ່ສາມແມ່ນທ່າແຮງສູງສຸດຂອງລັດຖະບານເພື່ອອຳນວຍຄວາມສະດວກໃນການເພີ່ມຜົນໄດ້ຮັບທາງດ້ານກະສິກຳໃນ ສປປ ລາວ ອາດຈະອີງໃສ່ອຳນາດການປົກຄອງທີ່ໄດ້ຮັບການສະໜັບສະໜູນຂອງນັກລົງທຶນພາຍນອກ ຫຼື ແມ້ແຕ່ການຜ່ານສິ່ງທີ່ອາດເກີດຂຶ້ນໃນການຕໍ່ລ່ອງທີ່ບໍ່ດີສຳລັບຊາວກະສິກອນ. ບັນຫາເຫຼົ່ານີ້ ແລະ ການບໍ່ເຂົ້າຮ່ວມກຸ່ມຜູ້ຜະລິດເປັນເປັນຫາບໍ່ພຽງແຕ່ຕໍ່ການປັບປຸງສະພາບ ແລະ ຊີວິດການເປັນຢູ່ຂອງຊາວກະສິກອນເທົ່ານັ້ນແຕ່ຍັງມີຜົນຕໍ່ການຜະລິດເພື່ອເປັນສິນຄ້າໃນ ສປປ ລາວ. ມັນອາດເຮັດໃຫ້ຜົນຜະລິດຫຼຸດໜ້ອຍຖອຍລົງ ແລະ ບໍ່ສາມາດສ້າງຂໍ້ຕົກລົງການຜະລິດກັບຜູ້ລົງທຶນ ແລະ ຜະລິດເພື່ອເປັນສິນຄ້າທົ່ວໄປໄດ້.

## ຄວາມທ້າທາຍໃນອານາຄົດ

ການວິເຄາະທີ່ໄດ້ກ່າວມາຂ້າງເທິງນີ້, ການປ່ຽນແປງ ແລະ ການປັບປຸງສຳລັບອຳນາດການປົກຄອງທ້ອງຖິ່ນສະໜັບສະໜູນເປັນຢ່າງດີໃຫ້ແກ່ການຜະລິດແບບມີຂໍ້ຕົກລົງບໍ່ແມ່ນເລື່ອງງ່າຍ ແລະ ບໍ່ສາມາດເກີດຂຶ້ນດ້ວຍຕົວມັນເອງ. ເຫັນໄດ້ຢ່າງຈະແຈ້ງໃນບັນຫາເຫຼົ່ານີ້ໃນການທຳໜ້າທີ່ ທັງໃນນະໂຍບາຍທາງພາກສະໜາມ ແລະ ການປະຕິບັດງານໃນລະດັບທ້ອງຖິ່ນທີ່ມີອົງການໃນລະດັບສາກົນມີສ່ວນຮ່ວມເພື່ອອຳນວຍຄວາມສະດວກ ແລະ ເຮັດໃຫ້ວິທີການນີ້ມີການປ່ຽນແປງ.

ອົງການທີ່ໃຫ້ການຊ່ວຍເຫຼືອທີ່ໃຫຍ່ເປັນຕົ້ນແມ່ນອົງການສະຫະປະຊາຊາດມີຈຸດຢືນໃນການຊ່ວຍເຫຼືອປັບປຸງດ້ານການກຳນົດພາລະບົດບາດ ແລະ ສ້າງຄວາມເຂັ້ມແຂງດ້ານການຈັດຕັ້ງ. ຫຼາຍອົງການທີ່ໃຫ້ການຊ່ວຍເຫຼືອຂະໜາດນ້ອຍເຫັນໄດ້ຄວາມຈຳເປັນ ແລະ ປະກອບສ່ວນໃນການແກ້ໄຂບັນຫານີ້ພ້ອມນັ້ນກໍ່ຊ່ວຍການສ້າງເງື່ອນໄຂສຳລັບການປັບປຸງໃນລະດັບທ້ອງຖິ່ນ. ການດຳເນີນວຽກງານໂດຍກົງໃນລະດັບທ້ອງຖິ່ນໂດຍຜ່ານໂຄງການຊ່ວຍເຫຼືອຕ່າງໆນັ້ນບໍ່ພຽງແຕ່ເປັນການສ້າງຕົວຢ່າງແຕມັນຍັງເປັນການສ້າງພື້ນຖານໃນການປັບປຸງສິ່ງທີ່ຈຳເປັນດ້ານະໂຍບາຍລວມຂອງລັດຖະບານ. ຖ້າວ່າບໍ່ມີຫຍັງໄດ້ຮັບການປັບປຸງໃຫ້ດີຂຶ້ນຄືດັ່ງສະພາບປະຈຸບັນ, ມັນກໍ່ເປັນການປ່ອຍໃຫ້ອຳນາດການປົກຄອງທ້ອງຖິ່ນສ້າງຂໍ້ຕົກລົງຕາມໃຈມັກໂດຍບໍ່ໄດ້ຄຳນຶງເຖິງຄວາມຍືນຍົງ, ການຄ້ຳປະກັນສະບຽງອາຫານ ແລະ ການມີສ່ວນຮ່ວມຂອງຊາວກະສິກອນ. ເປັນສິ່ງທີ່ສຳຄັນສຳລັບຜູ້ຈັດຕັ້ງປະຕິບັດຫຼາຍທ່ານໃນລະດັບຊາດ ແລະ ລະດັບສາກົນທີ່ຕ້ອງໄດ້ວິເຄາະເພື່ອຊອກຫາບັນດາແຫຼ່ງຊັບພະຍາກອນຕ່າງໆ ແລະ ກຳນົດເປົ້າໝາຍເພື່ອປະສານກົມກຽວກັບຂັ້ນຕອນຕ່າງໆເພື່ອເປັນທິດທາງ ແລະ ການອຳນວຍຄວາມສະດວກໃນການສະໜັບສະໜູນຊາວກະສິກອນ.

## 14. ຫົວຂໍ້ສຳລັບການສຶກສາເພີ່ມເຕີມໃນຕໍ່ໜ້າ

- ວິທີການໃດທີ່ຊາວກະສິກອນໃຊ້ເພື່ອເຂົ້າສູ່ໂອກາດ ແລະ ປຽບທຽບໂອກາດ ແລະ ຄວາມສ່ຽງຂອງການເປີດຕະຫຼາດ ແລະ ສັນຍາການຜະລິດ?
- ຊາວກະສິກອນສາມາດເຂົ້າສູ່ຂໍ້ມູນການຕະຫຼາດ ແລະ ເຂົ້າໃຈຂໍ້ມູນການຕະຫຼາດຖືກປັບປຸງໄດ້ແນວໃດ?
- ອຸປະສັກໃດທີ່ຊາວກະສິກອນປະເຊີນໜ້າໃນການຄົ້ນຫາຜູ້ຊື້ ແລະ ລາຄາທີ່ດີກວ່າ ແລະ ເງື່ອນໄຂ?
- ຊາວກະສິກອນສາມາດບໍລິຫານ ແລະ ສ້າງຜົນປະໂຫຍດສູງສຸດຂອງການແບ່ງປັນສົມບັດ ແລະ ຜົນປະໂຫຍດລະຫວ່າງນັກລົງທຶນ ແລະ ພໍ່ຄ້າ?
- ເປັນຫຍັງຈຶ່ງຕ້ອງມີການຈ່າຍເງິນລ່ວງໜ້າເປັນຕົ້ນແມ່ນພັດທະນບັດ, ຄ່າທຳນຽມທີ່ດິນ ແລະ ອັດຕາດອກເບັ້ຍສິນເຊື່ອທີ່ບໍ່ໄດ້ເສຍເງິນ, ບໍ່ໄດ້ຖືກນຳໃຊ້ໃນສັນຍາການຜະລິດຢ່າງກວ້າງຂວາງ ແລະ ຜົນສະທ້ອນຂອງເຂົາເຈົ້າແມ່ນຫຍັງ?
- ຊາວກະສິກອນສາມາດໃຊ້ອິດທິພົນເພື່ອຮັບປະກັນຕົວແທນທີ່ອຳນວຍຄວາມສະດວກທີ່ໄດ້ຮັບດີທີ່ສຸດ?
- ແມ່ນຫຍັງແມ່ນເງິນປະກັນໄພທີ່ຍຸຕິທຳສຳລັບລາຄາສິນຄ້າສະພາບຂອງຕະຫຼາດໃນການຕອບແທນສຳລັບການຈັດຫາສະເຖຍລະພາບ, ຄວາມໄວ້ວາງໃຈ ແລະ ສິນເຊື່ອດອກເບ້ຍທີ່ບໍ່ໄດ້ເສຍເງິນ?
- ເປັນຫຍັງຈຶ່ງມີການກະຕຸ້ນຈາກຜູ້ອຳນວຍຄວາມສະດວກທາງການຕະຫຼາດໜ້ອຍດຽວ ແລະ ການບໍລິການຂອງເຂົາເຈົ້າສາມາດຖືກພັດທະນາດ້ວຍວິທີໃດເພື່ອໃຫ້ມີການນຳໃຊ້ຢ່າງກວ້າງຂວາງເຕີມອີກ?
- ສັນຍາການຜະລິດສາມາດປະຕິບັດການຜະລິດແບບຍືນຍົງໄດ້ດ້ວຍວິທີໃດ ແລະ ວິທີການ ແລະ ຫຼັກການປະຕິບັດໃດເປັນຕົ້ນແມ່ນນິເວດວິທະຍາທາງດ້ານກະສິກຳສາມາດຖືກພັດທະນາໃຫ້ເໝາະສົມກັບສິ່ງແວດລ້ອມຂອງສປປ ລາວໄດ້ແນວໃດ?
- ແມ່ນຫຍັງເປັນສິ່ງທີ່ຄວບຄຸມໂຄຕ້າ ຫຼື ສະໜັບສະໜູນໂດຍລັດຖະບານຈີນວາງແນວທາງທີ່ໜ້າສົນໃຈ ແລະ ພຶດຕິກຳຂອງນັກລົງທຶນເສດຖະກິດຈາກຫຼາຍບ່ອນທີ່ໄກຈາກ ສປປ ລາວ?
- ຜະລິດຕະພັນໃດໃນ ສປປ ລາວ ສາມາດຜະລິດເພື່ອແຂ່ງຂັນສຳລັບຕະຫຼາດ ໃນ ປະເທດ ຈີນ?
- ລະບອບຂອງການລົງທຶນໄດ້ໃຫ້ສິດທິພິເສດໃນການຄັດເລືອກນັກລົງທຶນແນວໃດເພື່ອຫຼຸດຜ່ອນຄວາມທຸກຍາກ ແລະ ຜົນປະໂຫຍດຂອງຊີວິດການເປັນຢູ່ຂອງຊາວກະສິກອນ?

## 15. ເອກະສານຊ້ອນທ້າຍ

### ລາຄາຜູ້ຜະລິດ ແລະ ລາຄາຜູ້ບໍລິໂພກ ທີ່ປັກກິ່ງ

ລາຄາ/ກິໂລ (ເປັນເງິນຢວນ 1 = 1,250 ກີບ)

| ສ ປ ປ ລາວ, ໜ້າຟາມ | | ປັກກິ່ງ, ຂາຍຍ່ອຍ | | |
|---|---|---|---|---|
| ໝາກກ້ວຍ | 0.25 | ຫ້າງສັບພະສິນຄ້າ | ຕະຫຼາດສົດ | |
| | | 11.2 | 7 | ນຳເຂົ້າ |
| | | 9.6 | 5-6.2 | ພາຍໃນ |
| | 1 | 7.2 | 5-6 | |
| | 0.5-1.3 | 10-11 | 6-7 | |
| ຂໍ້ມູນລວບລວມທີ່ ສປປ ລາວ ເມສາ/ພຶດສະພາ 2011 | | ຂໍ້ມູນລວບລວມທີ່ ປັກກິ່ງ ພຶດສະພາ 2011 | | |

### ຫົວໜ່ວຍ ແລະ ອັດຕາແລກປ່ຽນ

#### ພື້ນທີ່

1 ເຮັກຕາ = 10,000 ມ²
= 15 ໝູ່ (ຈີນ)
= 6.25 ໄຣ່ (ໄທ)

#### ເງິນຕາ

| ສປປ ລາວ | ສປ ຈີນ | ໄທ | ສະຫາລັດອາເມລິກາ |
|---|---|---|---|
| ກີບ | ຢວນ | ບາດ | ໂດລາ |
| | = 10 ໂຈ | = 100 ສະຕາງ | = 100 ເຊັນ |
| | 1 ໂຈ = 10 ຟົນ | | |

#### ອັດຕາແລກປ່ຽນ

| | ໂດລາ | ກີບ | ຢວນ | ບາດ |
|---|---|---|---|---|
| ໂດລາ | 1 | 8100 | 6.5 | 30 |
| ກີບ | 0.00012 | 1 | 0.0008 | 0.00362 |
| ຢວນ | 0.15396 | 1250 | 1 | 4.52868 |
| ບາດ | 0.03288 | 260 | 0.21330 | 1 |

ຂໍ້ມູນໃນເດືອນເມສາ-ພຶດສະພາ 2011 ຈາກ *oanda.com*

## ເອກະສານອ້າງອີງ


- Altieri, Miguel. "Agroecology: the science of natural resource management for poor farmers in marginal environments." Agriculture, Ecosystems and Environment 93, no. 1 (2002): 1-24.
- Diana, Antonella. "Navigating the Way through the Market: A First Assessment of Contract Farming in Luang Namtha." Deutsche Gesellschaft für Technische Zusammenarbeit, Vientiane, 2008.
- Eaton, Charles, and Andrew Shephard. "Contract farming - Partnerships for growth." Food and Agriculture Organization, Rome, 2001.
- Fujita, Yayoi, Sithong Thongmanivong, and Thoumthone Vongvisouk. "Dynamic Land Use Change in Sing District, Luang Namtha Province, Lao PDR." Faculty of Forestry, National University of Laos, Vientiane, 2006.
- Fullbrook, David. "Contract farming in the Lao PDR: cases and questions." Laos Extension for Agriculture Project/Helvetas, Vientiane, 2007.
- Fullbrook, David. "Development in the Lao PDR: the food security paradox." Swiss Agency for Development and Cooperation, Vientiane, 2010.
- Gebert, Rita. "Farmer Bargaining Power in the Lao PDR: Possibilities and Pitfalls." Sub-Working Group on Farmers and Agribusiness & Helvetas, Vientiane, 2010.
- Grantham, Jeremy. "Resource Limitations 2: Seperating the dangerous from the merely serious." Grantham Mayo Van Otterloo LLC, Boston, 2011.
- Hooper, D., et al. "Effects of biodiversity on ecosystem functioning: a consensus of current knowledge. " Ecological Monographs 75, no. 1 (2005): 3–35.
- Lin, Song. "FDI in Agriculture in Northern Lao PDR: A Case Study of Luang Namtha." Deutsche Gesellschaft fürTechnische Zusammenarbeit (GTZ), Vientiane, 2010, 37.
- MAF. "Agricultural Master Plan 2011-2015 - final draft." Ministry of Agriculture and Forestry, Vientiane, 2010.
- Pretty, J.N., et al. "Resource-Conserving Agriculture Increases Yields in Developing Countries. " Environmental Science and Technology 40, no. 4 (2006): 1114–1119.
- Scheffer, Marten, Steve Carpenter, Jonathan Foley, Carl Folke, and Brian Walker. "Catastrophic shifts in ecosystems." Nature 413 (October 2001): 591-596.
- Shi, Weiyi. "Rubber Boom in Luang Namtha - A Transnational Perspective." Deutsche Gesellschaft für Technische Zusammenarbeit, Vientiane, 2008.
- Swift, M., A. Izac, and M. van Noordwijk. "Biodiversity and ecosystem services in agricultural landscapesare we asking the right questions?" Agriculture, Ecosystems and Environment 104 (2004): 113–134.
- Turnell, Sean. "The Elastic Margin: Central Banking Theory and Practice in Colonial Burma. " Proceedings of the 20th Conference of the History of Economic Thought Society of Australia. Brisbane: School of Economics, University of Queensland, 2007. 15.
- Zhao, Suisheng. "The making of China's periphery policy." In Chinese Foreign Policy, by Suisheng Zhao. Armonk, New York: M.E.Sharpe, 2004.

ກອງສົ່ງເສີມກະສິກຳ ແລະ ປ່າໄມ້ ແຫ່ງຊາດ (NAFES)
ໂຄງການສົ່ງເສີມກະສິກຳ (LEAP)
P.O. Box 9159
ນະຄອນຫຼວງວຽງຈັນ
ສປປ ລາວ
ໂທ: +856 21 740 253
ອີເມລ: leap4@laoex.org
www.helvetas-laos.org